

# ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍໄດ້ຮັບຮູ້ລ່ວງໜ້າ (FPIC) ໃນວຽກງານ REDD+

## ຫລັກການ ແລະ ວິທີທາງ ສໍາລັບການພັດທະນານະໂຍບາຍ ແລະ ໂຄງການ

ເດືອນ ກຸມພາ 2011

RECOFTC
THE CENTER FOR PEOPLE AND FORESTS

giz

Federal Ministry for Economic Cooperation and Development

Norad

## ຄໍາຂອບໃຈ

ພວກເຮົາຂໍສະແດງຄວາມຂອບໃຈຕໍ່ Helen Moriarty ທີ່ໄດ້ຂຽນບົດທົບທວນຄືນກ່ຽວກັບ ເອຟພິກ (FPIC) ຢູ່ໃນເຣດ+(REDD+) ຊຶ່ງເປັນພື້ນຖານສໍາລັບວາລະສານເຫລັ້ມນີ້ ແລະ ເປັນບົດນໍາກ່ອນຂະບວນ ການລວບລວມວາລະສານເຫລັ້ມນີ້ເຂົ້າກັນ. ພວກເຮົາຂໍສະແດງຄວາມຂອບໃຈເຊັ່ນກັນ ຕໍ່ການຈັດຕັ້ງດັ່ງຕໍ່ໄປນີ້ ທີ່ໄດ້ເຂົ້າຮ່ວມໃນການສ້າງວາລະສານເຫລັ້ມນີ້: Asian Indigenous People Pact Thailand, Federation of Community Forests Group Nepal, Forest Peoples Programme Indonesia, Indonesian for Environmental Law, IUCN Thailand, Laos Land Issue Group, National Forest Council Indonesia, PACT Cambodia, Tebtebba Philippines, ແລະ Wildlife Conservation Society Laos. ພວກເຮົາຂໍຂອບໃຈເປັນພິເສດຕໍ່ບຸກຄົນດັ່ງລຸ່ມນີ້ ທີ່ໄດ້ທຸ້ມເທ ປະກອບສ່ວນ ແລະ ໃຫ້ຄໍາຄິດເຫັນທີ່ມີຄຸນຄ່າຄື: ທ່ານ Suraya Afif, Taufiq Alimi, Andiko S.H., Wiwiek Awiati, Bhola Bhattarai, Amanda Bradley, Georg Buchholz, Marcus Colchester, Jenifer Corpuz, Julian Atkinson, Helen Dunlop, Sean Foley, Richard Hackman, Troy Hansel, Leonardo Imbiri, Barbara Lang, James Mayers, Duncan McLeod, Peter Neil, Bernad Steni, Ronnakorn Triraganon, Ben Vickers, Pete Wood, ແລະ Xuemei Zhang.



## ຜູ້ນໍາພາການແຕ່ງ

ທ່ານ Patrick Anderson


## ຂໍ້ປະຕິເສດ

ທຸກຄໍາຄິດເຫັນ ແລະ ຂໍ້ຜິດພາດທັງໝົດຢູ່ໃນເອກະສານນີ້ ແມ່ນຄວາມຮັບຜິດຊອບທັງໝົດຂອງຜູ້ນໍາພາການແຕ່ງ.


ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ແລະ ໂດຍໄດ້ຮັບຮູ້ລ່ວງໜ້າ (FPIC): ຫລັກການ ແລະ ວິທີທາງ ສໍາລັບການພັດທະນາ ນະໂຍບາຍ ແລະ ໂຄງການ

ບາງກອກ, ເດືອນ ກຸມພາ 2011

RECOFTC ແລະ GIZ

## ຈັດພິມໂດຍ

RECOFTC – The Center for People and Forests

Deutsche Gesellschaft for Internationale Zusammenarbeit (GIZ) GmbH

Sector Network Natural Resources and Rural Development – Asia

# ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ
# ໂດຍໄດ້ຮັບຮູ້ລ່ວງໜ້າ (FPIC)
# ໃນວຽກງານ REDD+

ຫລັກການ ແລະ ວິທີທາງ

ສຳລັບການພັດທະນານະໂຍບາຍ ແລະໂຄງການ

ເດືອນ ກຸມພາ 2011

# ຄຳນຳ

ໃນໄລຍະສອງທົດສະວັດຜ່ານມາ, ມີຫລາຍອົງການຮ່ວມມືດ້ານການພັດທະນາ ໄດ້ສົ່ງເສີມວິທີທາງແບບມີສ່ວນຮ່ວມໃນການຕັດສິນໃຈ ຢູ່ໃນແຜນງານຂອງເຂົາເຈົ້າ. ຊຶ່ງເຮັດໃຫ້ເກີດມີປະສົບການ, ບົດຮຽນ, ເຄື່ອງມື ແລະ ການດຳເນີນງານທີ່ອຸດົມຮັ່ງມີ ສຳລັບການຄຸ້ມຄອງ, ການອະນຸລັກ ແລະ ການຄຸ້ມຄອງບໍລິຫານແບບມີສ່ວນຮ່ວມ. ນີ້ເປັນກໍລະນີສຳລັບໂຄງການຄຸ້ມຄອງຊັບພະຍາກອນທຳມະຊາດແທ້ ຢູ່ເອເຊຍ ທີ່ໄດ້ຮັບການສະໜັບສະໜູນ ໂດຍກະຊວງຮ່ວມມືເສດຖະກິດ ແລະ ພັດທະນາຂອງເຢຍລະມັນ ແລະ ຈັດຕັ້ງປະຕິບັດໂດຍອົງການ GIZ. .ສຳລັບສູນຝຶກອົບຮົມປ່າໄມ້ຊຸມຊົນຂອງພາກພື້ນ (RECOFTC) –ສູນສຳລັບປະຊາຊົນ ແລະ ປ່າໄມ້, ການຄຸ້ມຄອງຈັດສັນຊັບພະຍາກອນແບບມີສ່ວນຮ່ວມ ໃນພາກພື້ນເອເຊຍປາຊີຟິກ ເປັນຈຸດເໜັ້ນເລີ້ມຈັດຕັ້ງປະຕິບັດແຕ່ປີ 1987 ເປັນຕົ້ນມາ. ໃນຊຸມປີຜ່ານມາ ມໍ່ໆນີ້, ຮຽກຮ້ອງໃຫ້ມີແບບວິທີທາງການຮ່ວມມືພັດທະນາ ທີ່ເໜັ້ນໃສ່ການນັບຖືສິດທິມະນຸດ ໃຫ້ຈະແຈ້ງຂຶ້ນ ແລະ ບັນດາຄູ່ຮ່ວມພັດທະນາກໍກຳລັງເຮັດການທົດລອງຫລາຍໆຮູບແບບ ເພື່ອນຳໃຊ້ວິທີທາງນັ້ນໃນການດຳເນີນງານຕົວຈິງ. ວາລະສານສະບັບນີ້ ມີຈຸດປະສົງເພື່ອສະໜັບສະໜູນຄວາມພະຍາຍາມດັ່ງກ່າວ, ໂດຍສະເພາະ ແມ່ນສຳລັບຜູ້ທີ່ເຮັດກ່ຽວກັບວຽກນະໂຍບາຍດ້ານການຫລຸດຜ່ອນການປ່ອຍທາດອາຍພິດ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+) ແລະ/ຫລື ບັນດາໂຄງການຕ່າງໆ.

ຫລັກການທີ່ວ່າປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ຄວນມີສິດທິໃນການໃຫ້ ແລະ ການງົດຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍໄດ້ຮັບຮູ້ລ່ວງໜ້າ (FPIC, ເອຟພິກ) ຕໍ່ກັບການພັດທະນາທີ່ມີຜົນກະທົບຕໍ່ຊັບພະຍາກອນຂອງເຂົາເຈົ້ານັ້ນບໍ່ແມ່ນສິ່ງໃໝ່. ແນວໃດກໍຕາມ, ໂດຍອີງຕາມການຮັບຮອງເອົາຖະແຫລງການຂອງສະຫະປະຊາຊາດກ່ຽວກັບສິດທິຂອງປະຊາຊົນພື້ນເມືອງ (2008). ສະຖານະພາບດ້ານກົດໝາຍຂອງສິດທິ ໄດ້ຮັບການສົ່ງເສີມໃຫ້ຈະແຈ້ງຂຶ້ນມາເປັນລຳດັບ. ຢູ່ໃນການເຈລະຈາກ່ຽວກັບການປ່ຽນແປງດ້ານພູມອາກາດ ທີ່ດຳເນີນຢູ່ປະຈຸບັນ, ເລື່ອງນີ້ ໄດ້ຍົກຂຶ້ນຜ່ານການປຶກສາຫາລືກ່ຽວກັບກົນໄກ ສຳລັບການຫລຸດຜ່ອນການປ່ອຍທາດອາຍພິດ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ (ເຣດ+). ສິ່ງທີ່ຍົກຂຶ້ນມາໃໝ່ໆນີ້ ເປັນການຜັກດັນ ເຮັດໃຫ້ພາກສ່ວນຜູ້ຈັດຕັ້ງປະຕິບັດ ເກີດຄວາມສະໜັກໃຈໃນເລື່ອງນີ້.

ປະສົບການຈາກການຈັດຕັ້ງປະຕິບັດ ເຣດ+ ແລະ ຂະບວນການທີ່ມີການນັບຖືສິດທິດ້ານ “ເອຟພິກ” (FPIC) ແມ່ນຍັງຈຳກັດຢູ່ໃນພາກພື້ນເອເຊຍປາຊີຟິກ ສະນັ້ນ ວາລະສານສະບັບນີ້ ຈຶ່ງໄດ້ຍົບຍົກເອົາຕົວຢ່າງຈາກຂະແໜງການ ແລະ ພາກພື້ນອື່ນໆມາປະກອບຕື່ມ. GIZ ແລະ RECOFTC ຖືວ່າການແນະນຳ ທີ່ວາລະສານສະບັບນີ້ໄດ້ສະໜອງໃຫ້ ເປັນຄວາມພະຍາຍາມເບື້ອງຕົ້ນ ທີ່ຈະໄດ້ທົບທວນຄືນ ແລະດັດປັບຕາມທີ່ມີປະສົບການຂຶ້ນຕື່ມຈາກການຈັດຕັ້ງປະຕິບັດ ເຣດ+ ແລະ ເອຟພິກ. ໂດຍສະເພາະ ແມ່ນພວກເຮົາຫວັງວ່າ ວາລະສານນີ້ ຈະເປັນພື້ນຖານໃນການພັດທະນາຄຳແນະນຳ ໃຫ້ເປັນອັນສະເພາະ ສຳລັບແຕ່ລະປະເທດ. ຊຶ່ງອະນຸຍາດໃຫ້ສາມາດດັດປັບຄຳສະເໜີແນະ ທີ່ສອດຄ່ອງກັບເງື່ອນໄຂດ້ານກົດໝາຍສະເພາະຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ດ້ານການສິດທິຕໍ່ກັບຊັບພະຍາກອນຂອງເຂົາເຈົ້າ, ຊຶ່ງມີຄວາມແຕກຕ່າງກັນຫລາຍ ເປັນແຕ່ລະປະເທດໃນພາກພື້ນ.

ອົງການ GIZ ແລະ ສູນຝຶກ RECOFTC ໄດ້ເຊື້ອເຊີນຫລາຍໆອົງການຈັດຕັ້ງ ມາເຂົ້າຮ່ວມໃນການສ້າງວາລະສານສະບັບນີ້ ແນໃສ່ເພື່ອສັງລວມເອົາປະສົບການ ແລະ ຄວາມຮູ້ຕ່າງໆ ຈາກບັນດາຜູ້ເຫັນດີດ້ານສິດທິ ແລະ ຜູ້ດຳເນີນງານຕົວຈິງກັບໂຄງການ ເຣດ+. ສິ່ງນີ້ພິສູດໃຫ້ເຫັນວ່າ ມີໝາກຜົນຫລາຍ ບໍ່ແມ່ນສະເພາະແຕ່ວາລະສານເທົ່ານັ້ນ, ແຕ່ຍັງສຳລັບການເຈລະຈາກັນລະຫວ່າງຜູ້ດຳເນີນການຕ່າງໆນຳອີກ. ພວກເຮົາ ຫວັງວ່າ ການເຈລະຈານີ້ ຈະສືບຕໍ່ຢູ່ໃນເວທີຕ່າງໆ ເພື່ອສ້າງບົດຮຽນໃຫ້ແກ່ວິທີທາງໃນການຈັດຕັ້ງປະຕິບັດ “ເອຟພິກ” ໃນແຜນງານ ແລະໂຄງການ ເຣດ.



Yam Malla
Executive Director
RECOFTC – The Center for People and Forests



Hans-Joachim Lipp
Speaker of the GIZ Sector Network
Natural Resources and Rural
Development – Asia

# ສາລະບານ


*i* ຄຳນຳ

*iii* ສາລະບານ

*1* ພາກສະເໜີ

*5* ເຣດ+ ແລະຄວາມສຳຄັນຂອງ "ເອຟພິກ" (FPIC)

*13* ການແນະນຳເພື່ອເປັນບ່ອນອ້າງອີງໂດຍຫຍໍ້

15 ຄວາມເຫັນດີເຫັນພ້ອມ ຢ່າງເປັນອິດສະຫຼະ ໂດຍໄດ້ຮັບຮູ້ລ່ວງໜ້າແມ່ນຫຍັງ?
16 ສິດທິດ້ານ ເອຟພິກ ແມ່ນເກີດຂຶ້ນມາແນວໃດ?
17 ເປັນຫຍັງ ເຣດ+ ຈຶ່ງຕ້ອງການ ເອຟພິກ?
18 ເວລາໃດທີ່ໂຄງການຕ້ອງໄດ້ນັບຖືສິດທິດ້ານ ເອຟພິກ?
18 ກົນໄກດ້ານກົດໝາຍອັນໃດທີ່ບັງຄັບໃຫ້ ເຣດ+ ນັບຖືສິດທິດ້ານ ເອຟພິກ?
19 ຂະບວນການນັບຖືສິດທິຕໍ່ກັບ ເອຟພິກ ປະກອບມີຫຍັງແດ່?
26 ມີຊັບພະຍາກອນອັນໃດແດ່ ທີ່ຈຳເປັນສຳລັບຂະບວນການທີ່ນັບຖືສິດທິ ເອຟພິກ?
27 ມີຄວາມສ່ຽງໃດແດ່ທີ່ສາມາດເກີດຂຶ້ນໄດ້ຈາກ ເອຟພິກ?

*29* ບົດແນະນຳກ່ຽວກັບລະບຽບການສຳລັບການນັບຖືສິດທິດ້ານ ເອຟພິກ

31 **ການກະກຽມການເຂົ້າຮ່ວມໃນ ເອຟພິກ ຂອງຜູ້ທີ່ມີສິດທິ**
32 ສ່ວນປະກອບ 1: ສິດທິດ້ານຂໍ້ມູນ, ຜູ້ຖືສິດທິ, ແລະ ສິດທິໃນການນຳໃຊ້ທີ່ດິນ
35 ສ່ວນປະກອບ 2: ການກຳນົດສະຖາບັນຈັດຕັ້ງທີ່ເໝາະສົມໃນການຕັດສິນໃຈ
36 ສ່ວນປະກອບ 3: ການກຳນົດໂຄງສ້າງສະໜັບສະໜູນລະດັບຊາດດ້ານສິດທິ
39 ສ່ວນປະກອບ 4: ການພັດທະນາຂະບວນການໃນການຊອກຫາ ແລະ ໄດ້ຮັບຄວາມເຫັນດີເຫັນພ້ອມ
41 ສ່ວນປະກອບ 5: ການພັດທະນາເນື້ອໃນ ສຳລັບຂໍ້ຕົກລົງຄວາມເຫັນດີເຫັນພ້ອມ
44 ສ່ວນປະກອບ 6: ການຕົກລົງກັນກ່ຽວກັບແຜນດ້ານຕິດຕໍ່ພົວພັນ
45 ສ່ວນປະກອບ 7: ການພັດທະນາຍຸດທະສາດດ້ານການສ້າງຄວາມອາດສາມາດ

47 **ການຈັດຕັ້ງປະຕິບັດຂະບວນການໃນການນັບຖືສິດທິດ້ານ ເອຟພິກ**
47 ສ່ວນປະກອບ 8: ການເຊື່ອມໂຍງສິດທິດ້ານ ເອຟພິກ ກັບການອອກແບບໂຄງການ ເຣດ+
49 ສ່ວນປະກອບ 9: ການຮັບປະກັນແຫລ່ງຂໍ້ມູນຈາກບ່ອນອື່ນ ແລະ ຄຳປຶກສາທີ່ເປັນເອກະລາດ

50 **ການຕິດຕາມກວດກາ ແລະ ການກະກຽມຮັບມື: ການຮັກສາຄວາມເຫັນດີເຫັນພ້ອມ**
50 ສ່ວນປະກອບ 10: ການຕິດຕາມກວດກາສິ່ງທີ່ໄດ້ຕົກລົງກັນໃນການຈັດຕັ້ງປະຕິບັດ
51 ສ່ວນປະກອບ 11: ການພັດທະນາຂະບວນການຮ້ອງທຸກ
55 ສ່ວນປະກອບ 12: ການກວດສອບຢັ້ງຢືນຄວາມເຫັນດີເຫັນພ້ອມ

*57* ເອກະສານອ້າງອີງ

*63* ການແປຄຳສັບ ແລະ ອັກສອນຫຍໍ້
65 ການແປຄຳສັບ
68 ຄຳສັບຫຍໍ້

*69* ເອກະສານແນບທ້າຍ
71 ເອກະສານແນບທ້າຍ 1: ກອບດ້ານກົດໝາຍຂອງ ເອຟພິກ
78 ເອກະສານແນບທ້າຍ 2: ບົດສັງລວມສິ່ງທີ່ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຈຳເປັນຕ້ອງຮູ້

# ພາກສະເໜີ



# ພາກສະເໜີ

ວາລະສານສະບັບນີ້ແມ່ນເລ່ງໃສ່ຜູ້ທີ່ພົວພັນກັບການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການ ຫລື ແຜນງານດ້ານ ເຣດ+. ກຸ່ມເປົ້າໝາຍລວມມີຜູ້ເອື້ອອຳນວຍຄວາມສະດວກໃຫ້ປະຊາຊົນ ຫລື ທີ່ປຶກສາອິດສະຫຼະ; ຜູ້ນຳປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ; ພະນັກງານລັດຖະບານຂັ້ນທ້ອງຖິ່ນ; ພະນັກງານ/ຜູ້ປະສານງານໂຄງການ; ນັກລົງທຶນພາກເອກະຊົນ; ແລະ ຜູ້ເອື້ອອຳນວຍຄວາມສະດວກ, ຜູ້ສະໜັບສະໜູນ ແລະ ບັນດານັກເຄື່ອນໄຫວຂອງອົງການບໍ່ສັງກັດລັດ (NGO). ມີຄວາມເຂົ້າໃຈວ່າ ຜູ້ອ່ານຈະເປັນຄົນທີ່ມີຄວາມຮູ້ສູງ ແລະ ມີຄວາມເຂົ້າໃຈຂັ້ນພື້ນຖານກ່ຽວກັບ ເຣດ+ ແລະ ເໜັ້ນໃສ່ພາກພື້ນເອເຊຍປາຊີຟິກ.

ວາລະສານ ໄດ້ແບ່ງອອກເປັນສາມພາກໃຫຍ່ໆ, ເລີ້ມຈາກພາບລວມ ກ່ຽວກັບ ເຣດ+ ແລະ ຄວາມສຳຄັນຂອງຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍໄດ້ຮັບຮູ້ລ່ວງໜ້າ “ເອຟພິກ”. ຕໍ່ໄປ ແມ່ນພາກອ້າງອີງທີ່ບັນລະຍາຍເຖິງການພັດທະນາຂະບວນການນັບຖື ເອຟພິກ ແລະ ສະຫລຸບສັງລວມຂໍ້ມູນຫລັກໆ. ພາກສຸດທ້າຍຂອງບົດແນະນຳແມ່ນເວົ້າເຖິງລາຍລະອຽດກ່ຽວກັບສິບສອງລັກສະນະ ຫລື “ສ່ວນປະກອບ” ຂອງຂະບວນການລວມທີ່ນັບຖືສິດທິຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນທາງດ້ານເອຟພິກ.

ການນັບຖືສິດທິດ້ານ ເອຟພິກ, ຕາມການນິຍາມ, ແມ່ນຂະບວນການສະເພາະທາງວັດທະນະທຳຂອງທ້ອງຖິ່ນ ໂດຍແມ່ນຊຸມຊົນຜູ້ທີ່ໄດ້ຮັບຜົນກະທົບ ເປັນຜູ້ກຳນົດບາດກ້າວທີ່ຈະເຮັດ. ສະນັ້ນ ຈຶ່ງເປັນໄປບໍ່ໄດ້ທີ່ຈະ ສ້າງບົດແນະນຳດ້ານວິທີດຳເນີນງານທີ່ສາມາດໃຊ້ໄດ້ໂດຍທົ່ວໄປ. ວາລະສານສະບັບນີ້ແມ່ນເປັນຂໍ້ມູນ ແລະ ອຸປະກອນການສອນສະເພາະດ້ານ, ແນໃສ່ຜູ້ຟັງສະເພາະ ທີ່ໃຊ້ພາສາອັນເໝາະສົມ. ຈະມີການດັດປັບໄປເລື້ອຍໆ ຕາມວິວັດທະນາການດ້ານຫລັກການຂອງ ເຣດ+.

ໄດ້ມີການຕົກລົງກັນແບບລວມໆກ່ຽວກັບສ່ວນປະກອບທີ່ຈຳເປັນຂອງຂະບວນການເອຟພິກທີ່ນັບຖືສິດທິຂອງຊຸມຊົນ. ວາລະສານສະບັບນີ້ ໃຫ້ຂໍ້ແນະນຳກ່ຽວກັບປະເດັນທີ່ເຈົ້າຂອງໂຄງການ ເຣດ+ ຫລື ຜູ້ວາງນະໂຍບາຍທີ່ຄວນຍົກຂຶ້ນກັບກຸ່ມທີ່ໄດ້ຮັບຜົນກະທົບເພື່ອຮັບປະກັນການນັບຖືສິດຂອງເຂົາເຈົ້າດ້ານ ເອຟພິກ. ຊຶ່ງແມ່ນເພື່ອຈັດວາງສ່ວນປະກອບຂອງຂະບວນການທີ່ເຂັ້ມແຂງໃນການທີ່ຈະໄດ້ຮັບເອຟພິກ ຈາກຊຸມຊົນ ແລະ ຍົກໃຫ້ເຫັນເຖິງຈຸດທີ່ຍັງບໍ່ແນ່ນອນ ແລະ ເປັນບັນຫາກັນຢູ່. ວາລະສານສະບັບນີ້ຈະຊ່ວຍໃຫ້ຜູ້ອ່ານ ຍຶດຖືມາດຖານແບບສະໝັກໃຈ ຫລື ລະບຽບການທີ່ຈຳເປັນກ່ຽວກັບ ເອຟພິກ ຊຶ່ງຕໍ່ໄປອາດຈະໄດ້ນຳໃຊ້ສຳລັບ ເຣດ+ ໃນຂະບວນການລະດັບສາກົນ.

ດັ່ງທີ່ຮູ້ກັນແລ້ວວ່າ ເຣດ+ ສ່ວນຫລາຍ ຈະໄດ້ດຳເນີນຢູ່ປ່າໄມ້ໃນເຂດຫ່າງໄກສອກຫລີກ ພໍສົມຄວນ, ປະຊາຊົນສ່ວນຫລາຍຈະໄດ້ຮັບຜົນກະທົບຈາກນະໂຍບາຍ ຫລື ກິດຈະກຳ, ລວມທັງຜູ້ນຳຂອງເຂົາເຈົ້າ, ອາດບໍ່ຮູ້ໜັງສື ຫລື ຮູ້ພຽງນ້ອຍດຽວ, ໂດຍບໍ່ໄດ້ເຂົ້າເຖິງແຫລ່ງຂໍ້ມູນ ແລະ ຖືກໂດດດ່ຽວຈາກແຫລ່ງຂໍ້ມູນອື່ນໆ. ຜູ້ທີ່ເປັນຄົນກາງແມ່ນມີຄວາມຈຳເປັນທີ່ຈະເຮັດໃຫ້ເຂົ້າເຖິງສິ່ງນີ້.

ໃນຂະນະທີ່ຍັງບໍ່ທັນມີບົດແນະນຳອັນລະອຽດສະເພາະສຳລັບປະເທດໃດໜຶ່ງເທື່ອ, ມີຕົວຢ່າງການເຈລະຈາເຮັດສັນຍາສຳລັບໂຄງການພື້ນຖານໂຄງລ່າງຂະໜາດໃຫຍ່ໆເຊັ່ນ: ບໍ່ແຮ່, ເຂື່ອນໄຟຟ້າ ແລະ ການສຳຫລວດ ແລະ ຂຸດຄົ້ນນ້ຳມັນ. ບັນດາໂຄງການເຫລົ່ານີ້ ມີຄວາມສຳຄັນຕໍ່ໂຄງການ ເຣດ+ ທີ່ແຕກຕ່າງ, ແຕ່ກໍ່ສາມາດເສີມຂໍ້ມູນໃຫ້ຢູ່ນີ້ ເພື່ອຊ່ວຍພັດທະນາຂະບວນການທີ່ເໝາະສົມກັບທ້ອງຖິ່ນໃນການນັບຖືສິດທິດ້ານເອຟພິກຢູ່ໃນ ເຣດ+.

ການສ້າງແຜນງານ ເຣດ+ ໄດ້ມີການພັດທະນາຢ່າງໄວວາ ແລະ ມາດຖານ ແລະ ບົດແນະນຳແຫ່ງຊາດແລະສາກົນໃໝ່ໆທີ່ຄວບຄຸມ ເຣດ+ ແລະ ມີການສະໜອງເງິນເກີດຂຶ້ນຊຶ່ງອາດຈະປ່ຽນແປງການນັບຖືສິດທິດ້ານ ເອຟພິກ ຄືແນວໃດ. ມີແນວໂນ້ມໃນການກວດສອບຢັ້ງຢືນວ່າຄວາມເຫັນດີເຫັນພ້ອມໄດ້ຊອກຫາ ແລະໄດ້ຮັບຢ່າງເປັນອິດສະຫຼະ ຫລື ບໍ່, ໄປຄຽງຄູ່ກັບມາດຖານພາກບັງຄັບຕ່າງໆ, ຈະມີຄວາມຕ້ອງການຫລາຍຂຶ້ນ ພ້ອມໆກັບການຄຸ້ມກັນດ້ານສິ່ງແວດລ້ອມ ແລະ ສັງຄົມຈຳນວນໜຶ່ງ. ສະນັ້ນ ຈຶ່ງເຫັນວ່າມີຄວາມຈຳເປັນ ທີ່ຜູ້ມີສ່ວນຮ່ວມທັງໝົດ ຈະຕ້ອງໄດ້ເຂົ້າໃຈຫລາຍຂຶ້ນ ແລະ ປະຕິບັດຂະບວນການທີ່ມີຄວາມໝາຍ ແລະ ມີການກວດສອບຢັ້ງຢືນໄດ້ໃນການນັບຖືສິດທິຂອງປະຊາຊົນພື້ນເມືອງ ແລະຊຸມຊົນທ້ອງຖິ່ນດ້ານ ເອຟພິກ ໃນການສ້າງແຜນງານ ເຣດ+.

ໃນຂະນະທີ່ເງື່ອນໄຂດ້ານ ເອຟພິກ ທີ່ພະຍາຍາມຫລຸດຜ່ອນດ້ານພູມອາກາດຍັງເຈລະຈາກັນຢູ່ໃນລະດັບສາກົນ, ຜູ້ເປັນເຈົ້າຂອງໂຄງການ ເຣດ+ ທີ່ມີຄວາມເປັນຫ່ວງກັບຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມຄວນຈະເຂົ້າຮ່ວມໃນການເຈລະຈາສາກົນ. ຊຶ່ງອາດຈະເປັນການປະກອບສ່ວນຊ່ວຍໃນການຕົກລົງກ່ຽວກັບກົນໄກທີ່ມີປະສິດທິພາບ ແລະ ຕອບສະໜອງຄວາມຕ້ອງການຂອງຜູ້ມີສ່ວນຮ່ວມທຸກຝ່າຍ.

# ເຣດ+ ແລະ ຄວາມສຳຄັນ ຂອງ ເອຟພິກ (FPIC)



# ເຣດ+ ແລະ ຄວາມສຳຄັນຂອງ ເອຟພິກ (FPIC)

ແນວຄິດພື້ນຖານຢູ່ເບື້ອງຫລັງຂອງ ເຣດ+ ແມ່ນງ່າຍໆ ຈົນເຂົ້າໃຈຜິດພາດໄປ - ບັນດາປະເທດຈະໄດ້ຮັບຜົນຕອບແທນສຳລັບການປົກປັກຮັກສາ ແລະ ການຄຸ້ມຄອງຈັດສັນປ່າໄມ້ໂດຍນຳໃຊ້ມອນທາດກາກບອນເປັນຕົວວັດແທກຜົນສຳເລັດ. ແນວໃດກໍຕາມຄວາມໝາຍດ້ານການຈັດຕັ້ງປະຕິບັດກໍຍັງມີຄວາມສັບສົນ[1] ການເຈລະຈາກໍຍັງສືບຕໍ່ກ່ຽວກັບກອບດ້ານກົດໝາຍ ແລະ ລະບຽບການທີ່ຈະອອກມາສຳລັບ ເຣດ+ ໃນທີ່ສຸດ - "ລະບຽບການຂອງ ເຣດ+". ການຕົກລົງສາກົນກ່ຽວກັບກົນໄກຄົບຊຸດເພື່ອຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວອາດຈະໃຊ້ເວລາຫລາຍປີ, ແຕ່ວ່າບັນດາກິດຈະກຳກຽມຄວາມພ້ອມດ້ານ ເຣດ+ ແມ່ນໄດ້ດຳເນີນການໄປແລ້ວໂດຍໂຄງການ ເຣດ+ ທີ່ໄດ້ອອກແບບ ແລະ ຈັດຕັ້ງປະຕິບັດຢູ່ໃນປະເທດຈຳນວນໜຶ່ງ. ເຫັນວ່າມີຄວາມສ່ຽງສູງ ໃນການດຳເນີນແບບວິທີທາງ "ຮຽນຮູ້ຈາກການເຮັດ" ຊຶ່ງສົ່ງຜົນກະທົບທາງລົບໃສ່ສິດທິຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ.

ບັນດາໂຄງການກາກບອນປ່າໄມ້ຕ້ອງສ້າງເສັ້ນຫຼຽບຖານສຳລັບການປ່ອຍອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້/ການເຮັດໃຫ້ປ່າໄມ້ເສື່ອມໂຊມ ຫລື ຈາກກິດຈະກຳທີ່ໄດ້ວາງແຜນໄວ້ຊຶ່ງຈະເຮັດໃຫ້ເກີດການປ່ອຍອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້/ການເຮັດໃຫ້ປ່າໄມ້ເສື່ອມໂຊມຢູ່ໃນເຂດເຄື່ອນໄຫວຂອງໂຄງການ. ເພື່ອຜະລິດສິນເຊື່ອກາກບອນໂຄງການຕ້ອງສາມາດສະແດງໃຫ້ເຫັນວ່າກິດຈະກຳຂອງຕົນ ໄດ້ຫລຸດອັດຕາການປ່ອຍອາຍພິດຈາກການເຮັດໃຫ້ປ່າໄມ້ເສື່ອມໂຊມ ແລະ ການທຳລາຍປ່າໄມ້ເມື່ອສົມທຽບກັບເສັ້ນຫຼຽບຖານ. ຄວາມແຕກຕ່າງກັນລະຫວ່າງສອງລະດັບຂອງການປ່ອຍອາຍພິດນີ້ຮ້ອງ ວ່າ "ສ່ວນທີ່ໄດ້ເພີ້ມເຕີມ" ຂອງໂຄງການ.

ການບັນລຸສ່ວນທີ່ໄດ້ເພີ້ມເຕີມຈະຕ້ອງໃຫ້ມີການປ່ຽນແປງຕໍ່ກັບການນຳໃຊ້ປ່າໄມ້ທີ່ເຮັດຢູ່ໃນປະຈຸບັນ ຫລື ວາງແຜນໄວ້, ແລະ ສິ່ງນີ້ອາດຈະມີຜົນກະທົບຫລາຍຢ່າງຕໍ່ກັບຜູ້ທີ່ນຳໃຊ້ປ່າໄມ້,ລວມທັງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຜູ້ທີ່ເປັນຈຸດເພັ້ນຂອງບົດແນະນຳນີ້. ການປ່ຽນແປງເຫລົ່ານີ້ອາດສົ່ງຜົນກະທົບຕໍ່ການດຳລົງຊີວິດຕາມປະເພນີ ເຊັ່ນ: ການເຮັດໄຮ່ເລື່ອນລອຍ; ການຈູດປ່າໂດຍມີການຄວບຄຸມເພື່ອຄວາມສະດວກໃນການລ່າສັດ ແລະ ການລ້ຽງສັດ; ແລະ ການນຳໃຊ້ໄມ້ ແລະ ຜົນຜະລິດປ່າໄມ້ອື່ນໆເພື່ອຊົມໃຊ້ ໃນຄອບຄົວ ຫລື ຂາຍ. ການພັດທະນານະໂຍບາຍດ້ານເຣດ+, ບັນດາໂຄງການຕົວແບບ, ແລະພື້ນທີ່ສາທິດ ຈຶ່ງອາດຈະມີຜົນກະທົບໂດຍກົງ ຕໍ່ປະຊາຊົນຜູ້ທີ່ອາໄສປ່າໄມ້ ເປັນຈຳນວນຫລາຍຮ້ອຍລ້ານຄົນ ໃນພາກພື້ນເອເຊຍປາຊີຟິກ. ຊຶ່ງອາດຈະສົ່ງຜົນກະທົບບໍ່ແມ່ນແຕ່ຊີວິດການເປັນຢູ່, ຄວາມຢູ່ເຢັນເປັນສຸກ ແລະ ລາຍຮັບຂອງເຂົາເຈົ້າເທົ່ານັ້ນ, ແຕ່ຍັງມີຕໍ່ລະບົບສັງຄົມ, ເອກະລັກ ແລະ ວັດທະນະທຳ. ສະນັ້ນຈຶ່ງມີຄວາມສຳຄັນຫລາຍທີ່ຄວາມຕ້ອງການ, ສິດທິ ແລະ ຜົນປະໂຫຍດຂອງປະຊາຊົນພວກນີ້ ໄດ້ຖືກຮັບຮູ້ ແລະແກ້ໄຂໃນການອອກແບບ ແລະ ຈັດຕັ້ງປະຕິບັດບັນດາໂຄງການ ເຣດ+.

1 Parker, C. et. al, 2009. *The Little REDD+ Book: An updated guide to governmental and non- governmental proposals for reducing emissions from deforestation and degradation*, Oxford, UK. Available at: www.globalcanopy.org

ການເກີດຂຶ້ນຂອງ ເຣດ+ ແມ່ນເປັນການຍົກໃຫ້ເຫັນເຖິງຄວາມບໍ່ເອົາໃຈໃສ່ຕໍ່ຫລັກການຂອງ ເອຟພິກ ແລະ ນັບຖື ເອຟພິກ ໃນການປະຕິບັດຕົວຈິງຢູ່ໃນຂະແໜງການປ່າໄມ້ໂດຍລວມ. ເຈົ້າຂອງໂຄງການໄດ້ແອບອ້າງແບບເຮັດພໍຄືໂດຍອີງກອນຂອງລັດ ແລະ ອົງກອນບໍ່ສັງກັດລັດວ່າເປັນຜູ້ຕາງໜ້າປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ, ແລະ ໄດ້ສືບຕໍ່ບົນພື້ນຖານອັນນີ້ໂດຍມີການເຂົ້າຮ່ວມ ແລະ ການເຈລະຈາໃນລະດັບໃດໜຶ່ງ. ວິທີທາງປະຕິບັດຕົວຈິງເຊັ່ນນີ້ໄດ້ຖືກນຳໃຊ້ດ້ວຍຫລາຍເຫດຜົນລວມເຖິງ:

- ຄວາມສະລັບສັບຊ້ອນທີ່ເປັນໄປໄດ້, ເວລາ, ແລະ ການໃຊ້ຈ່າຍທີ່ຕິດພັນກັບການດຳເນີນຂະບວນການປຶກ ສາຫາລືທີ່ມີປະສິດທິຜົນຢູ່ທ້ອງຖິ່ນ ;
- ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນອາດຈະບໍ່ຮູ້ວ່າຕົນເອງມີສິດທິໃນການເຂົ້າຮ່ວມ;
- ເຈົ້າຂອງໂຄງການອາດຈະບໍ່ຮູ້ເຖິງຄວາມຈຳເປັນທີ່ເກີດຂຶ້ນໃນການຊອກຫາຄວາມເຫັນດີເຫັນພ້ອມ; ແລະ
- ມີຄວາມບໍ່ແນ່ນອນກ່ຽວກັບວ່າຂະບວນການປຶກສາຫາລື ແລະ ຄວາມເຫັນດີເຫັນພ້ອມອາດມີຄວາມຕ້ອງການຫຍັງແດ່.

ແຜນງານ ເຣດ ຂອງສະຫະປະຊາຊາດ (UNREDD program) ແມ່ນເປັນກໍລະນີຍົກເວັ້ນທີ່ເກີດຂຶ້ນຫວ່າງມໍ່ໆມານີ້ຕໍ່ທ່າອ່ຽງນີ້[2]. ແນວໃດກໍຕາມ, ເອຟພິກ ຢູ່ໃນຄວາມໝາຍຂອງ ເຣດ+ ແມ່ນກໍ່ໃຫ້ເກີດມີສິ່ງທ້າທາຍອັນສະເພາະຍ້ອນວ່າລັກສະນະ, ຂອບເຂດ ແລະ ຂະໜາດຂອງແຜນງານເຣດ+ມີການປ່ຽນແປງຢູ່ສະເໝີ, ແລະ ຄວາມຫຍຸ້ງຍາກທີ່ຕິດຢູ່ກັບການແຈ້ງໃຫ້ຮູ້ລາຍລະອຽດທີ່ພະນັກງານໂຄງການເອງກໍມີຈຳນວນນ້ອຍໜຶ່ງທີ່ຈະເຂົ້າໃຈຢ່າງໜັກແໜ້ນ.

ການປະສານສົມທົບລະຫວ່າງ ເຣດ+ ກັບຊຸມຊົນທີ່ຢູ່ກັບປ່າໄມ້ບໍ່ສາມາດຫລຸດລົງໃຫ້ເປັນການເຈລະຈາກ່ຽວກັບການທົດແທນດ້ານການເງິນດ້ວຍເຫດຜົນຫລາຍຢ່າງ. ໂຄງການເຣດ+ ມີຄວາມແຕກຕ່າງຈາກໂຄງການກ່ຽວກັບຊັບພະຍາກອນປ່າໄມ້ ທີ່ຄຸ້ນເຄີຍກັນມາຫລາຍກວ່າ ຍ້ອນວ່າຜະລິດຕະພັນຂອງມັນ, ຊຶ່ງໂດຍທົ່ວໄປແລ້ວແມ່ນເວົ້າເຖິງ "ສິນເຊື່ອກາກບອນ", ບໍ່ເປັນຮູບປະທຳ, ແລະ ບໍ່ເຂົ້າໃຈກັນຢ່າງກວ້າງຂວາງ. ລາຄາ, ມາດຖານ ແລະ ຄວາມໝັ້ນຄົງຂອງຕະຫລາດສຳລັບສິນເຊື່ອກາກບອນມາຈາກປ່າໄມ້ ທີ່ຍັງບໍ່ທັນຮູ້ກັນດີ. ໃນປະຈຸບັນ, ກົດລະບຽບ ແລະ ລາຄາໄດ້ມີການພັດທະນາໄປພ້ອມໆກັນຢູ່ໃນລະດັບສາກົນ, ລະດັບຊາດ ແລະ ທ້ອງຖິ່ນ. ນອກຈາກນັ້ນຊັບພະຍາກອນປ່າໄມ້ຢ່າງຫລວງຫລາຍກໍໄດ້ມີກຳມະສິດ ແລະ ຖືກນຳໃຊ້, ແລະ ຕະຫລາດສິນເຊື່ອກາກບອນຈາກປ່າໄມ້ເຫລົ່ານີ້ ກໍຈະມີການກ່ຽວພັນກັນກັບການຄ້າຜະລິດຕະພັນປ່າໄມ້ ແລະ ຈະກະທົບຕໍ່ສິດທິໃນການຖືຄອງ ແລະ ການນຳໃຊ້. ອັນທີ່ສຳຄັນກວ່າໝູ່ໝົດ ແມ່ນຄວາມໃໝ່ໆແປກໆ ຂອງ ເຣດ+ ໄດ້ພາໃຫ້ເກີດມີຄວາມສັບສົນ ແລະ ຄວາມບໍ່ແນ່ນອນລະຫວ່າງຜູ້ມີສ່ວນຮ່ວມພາຍໃນຂະແໜງປ່າໄມ້ດ້ວຍກັນ, ເຖິງແມ່ນວ່າກົດຈະກຳດ້ານການປະຕິບັດຕົວຈິງຈະຖອດຖອນມາຈາກປະສົບການທີ່ເຮັດມາກ່ອນໜ້າໃນຂະແໜງການພັດທະນາຊົນນະບົດ ແລະ ການອະນຸລັກ.

ບັນດາໂຄງການ ເຣດ+ ກໍຍິ່ງມີຄວາມສັບສົນຫລາຍຂຶ້ນເມື່ອຕັ້ງຄຳຖາມຂຶ້ນວ່າແມ່ນໃຜມີສິດຕໍ່ກັບປ່າໄມ້ ແລະ ທາດກາກບອນຢູ່ໃນປ່າໄມ້ນັ້ນ. ເຣດ+ ຮຽກຮ້ອງໃຫ້ມີຄວາມໝັ້ນຄົງດ້ານການຖືຄອງ, ແລະ ໄດ້ນຳເອົາມາພິຈາລະນາຄືນໃໝ່ຕໍ່ກັບບັນຫາດ້ານການຖືຄອງປ່າໄມ້, ຊຶ່ງມີການໂຕ້ແຍ້ງກັນລະຫວ່າງລັດຖະບານ ແລະ ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນໃນທົ່ວພາກພື້ນເອເຊຍຕາວັນອອກສ່ຽງໃຕ້. ໃນນາມລັດຖະບານແມ່ນພະຍາຍາມຢາກນຳໃຊ້ທ່າແຮງດ້ານການເງິນຈາກປ່າໄມ້ທີ່ມີຢູ່ໂດຍຜ່ານການດຳເນີນ ເຣດ+, ແລະ ຍັງບໍ່ທັນຮູ້ຢ່າງຈະແຈ້ງວ່າຈະດຳເນີນການຄືແນວໃດ. ພວກເຂົາເຈົ້າພະຍາຍາມຈະແກ້ໄຂບັນຫາຂໍ້ຂັດແຍ້ງ

---

2 UNREDD is currently developing a trial process to seek villagelevel consent to the idea of a national REDD+ program in Indonesia and Vietnam.

ເຫລົ່ານີ້ດ້ວຍການຮັບຮູ້ສິດທິຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ຫລື ບໍ່, ຄືດັ່ງທີ່ມີຄວາມຮຽກຮ້ອງຕ້ອງການໂດຍເອກະສານ ແລະ ກົດໝາຍສາກົນ? ຫລື ພວກເຂົາເຈົ້າພະຍາຍາມຈະ ເໜັ້ນໃສ່ການຄວບຄຸມຂອງລັດຕໍ່ກັບທີ່ດິນ ແລະ ທາດກາກບອນທີ່ຖືກເກັບກັກຢູ່ເທິງ ແລະ ໃນທີ່ດິນນັ້ນ?. ໃນກໍລະນີເຊັ່ນນີ້, ການສູນເສຍການເຂົ້າເຖິງປ່າໄມ້ ແລະ ການປະຕິເສດສິດທິໃນສ່ວນແບ່ງຜົນປະໂຫຍດ ຈາກ ເຣດ+ ສາມາດມີຜົນກະທົບຮ້າຍແຮງ, ຍາວນານ ຕໍ່ຄວາມຢູ່ເຢັນເປັນສຸກ ແລະ ຄວາມສາມາດປັບຕົວ ຂອງຊຸມຊົນເຫລົ່ານີ້.

### ນັກຊ່ຽວຊານດ້ານກົດໝາຍເວົ້າກ່ຽວກັບຄວາມໝັ້ນຄົງດ້ານການຖືຄອງ ແລະ ເຣດ+ ດັ່ງນີ້:

"ບາງປະເທດນຳໃຊ້ມາດຕະການເອົາຊຸມຊົນພື້ນເມືອງລວມເຂົ້າໃນຂະບວນການດ້ວຍວິທີການເຮັດສັນຍາໂດຍກົງ. ເພື່ອສ້າງໃຫ້ມີພື້ນຖານດ້ານນິຕິກຳທີ່ໝັ້ນຄົງ... ປະເທດໜຶ່ງຕ້ອງມີຄວາມແນ່ນອນທາງດ້ານຜົນປະໂຍດໃນການເປັນເຈົ້າຂອງຫລາຍກວ່າທຸກສິ່ງອື່ນໆທັງໝົດ. ຊຶ່ງມີຄວາມຈຳເປັນຕ້ອງໄດ້ເຮັດໃຫ້ສຳເລັດ ແລະແກ້ໄຂດ້ານສິດທິໃນການຮ້ອງຂໍ, ກຳມະສິດຕາມປະເພນີ ແລະ ຫລັກຖານອື່ນໆໃນການຢືນຢັນຜົນປະໂຫຍດຕາມກົດໝາຍຕໍ່ທີ່ດິນ".

ແຫລ່ງຂໍ້ມູນ: Baker and McKenzie; Covington and Burling LLP, 2009. Background Analysis of REDD Regulatory Frameworks. Report prepared for the Terrestrial Carbon Group and UNREDD.

ຊຸມຊົນທີ່ໄດ້ຮັບຜົນກະທົບຈາກ ເຣດ+ ແມ່ນມີສິດທິພາຍໃຕ້ຂໍ້ຜູກມັດສາກົນ,ກົດໝາຍແຫ່ງຊາດ, ແລະ ມາດຖານອຸດສາຫະກຳພາກສະໝາມ ຫລື ການປ່ຽນແປງດ້ານນະໂຍບາຍ ແລະ ການຄຸ້ມຄອງບໍລິຫານທີ່ຕິດພັນກັບແຜນງານ ເຣດ+. ສິດທິດ້ານ ເອຟພິກ ຕ້ອງການໃຫ້ລັດຖະບານ ແລະ ເຈົ້າຂອງໂຄງການມີການຮັບປະກັນວ່າ ເຣດ+ ຖືກຈັດຕັ້ງປະຕິບັດໄປໃນທາງທີ່ນັບຖືສິດທິຂອງຊຸມຊົນທີ່ໄດ້ຮັບຜົນກະທົບ.ເມື່ອເບິ່ງຜົນກະທົບທາງລົບດ້ານສັງຄົມທີ່ເກີດຈາກໂຄງການກາກບອນຊົດເຊີຍທີ່ເຮັດກ່ຽວກັບການປູກປ່າໄມ້, ເອຟພິກ ໄດ້ກາຍເປັນພື້ນຖານໃນການຮຽກຮ້ອງຕ້ອງການໂດຍກຸ່ມປະຊາຊົນພື້ນເມືອງຫລາຍກຸ້ມ - ສິດທິຕໍ່ທີ່ດິນຂອບປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ໄດ້ຖືກຮັບຮູ້ ຫລື ບໍ່ໃນລະດັບຊາດ. ໃນປະຈຸບັນບ່ອນໃດທີ່ມີການຮ້ອງທຸກ ແລະ ຂໍ້ຂັດແຍ້ງຫລາຍ, ສານສາກົນຮຽກຮ້ອງໃຫ້ມີຫລັກຖານໃນການນັບຖືສິດທິດ້ານ ເອຟພິກ[3] ຂອງປະຊາຊົນພື້ນເມືອງ.

ໃນຂະນະທີ່ນະໂຍບາຍ ແລະ ໂຄງການ ເຣດ+ ອາດຈະສ້າງຜົນປະໂຫຍດໃຫ້ຊຸມຊົນນະບົດ, ແຕ່ກໍມີຄວາມສ່ຽງຫລາຍໆ ຢ່າງທີ່ມີແນວໂນ້ມຮ້າຍແຮງໄດ້ຖືກຄົ້ນພົບຊຶ່ງລວມມີ:

- ການລະເມີດສິດທິຕໍ່ທີ່ດິນຕາມປະເພນີຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ແລະ ມາດຕະການບັງຄັບໃຊ້ທີ່ຮຸນແຮງ. ຊຶ່ງອາດນຳໄປສູ່ການສູນເສຍການເຂົ້າເຖິງປ່າໄມ້ເພື່ອຕ້ອງການໃນການດຳລົງ ຊີວິດ ແລະ ສ້າງລາຍຮັບ, ຂໍ້ຂັດແຍ້ງດ້ານການນຳໃຊ້ທີ່ດິນ ແລະ ການຍົກຍ້າຍອອກຈາກປ່າໄມ້
- ການຖືກຕັດແຍກອອກໂດຍການປະຕິຍັດການແບ່ງເຂດນຳໃຊ້ທີ່ດິນໃໝ່. ລັດຖະບານອາດດຳເນີນການເຊັ່ນເພື່ອສ້າງລາຍຮັບຈາກກາກບອນປ່າໄມ້ໃຫ້ລັດເອງ, ຢຸດເຊົາ ຫລື ປ່ຽນເປັນການຫັນລົງສູ່ທ້ອງຖິ່ນເພື່ອໃຫ້ຊຸມຊົນທ້ອງຖິ່ນເປັນເຈົ້າຂອງ ແລະ ຮັບຜິດຊອບໃນການຄຸ້ມຄອງຈັດສັນປ່າໄມ້.
- ຕັດແຍກກຳມະສິດຕໍ່ກາກບອນປ່າໄມ້ຈາກສິດທິໃນການຄຸ້ມຄອງຈັດສັນ ຫລື ການເປັນເຈົ້າຂອງ, ສະນັ້ນຈຶ່ງກີດຂວາງສິດທິຕາມກົດໝາຍຂອງຊຸມຊົນດ້ານຜົນປະໂຫຍດ ຈາກໂຄງການກາກບອນປ່າໄມ້ອັນໃໝ່

---

3 Weitzner, V. 2009. *Bucking the Wild West - Making Free, Prior and Informed Consent Work*, Speaking Notes for Free, Prior and Informed Consent Panel, Prospector and Developer's Association of Canada annual convention, p3. Available at: www.nsi-ins.ca

- ບໍ່ສາມາດເຂົ້າຮ່ວມໃນໂຄງການຈ່າຍຄ່າການບໍລິການດ້ານລະບົບນິເວດ (PES), ລວມທັງ ເຣດ+, ຍ້ອນຂາດສິດທິຕໍ່ຊັບສິນບັດ (ຕໍ່ປ່າໄມ້ ຫລື ກາກບອນປ່າໄມ້) , ຂໍ້ມູນ, ແລະ ຄ່າສິ້ນເປືອງໃນການປະຕິບັດ ແລະ ການບໍລິຫານສູງ.
- ສັນຍາດ້ານກາກບອນແບບເອົາປຽບ. ສິ່ງເຫລົ່ານີ້ ອາດເຮັດໃຫ້ຊຸມຊົນສືບຕໍ່ຮັບເອົາເງື່ອນໄຂທີ່ສະລະສິດທິໃນການນຳໃຊ້ທີ່ດິນ, ຮັບເອົາຄວາມຮັບຜິດຊອບຕໍ່ການສູນເສຍດ້ານປ່າໄມ້, ຫລື ຮັບເອົາການຈ່າຍຄ່າທີ່ຕ່ຳກວ່າມູນຄ່າຂອງໂອກາດການນຳໃຊ້ທີ່ດິນ ທີ່ສູນເສຍໄປ.
- ການຍຶດຄອງໂດຍຊຸມຊົນຊັ້ນສູງ (ຈາກພາຍໃນ ຫລື ນອກຊຸມຊົນ) ຕໍ່ກັບຜົນປະໂຫຍດທີ່ໄດ້ຈາກ ເຣດ+ ເນື່ອງຈາກວ່າລະບົບການຄຸ້ມຄອງບໍລິຫານປ່າໄມ້ບໍ່ເໝາະສົມ.
- ການຜະລິດອາຫານຢູ່ທ້ອງຖິ່ນຫລຸດລົງ, ເກີດມີຄວາມສ່ຽງດ້ານການຄ້ຳປະກັນສະບຽງອາຫານ ແລະ ເຮັດໃຫ້ຄວາມທຸກຍາກຫຍິ່ງຮ້າຍແຮງຂຶ້ນ.[4]

ພ້ອມໆກັນນັ້ນ ມັນເປັນຄວາມຮຽກຮ້ອງຕ້ອງການຕາມກົດໝາຍແລ້ວ, ຍັງມີເຫດຜົນດ້ານປະຕິບັດອີກທີ່ເຈົ້າຂອງໂຄງການ ເຣດ+ ຈະຕ້ອງໄດ້ນັບຖືສິດທິດ້ານ ເອຟພິກ. ປະຊາຊົນພື້ນເມືອງແລະ ຊຸມຊົນທ້ອງຖິ່ນຈະມີບົດບາດຫລາຍໃນການກຳນົດຜົນສຳເລັດຂອງໂຄງການ ເຣດ+. ພວກເຂົາເຈົ້າມີຄວາມສຳຄັນຫລາຍຕໍ່ການຈັດຕັ້ງປະຕິບັດກິດຈະກຳ ແລະ ນະໂຍບາຍພາຍໃຕ້ໂຄງການ, ແລະ ການບັນລຸຜົນສຳເລັດໃນການຫລຸດຜ່ອນການປ່ອຍອາຍພິດ. ພວກເຂົາເຈົ້າຍັງເປັນຈຸດໃຈກາງໃນການປະເມີນຜົນການຕິດຕາມບັນດາມາດຖານດ້ານສັງຄົມ, ຫລື ການຄຸ້ມກັນທີ່ດຳເນີນການໂດຍອີງກອນກວດກາຢັ້ງຢືນຕາງໜ້າໃຫ້ຜູ້ລົງທຶນໃນສິນເຊື່ອກາກບອນທີ່ມາຈາກປ່າໄມ່. ການປະເມີນຜົນນັ້ນຈະກຳນົດອອກໄດ້ເຖິງຄວາມຖືກຕ້ອງ ແລະມູນຄ່າອງສິນເຊື່ອກາກບອນທີ່ໄດ້ສ້າງຂຶ້ນ. ມີຫລາຍຕົວຢ່າງກ່ຽວກັບໂຄງການທີ່ຫລົ້ມເຫລວໃນເມື່ອມີຄວາມຂາດຕົກບົກຜ່ອງໃນລະບົບການທີ່ກີດກັ້ນການສ້າງຄວາມເຫັນດີເຫັນພ້ອມທີ່ໄດ້ຮັບແຈ້ງຢ່າງເໝາະສົມ, ໂດຍສະເພາະແມ່ນໃນການພັດທະນາເຂດປ້ອງກັນ ແລະ ໃນໂຄງການໃຫຍ່ໆ.[5] ບັນຫາເຫລົ່ານີ້ລວມມີ: ການຮີບຮ້ອນບໍ່ປ່ອຍໃຫ້ມີເວລາເພື່ອທຳຄວາມເຂົ້າໃຈໃຫ້ພຽງພໍກ່ຽວກັບແນວຄິດ ແລະການຈັດວາງທີ່ສ່ວນໃຫຍ່ ແມ່ນມີຄວາມສະລັບສັບຊ້ອນ; ການມີຂໍ້ມູນທີ່ບໍ່ພຽງພໍສຳລັບການສ້າງຄວາມສາມາດ; ແລະ ການຂາດລະບົບການຄຸ້ມກັນເພື່ອຮັບປະກັນໃຫ້ຂະບວນການເຂົ້າຮ່ວມຂອງຊຸມຊົນທ້ອງຖິ່ນໄດ້ຮັບການເອື້ອອຳນວຍຢ່າງພຽງພໍ.

ການນັບຖືສິດທິດ້ານເອຟພິກບໍ່ສາມາດຈະຫລຸດລົງໃຫ້ເປັນພຽງຂະບວນການແບບງ່າຍໆ ທີ່ເຮັດພໍແຕ່ໃຫ້ສຳເລັດ. ສິດທິຂອງປະຊາຊົນພື້ນເມືອງໃນການທີ່ຈະໃຫ້ ຫລື ຈະງົດຄວາມເຫັນດີເຫັນພ້ອມຕໍ່ກັບການພັດທະນາທີ່ສິ່ງຜົນກະທົບ.ໃສ່ເຂດແດນເຂົາເຈົ້າແມ່ນເປັນສ່ວນໜຶ່ງຂອງສິດທຮ່ວມໝູ່ ໃນການກຳນົດຊະຕາກຳຂອງເຂົາເຈົ້າເອງ, ຊຶ່ງລວມທັງສິດທິຈະເລືອກເອົາຂະບວນການແບບໃດ ໃນການປຶກສາຫາລື ແລະ ຕັດສິນໃຈທີ່ເຫັນວ່າເໝາະສົມກັບເຂົາເຈົ້າ. ດັ້ງນັ້ນ, ໜຶ້ງໃນບາດກ້າວຕົ້ນໆຂອງການນັບຖືສິດທິດ້ານ ເອຟພິກ ແມ່ນການຕົກລົງກັບຊຸມຊົນທີ່ກ່ຽວຂ້ອງດ້ານຂະບວນການນັ້ນເອງ. ຍ້ອນວ່າປະຊາຊົນພື້ນເມືອງ ແລະ ປະຊາຊົນທ້ອງຖິ່ນ

4 Lawlor, K., and D. Huberman. 2009. *Reduced Emissions from deforestation and forest degradation (REDD) and human rights. Chapter 12 in Rights-based approaches: Exploring issues and opportunities for conservation*. Edited by J. Campese et al. IUCN and CIFOR, Bogor, Indonesia: 271. Available at: www.cgiar.cifor.org

5 Brandon, K., and M. Wells. 2009. Lessons for REDD+ from protected areas and integrated conservation and development projects. Chapter 19 in *Realising REDD+: National strategy and policy options*. Edited by A. Angelsen. CIFOR, Bogor, Indonesia. Available at: www.cgiar.cifor.org

ເອຟພິກ ແມ່ນສິດທິອັນໜຶ່ງ. ມັນບໍ່ແມ່ນຂະບວນການທີ່ຕ້ອງປະຕິບັດທີ່ສິ້ນສຸດລົງດ້ວຍການລົງລາຍເຊັນໃນຂໍ້ຕົກລົງໂດຍຊຸມຊົນ. ເມື່ອຮັບຮູ້ສິດທິຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ກໍຖືວ່າເຂົາເຈົ້າເປັນເຈົ້າຂອງ ແລະ ເປັນຜູ້ຄຸ້ມຄອງເຂດແດນຕາມປະເພນີຂອງເຂົາເຈົ້າ, ເອຟພິກ ຮັບປະກັນໃຫ້ເຂົາເຈົ້າໄດ້ໂອກາດສຽງຕັດສິນໃຈໃຈແຕ່ລະໄລຍະ ຂອງການວາງແຜນ ແລະ ການຈັດຕັ້ງປະຕິບັດສຳລັດໂຄງການທີ່ສົ່ງຜົນກະທົບຕໍ່ເຂົາເຈົ້າ. ເອຟພິກ ຕ້ອງການໃຫ້ເຂົ້າໃຈວ່າເປັນສິດຮຽກຮ້ອງໃຫ້ຜູ້ພັດທະນາໂຄງການກຳເນີນການຕິດຕໍ່ພົວພັນທີ່ຈໍ່ເນື່ອງກັບຄວາມເຫັນດີເຫັນພ້ອມໃນໄລຍະສຳຄັນໆຂອງຂະບວນການ.

### ການສິ້ນເປືອງຕໍ່ທຸລະກິດຍ້ອນບໍ່ຮັບປະກັນດ້ານຄວາມເຫັນດີເຫັນພ້ອມ

ບໍລິສັດ ບໍ່ແຮ່ Newmont's Yanacocha ຢູ່ໃນປະເທດເປຣູແມ່ນໜຶ່ງໃນຕົວຢ່າງຊຶ່ງເປັນທີ່ຮູ້ກັນດີທີ່ສຸດວ່າແມ່ນມີຫຍັງເກີດຂຶ້ນເມື່ອຊຸມຊົນບໍ່ໄດ້ມີການປຶກສາຫາລືກ່ຽວກັບໂຄງການ. ການປະທ້ວງຂອງຊຸມຊົນເຮັດໃຫ້ບໍລິສັດບໍ່ແຮ່ Newmont's Yanacocha ສິ້ນເປືອງເຖິງປະມານ 1.69 ຕື້ ໂດລາ ຍ້ອນຄວາມຊັກຊ້າຂອງໂຄງການ, ຊຶ່ງເປັນການບັງຄັບໃຫ້ບໍລິສັດຕົກລົງວ່າຈະບໍ່ພັດທະນາບໍ່ແຮ່ Quilish ອີກເລີຍ, ຕົກເປັນມູນຄ່າປະມານ 2.23 ຕື້ ໂດລາ. ທີ່ຈິງແລ້ວ, ໃນທີ່ສຸດ ບໍລິສັດໄດ້ຮ້ອງຂໍໃຫ້ລັດຖະບານ ລົບລ້າງການອະນຸຍາດເພື່ອສຳຫລວດບໍ່ແຮ່ Quilish. ປະສົບການນີ້ໄດ້ເຮັດໃຫ້ເກີດມີອັນປ່ຽນແປງຢູ່ພາຍໃນບໍລິສັດ Newmont, ຊຶ່ງປະຈຸບັນເຂົ້າຮ່ວມໃນໜຶ່ງຂອງຂະບວນການທີ່ມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງທີ່ກວ້າງຂວາງທີ່ບໍ່ເຄີຍດຳເນີນການມາກ່ອນຢູ່ໃນບໍ່ແຮ່ຂອງ Akyem ທີ່ປະເທດການາ (Ghana). ຢູ່ໃນພາກພື້ນເອເຊຍຕາເວັນອອກສ່ຽງໃຕ້, ມີໂຄງການໂຄງລ່າງພື້ນຖານຂະໜາດໃຫຍ່ຫລາຍໂຄງການຊັກຊ້າ ຫລື ຢຸດລົງໄປຍ້ອນມີການເຄື່ອນໄຫວຕໍ່ຕ້ານຂອງຊຸມຊົນ. ຊຸມຊົນຢູ່ປະເທດໄທ, ລາວ ແລະ ກຳປູເຈຍໄດ້ຄັດຄ້ານໂຄງການສຳເລັດຊຶ່ງສ້າງຄວາມເສຍການຕໍ່ເສດຖະກິດ ແລະ ຊີວິດການເປັນຢູ່ຂອງທ້ອງຖິ່ນ, ພາໃຫ້ເກີດມີການລ້າຊ້າ ແລະ ການດັດປັບທີ່ສິ້ນເປືອງສູງຕໍ່ການອອກແບບຂອງໂຄງການ.

ແຫລ່ງຂໍ້ມູນ: Lehr, A., and G. Smith. 2010. *Implementing a Corporate Free, Prior and Informed Consent Policy*. Foley Hoag LLB, Boston and Washington, DC. Available at: www.foleyhoag.com

### ການກບອນປ່າໄມ້ທີ່ບໍ່ມີ ເອຟພິກ: ກໍລະນີສຶກສາຈາກ Ecuadorian Andes

- ຢູ່ເຂດເນີນສູງຂອງປະເທດເອກົວດໍ, ບັນດາໂຄງການປູກໄມ້ເພື່ອຊົດເຊີຍກາກບອນໂດຍບໍ່ໄດ້ເຮັດ ເອຟພິກ ແມ່ນມີຜົນກະທົບທາງລົບດ້ານສັງຄົມ, ເສດຖະກິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຜູ້ທີ່ໄດ້ເຂົ້າຮ່ວມໃນໂຄງການເຫລົ່ານີ້ດ້ວຍຄວາມຈິງໃຈ. ຫລາຍໆປີຢູ່ໃນຮອບວຽນຂອງໂຄງການ, ຊຸມຊົນໄດ້ຈົ່ມວ່າ:
- ບໍລິສັດກາກບອນບໍ່ເຄີຍແຈ້ງໃຫ້ຮູ້ຈັກເທື່ອກ່ຽວກັບຄ່າຈ່າຍສຸທິຕົວຈິງທີ່ເຂົາເຈົ້າຈະໄດ້ຮັບຕໍ່ໜຶ່ງເຮັກຕາ;
- ບໍ່ໄດ້ແຈ້ງໃຫ້ຮູ້ກ່ຽວກັບຄວາມສ່ຽງດ້ານສັງຄົມ ແລະ ເສດຖະກິດ, ຄ່າສິ້ນເປືອງທີ່ອາດມີ, ແລະ ພັນທະດ້ານນິຕິກຳຢູ່ພາຍໃຕ້ໂຄງການ;
- ບໍ່ໄດ້ຮັບຄຳແນະນຳກ່ຽວກັບເປົ້າໝາຍ ຫລື ເຫດຜົນຂອງສິນເຊື່ອກາກບອນ ທີ່ຜ່ານການກວດສອບຢັ້ງຢືນ ແລະ ສ້າງຂຶ້ນມາແນວໃດ;
- ບໍ່ໄດ້ແຈ້ງໃຫ້ຮູ້ກ່ຽວກັບຂໍ້ບັງຄັບດ້ານການປັບໃໝກ່ອນທີ່ສະມາຊິກ ຫລື ຫົວໜ້າຊຸມຊົນ ລົງລາຍເຊັນສັນຍາຜູກພັນໄລຍະຍາວ;
- ໄດ້ຕົກລົງເປັນຜູ້ໄດ້ຮັບເຄາະໃນການໃຊ້ເລ່ຫລ່ຽມ ຫລື ການກຳເນີນການທີ່ຜິດໆຕໍ່ລະບຽບຂອງເຂົາເຈົ້າເອງສຳລັບເອຟພິກ;
- ໄດ້ຮັບຜົນເສຍຫາຍໃນການປ່ຽນແທນທາງດ້ານເສດຖະກິດຈາກພື້ນທີ່ລ້ຽງສັດລວມໝູ່ທີ່ເປັນຜົນມາຈາກການຍອມມອບທີ່ດິນໃຫ້ໂຄງການ;
- ໄດ້ໃຊ້ຈ່າຍຫລາຍໃນກ້ອນເງິນທີ່ນ້ອຍໆພາຍໃຕ້ໂຄງການນີ້ໃຫ້ເປັນຄ່າຊ່ຽວຊານຈາກທາງນອກເພື່ອດຳເນີນວຽກວິຊາການຕາມທີ່ໄດ້ລະບຸໄວ້ໃນສັນຍາ;
- ໄດ້ອົດທົນຈໍ່ຄວາມລ້າຊ້າໃນການເບີກຈ່າຍທີ່ຕ້ອງໃຊ້ເວລາດົນເຖິງແມ່ນວ່າໄດ້ສຳເລັດວຽກຕາມກຳນົດເວລາ ແລະ ຕາມສັນຍາ;
- ສ່ວນໃຫຍ່ບໍ່ໄດ້ຮັບລາຍໄດ້ ແລະ ວຽກເຮັດງານທຳຕາມທີ່ໄດ້ສັນຍາກັນໄວ້;
- ມີຫລາຍກໍລະນີແມ່ນມີສະພາບທຸກຍາກລົງ ແລະ ເປັນໜີ້ຕ້ອງໄດ້ຈ່າຍຄ່າປັບໃໝຕາມສັນຍາຍ້ອນວ່າບໍ່ສາມາດປະຕິບັດພັນທະໄດ້ (ເຊັ່ນ: ເກີດຄວາມເສຍຫາຍຕໍ່ສວນປູກໄມ້ຍ້ອນເກີດເຫດໄຟໄໝ້);
- ໄດ້ຖືກລົງໂທດຍ້ອນຕ້ອງໄດ້ຈ່າຍຄ່າປັບໃໝຫລາຍຕາມຂໍ້ບັງຄັບດ້ານການປັບໃໝໃນສັນຍາ;
- ມີບາງກໍລະນີເປັນໜີ້ຍ້ອນຄວາມຜິດພາດໃນການຄິດໄລ່ທີ່ໄດ້ເບີກຈ່າຍເກີນສຳລັບບາງວຽກດ້ານປ່າໄມ້, ຊຶ່ງຕ້ອງໄດ້ຈ່າຍຄືນ;
- ຕ້ອງໄດ້ຮັບຜິດຊອບຈ່າຍໃນກິດຈະກຳທີ່ບັງເອີນຕ່າງໆ (ການປູກທົດແທນເບ້ຍໄມ້ທີ່ຕາຍໄປ);
- ມີກໍລະນີໜຶ່ງທີ່ມີການນາບຂູ່ (ເຮັດຜິດ) ວ່າຈຳເປັນຈະຍຶດທີ່ດິນຂອງເຈົ້າໂຄດລູງຕາແທນການປັບໃໝຍ້ອນບໍ່ສາມາດປະຕິບັດກິດຈະກຳປ່າໄມ້ທີ່ໄດ້ລະບຸໄວ້ໃນສັນຍາ;
- ໄດ້ມີການຈົ່ມວ່າ ແລະ ມີຄຳຖາມກ່ຽວກັບການໃຊ້ຈ່າຍ ແລະ ການຄິດໄລ່ຂອງບໍລິສັດເປັນປະຈຳໂດຍໃຫ້ພະນັກງານບໍລິສັດ ຊຳລະໜີ້ສິນ;

ແຫລ່ງຂໍ້ມູນ: Granda, P., 2005. *Carbon Sink Plantations in the Ecuadorian Andes: Impacts of the Dutch FACE-PROFAFOR monoculture tree plantations' project on indigenous and peasant communities.* WRM Series on Tree Plantations No.1.WRM, Montevideo. Available at: www.wrm.org.uy

# ການແນະນຳ
# ເພື່ອເປັນບ່ອນອ້າງອີງໂດຍຫຍໍ້



# ການແນະນຳເພື່ອເປັນບ່ອນອ້າງອີງໂດຍຫຍໍ້

ວາງກອບດ້ວຍຄຳຖາມພື້ນຖານຈຳນວນໜຶ່ງ, ພາກນີ້ເວົ້າເຖິງສະພາບລວມກ່ຽວກັບສິດທິດ້ານ ເອຟພິກ, ລວມທັງຕົ້ນກຳເນີດ ແລະ ການວິວັດທະນາການກ່ຽວກັບແນວຄິດ, ກອບນິຕິກຳທີ່ຕິດພັນ; ແລະ ໂຄງປະກອບກ່ຽວກັບຂະບວນການພື້ນຖານທີ່ຈຳເປັນທີ່ຈະບັນລຸ.

## ຄວາມເຫັນດີເຫັນພ້ອມຢ່າງອິດສະຫຼະ ໂດຍຮັບຮູ້ລ່ວງໜ້າ ແມ່ນຫຍັງ?

ລັກສະນະທີ່ກ່ຽວພັນກັນຂອງອົງປະກອບກ່ຽວກັບຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າແມ່ນໃຫ້ຮູ້ເຖິງສິ່ງທ້າທາຍສຳລັບການເຮັດໃຫ້ມີຄວາມເຂົ້າໃຈເປັນເອກະພາບກ່ຽວກັບ ເອຟພິກ. ນີ້ເປັນສ່ວນໜຶ່ງຍ້ອນວ່າມັນລວມເອົາທັງຂະບວນການ ແລະ ຜົນສຳເລັດ, ພ້ອມທັງຄວາມຮຽກຮ້ອງຕ້ອງການ ທີ່ຈະຕ້ອງເກີດຂຶ້ນໃນຊ່ວງເວລາໃດໜຶ່ງທີ່ຕິດພັນກັບກິດຈະກຳທີ່ໄດ້ສະເໜີມາ.

ກ່ອນຈະພະຍາຍາມແຍກຕົວອອກ ແລະ ອະທິບາຍສ່ວນປະກອບຕ່າງໆຂອງ ເອຟພິກ, ເຫັນວ່າຈະເປັນປະໂຫຍດໃນການຮູ້ຈັກວ່າອັນໃດບໍ່ແມ່ນ. ເອຟພິກບໍ່ແມ່ນການເຂົ້າມີສ່ວນຮ່ວມ, ບໍ່ແມ່ນການເຈລະຈາ, ແລະ ບໍ່ແມ່ນການປຶກສາຫາລື, ແຕ່ມັນແມ່ນວິທີທາງທີ່ຈະເຮັດໃຫ້ເອຟພິກບັນລຸຜົນສຳເລັດໄດ້.

ເອຟພິກ ສາມາດເວົ້າໄດ້ວ່າເປັນການສ້າງເງື່ອນໄຂໃຫ້ປະຊາຊົນປະຕິບັດສິດທິພື້ນຖານຂອງເຂົາເຈົ້າໃນການເຈລະຈາຕໍ່ລອງກັບເງື່ອນໄຂຂອງນະໂຍບາຍ, ແຜນງານ ແລະ ກິດຈະກຳທີ່ວາງອອກຈາກພາຍນອກ ຊຶ່ງສົ່ງຜົນກະທົບໂດຍກົງຕໍ່ການດຳລົງຊີວິດ ຫຼື ການເປັນຢູ່ຂອງເຂົາເຈົ້າ, ແລະ ໃຫ້ ຫຼື ງົດຄວາມເຫັນດີເຫັນພ້ອມ.

ດັ່ງນັ້ນ, ສິດທິຕໍ່ເອຟພິກສາມາດເຫັນໄດ້ວ່າເປັນອົງປະກອບເພີ່ມເຂົ້າໃນະຂະບວການປຶກສາຫາລືທີ່ພວມກຳລັງດຳເນີນຢູ່, ຫລື ເປັນການເສີມຂະຫຍາຍເພີ້ມເຕີມດ້ານຍຸດທະສາດ ໃນການເຮັດໃຫ້ຊຸມຊົນມີສ່ວນຮ່ວມ. ການມີສ່ວນຮ່ວມ ຫລາຍເທົ່າໃດຈະມີຂະບວນການປ່ຽນແປງຫລາຍເທົ່ານັ້ນ, ບໍ່ຈຳເປັນຕ້ອງໄດ້ເໜັ້ນໜັກ ແລະ ໃຊ້ເວລາຫລາຍເພື່ອຮັບປະກັນຄວາມເຫັນດີເຫັນພ້ອມ, ຍ້ອນວ່າຊຸມຊົນໄດ້ເຂົ້າໃຈແຈ້ງກ່ຽວກັບຂະບວນການ ແລະ ຜົນສຳເລັດຂອງການປ່ຽນແປງທີ່ໄດ້ສະເໜີມາແລ້ວ.

ບົດສະຫລຸບສັງລວມຂອງ ເອຟພິກ ທີ່ອ້າງອີງໃສ່ຢູ່ເລື້ອຍໆ ແມ່ນສະບັບທີ່ໄດ້ຮັບການອະນຸມັດຮັບຮອງເອົາໂດຍສະພາປະຈຳຂອງສະຫະປະຊາຊາດກ່ຽວກັບບັນຫາຂອງປະຊາຊົນພື້ນເມືອງ (UNPFII), ຢູ່ກອງປະຊຸມຄັ້ງທີ 4 ໃນປີ 2005.

ການອະທິບາຍອື່ນໆຢູ່ຕາມເອກະສານເອຟພິກປາກົດວ່າໄດ້ອີງໃສ່ເອກະສານສະບັບນີ້, ໂດຍໄດ້ໃຫ້ທັດສະນະກ່ຽວກັບເນື້ອໃນຂອງແຕ່ລະສ່ວນປະກອບທີ່ແຕກຕ່າງກັນໄປ.

ຈຳເປັນຕ້ອງມີເວລາພຽງພໍເພື່ອທຳຄວາມເຂົ້າໃຈ ແລະ ມີຄວາມເປັນເອກະພາບຕໍ່ທຸກສ່ວນປະກອບ. ມີຄວາມຈຳເປັນເພີ້ມເຕີມລວມຢູ່ໃນນັ້ນແມ່ນວ່າປະຊາຊົນຕ້ອງໄດ້ຮັບຊາບແທ້ໂດຍປັດສະຈາກການບັງຄັບ, ລ່ວງໜ້າຢ່າງພຽງພໍ ກ່ອນຈະມີການເລີ້ມກິດຈະກຳໃດໜຶ່ງຂອງໂຄງການ ແລະ ປະຊາຊົນຕ້ອງເຂົ້າ ໃຈຢ່າງຖືກຕ້ອງວ່າເຂົາເຈົ້າເຫັນດີເຫັນພ້ອມກັບຫຍັງແທ້.

## ສ່ວນປະກອບຂອງຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າ

- ຢ່າງເປັນອິດສະຫຼະ ໝາຍຄວາມວ່າ ບໍ່ມີການບັງຄັບ, ການນາບຂູ່ ຫລື ການໃຊ້ເລ່ຫລ່ຽມຫລອກລວງ;
- ລ່ວງໜ້າ ໝາຍຄວາມວ່າ ຄວາມເຫັນດີເຫັນພ້ອມໄດ້ຮັບການຄົ້ນຄວ້າຢ່າງພຽງພໍກ່ອນໜ້າການອະນຸຍາດໃຫ້ ຫລື ເລີ້ມກຳເນີນກິດຈະກຳ ແລະ ຖືສຳຄັນເວລາທີ່ຈຳເປັນໃນຂະບວນການປຶກສາຫາລື/ສ້າງຄວາມເຫັນດີເຫັນພ້ອມ;
- ໄດ້ຮັບຮູ້ໝາຍເຖິງໄດ້ສະໜອງຂໍ້ມູນໃຫ້ຊຶ່ງລວມມີ (ຢ່າງນ້ອຍ) ດ້ານຕ່າງໆດັ່ງຕໍ່ໄປນີ້:

  ກ. ລັກສະນະ, ຂະໜາດ, ຈັງຫວະ, ຄວາມສາມາດປີ້ນກັບ ແລະ ຂອບເຂດໂຄງການ ຫລື ກິດຈະກຳທີ່ສະເໜີຂຶ້ນມາ;

  ຂ. ເຫດຜົນ ຫລື ເປົ້າໝາຍຂອງໂຄງການ ຫລື ກິດຈະກຳ;

  ຄ. ອາຍຸຂອງໂຄງການ ຫລື ກິດຈະກຳ;

  ງ. ສະຖານທີ່ໃນພື້ນທີ່ໆຈະໄດ້ຮັບຜົນກະທົບ;

  ຈ. ການສຶກສາປະເມີນຜົນເບື້ອງຕົ້ນກ່ຽວກັບຜົນກະທົບທາງດ້ານສັງຄົມ, ວັດທະນະທຳ ແລະ ສິ່ງແວດລ້ອມ, ລວມທັງຄວາມສ່ຽງທີ່ອາດຈະເກີດຂຶ້ນ ແລະ ການແບ່ງຜົນປະໂຫຍດທີ່ສະເໝີພາບ ແລະ ຍຸດຕິທຳໂດຍການນັບຖືຫລັກການປ້ອງກັນໄວ້ລ່ວງໜ້າ;

  ສ. ພະນັກງານທີ່ຈະເຂົ້າຮ່ວມປະຕິບັດໂຄງການ (ລວມທັງປະຊາຊົນພື້ນເມືອງ, ພະນັກງານຂອງພາກເອກະຊົນ, ສະຖາບັນຄົ້ນຄວ້າ, ພະນັກງານຂອງລັດຖະບານ, ແລະ ອື່ນໆ); ແລະ

  ຊ. ຂັ້ນຕອນໂຕງການທີ່ຈຳເປັນຕ້ອງດຳເນີນການ.
- ຄວາມເຫັນດີເຫັນພ້ອມການປຶກສາຫາລື ແລະ ການມີສ່ວນຮ່ວມແມ່ນອົງປະກອບທີ່ສຳຄັນຂອງຂະບວນການສ້າງຄວາມເຫັນດີເຫັນພ້ອມ. ການປຶກສາຫາລືຈະຕ້ອງໄດ້ດຳເນີນໄປດ້ວຍຄວາມໄວ້ວາງໃຈ. ທຸກຝ່າຍຕ້ອງປຶກສາຫາລືກັນເພື່ອຊອກຫາວິທີແກ້ໄຂບັນຫາທີ່ເໝາະສົມ ພາຍໃຕ້ບັນຍາກາດໃນການເຄົາລົບ ແລະ ໄວ້ວາງໃຈຊຶ່ງກັນ ແລະ ກັນ, ແລະມີສ່ວນຮ່ວມຢ່າງເຕັມສ່ວນ ແລະ ສະເໝີພາບ. ການປຶກສາຫາລືຕ້ອງການເວລາ ແລະ ມີລະບົບຕິດຕໍ່ພົວພັນທີ່ມີປະສິດທິຜົນລະຫວ່າງຜູ້ທີ່ມີຄວາມສົນໃຈ. ປະຊາຊົນພື້ນເມືອງຄວນຈະສາມາດເຂົ້າຮ່ວມໂດຍຜ່ານຜູ້ຕາງໜ້າ ແລະ ການຈັດຕັ້ງຕາມປະເພນີທີ່ເຂົາເຈົ້າຄັດເລືອກກັນເອງຢ່າງເປັນອິດສະຫຼະ. ການພິຈາລະນາດ້ານບົດບາດຍິງຊາຍ ແລະ ການເຂົ້າຮ່ວມຂອງເພດຍິງຖືວ່າສຳຄັນລວມທັງການເຂົ້າຮ່ວມຂອງເດັກນ້ອຍ ແລະ ຊາວໜຸ່ມຕາມຄວາມເໝາະສົມ. ຂະບວນການນີ້ອາດຈະລວມເອົາທັງການເລືອກເອົາການງົດໃຫ້ຄວາມເຫັນດີເຫັນພ້ອມ. ຄວາມເຫັນດີເຫັນພ້ອມຕໍ່ການຕົກລົງໃດໜຶ່ງໝາຍຄວາມວ່າປະຊາຊົນພື້ນເມືອງໄດ້ເຂົ້າໃຈດີສົມຄວນ.

ແຫລ່ງຂໍ້ມູນ: UN Permanent Forum on Indigenous Issues (UNPFII). 2005. *Report of the International Workshop on Methodologies Regarding Free Prior and Informed Consent and Indigenous Peoples.* Document E/C.19/2005/3, submitted to the Fourth Session of UNPFII, 16–17 May. Available at: www.un.org

## ສິດທິດ້ານ ເອຟພິກ ເກີດຂຶ້ນມາແນວໃດ?

ເອຟພິກ ເກີດຂຶ້ນຈາກຂົງເຂດສິດທິຂອງປະຊາຊົນພື້ນເມືອງ, ຕໍ່ມາມີການຕິດພັນກັບສິດທິຂອງໝົດທຸກຄົນຕໍ່ກັບທີ່ດິນ ແລະ ເຂດແດນໂດຍອີງຕາມສິດທິດ້ານປະເພນີ ແລະ ການຕິດພັນກັບປະຫວັດສາດຂອງພວກເຂົາເຈົ້າ[6].

ຈຸດສຸມຂອງ ເອຟພິກ ເກີດມາຈາກຄວາມເປັນຫ່ວງວ່າປະຊາຊົນພື້ນເມືອງທັງຫລາຍ,ໂດຍສະເພາະຢູ່ຊົນນະບົດ, ຂາດອຳນາດດ້ານການເມືອງ ແລະ ເປັນຜົນເຮັດໃຫ້ຜົນປະໂຫຍດຂອງເຂົາເຈົ້າບໍ່ໄດ້ຮັບການພິຈາລະນາເວລາທີ່ອົງການຈັດຕັ້ງສາກົນ, ລັດຖະບານ ແລະ ນັກລົງທຶນພາກເອກະຊົນຕັດສິນໃຈ

ກ່ຽວກັບຊັບພະຍາກອນທີ່ປະຊາຊົນເຫລົ່ານີ້ມີສິດທິມີອຳນາດຢ່າງແທ້ຈິງ. ໃນທາງທິດສະດີແລ້ວ, ການນັບຖືສິດທິດ້ານ ເອຟພິກ ນຳໃຊ້ນະໂຍບາຍ ຫລື ໂຄງການໃດໜຶ່ງທີ່ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນເຫລົ່ານີ້, ແຕ່ໃນຄວາມເປັນຈິງແລ້ວມັນໄດ້ຖືກນຳໃຊ້ຢ່າງກວ້າງຂວາງໃນຂະແໜງເສດຖະກິດຊຶ່ງເປັນການສະແຫວງຫາປະໂຫຍດຈາກທີ່ດິນ ແລະ ຊັບພະຍາກອນທີ່ປະຊາຊົນທ້ອງຖິ່ນອາດເປັນເຈົ້າຂອງ ຫລື ນຳໃຊ້: ການຂຸດຄົ້ນບໍ່ແຮ່, ການປ່າໄມ້ ແລະ ການພັດທະນາສວນປູກໄມ້. ວິວັດທະນາການກ່ຽວກັບຄວາມເປັນຫ່ວງຕໍ່ສິດທິດ້ານ ເອຟພິກ ໄດ້ດຳເນີນການໂດຍການເພີ້ມການຮັບຮູ້ສິດທິຂອງປະຊາຊົນພື້ນເມືອງໃນການຕັດສິນໃຈດ້ວຍຕົນເອງ ແລະ ການຮັບຮູ້ປະຫວັດສາດໃນການຈຳແນກເຊື້ອຊາດຜິວພັນ ແລະ ການນຳໃຊ້ທີ່ດິນຕາມປະເພນີ ຫລື ຂອງບັນພະບູລຸດຂອງເຂົາເຈົ້າ.

## ເປັນຫຍັງ ເຣດ+ ຈຶ່ງມີຄວາມຕ້ອງການ ເອຟພິກ

ໄດ້ມີການຍອມຮັບກັນຫລາຍຂື້ນມາເລື້ອຍໆທີ່ວ່າເພື່ອໃຫ້ໂຄງການ ແລະ ແຜນງານ ເຣດ+ ໄດ້ຮັບການເຊື່ອຖືຢູ່ໃນທ້ອງຖິ່ນ, ການເຈລະຈາໃຫ້ມີຂໍ້ຕົກລົງໄລຍະຍາວກ່ຽວກັບການນຳໃຊຊັບພະຍາກອນຕ້ອງໄດຮັບຮູ້ທັງສອງຢ່າງຄືສິດທິຂອງປະຊາຊົນພື້ນເມືອງ ແລະ ຂອງຊຸມຊົນທ້ອງຖິ່ນຜູ້ທີ່ອາໄສຢູ່ພື້ນທີ່ປ່າໄມ້ນັ້ນ ໂດຍສະເພາະສຳລັບການດຳລົງຊີວິດຂອງເຂົາເຈົ້າ. ຖ້າເຮັດບໍ່ໄດ້ອາດນຳໄປສູ່ຄວາມຂັດແຍ່ງ ຫລື ຜົນສຳເລັດບໍ່ເທົ່າທຽມກັນຢູ່ບ່ອນວ່າມີການປະຕິເສດການກຳລົງຊີວິດທີ່ເຄີຍປະຕິບັດຜ່ານມາ ແລະ ການເຂົ້າ ເຖິງຊັບພະຍາກອນ. ການກຳນົດອອກວ່າ ແມ່ນໃຜມີສິດຕໍ່ທີ່ດິນຕອນໃດຈຶ່ງເປັນບາດກ້າວສຳຄັນໃນການ ເອື້ອອຳນວຍຂໍ້ສະດວກຂະບວນການເພື່ອນັບຖືສິດທິທາງດ້ານເອຟພິກຂອງຊູມຊົນ.

ແນວໃດກໍຕາມ, ຕ້ອງໄດ້ຮັບຮູ້ວ່າສິດທິຕໍ່ກັບທີ່ດິນ ຫລື ຊັບພະຍາກອນເທົ່ານັ້ນແມ່ນບໍ່ໄດ້ຄໍ້າປະກັນວ່າເຂົາເຈົ້າຈະໄດ້ຮັບການນັບຖື. ໂດຍສະເພາະໃຍກໍລະນີທີ່ມີຄວາມກົດດັນຈາກທາງນອກເພື່ອສະແຫວງຫາປະໂຫຍດຈາດຊັບພະຍາກອນໃຊ້ສິດໂດຍການບອກຂໍ້ມູນຜິດໆ ຫລື ເຮັດໃຫ້ະຊາຊົນເຂົ້າໃຈຜິດ,ໂດຍມີເຈດຕະນາ ຫລື ບໍ່ກໍຕາມ. ຈຳເປັນຕ້ອງມີສະພາຍແວດລ້ອມທີ່ເຂັ້ມແຂງສາມາດເອື້ອອຳນວຍ ເພື່ອຮັບປະກັນໃຫ້ໄດສິດທິຢ່າງແທ້ຈິງຕາມຈິດໃຈຂອງ ເອຍພິກ. ພື້ນຖານດ້ານກົດໝາຍສຳລັບກຳນົດສິດທິແມ່ນໃຫ້ມີການປຶກສາຫາລືຕື່ມອີກຢູ່ໃນສ່ວນປະກອບທີ່ 1 ລຸ່ມນີ້, ແລະ ກາເຂົ້າມາມີສ່ວນຮ່ວມປະຕິບັດຕົວຈິງຂອງພາກສ່ວນກ່ຽວຂ້ອງໃນການແຕ້ມແຜນທີ່ສິດທິເຫລົ່ານີ້ຈະມີການສົນທະນາຢູ່ໃນສ່ວນປະກອບທີ່ 4.

---

6 Colchester, M., and M.F. Ferrari. 2007. Making FPIC – *Free, Prior and Informed Consent – Work: Challenges and Prospects for Indigenous Peoples*. Forest Peoples Programme, Moreton-in-Marsh, UK. Available at: www.forestpeoples.org

ສ່ວນໜຶ່ງໃນການກະຕຸກຊຸກຍູ້ເພື່ອຮັບປະກັນເອຟພິກໃຫ້ໄດ້ຮັບການນັບຖືເປັນເງື່ອນໄຂສຳລັບກົນໄກຂອງ ເຣດ+ ແມ່ນໃຫ້ມອບອຳນາດແກ່ຜູ້ຖືສິດທິເພື່ອຄັດຄ້ານຕໍ່ກິດຈະກຳ ຫລື ນະໂຍບາຍດ້ານ ເຣດ+ ທີ່ເປັນການອ້າງ "ສິດທິ ທີ່ບໍ່ມີເຫດຜົນ". ໂດຍສະເພາະແມ່ນລັດຖະບານອາດໄດ້ຮັບຜິດຊອບເພື່ອໃຫ້ເຫດຜົນນະໂຍບາຍທີ່ບໍ່ຍຸຕິທຳວ່າເປັນສ່ວນໜຶ່ງຂອງຍຸດທະສາດດ້ານເຣດ+ແຫ່ງຊາດໂດຍການອ້າງເຖິງ "ຜົນປະໂຫຍດຂອງຊາດ". ຂະບວນການໃນການນັບຖືສິດທິດ້ານ ເອຟພິກ ແມ່ນຕ້ອງໄດ້ຮັບປະກັນວ່າ ຜົນປະໂຫຍດສະເພາະຂອງກຸ່ມຜູ້ທີ່ໄດ້ຮັບຜົນກະທົບໂດຍກົງໄດ້ຮັບການຕອບສະໜອງ, ດ້ວຍການຊອກຫາຄວາມເຫັນດີເຫັນພ້ອມໃນກອບຂອງ ເອຟພິກ ບໍ່ໄດ້ໝາຍຄວາມວ່າຈຳເປັນຈະຕ້ອງມີຂໍ້ຕົກລົງກັບແຕ່ລະຄົນ. ແຕ່ຄວາມເຫັນດີເຫັນພ້ອມແມ່ນອີງໃສ່ການພິຈາລະນາແບບລວມໝູ່, ຊຶ່ງບັນລຸໄດ້ໂດຍຜ່ານຂະບວນການເຈລະຈາ, ການປຶກສາຫາລື ແລະ ຂໍ້ຕົກລົງຕາມປະເພນີ. ບັນດາກົດໝາຍ ແລະ ເຄື່ອງມືລະດັບສາກົນທີ່ຄ້ຳຈູນ ເອຟພິກ ແມ່ນໄດ້ເວົ້າເຖິງຢູ່ໃນພາກທຳອິດຂ້າງລຸ່ມ ແລະ ຂອບເຂດສິດທິດ້ານ ເອຟພິກ ແມ່ນໄດ້ບັນລະຍາຍຢູ່ໃນພາກທີສອງ.

## ເວລາໃດທີ່ໂຄງການຈຳເປັນຕ້ອງນັບຖືສິດທິດ້ານເອຟພິກ?

ຄວາມເຫັນດີເຫັນພ້ອມບໍ່ແມ່ນຂະບວນການທີ່ເກີດຂຶ້ນຄັ້ງດຽວທີ່ອະນຸຍາດໃຫ້ສັງຄົມມີການພັດທະນາຕະຫຼອດໄປ. ແຕ່ມັນເປັນສ່ວນໜຶ່ງຂອງຂະບວນການທີ່ເກີດຂຶ້ນອີກ, ຊຶ່ງປະຊາຊົນພື້ນເມືອງຖືວ່າເປັນ "ຄວາມເຫັນດີເຫັນພ້ອມ ທີ່ມີຊີວິດ", ຊຶ່ງຕ້ອງໄດ້ມີການຕິດຕາມກວດກາ, ບຳລຸງຮັກສາ ແລະ ຢືນຢັນຄືນຕະຫລອດຂັ້ນຕອນຕ່າງໆຂອງໂຄງການ. ເຊັ່ນດຽວກັນ, ການຕັດສິນໃຈງົດຄວາມເຫັນດີເຫັນພ້ອມກໍບໍ່ຈຳເປັນວ່າມີຜົນບັງຄັບໃຊ້ຕະຫລອດໄປ ແລະ ຍັງສາມາດທົບທວນຄືນໂດຍຜູ້ທີ່ຖືສິດທິໃນເວລາທີ່ມີສະພາບການປ່ຽນແປງ ຫລື ມີສິ່ງເອື້ອອຳນວຍຫລາຍຂຶ້ນ. ເຊັ່ນຕົວຢ່າງ, ຊຸມຊົນອາດຈະຕັດສິນໃຈເຂົ້າຮ່ວມໃນຫລາຍໂຄງການພັດທະນາເມື່ອມີຄວາມຮູ້ຫລາຍຂຶ້ນກ່ຽວກັບຜົນກະທົບ ແລະ ຜົນປະໂຫຍດທີ່ມີແນວໂນ້ມຈະເກີດຂຶ້ນ.

### ດ້ານນັບຖືສິດທິດ້ານ ເອຟພິກ

"ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າບໍ່ຄວນຈະເຂົ້າໃຈວ່າເປັນການອອກສຽງວ່າໄດ້ ຫລື ບໍ່ໄດ້ ຫລື ວ່າເປັນອຳນາດໃນການຄັດຄ້ານສຳລັບບຸກຄົນ ຫລື ກູ່ມຄົນໃດໜຶ່ງ. ແຕ່ມັນແມ່ນຂະບວນການຊຶ່ງປະຊາຊົນພື້ນເມືອງ, ຊຸມຊົນທ້ອງຖິ່ນ, ລັດຖະບານ ແລະ ບໍລິສັດອາດຈະໄດ້ຕົກລົງຮ່ວມກັນໃນເວທີການປຶກສາຫາລືຊຶ່ງໃຫ້ອຳນາດພຽງພໍແກ່ຊຸມຊົນທີ່ໄດ້ຮັບຜົນກະທົບໃນການເຈລະຈາເງື່ອນໄຂຕ່າງໆວ່າເຂົາເຈົ້າຢາກເຮັດແນວໃດ ແລະ ມີຜົນໄດ້ຮັບທີ່ຈະພາໃຫ້ເຂົາເຈົ້າດີຂຶ້ນຢ່າງຈະແຈ້ງ. ບໍລິສັດຈະຕ້ອງສະເໜີໃຫ້ສິ່ງທີ່ດີໆ ທີ່ພາໃຫ້ຊຸມຊົນເຈົ້າພາບຢາກເຫັນໂຄງການເກີດຂຶ້ນ ແລະ ເຈລະຈາຂໍ້ຕົກລົງວ່າຈະໃຫ້ໂຄງການເກີດຂຶ້ນແນວໃດແລ້ວຈຶ່ງຖືວ່າເປັນການ "ອະນຸຍາດດ້ານສັງຄົມ" ແກ່ບໍລິສັດເພື່ອດຳເນີນງານ."

ແຫລ່ງຂໍ້ມູນ: Salim, E. 2003. *Striking a Better Balance:The Final Report of the Extractive Industries Review.* Extractive Industries Review, Jakarta and Washington, DC. Available at: www.worldbank.org

## ມີກົນໄກດ້ານນິຕິກຳຫຍັງແດ່ເພື່ອບັງຄັບໃຫ້ ເຣດ+ ນັບຖືສິດທິດ້ານ ເອຟພິກ?

ໃນຂະນະທີ່ແນວຄວາມຄິດຂອງເອຟພິກຍັງມີການວິວັດທະນາການຢູ່ນີ້, ສ່ວນປະກອບຂອງມັນໄດ້ຖືກຮັບຮູ້ໂດຍຂໍ້ຕົກລົງ ແລະ ເຄື່ອງມືສາກົນຈຳນວນໜຶ່ງ. ສະພາບຂອງແຕ່ລະສ່ວນປະກອບໄດ້ສັງລວມຫຍໍ້ຢູ່ລຸ່ມນີ້, ສ່ວນຂໍ້ມູນລະອຽດແມ່ນໃຫ້ເບິ່ງໃນເອກະສານແນບທ້າຍ 1.

- ຖະແຫລງການຂອງສະຫະປະຊາຊາດວ່າດ້ວຍສິດທິຂອງປະຊາຊົນພື້ນເມືອງ (UNDRIP) ມີບົດບັນລະຍາຍຄົບຖ້ວນສົມບູນກ່ຽວກັບ ເອຟພິກ ແລະ ມີຂໍ້ບັງຄັບຈະແຈ້ງຕໍ່ກັບລັດກ່ຽວກັບສິດທິຂອງປະຊາຊົນພື້ນເມືອງ, ລວມທັງສິດທິໃນການເປັນເຈົ້າຂອງ ແລະ ການນຳໃຊ້ເຂດແດນຕາມປະເພນີຂອງເຂົາເຈົ້າ.
- ສົນທິສັນຍາສາກົນດ້ານການຈັດຕັ້ງແຮງງານເລກທີ 169 ຄ້ຳປະກັນສິດທິຂອງປະຊາຊົນພື້ນເມືອງຕໍ່ກັບທີ່ດິນຂອງເຂົາເຈົ້າ ແລະ ມີສ່ວນຮ່ວມໃນການຕັດສິນໃຈຊຶ່ງຜົນກະທົບໃສ່ຊັບພະຍາກອນ ແລະ ຊີວິດການເປັນຢູ່ຂອງເຂົາເຈົ້າ.
- ສົນທິສັນຍາວ່າດ້ວຍຊີວະນາໆພັນໄດ້ຮັບຮູ້ວ່າຄວາມຮູ້ພື້ນເມືອງອາດສາມາດນຳໃຊ້ໄດ້ກໍຕໍ່ເມື່ອວ່າມີການອະນຸຍາດກ່ອນໜ້າເທົ່ານັ້ນ ແລະ ຮຽກຮ້ອງໃຫ້ລັດຖະບານປົກປ້ອງວັດທະນະທຳ ແລະ ປະຊາຊົນພື້ນເມືອງ.
- ກອບສົນທິສັນຍາຂອງສະຫະປະຊາຊາດວ່າດ້ວຍການປ່ຽນແປງພູມອາກາດ (UNFCCC) ແມ່ນອີງໃສ່ UNDRIP ຢູ່ໃນເອກະສານແນບທ້າຍ 1 ໃນການຕົກລົງຂອງກອງປະຊຸມລັດພາຄີຄັ້ງທີ 16 - ຂໍ້ຕົກລົງແຄນຄູນ. ເອກະສານແນບທ້າຍສະບັບນີ້ໃຫ້ຄວາມລະອຽດດ້ານການຄຸ້ມກັນວ່າບັນດາປະ ເທດຄວນສົ່ງເສີມເວລາກຳເນີນກິດຈະກຳພາຍໃຕ້ ເຣດ+. ໂດຍ “ຮູ້ໄດ້ວ່າ” UNDRIP ຖືກຮັບຮອງ ແລ້ວໂດຍກອງປະຊຸມໃຫຍ່ຂອງສະຫະປະຊາຊາດ, ເອກະສານມີຄວາມໝາຍວ່າ(ແຕ່ບໍ່ໄດ້ເວົ້າ Quick Reference Guide 19 ລະອຽດ) ພັນທະກ່ຽວກັບ ເອຟພິກ ຄືດັ່ງທີ່ລະບຸໄວ້ໃນ UNDRIP ກໍນຳໃຊ້ໄດ້ຢູ່ໃນຂົງເຂດຂອງ ເຣດ+ ເຊັ່ນກັນ. ແນວໃດກໍຕາມ, ການຄຸ້ມກັນກໍຕ້ອງການໃຫ້ປະຕິບັດ ກິດຈະກຳດ້ານເຣດ+ ເຊັ່ນກັນໂດຍມີ “ການເຂົ້າຮ່ວມຂອງຄົນພື້ນເມືອງ ແລະ ປະຊາຊົນທ້ອງຖິ່ນ ຢ່າງເຕັມປ່ຽມ ແລະ ມີປະສິດທິຜົນ”. ເພື່ອປະຕິບັດພັນທະນີ້ໄດ້, ຈຳເປັນທີ່ຈະຕ້ອງນັບຖືຕໍ່ ເອຟພິກ ຂອງເຂົາເຈົ້າ.
- ການເອົາໃຈໃສ່ຢ່າງລະອຽດເປັນລາຍລັກອັກສອນຕໍ່ກັບຫລັກການຂອງ UNREDD ກ່ຽວກັບ UNDRIP ແລະ ເອຟພິກ ແມ່ນໄດ້ລະບຸໄວ້ຢູ່ໃນບົດແນະນຳ ທີ່ໄດ້ຮັບຮອງເອົາໂດຍແຜນງານ.
- ແຜນງານຮ່ວມມືດ້ານກາກບອນປ່າໄມ້ຂອງທະນາຄານໂລກ (FCPF) ແລະ ແຜນງານລົງທຶນປ່າໄມ້ (FIP) ທັງສອງແມ່ນໄດ້ອ້າງອີງໃສ່ “ການປຶກສາຫາລືຢ່າງເປັນອິດສະຫຼະໂດຍຮັບຮູ້ລ່ວງໜ້າ”, ແຕ່ສິ່ງນີ້ກໍບໍ່ຄ້ຳປະກັນສິດທິຊຸຊົນໃນການງົດຄວາມເຫັນດີເຫັນພ້ອມຂອງເຂົາເຈົ້າຕໍ່ກັບການພັດທະນາທີ່ໄດ້ສະເໜີຂຶ້ນມາ.
- ບັນດາມາດຖານຂອງຕະຫລາດກາກບອນແບບອິດສະຫຼະ (VCS) ໄດ້ອ້າງເຖິງ “ການປຶກສາຫາລືກັບຊຸມຊົນ”, ແຕ່ບໍ່ແມ່ນ ເອຟພິກ. ບັນດາມາດຖານດ້ານພູມອາກາດ, ຊຸມຊົນ ແລະ ຊີວະນາໆພັນ (CCB) ໃນອີກດ້ານນຶ່ງຮຽກຮ້ອງໃຫ້ມີການເຮັດເປັນລາຍລັກອັກສອນກ່ຽວກັບຂະບວນການທີ່ນັບຖືຕໍ່ສິດທິດ້ານ ເອຟພິກ ຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຊຶ່ງສິດທິຂອງເຂົາເຈົ້າອາດໄດ້ຮັບຜົນກະທົບຈາກໂຄງການ.
- ມາດຖານດ້ານສັງຄົມ ແລະ ສິ່ງແວດລ້ອມຂອງ ເຣດ+. ໄດ້ອອກແບບມາສະເພາະນຳໃຊ້ກັບແຜນງານ ເຣດ+ ລະດັບຊາດ ແລະ ທ້ອງຖິ່ນ, ບໍ່ແມ່ນໂຄງການ, ມາດຖານເຫລົ່ານີ້ຮຽກຮ້ອງຢ່າງຊັດເຈນໃຫ້ຢຶດໝັ້ນໃນເອຟພິກສຳລັບປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ. ມາດຖານແມ່ນໝາກຜົນຂອງຂະບວນການຮ່ວມມື, ນຳພາໂດຍອົງການຈັດຕັ້ງງາງສັງຄົມທາງພາກໃຕ້ ແລະ ໄດ້ຮັບການເອື້ອອຳນວຍໂດຍການ CARE International ແລະ ພັນທະມິດພູມອາກາດ, ຊຸມຊົນ ແລະ ຊີວະນາໆພັນ[7]

7 See www.climate-standards.org to download the REDD+ Social and Environmental Standards.

ໃນລະດັບຊາດ ແລະ ທ້ອງຖິ່ນ, ເຖິງວ່າບໍ່ໄດ້ມີກົດໝາຍ ແລະ ກົດລະບຽບໃດ ໄດ້ກ່າວໄວ້ຢ່າງຈະແຈ້ງກໍຕາມ, ແຕ່ກໍເຫັນວ່າຍັງມີເຄື່ອງມືດ້ານນິຕິກຳທີ່ກ່ຽວພັນກັບສິດທິຂອງມະນຸດ, ສິດທິເຂົ້າເຖິງຂໍ້ມູນຂ່າວສານ, ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແລະ ອື່ນໆທີ່ໝາຍເຖິງຄວາມຈຳເປັນທີ່ຕ້ອງໄດ້ນັບຖືສິດທິຂອງ ຊຸມຊົນດ້ານເອຟພິກ.

## ຂະບວນການທີ່ໃຫ້ການນັບຖືສິດທິດ້ານເອຟພິກ ມີສ່ວນປະກອບຫຍັງແດ່?

ຄວນພິຈາລະນາບັນດາຂໍ້ທີ່ໄດ້ສັງລວມໄວ້ຕໍ່ໄປນີ້ໃນເວລາອອກແບບຂະບວນການທີ່ເຂັ້ມແຂງເພື່ອໃຫ້ໄດ້ເອຟພິກ ໃນໂຊງເຂດຂອງ ເຣດ+. ຂະບວນການໄດ້ເກາະຕິດກັບຄວາມເຫັນດີເຫັນພ້ອມໃນສາມລະດັບ:

- ຄວາມເຫັນດີເຫັນພ້ອມໃນການປຶກສາຫາລືແນວຄິດຂອງໂຄງການ ເຣດ+ ຊຶ່ງຈະສົ່ງຜົນກະທົບຕໍ່ປ່າໄມ້ຊຸມຊົນ,
- ຄວາມເຫັນດີເຫັນພ້ອມໃນການເຂົ້າຮ່ວມພັດທະນາແຜນລະອຽດຂອງໂຄງການ, ແລະ
- ຄວາມເຫັນດີເຫັນພ້ອມຕໍ່ກັບການຈັດຕັ້ງປະຕິບັດໂຄງການ.

ຂະບວນການຈະນຳໄປສູ່ການຕົກລົງແຕ່ລະລະດັບຮຽກຮ້ອງໃຫ້ມີການສຳຫລວດ, ການວິເຄາະ, ແລະການເຈລະຈາຫລາຍຂຶ້ນ

**ອິດສະຫຼະ**

- ການປຶກສາຫາລື ຫລື ການເຈລະຈາເກີດຂຶ້ນບົນພື້ນຖານການຕົກລົງຮ່ວມກັນດ້ານສະຖານທີ່ ແລະ ເວລາ ແລະ ໂດຍບໍ່ໃຫ້ຜູ້ເຂົ້າຮ່ວມໃຊ້ອຳນາດຝ່າຍໃດຝ່າຍໜຶ່ງ;
- ເຈົ້າຂອງໂຄງການ (ນັກພັດທະນາ) ໃຫ້ຄຳໝັ້ນສັນຍາຢ່າງຈະແຈ້ງວ່າຈະບໍ່ດຳເນີນການຕໍ່ໄປຖ້າບໍ່ໄດ້ຮັບຄວາມເຫັນດີເຫັນພ້ອມໃນທຸກຂັ້ນຕອນຂອງການສ້າງ ແລະ ການຈັດຕັ້ງປະຕິບັດໂຄງການຊຶ່ງ ຕ້ອງໄດ້ມີເອຟພິກ.
- ຜູ້ຖືສິດທິ ຮັບຮູ້ກ່ຽວກັບສິດທິຂອງເຂົາເຈົ້າທີ່ຈະປະຕິເສດວ່າ "ບໍ່" ແລະ ເຈລະຈາເງື່ອນໄຂຕ່າງໆ;
- ຜູ້ຖືສິດຕ້ອງໃຫ້ມີເວລາພຽງພໍເພື່ອພິຈາລະນາຂໍ້ມູນຂ່າວສານທີ່ໄດ້ຮັບ, ແລະ ປະຕິບັດຂະບວນການຕັດສິນໃຈຢ່າງທົ່ວເຖິງຕາມທີ່ໄດ້ຕົກລົງກັນ (ແຕ່ເຂົາເຈົ້າຕ້ອງໄດ້ນັບຖືການກຳນົດເວລາ);
- ຜູ້ອຳນວຍຄວາມສະດວກ ຫລື ພວກທີ່ຊ່ວຍພັດທະນາໂຄງການຈາກຕ່າງປະເທດສາມາດເຮັດວຽກຢ່າງຊຳນິຊຳນານ ແລະ ມີຄວາມເປັນກາງພໍສົມຄວນຕໍ່ກັບຜົນໄດ້ຮັບຂອງຂະບວນການເຫັນດີເຫັນພ້ອມ (ຮັບຮູ້ຜົນປະໂຫຍດ, ເປີດເຜີຍແຫລ່ງສະໜອງທຶນຂອງເຂົາເຈົ້າ ແລະ ອື່ນໆ..);
- ຂະບວນການສອບສວນຢັ້ງຢືນທີ່ເປັນເອກະລາດຢືນຢັນວ່າເປັນຂະບວນອິດສະຫຼະບໍ່ມີອິດທິພົນໃດໆມາແຊກແຊງ;
- ຢູ່ບ່ອນໃດທີ່ການເຈລະຈາຫລົ້ມເຫລວ, ກໍຄວນມີຊ່ອງທາງເຂົ້າເຖິງການຊ່ວຍເຫລືອຂອງຝ່າຍທີສາມ - ທາງດ້ານກົດໝາຍ ຫລື ແບບອື່ນໆເພື່ອສະໜອງແຫລ່ງຂໍ້ມູນເພີ່ມເຕີມ, ວິທີໄກ່ເກ່ຍ, ຫລື ເຮັດໃຫ້ຜູ້ຖືສິດທິມີຄວາມເຂັ້ມແຂງ;
- ເວລາທີ່ບໍ່ໄດ້ຮັບຄວາມເຫັນດີເຫັນພ້ອມ, ໄລຍະກ່ອນທີ່ຈະຄົ້ນຄວ້າ ຫລື ເອົາໃຫ້ອີກແມ່ນຈະຕົກລົງຮ່ວມກັນ, ລວມທັງເງື່ອນໄຂຕ່າງໆສິ່ງທີ່ສາມາດກັບປື້ນການຕົກລົງກັນໄດ້.

**ລ່ວງໜ້າ**

- ຄວາມເຫັນດີເຫັນພ້ອມແມ່ນໄດ້ຄົ້ນຄວ້າແຕ່ຕອນທຳອິດໃນໄລຍະການກຳນົດ/ການພັດທະນາແນວຄວາມຄິດໂຄງການ. ຄວາມເຫັນດີເຫັນພ້ອມຈາກຊຸມຊົນຄວນໄດ້ຄົ້ນຄວ້າເຊັ່ນກັນໃນເວລາລັດຖະບານລະດັບຊາດ ແລະ ລະດັບທ້ອງຖິ່ນ, ພັດທະນາແຜນງານດ້ານ ເຣດ+; ແລະ

- ຄວາມເຫັນດີເຫັນພ້ອມໄດ້ຄົ້ນຄວ້າ ແລະ ໃຫ້ມີການຕົກລົງເຫັນດີໃນຈຸດຕ່າງໆຂອງຂະບວນການພັດທະນາໂຄງການ ເຣດ+ ໄວ້ ກ່ອນຈະສືບຕໍ່ໄປຫາບາດກ້າວຕໍ່ໆໄປ.

## ໄດ້ຮັບຮູ້

*ແມ່ນໃຜໄດ້ຮັບຮູ້ ແລະໄດ້ຮັບຮູ້ແນວໃດ?*

- ຊຸມຊົນໃນຄວາມໝາຍທົ່ວໄປ (ລວມມີ ແມ່ຍິງ, ຊາວໜຸ່ມ ແລະ ກຸ່ມຜູ້ດ້ອຍໂອກາດ) ໄດ້ຮັບຮູ້ກ່ຽວກັບສະພາບລວມທັງໝົດໃນການພັດທະນາໂຄງການ;
- ຂໍ້ມູນຂ່າວສານທັງໝົດແມ່ນໃຫ້ມີພ້ອມເປັນພາສາທ້ອງຖິ່ນ ແລະ ເຜີຍແຜ່ຢ່າງສະໝ່ຳສະເໝີຕາມຄວາມຕ້ອງການຮຽນຮູ້ຂອງຊຸມຊົນ (ລວມທັງເວລາ, ສະຖານທີ່, ຄວາມຊ່ວຍເຫລືອ ແລະ ອື່ນໆ), ກອງປະຊຸມລະຫວ່າງເຈົ້າຂອງໂຄງການ ແລະ ຊຸມຊົນຄວນໄດ້ຈັດຂຶ້ນເປັນພາສາທ້ອງຖິ່ນ;
- ການຕິດຕໍ່ພົວພັນໂດຍກົງ (ກອງປະຊຸມພົບປະກັນ ແລະ ວິທີການປ່ຽນແປງໃໝ່, ມີສ່ວນປະກອບນຳກັນອື່ນໆ) ຄວນເປັນວິທີການປະຈຳເພື່ອແຈ້ງໃຫ້ກັນ ແລະ ກັນຊາບຖ້າເຫັນວ່າລະດັບຄວາມຮູ້ໜັງສືບໍ່ສູງ;
- ເຜີຍແຜ່ທຸກຂໍ້ມູນຂ່າວສານອອກໄປຢ່າງກວ້າງຂວາງເທົ່າທີ່ຈະເຮັດໄດ້ໂດຍເຈົ້າຂອງໂຄງການ - ການສື່ງຕໍ່ຈາກຜູ້ນຳ ຫລື ຜູ້ອາວຸໂສ ບໍ່ສາມາດນຳໃຊ້ໄດ້;
- ຍຸດທະສາດໃນການເຜີຍແຜ່ຂ່າວສານຄວນໃຫ້ມີຄວາມສະດວກຢ່າງພຽງພໍ - ດ້ານເງິນ, ບຸກຄະລາກອນ ແລະ ເວລາ - ເພື່ອສ້າງຄວາມເຂົ້າໃຈຢ່າງຖືກຕ້ອງ;
- ອາດຈຳເປັນຕ້ອງໄດ້ມີການປະເມີນຄວາມເຂົ້າໃຈຂອງຜູ້ຖືຄອງສິດທິຕໍ່ເນື້ອໃນຂອງຂ່າວສານ ແລະ ຂໍ້ຕົກລົງທີ່ໄດ້ເອກະພາບກັນ, ແລະ ບ່ອນໃດທີ່ຈຳເປັນ, ຄວນເສີມສ້າງໃຫ້ເຂັ້ມແຂງ; ແລະ
- ຄວນປະເມີນປະສິດທິຜົນຂອງວິທີການຕິດຕໍ່ສື່ສານກັນຢ່າງຕໍ່ເນື່ອງ, ແລະ ກວດກາຢັ້ງຢືນເປັນໄລຍະໆຢ່າງເປັນເອກະລາດນຳ

*ຮັບຮູ້ກ່ຽວກັບສິດທິດ້ານຄວາມເຫັນດີເຫັນພ້ອມ:*

- ຂ່າວສານກ່ຽວກັບສິດທິດ້ານຄວາມເຫັນດີເຫັນພ້ອມ (ເອຟພິກ); ເວລາໃດ ແລະ ໄລຍະໃດ; ແລະເຮັດແນວໃດ (ຂະບວນການຕົກລົງເຫັນດີເຫັນພ້ອມ ໂດຍປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນເປັນຜູ້ຕັດສິນໃຈເລືອກເອົາ); ໄດ້ເຜີຍແຜ່ອອກໄປຢ່າງກວ້າງຂວາງຢູ່ລະດັບທ້ອງຖິ່ນ ແລະ ໄດ້ເຂົ້າໃຈດີ.
- ຜູ້ດຳເນີນວຽກ ເຣດ+ ມີຄວາມພໍໃຈທີ່ຈະຢຸດຕິກິດຈະກຳຢູ່ໃນຈຸດໃດໜຶ່ງຂອງແຜນ;
- ຈະຕ້ອງມີການເປີດເຜີຍຕໍ່ສາທາລະນະຊົນ ກ່ຽວກັບຂະບວນການທີ່ໄດ້ນຳໃຊ້ ເພື່ອສະແຫວງຫາຄວາມເຫັນດີເຫັນພ້ອມພ້ອມທັງລາຍລະອຽດໃນການຕົກລົງວ່າ ທາງໃດປະຊາຊົນສາມາດເຂົ້າເຖິງໄດ້ (ເປັນໜັງສື, ເຄື່ອງຟັງສຽງ, ວິດີໂອ ແລະ ອື່ນໆ); ແລະ
- ມີກົນໄກການຮ້ອງທຸກ ແລະ ສິດທິເພື່ອຂໍຄວາມຊ່ວຍເຫລືອດ້ານກົດໝາຍ ກ່ຽວກັບຂະບວນການຊອກຫາຄວາມເຫັນດີເຫັນພ້ອມຖ້າຫາກຈຳເປັນ. ຂໍ້ມູນກ່ຽວກັບຄ່າສິ້ນເປືອງໃນການບໍລິການດ້ານກົດໝາຍ ແລະ ຊຸມຊົນໃນການນຳໃຊ້ການບໍລິການດ້ານກົດໝາຍເຫລົ່ານີ້ຄວນຈະສະໜອງໃຫ້ໂດຍເຈົ້າຂອງໂຄງການ.

*ຮັບຮູ້ກ່ຽວກັບໂຄງການເຣດ+:*

- ປະຕິບັດໃຫ້ສະເໝີພາບຕໍ່ກັບຜົນກະທົບທາງບວກ ແລະ ທາງລົບທີ່ອາດເກີດຂຶ້ນ, ດັ່ງທີ່ໄດ້ຮັບຮູ້ກັນທັງສອງຝ່າຍ, ລວມທັງຄ່າສິ້ນເປືອງທາງກົງ ແລະ ຄ່າເສຍໂອກາດ;
- ສະເໜີທາງເລືອກໃຫ້ໂຄງການ ແລະ ຜົນທີ່ຈະໄດ້ຮັບໃນສະຖານະການທີ່ແຕກຕ່າງກັນ;
- ຊຸມຊົນ ແລະ ເຈົ້າຂອງໂຄງການໄດ້ຮັບຂໍ້ມູນໃໝ່ໆດ້ານສິດທິທາງກົດໝາຍ ກ່ຽວກັບລັກສະນະຕ່າງໆຂອງໂຄງການທີ່ໄດ້ສະເໜີມາຕາມວິວັດທະນາການຂອງມັນ;
- ຜູ້ຖືສິດທິໄດ້ເຂົ້າຮ່ວມທຸກໄລຍະຂອງການພັດທະນາໂຄງການ, ໂດຍສະເພາະແມ່ນການປະເມີນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ; ແລະ
- ເຂົ້າຮ່ວມໃນການກວດກາຕິດຕາມການຈັດຕັ້ງປະຕິບັດໂຄງການເພື່ອສະໜອງຂ່າວສານໃຫ້ເປັນປົກກະຕິຕໍ່ເນື່ອງ (ບໍ່ແມ່ນແຕ່ການຈ້າງເກັບກຳຂໍ້ມູນ)

**ຄວາມເຫັນດີເຫັນພ້ອມ**

*ບັນດາຫລັກການກ່ຽວກັບຄວາເຫັນດີເຫັນພ້ອມລວມມີ:*

- ບໍ່ແມ່ນການເຂົ້າຮ່ວມ ຫລື ການປຶກສາຫາລືເພື່ອແຈ້ງໃຫ້ຮູ້ເປັນອັນດຽວກັນກັບຄວາມເຫັນດີເຫັນພ້ອມ. ນີ້ເປັນວິທີການທີ່ຈໍາເປັນເພື່ອໃຫ້ຄວາມເຫັນດີເຫັນພ້ອມເທົ່ານັ້ນ;
- ຕ້ອງໄດ້ສ້າງຄວາມອາດສາມາດໃນລະດັບຕ່າງໆຂຶ້ນກັບການໃຫ້ສິດອໍານາດກ່ອນ/ປະຈຸບັນໃນການຕັດສິນໃຈຜ່ານມາໂດຍເບິ່ງຜົນທີ່ຈະຕາມມາໃນໄລຍະຍາວສໍາລັບຊຸມຊົນທັງໝົດໂດຍລວມ;
- ຂະບວນການບັນລຸຄວາມເຫັນດີເຫັນພ້ອມຈະຕ້ອງໄດ້ຕົກລົງເປັນເອກະພາບກັນ ແລະ ນັບຖືໂດຍຊຸມຊົນ ແລະ ເຈົ້າຂອງໂຄງການ; ແລະ
- ຜູ້ຖືສິດທິຈະພັດທະນາຂະບວນການ ແລະ ອົງການຈັດຕັ້ງທີ່ຕົນໄດ້ເລືອກເອົາສໍາລັບຕັດສິນໃຈດ້ານ ເຣດ+. ແນວໃດກໍຕາມ, ຈະສົ່ງເສີມໃຫ້ມີມາດຖານສໍາລັບການເປັນຕົວແທນນ້ອຍທີ່ສຸດ.

*ແມ່ນໃຜໃຫ້ຄວາມເຫັນດີເຫັນພ້ອມ?*

ການກໍານົດຜູ້ຖືສິດທິໃນການເຂົ້າຮ່ວມການເຈລະຈາລະຫວ່າງຊຸມຊົນຕ່າງໆທີ່ຕິດພັນກັບປ່າໄມ້ຢູ່ພາຍໃນພື້ນທີ່ພູມີປະເທດ (ການສ້າງແຜນທີ່ແບບມີສ່ວນຮ່ວມ).

- ການຮັບຮູ້ສິດທິຂອງປະຊາຊົນທັງປະຊາຊົນພື້ນເມືອງ ແລະ ບໍ່ແມ່ນປະຊາຊົນພື້ນເມືອງຖືວ່າເປັນການປະຕິບັດທີ່ດີ ແລະ ເພື່ອຫລຸດຜ່ອນຂໍ້ຂັດແຍ່ງທີ່ອາດເກີດຂຶ້ນໃນອານາຄົດ;
- ຢູ່ບ່ອນມີຫລາຍກຸ່ມທີ່ໄດ້ຮັບຜົນກະທົບດ້ວຍການທວງສິດທິຕ່າງໆຕໍ່ກັບທີ່ດິນ, ມີຄວາມຈໍາເປັນທີ່ຈະຕ້ອງໄດ້ຈັດສັນວ່າຄວນມີສິດທິແຕກຕ່າງກັນ ຫລື ບໍ່? ເອຟພິກ ອາດຈະໄດ້ຈັດເປັນລໍາດັບ, ເລີ່ມຈາກການທວງສິດທິຕາມປະເພນີທີ່ຮັບຮູ້ກັນຫລາຍທີ່ສຸດ ຫລື ສິດທິທີ່ຖືກຕ້ອງຕາມກົດໝາຍ (ຄວາມເຫັນດີເຫັນພ້ອມ) ໃຫ້ກຸ່ມທີ່ມີຜົນປະໂຫຍດແທນທີ່ຈະເປັນສິດທິ (ການປຶກສາຫາລື).

ການກໍານົດສະຖາບັນຢູ່ພາຍໃນຊຸມຊົນທີ່ຕິດພັນກັບປ່າໄມ້ຊຶ່ງສາມາດເຂົ້າຮ່ວມໃນການເຈລະຈາ (ການວິເຄາະດ້ານກົນໄກການຄຸ້ມຄອງແບບມີສ່ວນຮ່ວມ), ຮຽກຮ້ອງໃຫ້:

- ກໍານົດສະຖາບັນສໍາລັບໂຄງການ ເຣດ+ ຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນທີ່ຕົກລົງເລືອກຂຶ້ນມາ. ນີ້ອາດເປັນອົງກອນທີ່ມີຢູ່ແລ້ວ (ຕາມປະເພນີ ຫລື ເປັນທາງການ, ເຊັ່ນຄະນະ ກໍາມະການຂັ້ນບ້ານທີ່ລັດໄດ້ອະນຸຍາດແລ້ວ), ຫລື ອົງການຈັດຕັ້ງທີ່ໄດ້ສ້າງຂຶ້ນສະເພາະເພື່ອ ຕອບສະໜອງຄວາມຕ້ອງການໃຫ້ເປັນຕົວແທນສະເພາະ ແລະ ອາດເພີ້ມຄວາມສັບສົນຂຶ້ນຕື່ມ ເມື່ອຕ້ອງການຕັດສິນໃຈດ້ານ ເຣດ+. ສິ່ງທີ່ສໍາຄັນແມ່ນຊຸມຊົນຕັດສິນໃຈໃນດ້ານນີ້, ແທນທີ່ຈະຕ້ອງປະຕິບັດຕາມການຕັດສິນຂອງອົງການທີ່ໄດ້ກໍານົດມາກ່ອນແລ້ວ;
- ການທົບທວນຄືນຂອງຊຸມຊົນເປັນແຕ່ລະໄລຍະກ່ຽວກັບອົງກອນ ແລະ ຂະບວນການທີ່ຕັດສິນໃຈເລືອກເພື່ອຕອບສະໜອງຄວາມຕ້ອງການທີ່ເກີດຂຶ້ນ, ລວມທັງການກໍານົດຄວາມຕ້ອງການດ້ານການສ້າງຄວາມອາດສາມາດເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ອົງກອນນີ້. ກຸ່ມແມ່ຍິງ, ຊາວໜຸ່ມ, ກຸ່ມຄົນຜູ້ດ້ອຍໂອກາດ (ດັ່ງທີ່ໄດ້ກໍານົດ ໂດຍກຸ່ມຖືສິດທິ) ມີຄວາມພໍໃຈກັບການເປັນຕົວແທນອົງກອນ ແລະ ຂະບວນການຕັດສິນທທີ່ເປັນຢູ່ນີ້ບໍ່?.
- ຮັບປະກັນວ່າອົງກອນຕັດສິນໃຈເຄື່ອນໄຫວໄປຕາມຄວາມຢາກໄດ້ຂອງຊຸມຊົນທົ່ວໄປຫລາຍກວ່າ.
- ໃນກໍລະນີ ການວາງນະໂຍບາຍ ຊຶ່ງຈະກະທົບຕໍ່ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຫລາຍ, ເຊັ່ນການພັດທະນາກົດໝາຍ ແລະ ກົດລະບຽບລະດັບຊາດ ຫລື ຂັ້ນແຂວງກ່ຽວກັບ ເຣດ+, ຄວາມເຫັນດີເຫັນພ້ອມບໍ່ແມ່ນຈະຄົ້ນຄວ້າ ຫລື ໄດ້ຈາກແຕ່ລະຊຸມຊົນ. ໃນການປະຕິບັດຕົວຈິງ, ລັດຖະບານຄວນປຶກສາຫາລືຢ່າງກວ້າງຂວາງກັບຕົວແທນຂອງສະມາຄົມ ແລະ ເຄືອຄ່າຍຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ, ໂດຍອີງໃສ່ວາລະທີ່ໂປ່ງໃສ ແລະ ຕໍ່ເນື່ອງ. ເຊັ່ນຕົວຢ່າງ, ຮ່າງນະໂຍບາຍທີ່ພັດທະນາຂຶ້ນໂດຍອີງໃສ່ການປຶກສາຫາລືເບື້ອງຕົ້ນ ແລະ ສະເໜີຕໍ່ຕົວແທນຂອງຊຸມຊົນຕື່ມອີກ ເພື່ອພິຈາລະນາ ແລະ ມີຄວາມເຫັນດີເຫັນພ້ອມ. ຈະຕ້ອງມີເວລາ ແລະ ການຊ່ວຍເຫລືອພຽງພໍ ເພື່ອໃຫ້ຕົວແທນຂອງຊຸມຊົນສາມາດປຶກສາຫາລືພາຍໃນເຄືອຂ່າຍ ແລະ ສະມາຄົມຂອງເຂົາເຈົ້າ.

*ຈະໃຫ້ຄວາມເຫັນດີເຫັນພ້ອມແນວໃດ?*

- ກຳນົດຂັ້ນຕອນເພື່ອຊຸມຊົນໄດ້ເລືອກທີ່ຈະມີຄວາມເຫັນດີເຫັນພ້ອມ ແລະ ຮູບແບບຕົວຈິງ (ທີ່ມີຢູ່ ຫລື ໄດ້ປັບປຸງ), ລວມທັງອົງປະກອບຂອງຄວາມເຫັນດີເຫັນພ້ອມສຳລັບກຸ່ມຜູ້ຖືສິດທິໜຶ່ງໆ;
- ຄວາມເຫັນດີເຫັນພ້ອມມີຫລາຍລະດັບບໍ່? ຮູບແບບຄວາມເຫັນດີເຫັນພ້ອມ ແລະ ແມ່ນໃຜເປັນຜູ້ໃຫ້ ອາດມີຄວາມແຕກຕ່າງກັນໄປຂຶ້ນກັບໄລຍະຂອງເຫດການ. ອາດຈະເປັນຄວາມເຫັນດີເຫັນພ້ອມຂອງ ຕົວແທນຊຸມຊົນທົ່ວໄປໃນໄລຍະການແບ່ງຜົນປະໂຫຍດ/ການຕົກລົງດ້ານການປ່ຽນແປງການນຳໃຊ້ ທີ່ດິນ;
- ກຳນົດຮູບແບບຄວາມເຫັນດີເຫັນພ້ອມ. ອາດຮຽກຮ້ອງໃຫ້ເປັນຄວາມເຫັນດີເຫັນພ້ອມແບບເປັນລາຍລັກ ອັກສອນເພື່ອສະດວກໃນການປະກອບເອກະສານແຕ່ວ່າມັນອາດຈະບໍ່ແມ່ນຮູບແບບທີ່ເໝາະສົມທີ່ສຸດ ດ້ານວັດທະນະທຳ. ຊຶ່ງຈະຕ້ອງມີການຕົກລົງຮ່ວມກັນທັງສອງຝ່າຍ.
- ລະດັບຄວາມລະອຽດ ແລະ ຮູບແບບທີ່ຕ້ອງການເພື່ອກຳນົດສະເພາະວ່າມີຄວາມເຫັນດີເຫັນພ້ອມ ຫຍັງແດ່ກໍຈະໄດ້ຕົກລົງກັນ; ແລະ
- ຄວາມເຫັນດີເຫັນພ້ອມໃນແຕ່ລະໄລຍະຂອງໂຄງການ ເຣດ+ ຕ້ອງໄດ້ເຮັດເປັນເອກະສານຢ່າງຈະແຈ້ງ - ລວມທັງຂ່າວສານກ່ຽວກັບໄລຍະຕໍ່ໄປທີ່ຕ້ອງການຄວາມເຫັນດີເຫັນພ້ອມ.

*ຄວາມເຫັນດີເຫັນພ້ອມຕໍ່ກັບຫຍັງ?*

ຈະຕ້ອງມີການຕົກລົງກັນກ່ຽວກັບບັນດາຈຸດຕ່າງໆໃນວົງຈອນຂອງໂຄງການ ຫລື ແຜນງານ ເຣດ+ ທີ່ຕ້ອງການ ໃຫ້ມີຄວາມເຫັນດີເຫັນພ້ອມ. ຈຸດຕ່າງໆທີ່ຕ້ອງການຄວາມເຫັນດີເຫັນພ້ອມໃນນະໂຍບາຍ ແລະ ວົງຈອນ ຂອງໂຄງການອາດລວມມີດັ່ງນີ້:

| ຈຸດທີ່ຕ້ອງການຄວາມເຫັນດີເຫັນພ້ອມ | ຄວາມເຫັນດີເຫັນພ້ອມຕໍ່ກັບຫຍັງ | ຄວາມຮັບຜິດຊອບເບື້ອງຕົ້ນເພື່ອໃຫ້ໄດ້ຄວາມເຫັນດີເຫັນພ້ອມ |
|---|---|---|
| ກອບນິຕິກຳແລະນະໂຍບາຍລະດັບຊາດສຳລັດແຜນງານ ເຣດ+ | ຄວາມເຫັນດີເຫັນພ້ອມຕໍ່ກັບ ເຣດ+ ເປັນວິທີການແກ້ໄຂສາເຫດຂອງການປ່ຽນແປງດ້ານພູມອາກາດທີ່ຕິພັນກັບປ່າໄມ້ຊຶ່ງສົ່ງຜົນກະທົບຕໍ່ປ່າໄມ້ຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ | ລັດຖະບານ |
| ການກຳນົດໂຄງການລະດັບທ້ອງຖິ່ນ | ຄວາມເຫັນດີເຫັນພ້ອມຕໍ່ກັບ ເຣດ+ ເປັນວິທີການແກ້ໄຂສາເຫດຂອງການປ່ຽນແປງດ້ານພູມອາກາດທີ່ຕິດພັນກັຍປ່າໄມ້ (ຖ້າບໍ່ທັນມີຢູ່ແລ້ວທີ່ເປັນສ່ວນໜຶ່ງຂອງກິດຈະກຳກຽມຄວາມພ້ອມລະດັບຊາດ). ຄວາມເຫັນດີເຫັນພ້ອມໃນການເຂົ້າຮ່ວມເຈລະຈາໃນພື້ນທີ່ປ່າໄມ້ຂອງຜູ້ຖືຄອງສິດທິ | ລັດຖະບານ, ເຈົ້າຂອງໂຄງການ |
| ການສ້າງຖານຂໍ້ມູນ, ການກຳນົດສາຍເຫດການທຳລາຍປ່າໄມ້ໃນທ້ອງຖິ່ນ, ແຜນຈັດສັນປ່າໄມ້ເບື້ອງຕົ້ນ | ຄວາມເຫັນດີເຫັນພ້ອມຕໍ່ກັບວິທີການສ້າງຖານຂໍ້ມູນ, ແລະການວິໄຈສາຍເຫດການທຳລາຍປ່າໄມ້ (ໂດຍສະເພາະຜູ້ຖືສິດທິຈະຕ້ອງປະກອບສ່ວນ), ແຜນຈັດສັນປ່າໄມ້ເບື້ອງຕົ້ນ / ການອອກແບບແຜນງານເບື້ອງຕົ້ນ. | ເຈົ້າຂອງໂຄງການ |

| ຈຸດທີ່ຕ້ອງການຄວາມເຫັນດີເຫັນພ້ອມ | ຄວາມເຫັນດີເຫັນພ້ອມຕໍ່ກັບຫຍັງ | ຄວາມຮັບຜິດຊອບເບື້ອງຕົ້ນເພື່ອໃຫ້ໄດ້ຄວາມເຫັນດີເຫັນພ້ອມ |
|---|---|---|
| ການປະເມີນຜົນກະທົບດ້ານສັງຄົມ,ເສດຖະກິດ, ວັດທະນະທຳ ແລະ ສິ່ງແວດລ້ອມ | ຄວາມເຫັນດີເຫັນພ້ອມຕໍ່ຂອບເຂດ ແລະ ເນື້ອໃນຂອງການອອກແບບການປະເມີນ | ເຈົ້າຂອງໂຄງການ |
| ການອອກແບບໂຄງການລວມມີການປຸ່ງແປງການນຳໃຊ້ປ່າໄມ້ ແລະ ການຈັດການດ້ານການແບ່ງປັນຜົນປະໂຫຍດ | ຄວາມເຫັນດີເຫັນພ້ອມຕໍ່ທຸກລັກສະນະ ແລະ ລາຍລະອຽດທີ່ສິ່ງຜົນກະທົບໂດຍກົງຕໍ່ຜູ້ຖືຄອງສິດທິ, ໂດຍສະເພາະແມ່ນການຈັດການດ້ານການແບ່ງປັນຜົນປະໂຫຍດ ແລະ ການດຳເນີນການດ້ານປ່າໄມ້ທີ່ເປັນເປົ້າໝາຍທີ່ຈະປຸ່ງແປງ. | ເຈົ້າຂອງໂຄງການ |
| ຂໍ້ຕົກລົງດ້ານການຄ້າເພື່ອຊື້ສິນເຊື່ອກາບອນ | ຄວາມເຫັນດີເຫັນພ້ອມຕໍ່ການຄ້າ ແລະ ໂດຍສະເພາະແມ່ນການຈັດການດ້ານການແບ່ງຜົນປະໂຫຍດ | ເຈົ້າຂອງໂຄງການ |
| ການຈັດຕັ້ງປະຕິບັດ ແລະ ການກວດກາຕິດຕາມໂຄງການ | ການຮັກສາຄວາມເຫັນດີເຫັນພ້ອມຕາມວິວັດທະນາການໃນການຈັດການດ້ານການຈັດຕັ້ງປະຕິບັດແລະບັນຫາທີ່ເກີດຂຶ້ນໃນໄລຍະເວລາທີ່ທັງສອງຝ່າຍຕົກລົງຮ່ວມກັນ | ເຈົ້າຂອງໂຄງການ |
| ການຢຸດຕິໂຄງການ | ຄວາມເຫັນດີເຫັນພ້ອມຕໍ່ເຫດຜົນໃນການຢຸດຕິ ແລະ ການຈັດການສຳລັບການກ້າວໄປສູ່ການຢຸດຕິ | ລັດຖະບານ ແລະ ເຈົ້າຂອງໂຄງການ |

### *ເພື່ອຮັກສາຄວາມເຫັນດີເຫັນພ້ອມໄວ້ ຕ້ອງໄດ້:*

- ແຜນການສຳລັບກົນໄກການແກ້ໄຂຂໍ້ຂັດແຍ້ງທີ່ທັງສອງຝ່າຍໄດ້ຕົກລົງກັນ;
- ກົນໄກການຮ້ອງທຸກຕາມທ້ອງຖິ່ນ, ບໍ່ມີຜົນດ້ານກົດໝາຍໄດ້ຖືກພັດທະນາຂຶ້ນ, ແຕ່ບໍ່ໃຊ້ແທນສິດທິຂອງຊຸມຊົນໃນການຊອກຫາການຊ່ວຍເຫລືອດ້ານກົດໝາຍຢູ່ບ່ອນທີ່ການແກ້ໄຂບໍ່ສາມາດຕົກລົງກັນໄດ້ໃນທ້ອງຖິ່ນ;
- ກົນໄກການຮ້ອງທຸກຈະຕ້ອງກວມເອົາຂໍ້ຂັດແຍ້ງສອງປະເພດ: ອັນທີ່ໜຶ່ງແມ່ນພົວພັນກັບຂໍ້ຕົກລົງ ແລະ ອັນທີ່ສອງແມ່ນພົວພັນກັບສາຍພົວພັນລະຫວ່າງເຈົ້າຂອງໂຄງການ ແລະ ຊຸມຊົນໂດຍທົ່ວໄປ (ບັນຫາທີ່ຂໍ້ຕົກລົງບໍ່ໄດ້ກວມເອົາ)

# ຂະບວນການທີ່ນັບຖືສິດທິດ້ານ ເອຟພິກ ມີຄວາມຕ້ອງການຊັບພະຍາກອນຫຍັງແດ່?

ການຈັດຕັ້ງປະຕິບັດຂະບວນການທີ່ເຂັ້ມແຂງ ແລະ ສາມາດກວດສອບໄດ້ເພື່ອໃຫ້ໄດ້ຄວາມເຫັນດີເຫັນ ພ້ອມຂອງຊຸມຊົນຕໍ່ກັບໂຄງການ ເຣດ+ ແມ່ນຕ້ອງການໃຫ້ມີການລົງທຶນຫລາຍດ້ານບຸກຄະລາກອນ, ເວລາ, ວັດຖຸສື່ສານ ແລະ ຍຸດທະສາດ, ກິດຈະກຳສ້າງຄວາມເຂັ້ມແຂງ, ການກວດສອບເອກະລາດ, ແລະ ການແນະນຳທາງດ້ານວິຊາການ ແລະ ດ້ານກົດໝາຍ. ຊັບພະຍາກອນທັງຫລາຍນີ້ມີຄວາມ ຕ້ອງການຢູ່ໃນໄລຍະຕົ້ນໆຂອງໂຄງການ ຫລື ແຜນງານໃນເວລາທີ່ດຳເນີນການກະກຽມຢູ່ນັ້ນ. ຜູ້ຖືສິດທິກໍ່ຕ້ອງການຊັບພະຍາກອນຢ່າງພຽງພໍຄືກັນເພື່ອເສີມສ້າງຄວາມເຂັ້ມແຂງຂອງຕົນສຳລັບການພິຈາລະນາໂຄງການ ແລະ ແຜນງານ. ຊຶ່ງປະກອບມີຊັບພະຍາກອນໃນການສ້າງອົງການຈັດຕັ້ງຊຸມຊົນ ໃຫ້ມີປະສິດທິພາບ ຫລື ສ້າງຄວາມເຂັ້ມແຂງໃຫ້ສິ່ງທີ່ມີຢູ່ໃນປະຈຸບັນ, ເພື່ອເຈລະຈາຢ່າງມີປະສິດທິຜົນ, ເພື່ອສ້າງຄວາມເຂົ້າໃຈຢ່າງຈະແຈ້ງຕໍ່ກັບຄວາມໝາຍຂອງ ເຣດ+ ຢູ່ແຕ່ລະໄລຍະຂອງການພັດທະນາ, ແລະ ເພື່ອແກ້ໄຂຄວາມຂັດແຍ້ງ. ຢູ່ບ່ອນທີ່ຜູ້ຖືສິດທິມີຄວາມສົນໃຈຢາກເຂົ້າຮ່ວມໃນການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການ, ຈະມີຄວາມຕ້ອງການຊັບພະຍາກອນເພີ້ມເຕີມອີກເພື່ອໃຫ້ເໝາະສົມກັບການຝຶກອົບຮົມ ແລະ ການພັດທະນາຄວາມຊຳນານ. ສ່ວນໃຫຍ່, ຜູ້ຖືສິດທິໃນຊຸມຊົນຢູ່ຊົນນະບົດຈະບໍ່ໄດ້ເຂົ້າເຖິງແຫລ່ງສະໜອງທຶນ ເພື່ອຈັດຈ້າງນັກຊ່ຽວຊານໃຫ້ສິ່ງທີ່ມີຢູ່ໃນປະຈຸບັນ, ເພື່ອເຈລະຈາຢ່າງມີປະສິດທິຜົນ, ເພື່ອສ້າງຄວາມເຂົ້າໃຈຢ່າງຈະແຈ້ງຕໍ່ກັບຄວາມໝາຍຂອງ ເຣດ+ ຢູ່ແຕ່ລະໄລຍະຂອງການພັດທະນາ, ແລະ ເພື່ອແກ້ໄຂຄວາມຂັດແຍ້ງ. ຢູ່ບ່ອນທີ່ຜູ້ຖືສິດທິມີຄວາມສົນໃຈຢາກເຂົ້າຮ່ວມໃນການອອກແບບ ແລະ ການຈັດຕັ້ງປະຕິບັດໂຄງການ, ຈະມີຄວາມຕ້ອງການຊັບພະຍາກອນເພີ້ມເຕີມອີກເພື່ອໃຫ້ເໝາະສົມກັບການຝຶກອົບຮົມ ແລະ ການພັດທະນາຄວາມຊຳນານ. ສ່ວນໃຫຍ່, ຜູ້ຖືສິດທິໃນຊຸມຊົນຢູ່ຊົນນະບົດຈະບໍ່ໄດ້ເຂົ້າເຖິງແຫລ່ງ ສະໜອງທຶນເພື່ອຈັດຈ້າງນັກຊ່ຽວຊານ (ດ້ານກົດໝາຍ, ເສດຖະກິດ, ສິ່ງແວດລ້ອມ, ການພັດທະນາ) ເພື່ອຊ່ວຍເຂົາເຈົ້າພິຈາລະນາຄວາມສ່ຽງ ແລະ ຜົນປະໂຫຍດຂອງໂຄງການ. ເຈົ້າຂອງໂຄງການຈະຕ້ອງໄດ້ພິຈາລະນາຫາທຶນທາງໃໝ່ເພື່ອໃຫ້ການຊ່ວຍເຫລືອດ້ານທຶນ ແລະ ວິຊາການໃຫ້ແກ່ຜູ້ຖືສິດທິ ໂດຍບໍ່ໃຫ້ຕິດພັນກັບຜົນປະໂຫຍດແຊກຊ້ອນຂອງເຈົ້າຂອງໂຄງການ.

ເຊັ່ນດຽວກັນ, ແມ່ນມີຄວາມຕ້ອງການທີ່ຈະລິເລີ້ມເພື່ອສ້າງ 'ກອບແນວຄິດ' ທີ່ຖືກຕ້ອງ. ຊຶ່ງຕ້ອງໄດ້ມີຄວາມເຂົ້າໃຈດ້ານສິດທິຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນຊົນນະບົດ, ແລະ ບັນຫາຂອງຜູ້ດ້ອຍໂອກາດ ແລະ ການຈຳແນກເຊື້ອຊາດທີ່ເຄີຍພົບຢູ່ເລື້ອຍໆໃນທ້ອງຖິ່ນ. ເຫັນວ່າມີຄວາມຈຳເປັນຕ້ອງໄດ້ເຂົ້າໃຈ ເຊັ່ນກັນກ່ຽວກັບດ້ານຄວາມຊຳນານຢູ່ພາຍໃນອົງການຈັດຕັ້ງເພື່ອເອົາປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນເຂົ້າຮ່ວມນຳ ແລະ ຈັດເອົາສິດທິຂອງເຂົາເຈົ້າເຂົ້າຢູ່ໃນເອຟພິກ. ປັດໃຈຫລາຍຢ່າງສິ່ງຜົນກະທົບຕໍ່ເວລາ ແລະ ຊັບພະຍາກອນທີ່ຈຳເປັນ, ລວມມີ:

- ຈຳນວນຜູ້ຖືສິດທິທີ່ຕ້ອງໃຫ້ຮັບຮູ້ ແລະ ເຂົ້າຮ່ວມໃນການຕົກລົງເປັນເອກະພາບ;
- ການກະຈາຍດ້ານພູມສາດ ແລະ ການເຂົ້າເຖິງຂອງຊຸມຊົນ;
- ປະສິດທິຜົນຂອງການນຳພາ ແລະ ການລວມຕົວເປັນປຶກແຜ່ນດ້ານສັງຄົມທີ່ມີຢູ່;
- ການເປັນຕົວແທນຂອງການນຳພາທີ່ມີຢູ່ ແລະ ການທີ່ມີຜູ້ຍິງ ແລະ ກຸ່ມທີ່ມີຄວາມສ່ຽງໄດ້ເຂົ້າເຖິງການຕັດສິນໃຈ;
- ແມ່ນໃຜເປັນຜູ້ຮັບຜິດຊອບໃນການແຈ້ງບອກໃຫ້ຊຸມຊົນທົ່ວໄປນອກຈາກຜູ້ນຳທີ່ເປັນຕົວແທນ (ຜູ້ນຳ, ເຈົ້າຂອງ, ຜູ້ເອື້ອອຳນວຍເອກະລາດ, ລັດຖະບານ);
- ປະສິດທິຜົນຂອງຂະບວນການ ແລະ ລະດັບຄວາມບໍ່ຕົກລົງຢູ່ພາຍໃນຊຸມຊົນຕໍ່ກັບໂຄງການທີ່ສະເໜີມາ;
- ການເຂົ້າເຖິງໂທລະສັບ, ວິທະຍຸ, ສື່ດ້ານເອເລັກໂຕຣນິກ;
- ລະດັບການສຶກສາ ແລະ ຄວາມຮູ້ໜັງສື;
- ຄວາມຈຳກັດດ້ານເວລາໃນການເຂົ້າຮ່ວມກອງປະຊຸມ/ການເຂົ້າເຖິງດ້ານການເຄື່ອນໄຫວໃຫ້ຄວາມຮູ້

- ລະດັບຂອງຄວາມສົນໃຈໃນການເຂົ້າຮ່ວມ ເພື່ອຈະໄດ້ຮັບຮູ້ຢ່າງພຽງພໍ;
- ການມີພ້ອມ ແລະ ປະສິດທິຜົນຂອງອົງກອນກາງ ເຊັ່ນ: ອົງການຈັດຕັ້ງທີ່ບໍ່ສັງກັດລັດ, ທີ່ປຶກສາ, ວິທະຍາກອນ; ແລະ ການມີພ້ອມດ້ານການເອື້ອອຳນວຍ / ການໃຫ້ຄຳປຶກສາທີ່ເປັນເອກະລາດ ແລະ ຄຸນນະພາບຂອງມັນ

ການສື່ສານ ແລະ ການປະສານງານຢ່າງໃກ້ຊິດລະຫວ່າງເຈົ້າຂອງໂຄງການ ແລະ ລັດຖະບານແມ່ນມີຄວາມສຳຄັນເພື່ອຫລີກເວັ້ນຄວາມເຂົ້າໃຈຜິດພາດກ່ຽວກັບຂະບວນການນັບຖືສິດທິຂອງຊຸມຊົນຕໍ່ ເອຟພິກ.

ດັ່ງທີ່ໄດ້ເວົ້າມາຂ້າງເທິງ, ການນັບຖືສິດທິດ້ານເອຟພິກຮຽກຮ້ອງໃຫ້ມີຂະບວນການທີ່ຕໍ່ເນື່ອງຊຶ່ງ (ຖ້າມີຄວາມເຫັນດີເຫັນພ້ອມແຕ່ທຳອິດ) ສືບຕໍ່ເປີດໂອກາດໃຫ້ໄດ້ສົນທະນາ ແລະ ຢືນຢັນຄວາມເຫັນດີເຫັນພ້ອມ. ແນວໃດກໍຕາມ, ເວລາທີ່ຕ້ອງການເພື່ອຮັບປະກັນໃຫ້ໄດ້ການຕັດສິນໃຈທີ່ໜັກແໜ້ນຂອງຜູ້ຖືສິດທິກ່ຽວກັບວ່າຈະໃຫ້ໂຄງການເດີນໜ້າ ຫລື ບໍ່ນັ້ນເປັນບັນຫາທີ່ໜ້າເປັນຫ່ວງສຳລັບເຈົ້າຂອງໂຄງການ. ເວລາທີ່ຕ້ອງການ ເພື່ອໃຫ້ຕັດສິນໃຈໄດ້ໂດຍຜ່ານຂະບວນການທີ່ເຂັ້ມແຂງ ແມ່ນຈະຂຶ້ນຢູ່ກັບຫລາຍປັດໄຈ. ສິ່ງເຫລົ່ານີ້ລວມມີຄວາມສັບສົນຂອງບັນຫາສິດທິຕໍ່ກັບທີ່ດິນ, ຂະໜາດ ແລະ ການອອກແບບໂຄງການ, ລະດັບການສຶກສາຂອງຜູ້ທີ່ໄດ້ຮັບຜົນກະທົບ, ຂະບວນການດ້ານໃຫ້ຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີທີ່ມີຢູ່, ຂະບວນການຕັດສິນໃຈທີ່ສ້າງຂຶ້ນໂດຍຊຸມຊົນແຕ່ລະກຸ່ມ, ແລະຊັບພະຍາກອນທີ່ມີເພື່ອເອື້ອອຳນວຍໂຄງການໃຫ້ພຽງພໍ. ຄວາມຕ້ອງການໃນການບໍລິຫານຄວາມເຄັ່ງຕຶງລະຫວ່າງການດຳເນີນການ (ເພື່ອເຂົ້າເຖິງທຶນທີ່ມີຢູ່, ຫລຸດຜ່ອນການປ່ອຍອາຍພິດ) ແລະ ຄວາມແນ່ນອນ (ເພື່ອຮັບປະກັນສິດທິຕໍ່ທີ່ດິນ ແລະ ການເກັບສະສົມທາດກາກບອນທີ່ໄດ້ຕົກລົງຮ່ວມກັນໝົດທຸກພາກສ່ວນ) ຈະມີຢ່າງຕໍ່ເນື່ອງ.

### ຄ່າສິ້ນເປືອງໃນການນັບຖືສິດທິດ້ານ ເອຟພິກ

ຂະບວນການເຂົ້າຮ່ວມຂອງຊຸມຊົນສຳລັບໂຄງການແກດທຳມະຊາດ Shell Malampaya ໃນປະເທດຟິລລິບປິນມີຄ່າສິ້ນເປືອງປະມານ 6 ລ້ານໂດລາສະຫະລັດ ສົມທຽບໃສ່ມູນຄ່າລວມທັງໝົດຂອງໂຄງການຈຳນວນ 4.5 ຕື້ໂດລາສະຫະລັດ. ຢູ່ບ່ອນອື່ນໆ, ຜູ້ຈັດການບໍລິສັດທີ່ມີປະສົບການໄດ້ປະເມີນຄ່າສິ້ນເປືອງສຳລັບຂະບວນການເພື່ອບັນລຸການຕົກລົງກັບຊຸມຊົນໃນເວລາເລີ່ມຕົ້ນ ໂດຍສະເພາະໂຄງການຂຸດຄົ້ນບໍ່ແຮ່ຂະໜາດໃຫຍ່ທີ່ມີການໂຕ້ຖຽງກັນຫຼາຍຢູ່ໃນເຂດທີ່ມີຄົນຢູ່ໜາແໜ້ນມີປະມານ 1.5 - 2 ລ້ານໂດລາສະຫະລັດຕໍ່ປີ.

ຜູ້ຈັດການສັງເກດເຫັນວ່າຢູ່ໃນພື້ນທີ່ໆບໍ່ມີຄົນຫຼາຍ, ຫຼື ສຳລັບໂຄງການນ້ອຍ, ຄ່າສິ້ນເປືອງອາດຈະຕໍ່າກວ່າຫຼາຍ.

ແຫຼ່ງຂໍ້ມູນ: Lehr, A., and G. Smith. 2010. Implementing a Corporate Free, Prior and Informed Consent Policy. Foley Hoag LLB, Boston and Washington, DC. Available at: www.foleyhoag.com

Herz, S, J. Sohn, and A. La Vina. 2007. Development Without Consent: The Business Case for Consent. WRI, Washington DC. Available at: www.wri.org

## ຄວາມສ່ຽງທີ່ບົ່ມຊ້ອນຂອງ ເອຟພິກ ມີຫຍັງແດ່

ເອກະສານສະບັບນີ້ໄດ້ເໜັ້ນເຖິງວາມສຳຄັນຂອງສິດທິດ້ານ ເອຟພິກ ແລະ ຄວາມສ່ຽງໃນການບໍນັບຖືສິດທິດ້ານເອຟພິກ ຂອງປະຊາຊົນພື້ນເມືອງ ແລະຊຸມຊົນທ້ອງຖິ່ນ.ເຈົ້າຂອງໂຄງການຄວນຮັບຮູ້ຄວາມສ່ຽງຂອງຕົນເອງ ແລະ ຊຸມຊົນທ້ອງຖິ່ນໃນເວລາດຳເນີນຂະບວນການເພື່ອຊອກຫາດ້ານ ເອຟພິກ. ຄວາມສ່ຽງເຫລົ່ານີ້ບໍ່ມີອັນໃດທີ່ເກີດຂຶ້ນຈາກສິດທິດ້ານ ເອຟພິກ ຈັກຢ່າງ, ແຕ່ມັນອາດຈະເກີດຂຶ້ນໄດ້ຊຶ່ງເປັນຜົນຂອງຂະບວນການຊອກຫາຄວາມເຫັນດີເຫັນພ້ອມ, ແລະ ອາດຈະຮຽກຮ້ອງໃຫ້ມີການລົງທຶນຫລາຍກ່ຽວກັບຊັບພະຍາກອນເພື່ອແກ້ໄຂກ່ອນຈະສາມາດພັດທະນາໂຄງການຂຶ້ນໄດ້.

**ຄວາມສ່ຽງຫລັກໆ ລວມມີ:**

- ການສ້າງແຜນທີ່ການຖືສິດທິດ້ວຍຂະບວນການສ້າງແຜນທີ່ແບບມີສ່ວນຮ່ວມອາດສະແດງໃຫ້ເຫັນການອ້າງກຳມະສິດທີ່ໂຕ້ຖຽງກັນຢູ່ ແລະ ນຳໄປສູ່ຄວາມຂັດແຍ້ງຕໍ່ກັບຊັບພະຍາກອນຢູ່ພາຍໃນ ແລະ ລະຫວ່າງຊຸມຊົນຕ່າງໆ. ຈຶ່ງເຫັນວ່າອາດຈະຕ້ອງການເວລາ ແລະ ຊັບພະຍາກອນຫລາຍສົມຄວນ (ເຊັ່ນສຳລັບການໄກ່ເກ່ຍເອກະລາດ) ເພື່ອແກ້ໄຂການໂຕ້ຖຽງກັນ. ອາດເປັນໄປໄດ້ທີ່ໂຄງການ ເຣດ+ ຈະໄດ້ຮັບຄວາມເຫັນດີເຫັນພ້ອມຂອງສອງຊຸມຊົນທີ່ແຕກຕ່າງກັນ, ເຖິງແມ່ນວ່າຊຸມຊົນເຫລົ່ານັ້ນມີການໂຕ້ແຍ້ງອ້າງກຳມະສິດກັນ.
- ການສ້າງແຜນທີ່ດ້ານການຖືຄອງພື້ນທີ່ອາດເຮັດໃຫ້ລັດຖະບານປ່ຽນແປງຈຸດຢືນຂອງຕົນຈາກການບໍ່ຮັບຮູ້ການນຳໃຊ້ພື້ນທີ່ໃດໜຶ່ງ ໄປເປັນການປະຕິເສດສິດທິຂອງເຂົາເຈົ້າ,ແລະຈາກນັ້ນກໍຮຽກຮ້ອງໃຫ້ຊຸມຊົນຢຸດຕິການດຳລົງຊີວິດຢູ່ໃນ ຫລື ນຳໃຊ້ພື້ນທີ່ດັ່ງກ່າວ. ເຈົ້າຂອງໂຄງການ ເຣດ+ ຄວນກະກຽມ ເພື່ອຊ່ວຍເຫລືອຊຸມຊົນໃນສະພາວະແບບນີ້ ແລະ ສະໜັບສະໜູນໃຫ້ລັດຖະບານນັບຖືສິດທິຂອງຊຸມຊົນ. ເຈົ້າຂອງໂຄງການຍັງສາມາດຊອກຫາຄວາມເຫັນດີເຫັນພ້ອມຂອງຊຸມຊົນໄດ້ເພື່ອພັດທະນາໂຄງການ ເຣດ+ ຢູ່ເຂດແດນຕາມປະເພນີຂອງເຂົາເຈົ້າເຖິງແມ່ນວ່າເຂົາເຈົ້າໄດ້ຮັບການປະຕິເສດການເຂົ້າເຖິງ ຫລື ຖືກບັງຄັບໃຫ້ອອກຈາກພື້ນທີ່ໂດຍລັດຖະບານ.
- ການປະຕິເສດທີ່ຈະໃຫ້ຄວາມເຫັນດີເຫັນພ້ອມ: ເວລາອະທິບາຍກ່ຽວກັບ ເອຟພິກ ໃຫ້ນັກພັດທະນາ ແລະ ພະນັກງານຂອງລັດຖະບານ, ເຫັນວ່າມີຄວາມຫຍຸ້ງຍາກຢູ່ສະເໝີທີ່ເຂົາເຈົ້າຈະຍອມຮັບວ່າຊຸມຊົນມີສິດທິທີ່ຈະງົດການໃຫ້ຄວາມເຫັນດີເຫັນພ້ອມ. ຄືດັ່ງທີ່ໄດ້ອະທິບາຍຢູ່ຂ້າງເທິງ,ສິດທິອັນນີ້ແມ່ນເປັນພື້ນຖານໃຫ້ແກ່ ເອຟພິກ, ແລະ ໄດ້ຮັບການສະໜັບສະໜູນຈາກກົດໝາຍ, ເຄື່ອງມື ແລະ ສົນທິສັນຍາສາກົນຫລາຍໆສະບັບ. ໃນການອະທິບາຍຄວາມສ່ຽງທີ່ຊຸມຊົນຈະງົດການໃຫ້ຄວາມເຫັນດີເຫັນພ້ອມ, ເຫັນວ່າມີຄວາມສຳຄັນຫລາຍທີ່ຈະເນັ້ນໃສ່: (ກ) ຄວາມສ່ຽງໃນການທີ່ຈະສືບຕໍ່ໂດຍປັດສະຈາກຄວາມເຫັນດີເຫັນພ້ອມ, (ຂ) ສິດທິດ້ານ ເອຟພິກ ເປັນສິດທິຂອງຊຸມຊົນ, ແລະ ບໍ່ແມ່ນສິດທິຂອງບຸກຄົນທີ່ຈະຄັດຄ້ານຕໍ່ກັບການພັດທະນາທີ່ສະເໜີຂຶ້ນມາ, ແລະ (ຄ) ການໃຫ້ ແລະ ການງົດການໃຫ້ຄວາມເຫັນດີເຫັນພ້ອມແມ່ນເກີດຂຶ້ນໃນເວລາໃດໜຶ່ງ-ໂດຍສະເພາະ -ທັງສອງສາມາດທົບທວນຄືນ ແລະ ດັດແກ້ໄດ້. ມັນເກີດຂຶ້ນສະເພາະໃນພື້ນທີ່ໃດນຶ່ງ:ຊຸມຊົນໜຶ່ງອາດຈະຕົກລົງວ່າສ່ວນໜຶ່ງຂອງເຂດແດນຕາມປະເພນີຂອງເຂົາເຈົ້າໃຫ້ຢູ່ໃນຂອງໂຄງການ ເຣດ+, ແຕ່ອາດຈະຕ້ອງການ ພື້ນທີ່ອື່ນໃຫ້ຢູ່ນອກໂຄງການ.
- ໃນຫລາຍໆພື້ນທີ່ຂອງພາກພື້ນເອເຊຍຕາວັນອອກສ່ຽງໃຕ້, ເອຟພິກ ພວມສົ່ງເສີມອົງການທີ່ບໍ່ສັງກັດລັດ (NGOs) ເຊັ່ນກັນເພື່ອຊ່ວຍຊຸມຊົນທີ່ໄດ້ຮັບຜົນກະທົບຈາກສວນປູກໄມ້ແລະອຸດສາຫະກຳໄມ້,ເພື່ອເຮັດໃຫ້ຊຸມຊົນມີຄວາມ ຄ່ອງຕົວໃນການເຈລະຈາກັບບໍລິສັດ.ສ່ວນຜົນທີ່ຕາມມາ, ເອຟພິກ ແລະ NGOs ທີ່ສົ່ງເສີມ ອາດຈະຖືວ່າເປັນການຕ້ານການພັດທະນາ. ເຈົ້າຂອງໂຄງການ ເຣດ+ ຈະຕ້ອງໄດ້ຈັດການກັບຄວາມສ່ຽງນີ້ໂດຍການຮັບປະກັນ ໃຫ້ມີການຕິດຕໍ່ປະສານງານກັບລັດຖະບານ, ເຈົ້າຂອງໂຄງການ ແລະ ຜູ້ມີສ່ວນຮ່ວມອື່ນໆຢ່າງເປັນປົກກະຕິເພື່ອ ຫລີກລ້ຽງຄວາມເຂົ້າໃຈຜິດຕໍ່ສິດທິດ້ານ ເອຟພິກ ແລະ ຂະບວນການຊອກຫາຄວາມເຫັນດີເຫັນພ້ອມ.
- ຢູ່ໃນຫລາຍລະບົບວັດທະນະທຳ ແລະ ທີ່ດິນ, ກຳມະສິດແມ່ນໄດ້ສະແດງອອກໂດຍການບຸກເບີກ ແລະປູກປ່າ. ເຖິງແມ່ນວ່າສິ່ງນີ້ແມ່ນກົງກັນຂ້າມກັບຈຸດໝາຍຂອງແຜນງານ ເຣດ+ ແລະ ມີຄວາມໝາຍນ້ອຍຕໍ່ກັບສິດທິດ້ານ ເອຟພິກ, ເຫັນວ່າມີຄວາມສ່ຽງທີ່ມີນັກລົງທຶນໃໝ່ຢູ່ໃນພື້ນທີ່ປ່າໄມ້ຊຶ່ງຈະຍຸແຍ່ໃຫ້ມີການບຸກເບີກທີ່ດິນ.

## ບາດກ້າວເບື້ອງຕົ້ນສຳລັບ ຂະບວນການຂອງເຣດ+ ໃນການນັບຖືສິດທິດ້ານເອຟພິກຊຸມຊົນ




ອະນຸຍາດໃຫ້ຊຸມຊົນໄດ້ຂໍຄຳແນະນຳ: ດ້ານນິຕິກຳ, ເສດຖະກິດ, ສິ່ງແວດລ້ອມ ແລະສັງຄົມ
ຊຸມຊົນມີຄວາມຢາກເຂົ້າຮ່ວມ ເຮັດຂໍ້ຕົກລົງຜູກພັນບໍ່?
ບໍ່
ບໍ່ມີໂຄງການເຮດ+ຢູ່ໃນ ພື້ນທີ່ດິນເຂົາເຈົ້າ
ຢາກເຂົ້າ
ຮ່າງຂໍ້ຕົກລົງມີການປຶກສາຫາລື ກັນຢ່າງກວ້າງຂວາງພາຍໃນຊຸມ ຊົນກວາຈະມີການເຫັນດີນຳກັນ
ສຳເລັດການເຮັດຂໍ້ຕົກລົງເປັນລາຍລັກ ອັກສອນ ແລະ ໃຫ້ລັດຖະບານ ແລະ ຜູ້ດຳເນີນດ້ານນິຕິກຳເຊັນຮັບຮອງເອົາ
ການຈັດຕັ້ງປະຕິບັດຂໍ້ຕົກລົງ
ປະຕິບັດໂຄງການ ແລະ ຜົນປະ ໂຫຍດພ້ອມທັງກິດຈະກຳການຫລຸດ ຜ່ອນທີ່ຕົກລົງ
ການກວດກາຕິດຕາມແບບມີສ່ວນຮ່ວມ
ແກ້ໄຂຂໍ້ຂັດແຍ່ງ ແລະ ການຮ້ອງທຸກທີ່ເກີດຂຶ້ນ

# ບົດແນະນຳກ່ຽວກັບຂັ້ນຕອນ ໃນການນັບຖືສິດທິດ້ານ ເອຟພີກ


Initiate pilot phase
and training
Obtain financing

# ບົດແນະນຳກ່ຽວກັບຂັ້ນຕອນໃນການນັບຖື ສິດທິດ້ານ ເອຟພິກ

ພາກນີ້ເວົ້າລະອຽດກ່ຽວກັບ 12 ສ່ວນປະກອບຊຶ່ງຈະຕ້ອງໄດ້ພິຈາລະນາໃນໂຄງການ ເຣດ+ ເພື່ອກະກຽມການເຂົ້າຮ່ວມ, ການຈັດຕັ້ງປະຕິບັດຂະບວນການຂອງຜູ້ຖືສິດທິໃຫ້ມີຄວາມເຫັນດີເຫັນພ້ອມ, ແລະ ຮັກສາຄວາມເຫັນດີເຫັນພ້ອມ.

**ການກະກຽມການເຂົ້າຮ່ວມຂອງຜູ້ຖືສິດທິ**

ສ່ວນປະກອບ1: ການສ້າງແຜນທີ່ສິດທິ, ຜູ້ຖືສິດທິ ແລະ ການນຳໃຊ້ທີ່ດິນ

ສ່ວນປະກອບ2: ການກຳນົດສະຖາບັນການຈັດຕັ້ງທີ່ເໝາະສົມໃນການຕັດສິນໃຈ

ສ່ວນປະກອບ3: ການກຳນົດໂຄງສ້າງແຫ່ງຊາດເພື່ອສະໜັບສະໜູນດ້ານສິດທິ

ສ່ວນປະກອບ4: ການສ້າງຂະບວນການສະແຫວງຫາ ແລະ ໃຫ້ໄດ້ຮັບຄວາມເຫັນດີເຫັນພ້ອມ

ສ່ວນປະກອບ5: ການສ້າງຂໍ້ຕົກລົງດ້ານຄວາມເຫັນດີເຫັນພ້ອມ

ສ່ວນປະກອບ6: ການຕົກລົງກັນກ່ຽວແຜນການຕິດຕໍ່ປະສານງານ

ສ່ວນປະກອບ7: ການພັດທະນາຍຸດທະສາດດ້ານການສ້າງຄວາມອາດສາມາດ

**ການຈັດຕັ້ງປະຕິບັດຂະບວນການນັບຖືສິດທິດ້ານ ເອຟພິກ**

ສ່ວນປະກອບ8: ການເຊື່ອມໂຍງສິດທິດ້ານ ເອຟພິກ ເຂົ້າໃນການອອກແບບໂຄງການ ເຣດ+

ສ່ວນປະກອບ9: ການຮັບປະກັນດ້ານຂ່າວສານທາງອື່ນ ແລະ ໃຫ້ຄຳປຶກສາເອກະລາດ

**ການກວດກາຕິດຕາມ ແລະ ທາງອອກ: ບຳລຸງຮັກສາຄວາມເຫັນດີເຫັນພ້ອມ**

ສ່ວນປະກອບ10: ການກວດກາຕິດຕາມສິ່ງທີ່ໄດ້ຕົກລົງກັນໃນເວລາຈັດຕັ້ງປະຕິບັດ

ສ່ວນປະກອບ11: ການສ້າງຂະບວນການຮ້ອງທຸກ

ສ່ວນປະກອບ12: ການກວດສອບຢັ້ງຢືນຄວາມເຫັນດີເຫັນພ້ອມ

## ການກະກຽມການເຂົ້າຮ່ວມຂອງຜູ້ຖືສິດທິໃນ ເອຟພິກ

ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນມີແນວໂນ້ມທີ່ຈະໄດ້ເຮັດວຽກໜັກສົມຄວນໃນການເຂົ້າຮ່ວມກອງປະຊຸມ ແລະ ການປຶກສາຫາລືຢູ່ພາຍໃນຊຸມຊົນເອງ, ກັບຊຸມຊົນໃກ້ຄຽງ, ກັບທີ່ປຶກສາ ແລະ ຊ່ຽວຊານເອກະລາດ, ແລະ ກັບນັກພັດທະນາໂຄງການ ແລະ ລັດຖະບານ. ຊຶ່ງມີຄວາມຈຳເປັນກ່ອນຈະຄາດຫວັງໃຫ້ເຂົາເຈົ້າຕັດສິນໃຈວ່າຈະເຂົ້າຮ່ວມໃນໂຄງການເຣດ+ ຫລື ບໍ່. ພາກນີ້ຈະເວົ້າເຖິງໄລຍະຕ່າງໆ ທີ່ປະກອບເປັນສ່ວນທຳອິດຂອງ ເອຟພິກ - ການສ້າງຕັ້ງຂະບວນການນັບຖືສິດທິດ້ານເອຟພິກວ່າມີຄືແນວໃດ, ແມ່ນໃຜແດ່ຈຳເປັນຕ້ອງເຂົ້າຮ່ວມ, ແລະ ຈະເຂົ້າຮ່ວມແນວໃດ.

## ສ່ວນປະກອບ 1 | ສ້າງແຜນທີ່ສິດທິ, ຜູ້ຖືສິດທິ, ແລະການນຳໃຊ້ທີ່ດິນ

ຂະບວນການນັບຖືສິດທິດ້ານ ເອຟພິກ ຮຽກຮ້ອງໃຫ້ມີຄວາມຈະແຈ້ງກ່ຽວກັບວ່າໃຜຖືຄອງສິດທິອັນໃດໃນພື້ນທີ່ຂອງໂຄງການ ເຣດ+, ເພາະວ່າຈະກຳນົດໄດ້ວ່າແມ່ນໃຜມີສິດທິໃນການເຂົ້າປຶກສາຫາລື ແລະ ຜູ້ຖືສິດທິຜູ້ໃດສາມາດໃຫ້ ແລະ ງົດຄວາມເຫັນດີເຫັນພ້ອມ. ສ່ວນຫລາຍມີການແປຄວາມໝາຍແຕກຕ່າງກັນໄປກ່ຽວກັບສິດທິຕາມປະເພນີ ແລະ ເປັນທາງການທີ່ປະຕິບັດຢູ່ໃນພື້ນທີ່ດຽວກັນ. ໂຄງການ ເຣດ+ ທີ່ສະເໜີມາຄວນສ້າງແຜນທີ່ກ່ຽວກັບການອ້າງສິດທິຖືຄອງທັງໝົດ ແລະ ຂະບວນການນັບຖືສິດທິດ້ານເອຟພິກຄວນຈະສ້າງຂຶ້ນເພື່ອໃຫ້ທຸກຊຸມຊົນທີ່ມີທີ່ດິນ ແລະ ປ່າໄມ້ທັບຊ້ອນກັບໂຄງການ ເຣດ+ ທີ່ໄດ້ສະເໜີຂຶ້ນມາ. ການສ້າງແຜນທີ່ດ້ານສິດທິ ແລະ ການນຳໃຊ້ທີ່ດິນທີ່ມີປະສິດທິຜົນຈະຕ້ອງເປັນຂະບວນການທີ່ມີສ່ວນຮ່ວມຂອງສັງຄົມ, ຊຶ່ງຈະເອື້ອອຳນວຍໃຫ້ຊຸມຊົນຈຳແນກອອກພື້ນທີ່ໆ ເຂົາເຈົ້ານຳໃຊ້ ແລະ ມີສິດທິຖືຄອງຕາມປະເພນີ.

ຂະບວນການອາດຈະຍົກເອົາການອ້າງສິດທິທັບຊ້ອນກັນຢູ່ພາຍໃນຊຸມຊົນດຽວກັນເອງ, ກັບຊຸມຊົນໃກ້ຄຽງ, ແລະ ກັບລັດຖະບານ ຫລື ພາກສ່ວນທີສາມ ທີ່ໄດ້ຮັບການອະນຸຍາດເຄື່ອນໄຫວນຳໃຊ້. ການສ້າງແຜນທີ່ ແລະ ຮູບພາບ (ລວມທັງແຜນວາດ ແລະ ແຜນທີ່ GIS, ແຜນທີ່ໜ້າດິນ, ຮູບພາບດາວທຽມ, ແລະ ຮູບພາບທາງອາກາດ) ສາມາດນຳໃຊ້ເປັນສິ່ງອຳນວຍຄວາມສະດວກໃນການປຶກສາຫາລື ແລະ ການເຈລະຈາກ່ຽວກັບວ່າແມ່ນໃຜມີສິດທິຕໍ່ກັບພື້ນທີ່ ແລະ ຊັບພະຍາກອນອັນໃດ, ແລະ ກໍເປັນວິທີການບັນທຶກຂໍ້ຕົກລົງທີ່ເປັນເອກະພາບກັນ.

ການສ້າງແຜນທີ່ແບບມີສ່ວນຮ່ວມແມ່ນວິທີການທີ່ສຳຄັນອັນໜຶ່ງໃນການສ້າງເອກະສານການຮັບຮູ້ສິດທິຂອງຊຸມຊົນຕໍ່ກັບປ່າໄມ້.[8] ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນສ່ວນຫລາຍແມ່ນມີຂໍ້ມູນລະອຽດກ່ຽວກັບຊັບພະຍາກອນຂອງເຂົາເຈົ້າແຕ່ອາດຈະບໍ່ໄດ້ຂຽນ ຫລື ບັນທຶກເປັນລາຍລັກອັກສອນໄວ້ໃນແຜນທີ່. ຢູ່ໃນບາງພື້ນທີ່ອາດຈະມີເຂດແດນລະຫວ່າງກຸ່ມຕ່າງໆທີ່ຈະແຈ້ງ, ໃນຂະນະທີ່ຫລາຍໆ ບ່ອນຍັງບໍ່ຈະແຈ້ງ. ການເຮັດໃຫ້ປ່າໄມ້ທີ່ຢູ່ຫ່າງໄກມີຄຸນຄ່າ 'ໃໝ່' ທີ່ຈິງແລ້ວອາດຈະເຮັດໃຫ້ເກີດມີຄວາມຂັດແຍ້ງທາງດ້ານທີ່ຕັ້ງຂອງເຂດແດນ, ແລະ ສິ່ງເຫລົ່ານີ້ຈຳເປັນຈະຕ້ອງໄດ້ກຳນົດ ແລະ ແກ້ໄຂໃຫ້ເປັນສ່ວນໜຶ່ງຂອງຂະບວນການ ເຣດ+.

ບາງຊຸມຊົນອາດຕ້ອງການຮັກສາຄວາມຮູ້ໄວ້ເປັນປະເພນີເວົ້າສືບຕໍ່ກັນມາແທນທີ່ຈະຂີດຂຽນໃສ່ເຈ້ຍ. ອັນນີ້ແມ່ນຍ້ອນວ່າເປັນຫ່ວງຕໍ່ການສູນເສຍການຄຸ້ມຄອງຂໍ້ມູນ, ຫລື ເປັນຍ້ອນຄວາມຂັດແຍ້ງກັນຊຶ່ງສາມາດເກີດຂຶ້ນໄດ້ ເວລາມີເຂດແດນ 'ຈະແຈ້ງ' ມາແທນເຂດແດນທີ່ບໍ່ແນ່ນອນ ແລະ ສາຍພົວພັນແລກປ່ຽນກັນລະຫວ່າງຊຸມຊົນໃກ້ຄຽງກັນ. ໃນກໍລະນີນີ້ໂຄງການອາດສາມາດຕົກລົງຕໍ່ກັບເຂດແດນທີ່ຮັບໃຊ້ເປົ້າໝາຍຂອງໂຄງການເທົ່ານັ້ນ ແລະ ມີການຮັບຮູ້ກັນຢູ່ພາຍໃນພື້ນທີ່ທີ່ຊຸມຊົນກ່ຽວຂ້ອງໄດ້ອ້າງກຳມະສິດ, ເພື່ອຫລີກເວັ້ນຄວາມຕ້ອງການໃນການກຳນົດ ແລະ ສ້າງແຜນທີ່ຂອບເຂດຂອງຊຸມຊົນເອງ.

ໃນໄລຍະຊາວປີຜ່ານມາ, ເຕັກນິກການສ້າງແຜນທີ່ແບບມີສ່ວນຮ່ວມໄດ້ຮັບການພັດທະນາຂຶ້ນຊຶ່ງໃຫ້ທຸກພາກສ່ວນຂອງຊຸມຊົນເຂົ້າຮ່ວມໃນການແຕ້ມແຜນທີ່ຊັບພະຍາກອນຂອງຊຸມຊົນ. ການເຂົ້າຮ່ວມຂອງຊຸມຊົນຂ້າງຄຽງໃນຂະບວນການສ້າງແຜນທີ່ແມ່ນເປັນສິ່ງຈຳເປັນເພື່ອໃຫ້ເຂົາເຈົ້າຢືນຢັນເຂດແດນ, ແລະ ລວມເອົາທັງສິດທິໃນການເຂົ້າເຖິງຂອງເຂົາເຈົ້າເອງ ແລະ ການນຳໃຊ້ຕໍ່ກັບພື້ນທີ່ໆໄດ້ສະແດງໄວ້ໃນແຜນທີ່ ການດຳເນີນງານທີ່ດີໃນການສ້າງແຜນທີ່ແບບມີສ່ວນຮ່ວມຈະຕ້ອງຮັບປະກັນໃຫ້ມີການເຂົ້າຮ່ວມຂອງກຸ່ມຕ່າງໆຢູ່ພາຍໃນຊຸມຊົນເອງ, ລວມມີແມ່ຍິງ, ຊາວໜຸ່ມ, ຄອບຄົວທຸກຍາກພ້ອມທັງເຖົ້າແກ່ແນວໂຮມ

8 ມີການປຶກສາກັນຢູ່ວ່າຈະນຳໃຊ້ຊ່ຽວຊານຂອງອົງທີ່ບໍ່ສັງກັດລັດ ຫລື ບໍລິສັດເພື່ອມາເຮັດວຽກສຳຫລວດຮ່ວມກັບຕົວແທນຂອງຊຸມຊົນ, ແທນທີ່ຈະຄອງຄອຍໃຫ້ຊຸມຊົນໄດ້ຮຽນຮູ້ກ່ຽວກັບທັກສະອັນຫຍຸ້ງຍາກທີ່ຈຳເປັນເພື່ອດຳເນີນງານດ້ວຍຕົນເອງ.

ແລະ ກຸ່ມຊັ້ນສູງ. ແຕ່ລະກຸ່ມ ແມ່ນມີຜົນປະໂຫຍດ, ການນຳໃຊ້ ແລະ ຊັບພະຍາກອນທີ່ຈະເອົາເຂົ້າໃນແຜນທີ່ທີ່ແຕກຕ່າງກັນ. ຊຶ່ງຈຳເປັນຕ້ອງມີຂໍ້ມູນດ້ານນີ້ເພື່ອໃຫ້ປຶດສະເໜີໂຄງການ ເຣດ+ ສາມາດພິຈາລະນາທຸກໆຜົນປະໂຫຍດ ແລະ ເອົາທຸກກຸ່ມເຂົ້າຮ່ວມ.

ຜູ້ຖືສິດທິ, ເຈົ້າຂອງໂຄງການ, ຕົວແທນຂອງລັດຖະບານ ແລະ ຜູ້ມີສ່ວນກ່ຽວຂ້ອງອື່ນໆຕ້ອງໄດ້ຕົກລົງກັນກ່ຽວກັບເຂດແດນ ແລະ ສິດທິຂອງຊຸມຊົນທີ່ໄດ້ຮັບຜົນກະທົບ. ຕາມຄວາມເປັນຈິງແລ້ວ, ຂະບວນການສ້າງ

ແຜນທີ່ແບບມີສ່ວນຮ່ວມຈະກໍ່ໃຫ້ເກີດຄວາມກະຈ່າງແຈ້ງດ້ານເຂດແດນ ແລະ ສິດທິສຳລັບແຕ່ລະຊຸມຊົນໂດຍສະເພາະ. ລັດຖະບານອາດຈະບໍ່ຮັບຮູ້ກຳມະສິດຂອງຊຸມຊົນຕໍ່ກັບປ່າໄມ້ແຫ່ງໃດໜຶ່ງສະເພາະ, ແຕ່ອາດຈະຮັບຮູ້ສິດທິນຳໃຊ້ຂອງເຂົາເຈົ້າ.

ໃນການກະກຽມຂະບວນການສ້າງແຜນທີ່, ເຈົ້າຂອງໂຄງການ, ລວມທັງຊຸມຊົນຈະຕ້ອງການດຳເນີນການວິໄຈເບື້ອງຕົ້ນດ້ານຜູ້ມີສ່ວນຮ່ວມເພື່ອຕົກລົງວ່າໃຜຄວນຈະເຂົ້າຮ່ວມໃນຂະບວນການສ້າງແຜນທີ່ (ຜູ້ຖືສິດທິ - ໂດຍອີງຕາມການນຳໃຊ້ທີ່ດິນ/ຂອບເຂດການປົກຄອງບໍລິຫານ/ແຜນທີ່ພື້ນທີ່ປ່າໄມ້). ຕົວແທນຜູ້ຖືສິດທິຈຳນວນໜຶ່ງ ລວມມີແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດຄວນໄດ້ຮັບການຊຸກຍູ້ໃຫ້ເຂົ້າຮ່ວມ.

ແຫລ່ງຂໍ້ມູນຄວນຈະລວມທັງເອກະສານທີ່ມີຢູ່ແລ້ວ, ຄວາມຮູ້ຂອງທ້ອງຖິ່ນ ແລະ ປຶດບັນທຶກຂອງລັດຖະບານ. ສິ່ງທ້າທາຍແມ່ນການສັ່ງຊາຄວາມຊັດເຈນ ແລະ ຄວາມຖືກຕ້ອງດ້ານກົດໝາຍຂອງຂໍ້ມູນ.

**ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຕ້ອງການຢາກຮູ້ວ່າ:**

- ເຂົາເຈົ້າມີສິດທິໃນການສ້າງແຜນທີ່ເຂດແດນຂອງເຂົາເຈົ້າ ແລະ ເຈລະຈາຈົນໃຫ້ມີຄວາມພໍໃຈຮ່ວມກັນ;
- ເຂົາເຈົ້າມີສິດທິໃນການຄວບຄຸມແຜນທີ່, ແລະ ກຳນົດປະເພດຂໍ້ມູນທີ່ຈະລະບຸຢູ່ໃນແຜນທີ່ ແລະ ແມ່ນໃຜເຂົ້າເຖິງຂໍ້ມູນນັ້ນໄດ້;
- ເຂົາເຈົ້າມີສິດທິທີ່ຈະປະຕິເສດການເຂົ້າຮ່ວມໃນການຖ່າຍທອດຄວາມຮູ້ຂອງເຂົາເຈົ້າເຂົ້າໃນແບບຟອມປຶດບັນທຶກ;
- ເຂົາເຈົ້າມີສິດທິໃນການຕໍ່ສູ້ເພື່ອໃຫ້ຮັບຮູ້ດ້ານກົດໝາຍຕໍ່ເຂດແດນເຫລົ່ານີ້ ແລະ ສິດທິຂອງເຂົາເຈົ້າຕໍ່ກັບທີ່ດິນ/ທາດການບອນ; ແລະ
- ປະຊາຊົນ ທີ່ບໍ່ໄດ້ເຂົ້າຮ່ວມໂດຍກົງໃນການສ້າງແຜນທີ່ຕ້ອງການໄດ້ຮັບຮູ້ ແລະ ໃຫ້ຄວາມເຫັນດີເຫັນພ້ອມກ່ຽວກັບເຂດແດນ ແລະ ຜູ້ຖືສິດທິທີ່ໄດ້ກຳນົດເອົາ, ໂດຍສະເພາະແມ່ນຊຸມຊົນໃກ້ຄຽງ

**ແຫຼ່ງຂໍ້ມູນທີ່ແນະນຳໃຫ້ເຂົ້າໄປເບິ່ງ:**


Chapin, M. and B. Threlkeld. 2008. *Mapping Indigenous Lands: A Practical Guidebook*. Centre for Support of Native Lands, Environmental Law Institute, Washington, DC. Available at: www.elistore.org

Corbett, J. et al. 2009. *Good Practices in Participatory Mapping*. International Fund for Agricultural Development (IFAD), Rome. Available at: www.ifad.org

Cotula, L., and J. Mayers. 2009. *Tenure in REDD – Start-point or Afterthought?* Natural Resource Issues No. 15. IIED, London. Available at: www.iied.org

Evans, K. et al, CIFOR, 2006. *Guide to Participatory Tools for Forest Communities*. CIFOR, Bogor, Indonesia. Available at: www.cifor.cgiar.org

Galudra, G. et al. 2009. *RaTA: A Rapid Land Tenure Assessment Manual for Identifying the Nature of Land Tenure Conflicts,* World Agroforestry Centre (ICRAF), Bogor, Indonesia. Available at: www.worldagroforestrycentre.org

Indonesian Network for Participatory Mapping. Website: www.jkpp.org

Mather, R. et al. 1998. *Aerial Photographs and 'Photo-maps' for Community Forestry.* Rural Development Forestry Network (RDFN) paper 23e. ODI, London. Available at: www.odi.org.uk

## ປະສົບການຂອງບໍລິສັດໃນການເອົາຊຸມຊົນເຂົ້າຮ່ວມໃນໂຄງການຂຸດຄົ້ນ ແລະ ກໍ່ສ້າງພື້ນຖານໂຄງລ່າງ

ໃນຕົ້ນຊຸມປີ 1990, ບໍລິສັດລູກ Hamersley Iron Pty Limited ຂອງ Rio Tinto, ໄດ້ວາງແຜນພັດທະນາດ້ານການຂຸດຄົ້ນແຮ່ເຫລັກ ແລະ ສ້າງທາງລົດໄຟຢູ່ Yandicoogina ໃນເຂດ Pilbara ຂອງປະເທດອົດສະເຕຣເລຍ. ຄົນພື້ນເມືອງຫລາຍໆ ກຸ່ມອາໄສຢູ່ໃນເຂດໃກ້ຄຽງກັບບໍ່ແຮ່ທີ່ໄດ້ສະເໜີຂຶ້ນມາ. ໃນປີ 1994, ບໍລິສັດ Hamersley ໄດ້ດຳເນີນການປຶກສາຫາລືເບື້ອງຕົ້ນກັບເຖົ້າແກ່ຜູ້ອາວຸໂສຂອງຊຸມຊົນເພື່ອຮັບປະກັນວ່າທາງລົດໄຟທີ່ເຊື່ອມຕໍ່ບໍ່ແຮ່ຫາທ່າເຮືອທະເລນັ້ນຈະສົ່ງຜົນກະທົບນ້ອຍທີ່ສຸດຕໍ່ກັບຊຸມຊົນຄົນພື້ນເມືອງ. ໃນປີ 1995, ບໍລິສັດໄດ້ຕັດສິນໃຈເຈລະຈາເຮັດຂໍ້ຕົກລົງດ້ານການນຳໃຊ້ທີ່ດິນກັບຊຸມຊົນທີ່ຢູ່ໃກ້ກັບພື້ນທີ່, ຊຶ່ງສອດຄ່ອງກັບຂະບວນການປະເມີນຜົນດ້ານສັງຄົມ ແລະ ສິ່ງແວດລ້ອມຂອງໂຄງການ.

ເພື່ອໃຫ້ມີຄວາມເຂົ້າໃຈດີຂຶ້ນກ່ຽວກັບຜູ້ມີສ່ວນກ່ຽວຂ້ອງຫລັກໆ ແລະ ຄວາມເປັນຫ່ວງຂອງເຂົາເຈົ້າຕໍ່ກັບໂຄງການ, ບໍລິສັດ Hamersley ໄດ້ໃຊ້ເວລາສີ່ເດືອນໃນການດຳເນີນການສ້າງແຜນທີ່ດ້ານສັງຄົມ. ໂດຍອີງໃສ່ຂໍ້ມູນທີ່ເກັບກຳມານີ້, ໄດ້ມີການເຈລະຈາກັບຊຸມຊົນທ້ອງຖິ່ນແຕ່ເດືອນມັງກອນຫາເດືອນມິຖຸນາ 1996. ຜູ້ມີສ່ວນກ່ຽວຂ້ອງໄດ້ແຕ່ງຕັ້ງຜູ້ໄກ່ເກ່ຍເອກະລາດ, ແລະ ຄົນພື້ນເມືອງສາມກຸ່ມຕັດສິນໃຈເຮັດວຽກຮ່ວມກັນ. ເຂົາເຈົ້າໄດ້ແຕ່ງຕັ້ງທີ່ປຶກສາດ້ານກົດໝາຍເອກະລາດ, ໂດຍໄດ້ຮັບທຶນຈາກບໍລິສັດ Hamersley, ແລະ ໄດ້ສ້າງຕັ້ງ ບໍລິສັດ Gumala Aboriginal Corporation ໃຫ້ດຳເນີນການເຈລະຈາໃນນາມຊຸມຊົນ ແລະ ມີອຳນາດຕາມກົດໝາຍໃນການເຕົ້າ ໂຮມສະມາຊິກຂອງຕົນ. ໃນເດືອນມິຖຸນາ 1996, ທຸກຝ່າຍໄດ້ຕົກລົງກັນກ່ຽວກັບຂັ້ນຕອນຂອງການເຈລະຈາ ແລະ ວິທີການລາຍງານຄືນໃຫ້ຊຸມຊົນຮູ້ເຖິງສະຖານະພາບຂອງການເຈລະຈາ, ລວມທັງໃຫ້ເຖົ້າແກ່ອາວຸໂສຂອງກຸ່ມຄົນພື້ນເມືອງ ເຂົ້າສັງເກດການໃນການເຈລະຈາ.

ໃນເດືອນພະຈິກ 1996, ບໍລິສັດ, Hamersley ແລະ ບໍລິສັດ Gumala Aboriginal Corporation ໄດ້ຕົກລົງສ້າງບົດບັນທຶກຄວາມເຂົ້າໃຈຮ່ວມກັນ. ຈາກນັ້ນບໍລິສັດ ໄດ້ຮັບຄວາມເຫັນດີເຫັນພ້ອມຈາກຝ່າຍຄົນພື້ນເມືອງທີ່ຕົນເປັນຜູ້ຕາງໜ້າໂດຍຜ່ານການປຶກສາຫາລືກ່ຽວກັບບົດບັນທຶກໃນກອງປະຊຸມກັບຊຸມຊົນແບບເປີດກວ້າງ, ແລະ ກອງປະຊຸມກັບແຕ່ລະກຸ່ມເພື່ອອະທິບາຍເງື່ອນໄຂຕ່າງໆຂອງການຕົກລົງ ແລະ ໄດ້ຮັບຄວາມເຫັນດີເຫັນພ້ອມ ຈາກແຕ່ລະຄົນ. ຜົນໄດ້ຮັບແມ່ນຂໍ້ຕົກລົງການນຳໃຊ້ທີ່ດິນ Yandicoogina, ຊຶ່ງໃຊ້ເປັນພື້ນຖານສຳລັບກອບການຮ່ວມມືໄລຍະຍາວລະຫວ່າງບໍລິສັດ Hamersley ແລະ ຝ່າຍຄົນພື້ນເມືອງ. ໃນສ່ວນຂອງບໍລິສັດ Hamersley ກໍໄດ້ຫລຸດເວລາໃນການຂໍອະນຸຍາດລົງ, ໄດ້ສຳເລັດການກໍ່ສ້າງໂດຍໃຊ້ງົບປະມານ 100 ລ້ານໂດລາ, ແລະ ເລີ່ມຕົ້ນ ການຜະລິດທັກເດືອນກ່ອນແຜນການ.

ແຫລ່ງຂໍ້ມູນ: Herbertson, K., et al. 2009. *Breaking Ground - Engaging Communities in Extractive and Infrastructure Projects*. World Resource Institute, Washington DC. Available at: www.wri.org.

# ສ່ວນປະກອບ 2 | ການກຳນົດສະຖາບັນການຈັດຕັ້ງທີ່ເໝາະສົມສຳລັບການຕັດສິນໃຈ

ປະຊາຊົນພື້ນເມືອງມີສິດທິໃນການນຳໃຊ້ສະຖາບັນການຈັດຕັ້ງເພື່ອການຕັດສິນໃຈຂອງຕົນເອງແທນທີ່ຈະໃຊ້ລະບົບຈາກທາງນອກ (ເຊັ່ນຜູ້ນຳທີ່ລັດຖະບານແຕ່ງຕັ້ງຂຶ້ນມາ).ສິດທິໃນການນຳໃຊ້ສະຖາບັນການຈັດຕັ້ງຕາມປະເພນີອາດເຫັນວ່າບໍ່ສອດຄ່ອງກັບທັດສະນະຂອງສາກົນ ແລະ ຄວາມຄາດຫວັງຂອງ "ການເປັນຕົວແທນ" ແລະ ຈຳເປັນຕ້ອງລວມເອົາແມ່ຍິງ, ຊາວໜຸ່ມ ແລະ ກຸ່ມຜູ້ດ້ອຍໂອກາດໃນການຕັດສິນໃຈ.

ມີຫລາຍທາງທີ່ເຈົ້າຂອງໂຄງການ ເຣດ+ ສາມາດນັບຖືສິດທິຂອງຊຸມຊົນໃນການນຳໃຊ້ໂຄງສ້າງການຕັດສິນໃຈຕາມປະເພນີ ໃນຂະນະທີ່ແກ້ໄຂບັນຫາການມີຕົວແທນທີ່ກວ້າງຂວາງກວ່າໃນການຕັດສິນໃຈ. ປະຊາຊົນພື້ນເມືອງສາມາດມີທາງເລືອກອື່ນໆ ໃນການດຳເນີນການວິໄຈສະຖາບັນການຈັດຕັ້ງແບບມີສ່ວນຮ່ວມເພື່ອຈຳແນກບັນຫາໃນການເປັນຕົວແທນ ແລະ ຄວາມເໝາະສົມສຳລັບການຕັດສິນໃຈດ້ານ ເຣດ+. ຖ້າຫາກຊຸມຊົນໜຶ່ງເລືອກທີ່ຈະຕັດສິນໃຈໂດຍນຳໃຊ້ສະຖາບັນການຈັດຕັ້ງຕາມປະເພນີ, ເຈົ້າຂອງໂຄງການ ເຣດ+ ສາມາດກະຕຸກຊຸກຍູ້ໃຫ້ມີການເຂົ້າຮ່ວມຂອງຊຸມຊົນຢ່າງກວ້າງຂວາງໂດຍໃຫ້ການຊ່ວຍຫລືອສຳລັບການເກັບກຳ, ແລກປ່ຽນຂໍ້ມູນ, ການປຶກສາຫາລື ແລະ ການຕັດສິນໃຈ.

ບາງຊຸມຊົນອາດເລືອກທີ່ຈະເຂົ້າຮ່ວມກັບເຈົ້າຂອງໂຄງການ ເຣດ+ ທີ່ນຳໃຊ້ສະຖາບັນການຈັດຕັ້ງເພື່ອຕັດສິນໃຈແບບປະສົມລະຫວ່າງຕາມປະເພນີ ແລະ ການປົກຄອງຂອງບ້ານ ຫລື ຜູ້ທີ່ມີບົດບາດຕິດພັນກັບ ເຣດ+. ຊຸມຊົນອື່ນໆ ອາດເລືອກທີ່ຈະສ້າງສະຖາບັນໃໝ່ຂຶ້ນເພື່ອເຮັດການຕັດສິນໃຈ. ຢູ່ໃນທຸກກໍລະນີ, ມັນມີຄວາມສຳຄັນທີ່ຈະໃຫ້ມີການເອື້ອອຳນວຍທີ່ເປັນອິດສະຫຼະປັດສະຈາກຜົນປະໂຫຍດຂອງເຈົ້າຂອງໂຄງການ ເຣດ+. ການຕົກລົງກັນກັບຊຸມຊົນກ່ຽວກັບນິຍາມຂອງຄວາມເປັນເອກະລາດ ຫລື ຄວາມເປັນກາງແມ່ນມີຄວາມສຳຄັນ, ເພາະວ່າຖ້າບໍ່ມີການຊີ້ນຳຢ່າງຈະແຈ້ງ ລັດຖະບານສາມາດອ້າງຕົນເອງວ່າເປັນກາງ ແລະ ພະຍາຍາມຈະນຳພາຂະບວນການເວລາທີ່ຕົນເອງມີຜົນປະໂຫຍດຊຸກຊ້ອນ. ຄວນເອື້ອອຳນວຍໃຫ້ການຊ່ວຍເຫລືອຊຸມຊົນທີ່ຂໍເລືອກຜູ້ດຳເນີນງານ, ລວມທັງຊຸມຊົນເອງທີ່ໄດ້ສະເໜີແນະຂຶ້ນມາ. ຊຸມຊົນມີສິດທິທີ່ຈະເຊື້ອເຊີນເອົາທີ່ປຶກສາ ຫລື ຄູ່ຮ່ວມງານມາສັງເກດການ ຫລື ເຂົ້າຮ່ວມໃນການເອື້ອອຳນວຍຄວາມສະດວກ ແລະ ປຶກສາ, ແລະ ອາດຕ້ອງການໃຫ້ຊ່ວຍກຳນົດອົງການຈັດຕັ້ງທີ່ສາມາດໃຫ້ການຊ່ວຍເຫລືອໃນດ້ານນີ້.

ອັນທີ່ເໝາະສົມແລ້ວແມ່ນວ່າທຶນສຳລັບການເອື້ອອຳນວຍຄວາມສະດວກບໍ່ຄວນຈະມາຈາກເຈົ້າຂອງໂຄງການໂດຍກົງ. ໃນການປະຕິບັດຕົວຈິງ, ຈົນກວ່າລັດຖະບານຈະຮັບຜິດຊອບໃນການຊ່ວຍເຫລືອຊຸມຊົນໃຫ້ເຂົ້າໃຈ ແລະ ພິຈາລະນາບົດສະເໜີຂອງ ເຣດ+, ເຈົ້າຂອງໂຄງການຈະເປັນຜູ້ຈ່າຍສຳລັບການເອື້ອອຳນວຍຄວາມສະດວກ ຫລື ຊອກຫາຜູ້ໃຫ້ທຶນທີ່ປາດຖະໜາຢາກໃຫ້ການສະໜັບສະໜູນເພື່ອໃຫ້ມີຄວາມໂປ່ງໃສ ແລະ ຄວາມເປັນເອກະລາດ, ຈຶ່ງມີຄວາມສຳຄັນທີ່ສັນຍາສຳລັບການບໍລິການນການເອື້ອອຳນວຍຄວາມສະດວກໄດ້ຮັບການເຫັນດີ ແລະ ລົງລາຍເຊັນໂດຍທົວໜ້າຊຸມຊົນ ແລະ ຜູ້ເອື້ອອຳນວຍຄວາມສະດວກ, ພ້ອມທັງຜູ້ເອື້ອອຳນວຍຄວາມສະດວກກັບເຈົ້າຂອງໂຄງການ.

ເຈົ້າຂອງໂຄງການຄວນພິຈາລະນາໃຫ້ການສະໜັບສະໜູນການສ້າງຕັ້ງກອງທຶນເພື່ອເອື້ອອຳນວຍຄວາມສະດວກ (ແລະ ອາດມີການບໍລິການໃຫ້ຄຳປຶກສາ ແລະ ສະໜັບສະໜູນອື່ນໆສຳລັບຊຸມຊົນ) ໂດຍການລວມຕົວເຈົ້າຂອງໂຄງການ ເຣດ+. ກອງທຶນນີ້ຈະມີການຄຸ້ມຄອງແບບເປັນເອກະລາດເພື່ອວ່າ ການຈ່າຍໃຫ້ຜູ້ເອື້ອອຳນວຍຄວາມສະດວກຈະບໍ່ຕິດພັນໂດຍກົງກັບຜົນປະໂຫຍດຂອງເຈົ້າຂອງໂຄງການໃດໜຶ່ງ.

ຊຸມຊົນລຸຍຊານ (Lusan) ໃນກາລີມັນຕັນທິດຕາວັນອອກ (East Kalimantan) ໄດ້ພັດທະນາລະບົບການຕັດສິນໃຈແບບປະສົມຂຶ້ນ ເວລາເຈລະຈາກັບບໍລິສັດຊຸດຄົ້ນໄມ້ທີ່ໄດ້ຮັບອະນຸຍາດຈາກລັດຖະບານໃນການ

ຂຸດຄົ້ນໄມ້ອອກຈາກທີ່ດິນທີ່ເຂົາເຈົ້າຄອບຄອງຕາມປະເພນີ.ຊຸມຊົນມີລະບົບເຖົ້າແກ່ເຈົ້າກົກເຈົ້າເຫລົ່າ ແລະ ກົດໝາຍປະເພນີ, ແຕ່ຫລາຍຄອບຄົວທີ່ເຂົ້າມາຢູ່ນຳຊຸມຊົນຫວ່າງສິບປີຫລັງມານີ້ແມ່ນອີງໃສ່ລະບົບການປົກຄອງຂອງລັດຖະບານຫລາຍກວ່າ. ກອງປະຊຸມທັງໝົດຊຸມຊົນໄດ້ຕົກລົງໃຫ້ທີມງານເຈລະຈາເຂົ້າຮ່ວມກັບບໍລິສັດຂຸດຄົ້ນໄມ້, ປະກອບດ້ວຍຜູ້ນຳຕາມປະເພນີ ແລະ ພະນັກງານທີ່ຖືກເລືອກມາຈາກການປົກຄອງຂັ້ນບ້ານ.

**ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຕ້ອງການຢາກຮູ້ວ່າ:**

- ສິດທິໃນການຕັດສິນໃຈເລືອກເອົາອົງກອນຕົວແທນຂອງເຂົາເຈົ້າ;
- ພັນທະຂອງທຸກພາກສ່ວນທີ່ກ່ຽວຂ້ອງໃນໂຄງການ ແລະ ແຜນງານ ເຣດ+ (ລວມທັງເຂົາເຈົ້າເອງ) ເພື່ອສະໜັບສະໜູນການເອື້ອອຳນວຍຄວາມສະດວກແບບບໍ່ມີການແບ່ງແຍກ, ໃຫ້ໄປຕາມມາດຖານທີ່ສາກົນຮັບຮອງ ( ເຊັ່ນ ມາດຖານດ້ານສັງຄົມ ແລະສິ່ງແວດລ້ອມ);
- ສິດທິໃນການໄດ້ຮັບການຊ່ວຍເຫລືອໃນການເອື້ອອຳນວຍຄວາມສະດວກທີ່ເປັນເອກະລາດ (ຖ້າຕ້ອງການ ແລະ ຂໍຮ້ອງ) ເພື່ອສ້າງອົງກອນຕົວແທນທີ່ຄິດວ່າຈະປົກປ້ອງວັດທະນະທຳ ແລະ ຄວາມຕ້ອງການໃນການຕັດສິນໃຈຂອງເຂົາເຈົ້າໃຫ້ດີທີ່ສຸດ;
- ສິດທິໃນການຕັດສິນໃຈໄປຕາມຫລັກການຂອງເອຟພິກ; ແລະ
- ເຂົາເຈົ້າສາມາດຢືນຢັນດ້ານການກວດກາ ແລະ ຄວາມດຸ່ນດ່ຽງພາຍໃນຊຸມຊົນຂອງຕົນເອງວ່າມີການກີດກັ້ນໃນການຕັດສິນໃຈ ຫລື ການນຳໃຊ້ອຳນາດໃນທາງທີ່ຜິດ.

**ແຫຼ່ງຂໍ້ມູນທີ່ແນະນຳໃຫ້ເຂົ້າໄປເບິ່ງ**


Andersson, K. 2006. *Understanding Decentralized Forest Governance: An Application of the Institutional Analysis and Development Framework*. Sustainability: Science, Practice, & Policy 2 (1): 25–35. Available at:
sspp.proquest.com

Forest Peoples Programme. 2008. *Free, Prior and Informed Consent and the Roundtable on Sustainable Palm Oil – A Guide for Companies*. Moreton-in-Marsh, UK. Available at: www.
forestpeoples.org




# ສ່ວນປະກອບ 3 | ການກຳນົດໂຄງສ້າງດ້ານການຊ່ວຍເຫລືອລະດັບຊາດ ສຳລັບການສົ່ງເສີມສິດທິ

ຍົກເວັ້ນປະເທດຟີລິບປິນ, ຊຶ່ງມີກົດໝາຍກ່ຽວກັບພື້ນທີ່ບັນພະບູລຸດ ແລະ ລະບຽບການກ່ຽວກັບ ເອຟພິກ, ກົດໝາຍ ແລະ ລະບຽບແຫ່ງຊາດຢູ່ໃນບັນດາປະເທດເອເຊຍຕາວັນອອກສ່ຽງໃຕ້ ໄດ້ໃຫ້ການປົກປ້ອງທີ່ຈຳກັດດ້ານສິດທິຂອງປະຊາຊົນພື້ນເມືອງຕໍ່ກັບທີ່ດິນຕາມປະເພນີ.ແມ້ແຕ່ຢູ່ປະເທດຟີລິບປິນ, ຊຸມຊົນຄົນພື້ນເມືອງຫລາຍກຸ່ມກໍບໍ່ສາມາດຄວບຄຸມການຂຸດຄົ້ນບໍ່ແຮ່ ແລະ ການພັດທະນາອື່ນໆຢູ່ເທິງທີ່ດິນບັນພະບູລຸດຂອງເຂົາເຈົ້າໄດ້ຍ້ອນມີການໝູນໃຊ້ກົດລະບຽບຂອງເອຟພິກຢ່າງບໍ່ຖືກຕ້ອງ. ສິດທິຂອງຊຸມຊົນທ້ອງຖິ່ນໃນການຄຸ້ມຄອງ ແລະ ຄວບຄຸມພື້ນທີ່ປ່າໄມ້ຊຶ່ງເຂົາເຈົ້າໄດ້ນຳໃຊ້ມາແຕ່ດົນນານມີການຮັບຮູ້ພຽງແຕ່ນ້ອຍດຽວຢູ່ໃນພາກພື້ນນີ້..

ເພື່ອໃຫ້ມີການປະຕິບັດສິດທິຂອງເຂົາເຈົ້າໃນການພັດທະນາ ເຣດ+, ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຕ້ອງການການຊ່ວຍເຫລືອເພື່ອເຂົ້າໃຈສິດທິຂອງເຂົາເຈົ້າ ແລະ ສົ່ງເສີມໃຫ້ລັດຖະບານ ແລະ ຜູ້ມີສ່ວນອື່ນໆ ຮັບຮູ້ ແລະ ນັບຖືສິດທິເຫລົ່ານີ້. ຊຸມຊົນ ອາດບໍ່ຮູ້ໄດ້ກຸ່ມສົ່ງເສີມຕ່າງໆ, ຊັບພະຍາກອນ, ແລະ ຊ່ຽວຊານ

ທີ່ສາມາດຊ່ວຍເຫລືອໃນການຮັກສາສິດທິຂອງເຂົາເຈົ້າ.ເຈົ້າຂອງໂຄງການ ເຣດ+ ຈຳເປັນຕ້ອງໄດ້ຄົ້ນຄວ້າ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບການສະໜັບສະໜູນຊຸມຊົນທີ່ອາດໄດ້ຮັບຜົນກະທົບ. ເຈົ້າຂອງໂຄງການ ເຣດ+ ສາມາດມີບົດບາດສຳຄັນໃນການຊ່ວຍເຫລືອຄວາມພະຍາຍາມສິ່ງເສີມໃຫ້ສິດທິຂອງຊຸມຊົນໄດ້ຖືກຮັບຮູ້ດ້ວຍການຕິດຕາມ ແລະ ສ້າງເອກະສານຜ່ານຂະບວນການນັບຖືສິດທິຂອງເຂົາເຈົ້າ. ເຈົ້າຂອງໂຄງການຄວນກຽມພ້ອມເພື່ອຊ່ວຍເຫລືອຄວາມພະຍາຍາມສິ່ງເສີມຂອງຊຸມຊົນ, ຖ້າມີການສະເໜີມາ, ໂດຍແຈ້ງບອກເຈົ້າໜ້າທີ່ລັດຖະບານທີ່ກ່ຽວຂ້ອງກັບ ເອຟພິກ ແລະ ການຮັບຮູ້ຂອງ ເຈົ້າຂອງໂຄງການກ່ຽວກັບສິດທິຂອງຊຸມຊົນຕໍ່ກັບທີ່ດິນຕາມປະເພນີ.

ມີລັດຖະບານຈຳນວນນ້ອຍໜຶ່ງໄດ້ສ້າງກົດລະບຽບກ່ຽວກັບກ່ຽວກັບວ່າແມ່ນໃຜເປັນເຈົ້າຂອງກາກບອນປ່າໄມ້, ແລະ ແມ່ນໃຜມີສິດທິທີ່ຈະໄດ້ຮັບການລົງທຶນເພື່ອພະຍາຍາມຫລຸດຜ່ອນການປ່ອຍອາຍພິດກາກບອນ ແລະ ຂາຍການຫລຸດຜ່ອນອາຍພິດທີ່ໄດ້ຜ່ານການກວດສອບ ຫລື ຢັ້ງຢືນ. ຍັງບໍ່ຄ່ອຍມີຄວາມຈະແຈ້ງທາງດ້ານສິດທິຂອງຊຸມຊົນທ້ອງຖິ່ນ ແລະ ປະຊາຊົນພື້ນເມືອງໃນການເປັນເຈົ້າຂອງ, ຄຸ້ມຄອງ ຫລື ຂາຍສິດທິຕໍ່ກັບກາກບອນໃນພື້ນທີ່ຢູ່ພາຍໃຕ້ການຄວບຄຸມຕາມປະເພນີ.

ບົດແນະນຳຂອງແຜນງານ ເຣດ ຂອງອົງການສະຫະປະຊາຊາດ (UNREDD’s guidance) ໄດ້ກຳນົດພັນທະຂອງລັດຖະບານເພື່ອໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາເຫລົ່ານີ້ ແລະ ບາດກ້າວທີ່ຈຳເປັນໃນການນັບຖື ເອຟພິກ. ແນວໃດກໍຕາມ, ຢູ່ຫລາຍໆບ່ອນ ທີ່ໄດ້ຈັດຕັ້ງປະຕິບັດໂຄງການທົດລອງ ເຣດ+, ສິດທິຂອງຊຸມຊົນຕໍ່ຜົນປະໂຫຍດຈາກໂຄງການ ຫລື ແຜນງານກາກບອນປ່າໄມ້ ບໍ່ໄດ້ຖືກຮັບຮູ້, ແລະ ອາດຈະບໍ່ຖືກຮັບຮູ້ໄປອີກດົນໃນອານາຄົດ. ແຕ່ຢູ່ພາຍໃນສະຖານທີ່ເຮັດການທົດລອງ ຫລື ສາທິດ, ເຈົ້າຂອງໂຄງການ ເຣດ+ ຄວນຈະສາມາດຕອບສະໜອງໄດ້ທຸກໆດ້ານຂອງ ເອຟພິກ. ໃນບາງເຂດການປົກຄອງ, ເຖິງແມ່ນວ່າມັນອາດຜິດກົດໝາຍສຳລັບເຈົ້າຂອງໂຄງການທີ່ຈະປົກປິດຜົນປະໂຫຍດຂອງຊຸມຊົນໃນໂຄງການທົດລອງດ້ານ ເຣດ+ ກ່ອນທີ່ເຈົ້າຂອງໂຄງການຈະໄດ້ຮັບອະນຸຍາດເລີ້ມວາງແຜນເພື່ອພັດທະນາເຣດ+ (ເຊັ່ນ: ໜັງສືແຈ້ງເຈດຈຳນົງ, ບົດບັນທຶກຄວາມເຂົ້າໃຈ, ຫລື ໃບອະນຸຍາດພັດທະນາ). ສະນັ້ນການໄດ້ຮັບຄວາມເຫັນດີເຫັນພ້ອມ ກ່ອນຕັດສິນໃຈທີ່ຈະອະນຸຍາດ ເພື່ອວາງແຜນເຮັດການທົດລອງ ເຣດ+ ເຫັນວ່າລຳບາກ ຫລື ເປັນໄປບໍ່ໄດ້. ໃນກໍລະນີນີ້, ເຈົ້າຂອງໂຄງການ ສາມາດສະແດງຄວາມຫວັງດີຕໍ່ຊຸມຊົນ ແລະ ຕັ້ງໃຈທີ່ຈະນັບຖືຫລັກການໃນການເຫັນດີເຫັນພ້ອມກ່ອນລ່ວງໜ້າດ້ວຍການແຈ້ງບອກຊຸມຊົນທີ່ອາດຈະໄດ້ຮັບຜົນກະທົບໂດຍໄວທັນທີທີ່ໄດ້ຮັບອະນຸຍາດວາງແຜນດ້ານ ເຣດ+. ເຈົ້າຂອງໂຄງການຈຳເປັນຕ້ອງເຮັດໃຫ້ມີຄວາມກະຈ່າງແຈ້ງວ່າຖ້າຊຸມຊົນບໍ່ເຫັນດີເຂົາເຈົ້າຈະບໍ່ຂໍອະນຸຍາດດ້ານ ເຣດ+ ຈາກລັດຖະບານ ຫລື ສືບຕໍ່ການວາງແຜນສຳລັບໂຄງການ ເຣດ+ ໃນພື້ນທີ່ໆຢູ່ພາຍໃຕ້ການຄວບຄຸມຕາມປະເພນີຂອງຊຸມຊົນ..

ໃນຂອບເຂດການປົກຄອງບາງບ່ອນ, ລັດຖະບານອາດບໍ່ຢາກອອກໃບອະນຸຍາດໃນການພັດທະນາ ເຣດ+ ຖ້າເຈົ້າຂອງໂຄງການຮັບຮູ້ວ່າພື້ນທີ່ກວມເອົາພື້ນທີ່ຕາມປະເພນີ. ໃນກໍລະນີນີ້, ອາດເປັນໄປບໍ່ໄດ້ທີ່ຈະພັດທະນາພື້ນທີ່ ເຣດ+ ທີ່ນັບຖືສິດທິດ້ານເອຟພິກຂອງຊຸມຊົນທີ່ຈະໄດ້ຮັບຜົນກະທົບ.ພາຍໃຕ້ກົດໝາຍທີ່ບັງຄັບໃຊ້ຢູ່ໃນປະເທດອິນໂດເນເຊຍ, ລັດຖະບານອາດຈະອອກໃບອະນຸຍາດໃຫ້ສະເພາະແຕ່ເພື່ອພັດທະນາສວນປູກຕົ້ນນ້ຳມັນປາມ ຢູ່ໃນທີ່ດິນທີ່ບໍ່ມີກຳມະສິດອື່ນ. ບັນດາບໍລິສັດທີ່ຢາກ ຫລື ຖືກບັງຄັບໂດຍມາດຖານສະໝັກໃຈເພື່ອໃຫ້ຮັບຮູ້ປະເພນີຂອງຊຸມຊົນຢູ່ພາຍໃນເຂດສຳປະທານຂອງຕົນບໍ່ສາມາດຈະໄດ້ຮັບອະນຸຍາດເພື່ອພັດທະນາພື້ນທີ່ເຫລົ່ານີ້ສຳລັບປູກຕົ້ນປາມນ້ຳມັນ.

ສະນັ້ນຈຶ່ງເປັນຜົນດີໃຫ້ແກ່ເຈົ້າຂອງໂຄງການ ເຣດ+ ທີ່ຈະຊ່ວຍຮັບປະກັນຄວາມຮັບຮູ້ສິດທິຂອງຊຸມຊົນຕໍ່ກັບທີ່ດິນຕາມປະເພນີ, ທັງຢູ່ພາຍໃນພື້ນທີ່ໂຄງການ ແລະ ຢູ່ໃນລະດັບຊາດ. ຄວາມສຳຄັນທີ່ເກີດມີ ເຣດ+ ເປັນສາຍເຫດເຮັດໃຫ້ມີການປະຕິຮູບດ້ານນະໂຍບາຍໃນລະດັບຊາດ, ຊຶ່ງເປັນການຊ່ວຍເຮັດໃຫ້ລັດຖະບານຢູ່ໃນເຂດນີ້ມີການປັບປຸງ. ເຊັ່ນ ຕົວຢ່າງໃນປະເທດກຳປູເຈຍ, ແຜນງານປ່າໄມ້ຊຸມຊົນແຫ່ງຊາດ ໄດ້ຮັບແຮງຜັກດັນເພີ້ມຂຶ້ນຍ້ອນວ່າການບໍລິຫານປ່າໄມ້ຢູ່ທັ້ນຮັບຮູ້ວ່າຜົນສຳເລັດຂອງແຜນງານ ເຣດ+ ສ່ວນໃຫຍ່

ຈະຂຶ້ນຢູ່ກັບການສະໜັບສະໜູນ ແລະ ການເຂົ້າຮ່ວມຂອງຊຸມຊົນທ້ອງຖິ່ນ.ເຊັ່ນດຽວກັບການສະໜັບສະໜູນຈາກເຈົ້າຂອງໂຄງການ ເຣດ+ ຢູ່ໃນປະເທດອື່ນໆໃນເຂດພາກພື້ນກໍສາມາດຊ່ວຍພະຍາຍາມສົ່ງເສີມເພື່ອເພີ້ມຄວາມກົດດັນໃຫ້ລັດຖະບານນັບຖືສິດທິດ້ານ ເອຟພິກ ຂອງຊຸມຊົນ

## ການຊ່ວຍເຫລືອຊຸມຊົນໃຫ້ເຂົ້າເຖິງກົນໄກຮ້ອງທຸກຈາກທາງນອກ

ບັນດາບໍລິສັດມີຫລາຍທົນທາງໃນການແຈ້ງໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບຮູ້ ກ່ຽວກັບວິທີການແກ້ໄຂທີ່ມີຢູ່ ສຳລັບເຂົາເຈົ້າພຽງແຕ່ສະໜອງຂໍ້ມູນດ້ານທາງເລືອກຈາກຂ້າງນອກໃນການແກ້ໄຂຄຳຮ້ອງທຸກ, ເພື່ອໃຫ້ການຊ່ວຍເຫລືອຜູ້ທີ່ໄດ້ເລືອກໃຊ້ລະບົບແກ້ໄຂຂໍ້ຂັດແຍ້ງທາງສານ. ເຊັ່ນຕົວຢ່າງ, ເວລາໂຄງການວາງທໍ່ BakuTbilisiCeyhan ໃນປະເທດຈໍເຈຍຮັບຮູ້ວ່າຜູ້ທີ່ມີສ່ວນກ່ຽວຂ້ອງໃນທ້ອງຖິ່ນບໍ່ມີກຳມະສິດເປັນທາງການຕໍ່ກັບທີ່ດິນຂອງເຂົາເຈົ້າ ຫລື ກຳມະສິດນັ້ນບໍ່ຊັດເຈນ, ໂຄງການໄດ້ໃຫ້ການຊ່ວຍເຫລືອ(ລວມທັງທຶນສຳລັບການສະໜັບສະໜູນດ້ານກົດໝາຍສຳລັບກໍລະນີທີ່ມີການຂຶ້ນສານ) ແກ່ປະຊາຊົນຜູ້ທີ່ຕ້ອງການຕໍ່ສູ້ກັບລັດຖະບານທ້ອງຖິ່ນ ແລະ ລະບົບສານເພື່ອແກ້ໄຂບັນຫານີ້. ຢູ່ປະເທດອາເຊີບາຈານ (Azerbaijan) ໂຄງການ BTC ໄດ້ໃຫ້ທຶນອົງການຈັດຕັ້ງທີ່ບໍ່ສັງກັດລັດ NGO ຢູ່ທ້ອງຖິ່ນ, ສູນສຳລັບການສຶກສາດ້ານກົດໝາຍ ແລະ ເສດຖະກິດ, ເພື່ອເປັນຜູ້ຕັດສິນຝ່າຍທີສາມເວລາມີການເຈລະຈາໂດຍກົງບໍ່ປະສົບຜົນສຳເລັດ. ສູນໄດ້ໃຫ້ການບໍລິການດ້ານກົດໝາຍໂດຍບໍ່ໄດ້ເສຍຄ່າໃຊ້ຈ່າຍແກ່ຜູ້ຮ້ອງທຸກທີ່ຢາກສະເໜີຂຶ້ນສານຕັດສິນ.

ແຫລ່ງຂໍ້ມູນ: Herbertson, K., et al. 2009. *Breaking Ground - Engaging Communities in Extractive and Infrastructure Projects*. World Resource Institute, Washington DC. Available at: www.wri.org

**ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຕ້ອງການຢາກຮູ້ວ່າ:**

- ຄວາມໝາຍໃນການເຂົ້າຮ່ວມຂະບວນການນັບຖືສິດທິດ້ານເອຟພິກຢູ່ບ່ອນວ່າສິດທິຂອງເຂົາເຈົ້າຕໍ່ກັບທີ່ດິນ/ຊັບພະຍາກອນບໍ່ໄດ້ຖືກຮັບຮູ້ຕາມກົດໝາຍໃນທົ່ວປະເທດ, ເຊັ່ນ: ການຕັດສິນອາດບໍ່ຖືກຮັບຮອງ ຫລື ຂຶ້ນກັບທາງເລືອກໃໝ່;
- ການເຈລະຈາຢ່າງຈິງໃຈຕ້ອງໄດ້ເວົ້າຢ່າງຊັດເຈນເຖິງສິດທິ, ເຈົ້າຂອງໂຄງການສາມາດ ແລະ ຈະຮັບຮອງເອົາ;
- ຄວາມສຳຄັນໃນການສືບຕໍ່ສົ່ງເສີມດ້ານສິດທິຕໍ່ກັບທີ່ດິນ/ຊັບພະຍາກອນ;
- ຊຸມຊົນສາມາດກຳນົດໂຄງສ້າງການສະໜັບສະໜູນລະດັບຊາດໄດ້ຄືແນວໃດຢູ່ໃນບ້ານຂອງເຂົາເຈົ້າ (ການຊ່ວຍເຫລືອດ້ານກົດໝາຍ, ການສະໜັບສະໜູນຈາກອົງການທາງສັງຄົມ); ແລະ
- ຊຸມຊົນມີສິດທິໃນການປຶກສາຫາລືກັບຝ່າຍທີສາມໂດຍບໍ່ພົວພັນໂດຍກົງກັບໂຄງການ.

**ແຫຼ່ງຂໍ້ມູນທີ່ແນະນຳໃຫ້ເຂົ້າໄປເບິ່ງ**


AIPP, IWGIA, FPP, and Tebtebba Foundation. 2010. *What to do with REDD? A Manual for Indigenous Trainers*. AIPP, IWGIA, FPP, and Tebtebba Foundation. Available at: www.forestpeoples.org

IWGIA, AIPP, FPP, and Tebtebba Foundation. 2010. *What is REDD? A Guide for Indigenous Communities*, IWGIA, AIPP, FPP, and Tebtebba Foundation. Available at: www.forestpeoples.org

Sprechmann, S., and E. Pelton. 2001. *Advocacy Tools and Guidelines: Promoting Policy Change*, CARE, Atlanta. Available at: www.care.org

# ສ່ວນປະກອບ 4 | ການພັດທະນາຂະບວນການສະແຫວງຫາ ແລະ ໄດ້ຮັບຄວາມເຫັນດີເຫັນພ້ອມ

ການຕົກລົງກັນກ່ຽວກັບຂະບວນການສະແຫວງຫາ ແລະ ໄດ້ຮັບຄວາມເຫັນດີເຫັນພ້ອມແມ່ນມີຄວາມຈຳເປັນເພື່ອໃຫ້ຊຸມຊົນ ແລະ ເຈົ້າຂອງໂຄງການ ໄດ້ເຂົ້າໃຈຂະບວນການທີ່ຊຸມຊົນ ຈະສະແດງຄວາມເຫັນດີເຫັນພ້ອມຂອງເຂົາເຈົ້າ ຫລື ການປະຕິເສດບໍ່ຮັບໂຄງການ ເຣດ+.

ການພັດທະນາຂະບວນການຕົກລົງຮ່ວມກັນເພື່ອຄວາມເຫັນດີເຫັນພ້ອມອາດຈະໃຊ້ເວລາ ແລະ ຄວາມພະຍາຍາມພໍສົມຄວນໃນເບື້ອງຂອງຜູ້ພັດທະນາໂຄງການ ແລະ ຊຸມຊົນ, ແລະ ຕ້ອງໄດ້ສ້າງບັນຍາກາດທີ່ມີການນັບຖື, ເປີດເຜີຍ ແລະ ມີຄວາມເຊື່ອໃຈຊຶ່ງກັນ ແລະ ກັນ. ອີງໃສ່ການປຶກສາຫາລືເບື້ອງຕົ້ນທີ່ສ້າງຄວາມສົນໃຈໃຫ້ຊຸມຊົນໃນການຜັກດັນໃຫ້ຂະບວນການເດີນໜ້າຕໍ່ໄປ, ແລະ ຊຸມຊົນໄດ້ກຳນົດເອົາສະຖາບັນການຈັດຕັ້ງທີ່ຕົນຕ້ອງການເພື່ອເຂົ້າຮ່ວມ ແລະ ເຈລະຈາກັບຜູ້ພັດທະນາໂຄງການ.

ສິດທິຂອງຊຸມຊົນໃນການປະຕິເສດບໍ່ຮັບເອົາໂຄງການທີ່ໄດ້ສະເໜີມາ ອາດຈະບໍ່ເປັນທີ່ພໍໃຈ ຫລື ອະນຸຍາດຈາກລັດຖະບານທີ່ມີອຳນາດໃນພື້ນທີ່.ໃນສະຖານະການເຊັ່ນນັ້ນຊຸມຊົນອາດບໍ່ຢາກນຳໃຊ້ສິດທິຂອງຕົນ, ແລະ ອາດຕອບໂຕ້ກັບນະໂຍບາຍຂອງລັດຖະບານ.ເຈົ້າຂອງໂຄງການຈະຕ້ອງຊອກຫາຊ່ອງທາງໃນການຮັບປະກັນຕໍ່ຊຸມຊົນວ່າສິດທິໃນການປະຕິເສດໂຄງການຈະໄດ້ຮັບການນັບຖື. ຖ້າເປັນໄປໄດ້ຄວນໃຫ້ມີຄຳຢືນຢັນຈາກລັດຖະບານທີ່ຍອມຮັບເອົາສິດທິຂອງຊຸມຊົນໃນການປະຕິເສດບົດສະເໜີໂຄງການ ເຣດ+. ໂດຍສະເພາະຊຸມຊົນອາດບໍ່ເຫັນດີກັບຮູບການໃດໜຶ່ງຂອງບົດສະເໜີໂຄງການ ເຣດ+ .ຜ່ານການປຶກສາຫາລື ແລະ ການເຈລະຈາກັນຢ່າງທົ່ວເຖິງ ແລະ ເປັນທີ່ພໍໃຈ, ເຈົ້າຂອງໂຄງການຄວນຈະຈັດໃຫ້ຮູ້ວ່າສ່ວນໃດຂອງໂຄງການທີ່ສະເໜີຂຶ້ນມາຊຸມຊົນຢາກຈະໃຫ້ການສະໜັບສະໜູນ, ແລະ ສ່ວນໃດຄວນຈະໄດ້ດັດແປງ ຫລື ຍົກເລີກ.

ຂະບວນການຊອກຫາຄວາມເຫັນດີເຫັນພ້ອມຈຳເປັນຕ້ອງໃຫ້ມີກຳນົດການສຳລັບທຸກບາດກ້າວໃນການໄດ້ຮັບຄວາມເຫັນດີເຫັນພ້ອມເລີ່ມຈາກການປຶກສາຫາລືເບື້ອງຕົ້ນ, ການເກັບກຳຂໍ້ມູນ, ການພິຈາລະນາເບິ່ງຜົນກະທົບ, ຜົນປະໂຫຍດ ແລະ ທາງເລືອກອື່ນໆ, ໄປເຖິງການເຈລະຈາ ແລະ ການຈັດຕັ້ງປະຕິບັດ ຕົກລົງກັນ. ສິ່ງສຳຄັນແມ່ນວ່າຂະບວນການຕ້ອງລວມມີການຊອກຫາ ແລະ ການໃຫ້ຄວາມເຫັນດີເຫັນພ້ອມໃນແຕ່ລະບາດກ້າວທີ່ສຳຄັນໆເຊັ່ນຕົວຢ່າງຊຸມຊົນກຸ່ມໜຶ່ງອາດຈະເຫັນດີຕໍ່ກັບການປຶກສາຫາລເບື້ອງຕົ້ນແຕ່ຫລັງຈາກນັ້ນເຂົາເຈົ້າຕັດສິນໃຈວ່າເຂົາເຈົ້າບໍ່ຢາກດຳເນີນໃນການເກັບກຳຕໍ່ໄປ. ຊຸມຊົນອີກກຸ່ມໜຶ່ງອາດຈະໃຫ້ຄວາມເຫັນດີເຫັນພ້ອມໃນທຸກໆບາດກ້າວ, ແຕ່ສຸດທ້າຍບໍ່ເຫັນດີກັບການສະເໜີຂຶ້ນຢູ່ ໃນການເຈລະຈາ. ຖ້າຫາກຂໍ້ມູນທີ່ສຳຄັນບໍ່ໄດ້ແຈ້ງໃຫ້ຮູ້ ຫລື ຕັດອອກຈາກການປຶກສາຫາລື, ຄວາມເຊື່ອໃຈລະຫວ່າງຊຸມຊົນ ແລະ ບໍລິສັດກໍຈະບໍ່ໜັກແໜ້ນ, ແລະ ຊຸມຊົນອາດຈະບໍ່ພໍໃຈທີ່ຈະສືບຕໍ່ເຂົ້າຮ່ວມກັບ ຜູ້ພັດທະນາໂຄງການ.

ຂະບວນການໃຫ້ຄວາມເຫັນດີເຫັນພ້ອມຈະຕ້ອງສະແດງໃຫ້ເຫັນວ່າບໍ່ມີການບັງຄັບ ແລະ ການສະແຫວງຫາຜົນປະໂຫຍດ. ຕ້ອງມີການກຳນົດຕົວແທນ, ບົດບາດ, ບາດກ້າວ/ຈຸດປະສົງຂອງເອຟພິກ, ເຮັດແນວໃດຈະເຮັດໃຫ້ມີການຕົກລົງກັນຢູ່ພາຍໃນຊຸມຊົນ (ຄວາມເປັນເອກະພາບ, ການລົງມະຕິ, ຫລື ອື່ນໆ...), ເງື່ອນໄຂເພື່ອບັນລຸໄດ້ການຕົກລົງເຫັນດີ(ເປີເຊັນຂອງປະຊາຊົນທີ່ມີໜ້າ,ເປີເຊັນໃນການລົງມະຕິ ແລະອື່ນໆ..), ຂະບວນການແກ້ໄຂຄວາມຂັດແຍ້ງ, ແລະ ຂັ້ນຕອນສຳລັບງົດຄວາມເຫັນດີເຫັນພ້ອມ (ວາງເງື່ອນໄຂ, ໄລຍະເວລາສຳລັບການເຈລະຈາຄືນໃໝ່ ແລະ ອື່ນໆ..)

ຝ່າຍທີ່ບັງຄັບ ສາມາດມາຈາກພາຍໃນຊຸມຊົນເອງ. ເຈົ້າຂອງໂຄງການ, ເມື່ອໃຫ້ການນັບຖືສິດທິຂອງຊຸມຊົນຈະຕ້ອງກຳນົດຂະບວນການຂອງຕົນເອງ, ສາມາດສອບຖາມກຸ່ມຜູ້ດ້ອຍໂອກາດ (ເຊັ່ນຜູ້ຍິງ, ຄອບຄົວທຸກຍາກ, ຫລື ກຸ່ມທີ່ບໍ່ມີສາຍພົວພັນທາງການເມືອງ) ສາມາດເຂົ້າຮ່ວມຂະບວນການໃຫ້ຄວາມເຫັນດີເຫັນພ້ອມພາຍໃນຊຸມຊົນ.

ເຫັນວ່າມີຄວາມສຳຄັນທີ່ສິດທິຂອງຊຸມຊົນໃນການປະຕິເສດຕໍ່ການສະເໜີໂຄງການ ເຣດ+ ໄດ້ຮັບການນັບຖື, ແລະ ເຈົ້າຂອງໂຄງການຈະບໍ່ພະຍາຍາມເຈລະຈາບັນຫານີ້ຄືນໃໝ່ໃນທັນທີທັນໃດໂລດ. ແນວໃດກໍຕາມ, ຊຸມຊົນສາມາດສະເໜີຖາມເພື່ອໃຫ້ຮູ້ວ່າຢູ່ພາຍໃຕ້ເງື່ອນໄຂອັນໃດທີ່ຊຸມຊົນຈະຕ້ອງໄດ້ກຽມພ້ອມ ເພື່ອພິຈາລະນາບົດສະເໜີໂຄງການຄືນໃໝ່.

**ຂໍ້ຫຍຸ້ງຍາກທົ່ວໄປໃນຂະບວນການຊອກຫາຄວາມເຫັນດີເຫັນພ້ອມ:**

- ການເຈລະຈາກັບຜູ້ນຳທີ່ຜິດຄົນ ຫລື ບໍ່ສົນໃຈສ່ວນທີ່ສຳຄັນຂອງຊຸມຊົນ;
- ການຄິດວ່າຄວາມເຫັນດີເຫັນພ້ອມເບື້ອງຕົ້ນທີ່ຈະປຶກສາຫາລືແຜນການໝາຍເຖິງຊຸມຊົນຢາກຈະເຈລະຈາກ່ຽວກັບການສະເໜີໂຄງການ ເຣດ+;
- ຄວາມຫລົ້ມເຫລວໃນການລວມເອົາຂໍ້ມູນທີ່ສຳຄັນກ່ຽວກັບຜົນກະທົບ ຫລື ຄວາມຮັບຜິດຊອບທີ່ຕິດພັນກັບໂຄງການ; ແລະ
- ບໍ່ອະນຸຍາດໃຫ້ມີເວລາພຽງພໍເພື່ອໃຫ້ຊຸມຊົນໄດ້ປຶກສາຫາລືກ່ຽວກັບແຜນການ ຫລື ໄດ້ຮັບຂ່າວສານ ແລະ ຄຳແນະນຳທີ່ເປັນເອກະລາດກ່ຽວກັບແຜນການ.

**ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຕ້ອງການຢາກຮູ້ວ່າ:**

- ສິດທິຕໍ່ກັບຂະບວນການເພື່ອຄວາມເຫັນດີເຫັນພ້ອມທີ່ໄດ້ຕົກລົງຮ່ວມກັນ, ພັນທະທີ່ຈະຕ້ອງໄດ້ປະຕິບັດຕາມ, ແລະ ສິດທິທີ່ຈະຕ້ອງເລືອກໃຫມ່ຖ້າເປັນເຈົ້າຂອງໂຄງການບໍ່ປະຕິບັດຕາມ, ແລະ
- ສິດທິເພື່ອຂໍຄຳແນະນຳດ້ານກົດໝາຍທີ່ເປັນເອກະລາດໃນທຸກຂັ້ນຕອນຂອງຂະບວນການເພື່ອຄວາມເຫັນດີເຫັນພ້ອມ.

**ແຫລ່ງຂໍ້ມູນທີ່ແນະນຳໃຫ້ເຂົ້າໄປເບິ່ງ**

Oxfam Australia. 2010. *Guide to Free, Prior, and Informed Consent*. Carlton, Victoria, Australia. Available at: www.oxfam.org.au

Suzuki, R. 2010. *The role of trust in REDD+*. *REDD-net Asia–Pacific Bulletin 2* (October 2010). ODI & RECOFTC. Available at: www.redd-net.org

ສ່ວນປະກອບ 5

## ສ່ວນປະກອບ 5 | ການພັດທະນາເນື້ອໃນຂໍ້ຕົກລົງດ້ານຄວາມເຫັນດີເຫັນພ້ອມ

ການຕົກລົງດ້ານຄວາມເຫັນດີເຫັນພ້ອມລະຫວ່າງເຈົ້າຂອງໂຄງການ ແລະ ຊຸມຊົນໄດ້ກຳນົດເງື່ອນໄຂຕ່າງໆທີ່ເປັນພື້ນຖານແກ່ຊຸມຊົນໃນການໃຫ້ຄວາມຄິດເຫັນພ້ອມຂອງຕົນຕໍ່ກັບການພັດທະນາທີ່ໄດສະເໜີມາ.

ເຫັນວ່າມີຄວາມສຳຄັນທີ່ຈະຕ້ອງໄດ້ສ້າງແບບຟອມ ແລະ ຮູບແບບທີ່ໄດ້ຕົກລົງຮ່ວມກັນສຳລັບຄວາມເຫັນດີເຫັນພ້ອມຊຶ່ງມີການຮັບຮູ້ກັນທັງສອງຝ່າຍ.ຊຶ່ງອາດເຮັດເປັນລາຍລັກອັກສອນ,ປາກເປົ່າ, ພິທີການຕາມປະເພນີ ຫລື ບາງທີກໍເຮັດແບບປະສົມປະສານກັນ.

**ແບບຟອມຂອງຂໍ້ຕົກລົງດ້ານຄວາມເຫັນດີເຫັນພ້ອມອາດລວມເອົາເນື້ອໃນດັ່ງນີ້:**

- ພາກສ່ວນຕົກລົງທີ່ຈະລົງລາຍເຊັນ;
- ເນື້ອໃນດ້ານຫລັກຖານຂອງຄວາມເຫັນດີເຫັນພ້ອມທີ່ໄດ້ຕົກລົງຮ່ວມກັນ;
- ເນື້ອໃນດ້ານຫລັກຖານຂອງຄວາມເຫັນດີເຫັນພ້ອມທີ່ໄດ້ຕົກລົງຮ່ວມກັນ;
- ການອະທິບາຍລາຍລະອຽດຂອງຂໍ້ຕົກລົງກັນ (ຕາມສະຖານທີ່ຂອງວົງຈອນໂຄງການ). ສຳລັບຂໍ້ຕົລົງກ່ຽວກັບການຈັດຕັ້ງປະຕິບັດໂຄງການຊຶ່ງລວມມີ:
  - ຄ່າສິ້ນເປືອງຈາກຝ່າຍຊຸມຊົນ;
  - ຜົນປະໂຫຍດທີ່ຈະເກີດຂຶ້ນໃຫ້ຊຸມຊົນ;
  - ສິ່ງທີ່ຕ້ອງການ (ເຊັ່ນຕົວຢ່າງ: ການລາດຕະເວນ, ການເກັບກຳຂໍ້ມູນ, ການລາຍງານ, ແລະອື່ນໆ.)
  - ລະບຽບການ ແລະ ຂໍ້ຫ້າມໃຫ້ຊຸມຊົນປະຕິບັດ (ເຊັ່ນ: ການຈຳກັດການນຳໃຊ້ພະລິດຕະພັນປ່າໄມ້)
- ໄລຍະເວລາ/ກຳນົດເວລາ;
- ການຈັດການເພື່ອເຮັດຂໍ້ຕົກລົງຜູກມັດທາງສັນຍາ;
- ປຶດບັນຍັດດ້ານການກວດສອບຢັ້ງຢືນເອກະລາດ;
- ກົນໄກທາງເລືອກໃໝ່/ຂະບວນການຮ້ອງທຸກ;
- ແຜນການກວດກາຕິດຕາມ;
- ການຖອນເງື່ອນໄຂກ່ຽວກັບການເຫັນດີເຫັນພ້ອມ;
- ການຕົກລົງກ່ຽວກັບຈຸດຕໍ່ໄປສຳລັບການຊອກຫາຄວາມເຫັນດີເຫັນພ້ອມ; ແລະ
- ເອກະສານແບບທ້າຍ ເຊັ່ນ: ແຜນຈັດສັນ/ລາຍລະອຽດຂອງກິດຈະກຳການພັດທະນາເສດຖະກິດ/ຂະບວນການລະອຽດສຳລັບການຈັດຕັ້ງປະຕິບັດ

ຜູ້ມີສ່ວນກ່ຽວຂ້ອງຫລັກໆໃນຂະບວນການນີ້ ແມ່ນຕົວແທນຂອງຜູ້ຖືສິດທິ, ຜູ້ເອື້ອອຳນວຍຄວາມສະດວກເອກະລາດ, ເຈົ້າຂອງໂຄງການ, ແລະ ລັດຖະບານ.ເຈົ້າຂອງໂຄງການສາມາດຮຽນຮູ້ຈາກການຕົກລົງດ້ານການອະນຸລັກ ຫລື ອຸດສາຫະກຳການຂຸດຄົ້ນອື່ນໆ ທີ່ເຮັດກັບປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ. ຕົວຢ່າງແມ່ນການຕົກລົງກັນລະຫວ່າງບໍລິສັດ Voisey Bay Nickel, the Innu Nation ແລະ ສະມາຄົມ Labrador Inuit Association. ການຕົກລົງ Voisey Bay ໄດ້ຮັບຮູ້ສິດທິຕາມລັດຖະທຳມະນູນຈໍ່ກັຍທີ່ດິນຂອງຄົນ Innu, ແລະ ການຂຸດຄົ້ນບໍ່ແຮ່ສາມາດເດີນໜ້າໄດ້ຖ້າປະຊາຊົນ Innu ໃຫ້ຄວາມເຫັນດີເຫັນພ້ອມ.ໃນພາກປະຕິບັດຕົວຈິງ, ໝາຍຄວາມວ່າ ການເຂົ້າຮ່ວມຂອງປະຊາຊົນພື້ນເມືອງໃນການອອກແບບໂຄງການ, ການມີວຽກເຮັດ, ການປ້ອງກັນສິ່ງແວດລ້ອມ,ການຄ້ຳປະກັນດ້ານສັງຄົມ, ແລະມາດຕະການປ້ອງກັນດ້ານວັດທະນະທຳ. ຖ້າຕ້ອງການຂໍ້ມູນເພີ້ມເຕີມກ່ຽວກັບການຕົກລົງນີ້ໃຫ້ເບິ່ງ www.docstoc.com

**ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຕ້ອງການຢາກຮູ້ວ່າ:**

- ທຸກໆລັກສະນະຂອງຫານຕົກລົງຄວາມເຫັນດີເຫັນພ້ອມ (ຈະຕ້ອງເຮັດໃຫ້ສາທາລະນະຊົນເຂົ້າເຖິງ).

**ແຫຼ່ງຂໍ້ມູນທີ່ແນະນຳໃຫ້ເຂົ້າໄປເບິ່ງ**

Lehr, A., and G. Smith. 2010. *Implementing a Corporate Free, Prior and Informed Consent Policy.* Foley Hoag LLB, Boston and Washington, DC. Available at: www.foleyhoag.com

# ສ່ວນປະກອບ 6 | ການຕົກລົງເຫັນດີ ຕໍ່ກັບແຜນການສື່ສານ

ມີຄວາມຈຳເປັນຈະຕ້ອງໄດ້ມີແຜນການສື່ສານສຳລັບຂະບວນການເພື່ອເຄົາລົບສິດທິຕໍ່ການເຫັນດີເຫັນພ້ອມຢ່າງອິດສະເລະທີ່ມີການຮັບຮູ້ລ່ວງໜ້າ (FPIC) ຈົນກວ່າຂະບວນການເຫັນດີເຫັນພ້ອມໃນທຸກດ້ານມີການສື່ສານ-ໃຫ້Éກັບສະມາຊິກຂອງຊຸມຊົນ ແລະ ບັນດາຝ່າຍອື່ນໆທີ່ມີຄວາມສົນໃຈເຊິ່ງລວມມີບັນດາຊຸມຊົນທີ່ຢູ່ໃກ້ຄຽງ, ອຳນາດການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ (NGO) ແລະ ບັນດາບໍລິສັດຕ່າງໆທີ່ເຄື່ອນໄຫວທຸລະກິດໃນພື້ນທີ່ນີ້. ການສື່ສານກັບແຕ່ລະຊຸມຊົນຈະຕ້ອງເປັນພາສາທີ່ຊຸມຊົນເວົ້າໄດ້ ແລະ ໃຫ້ນຳໃຊ້ສື່ກາງເພື່ອຊ່ວຍໃຫ້ເຂົາເຈົ້າເຂົ້າໃຈໄດ້.

ຜູ້ພັດທະນາໂຄງການຈຳນວນໜຶ່ງອາດຈະຕ້ອງການອີງໃສ່ນັລັດຖະບານໃນການອຳນວຍຄວາມສະດວກໃຫ້ແກ່ການສື່ສານກັບຊຸມຊົນຕ່າງໆ, ແຕ່ວ່າ ອາດຈະມີຄວາມສ່ຽງຄືເຮັດໃຫ້ຂໍ້ມູນບໍ່ໄປເຖິງຂະແໜງການທີ່ສຳຄັນຂອງຊຸມຊົນ ຫຼື ຂໍ້ມູນທີ່ສຳຄັນກ່ຽວກັບໂຄງການອາດບໍ່ໄດ້ຖືກສື່ສານເລີຍ. ແຜນການອອກແບບ ແລະ ຈັດຕັ້ງປະຕິບັດກ່ຽວກັບແຜນການສື່ສານສຳລັບເອຟພິກຄວນຈະຖືເປັນຄວາມຮັບຜິດຊອບຂອງຜູ້ພັດທະນາໂຄງການ, ແຕ່ວ່າຈະຕ້ອງສ້າງແຜນການ ແລະ ຈັດຕັ້ງປະຕິບັດຮ່ວມກັບຊຸມຊົນ, ສ່ວນຊຸມຊົນອາດຈະຮັບ ຜິດຊອບໃນການຈັດຕັ້ງປະຕິບັດສ່ວນໃດສ່ວນໜຶ່ງຂອງແຜນການ. ສາມາດສ້າງແຜນການສື່ສານພົວພັນ ແລະ ຈັດຕັ້ງປະຕິບັດຮ່ວມກັບຊຸມຊົນເປັນແຕ່ລະກ້າວໂດຍເລີ້ມຈາກການກະກຽມການສືນ່ສານເບື້ອງຕົ້ນກັບຊຸມຊົນກ່ຽວກັບຜົນປະໂຫຍດຂອງເຈົ້າຂອງໂຄງການເພື່ອພັດທະນາພື້ນທີ່ເຮັດການສາທິດ ແລະ ພື້ນທີ່ລິເລີ່ມໂຄງການ ເຣດ+. ໃນເບື້ອງຕົ້ນ, ເຈົ້າຂອງໂຄງການຄວນຈະຕ້ອງໃຫ້ຄວາມກະຈ່າງແຈ້ງກ່ຽວກັບຂໍ້ສະເໜີຂອງເຂົາເຈົ້າເພື່ອຊ່ວຍຊຸມຊົນໃນການສ້າງແຜນການສື່ສານທີ່ມີການເຫັນດີຂອງສອງຝ່າຍເພື່ອໃຫ້ປະຕິບັດຕາມຂັ້ນຕອນທັງໝົດຂອງຂະບວນການເຫັນດີເຫັນພ້ອມ.

## ກຳປູເຈຍ: ການປຶກສາຫາລືກັບຊຸມຊົນສຳລັບໂຄງການ ເຣດ+ (REDD+) ຂອງປ່າໄມ້ຊຸມຊົນພາຍໃນແຂວງ ອັອດດາ ມີນເຈ (Oddar Meanchey)

ໂຄງການ ເຣດ+ ຂອງປ່າໄມ້ຊຸມຊົນພາຍໃນແຂວງ ອອດດາ ມີນເຈ ເປັນໂຄງການເຣດ+ ໂຄງການທຳອິດໃນປະເທດກຳປູເຈຍ ແລະ ເປັນໂຄງການທີ່ໃຫ້ບົດຮຽນ-ໃນການລິເລີ່ມວຽກງານ ເຣດ+ ອື່ນໆ ທີ່ມີພື້ນຖານຢູ່ຊຸມຊົນຢູ່ໃນປະເທດ.

ໂຄງການຕັ້ງຢູ່ໃນແຂວງອອດດາມີນເຈ (Oddar Meanchey) ແລະ ລວມມີເນື້ອທີ່ເກືອບຮອດ 70,000 ເຮັກຕາຂອງປ່າດົງດິບ ແລະ ປ່າພັດໃບພ້ອມນັ້ນກໍຍັງຫຼາຍກວ່າ 10,000 ຄົວເຮືອນ -ເຂົ້າມາມີສ່ວນຮ່ວມ ຢູ່ທັງໝົດ 13 ຊຸມຊົນ. ຄົວເຮືອນສ່ວນໃຫຍ່ແມ່ນຊົນເຜົ່າຂະແມໂດຍມີສ່ວນໜ້ອຍໜຶ່ງທີ່ເປັນຊົນເຜົ່າຄຸຍ (Kuy). ແຂວງດັ່ງກ່າວ ໄດ້ສູນເສຍປ່າໄມ້ໄປຈຳນວນ 2% ໃນແຕ່ລະປີຍ້ອນສາຍເຫດມາຈາກການຂະຫຍາຍເນື້ອທີ່ສຳປະທານສຳລັບການປູກ ຢາງພາລາ, ອ້ອຍ ແລະ ຕົ້ນນ້ຳມັນປາມ ແລະ ການເຮັດໄຮ່ເຮັດສວນຂະໜາດນ້ອຍແບບເລື່ອນລອຍ. ຫວ່າງບໍ່ດົນມານີ້, ບັນດາຊຸມຊົນຕ່າງໆໄດ້ຮັບປະກັນດ້ວຍຂໍ້ຕົກລົງວ່າດ້ວຍປ່າໄມ້ຊຸມຊົນເຊິ່ງເປັນຂໍ້ຕົກລົງທີ່ຮັບຮູ້ສິດທິໃນການຄຸ້ມຄອງປ່າໄມ້ຂອງເຂົາເຈົ້າລວມທັງສິດໃນການຮັບຜົນປະໂຫຍດຈາກກາກບອນ.

ເພື່ອບັນລຸຕາມມາດຕາສ່ວນທີ່ເປັນໄປໄດ້, ທາງໂຄງການໄດ້ຫ້ອນໂຮມພື້ນທີ່ປ່າຂອງຊຸມຊົນຕ່າງໆຈຳນວນ 13 ແຫ່ງເຂົ້າກັນ. ນັບຕັ້ງແຕ່ທ້າຍປີ 2009, ໄດ້ດຳເນີນວຽກເພື່ອໃຫ້ໄດ້ຮັບມາດຕະຖານທາງດ້ານສະພາບດິນຟ້າອາກາດ, ຊຸມຊົນ ແລະ ຊີວະນາໆພັນ (CCBS) ແລະ ມາດຕະຖານທາງດ້ານກາກບອນແບບສະໝັກໃຈ (VCS). ມາດຕະຖານດັ່ງກ່າວມີຜົນໃຊ້ໄດ້ໃນປີ 2011 ໂດຍມີເປົ້າໝາຍເພື່ອຂາຍກາກບອນຫຼັງຈາກນັ້ນ. ສຳລັບການສະໜອງທຶນແກ່ໂຄງການທີ່ຈະດູດຊັບເອົາກາກບອນປະມານ 7 ໂຕນ ຕະຫຼອດຊ່ວງໄລຍະເວລາ 30 ປີ ເຊິ່ງມາຈາກແຜນລິເລີ້ມດ້ານພູມອາກາດຂອງໂຄງການດານິດາ (Danida), Pact, ຄຼິນຕັນ (Clinton) ແລະ ກະຊວງການຕ່າງປະເທດຂອງສະຫະລັດອາເມລິກາ.

ການປຶກສາຫາລືກັບຊຸມຊົນປະກອບດ້ວຍການຈັດກອງປະຊຸມຫຼາຍຄັ້ງເລີ່ມແຕ່ເດືອນມີນາ 2008 ໂດຍທີ່ການເປີດໂຕແລະສະຫຼູບສັງລວມໂນຄິດຂອງໂຄງການ ເຣດ+ ພໍສົມຄວນ ແລະ ກໍມີການຕັ້ງຄຳຖາມ ແລະ ບັນຫາຕ່າງໆທີ່ໜ້າເປັນຫວ່ງຫຼາຍຢ່າງຂຶ້ນມາສົນທະນາກັນ.

ການປຶກສາຫາລືຂັ້ນແຂວງເປັນເວລາໜຶ່ງມື້ແມ່ນໄດ້ດຳເນີນເປັນພາສາຂະແມໂດຍມີການບັນທຶກການປະຊຸມ ແລະ ໄດ້ມີການບັນທຶກຂະບວນການປະຊຸມທັງໝົດໄວ້ໃນ - ເຄື່ອງອັດສຽງ. ກອງປະຊຸມໄດ້ອຳນວຍຄວາມສະດວກໂດຍພະນັກງານຈາກໂຄງການ Pact ສອງຄົນ, ພະນັກງານບໍລິຫານປ່າໄມ້ໜຶ່ງຄົນທີ່ມາຈາກສູນກາງເຊິ່ງເປັນການປະສານງານໂຄງການ, ແລະ ຫົວໜ້າອົງການທີ່ບໍ່ສັງກັດລັດ (NGO) ຄູ່ຮ່ວມງານທ້ອງຖິ່ນຂອງໂຄງການ, ສະມາຄົມເພື່ອການພັດທະນາເດັກນ້ອຍ. ທັງໝົດຊຸມຊົນ 13 ແຫ່ງແມ່ນມີຕົວແທນເຂົ້າຮ່ວມກອງປະຊຸມໂດຍມີຊຸມຊົນ 2 ຄົນ ທີ່ມາຈາກແຕ່ລະບ້ານເຂົ້າຮ່ວມ. ຜູ້ເຂົ້າຮ່ວມກອງປະຊຸມປະກອບມີຜູ້ນຳຊຸມຊົນຈຳນວນ 29 ຄົນ (ຊາຍ 17 ຄົນ, ຍິງ 9 ຄົນ), ພະນັກງານບໍລິຫານປ່າໄມ້ທ້ອງຖິ່ນ 2 ຄົນ, ແລະ ພະນັກງານອົງການທີ່ບໍ່ສັງກັດລັດ ຂອງທ້ອງຖິ່ນ 2 ຄົນ. ການປະຊຸມລວມມີການສົນທະນາເປັນກຸ່ມນ້ອຍ ແລະ ສົນທະນາລວມ, ໂດຍມີການຂຽນຄຳເຫັນຂຽນຕິດໃສ່ຝາເພື່ອຊຸກຍູ້ໃຫ້ມີການສົນທະນາແບບເປີດ-ເຜີຍ ແລະ ຢ່າງອິດສະຫຼະ.

ການປຶກສາຫາລືໄດ້ເນັ້ນໃສ່ໝວດທີ່ກ່ຽວຂ້ອງໃນເອກະສານຂອງໂຄງການແຕ່ວ່າຜູ້ອຳນວຍຄວາມສະດວກໄດ້ປ່ອຍໃຫ້ມີການສົນທະນາເພື່ອດຳເນີນຕາມເວລາໂດຍອີງຕາມຄວາມສົນໃຈຂອງຜູ້ເຂົ້າຮ່ວມ. ສະມາຊິກຂອງຊຸມຊົນຕັ້ງຄຳຖາມ ແລະ ຍົກໃຫ້ເຫັນຄວາມເປັນຫ່ວງຕ່າງໆຢ່າງອິດສະຫຼະ. ອະທິບາຍບາງຈຸດທີ່ເຂົ້າໃຈຜິດຕໍ່ກັບຈຸດປະສົງຂອງໂຄງການ. ທີມງານອຳນວຍຄວາມສະດວກພະຍາຍາມທີ່ຈະແກ້ໄຂຄວາມເປັນຫ່ວງ ແລະ ຈົດບັນທຶກເອົາບັນຫາທີ່ຈະຕ້ອງໄດ້ສົນທະນາກັນຕື່ມໃນຕໍ່ໜ້າ.

ບັນຫາຫຼັກທີ່ບັນດາຊຸມຊົນຕ່າງໆຍົກຂຶ້ນມາ

- ບໍ່ມີພະນັກງານໂຄງການລົງໄປຢ້ຽມຢາມຊຸມຊົນຕ່າງໆຢ່າງສະໝ່ຳສະເໝີ ແລະ ເປັນປົກກະຕິເພື່ອອະທິບາຍກ່ຽວກັບໂຄງການ;
- ຜູ້ນຳຊຸມຊົນຈຳນວນໜຶ່ງມີບັນຫາໃນການສ້າງຄວາມເຂົ້າໃຈ ແລະ ຊຸກຍູ້ສະມາຊິກກັບຊຸມຊົນເຂົ້າຮ່ວມກິດຈະກຳການວາງແຜນຕ່າງໆດ້ານ ເຣດ+;
- ຊຸມຊົນຕ່າງໆ ມີຄວາມຕ້ອງການໆຊ່ວຍເຫຼືອດ້ານການເງິນສຳລັບກິດຈະກຳການປົກປັກຮັກສາປ່າໄມ້ ແລະ ຕ້ອງການຮັບຮູ້ວ່າເມື່ອໃດຈະໄດ້ຮັບການຊ່ວຍເຫຼືອດັ່ງກ່າວ;
- ຊຸມຊົນຕ່າງໆຂາດຄວາມອາດສາມາດ ໃນການຈັດຕັ້ງປະຕິບັດບາງກິດຈະກຳ;
- ຜູ້ນຳຊຸມຊົນຈຳນວນໜຶ່ງຢ້ານວ່າສະມາຊິກຊຸມຊົນຂອງເຂົາເຈົ້າຈະມີຄວາມຄາດຫວັງຕໍ່ກັບລາຍຮັບຄ່າກາກບອນສູງໂພດ;
- ຊຸມຊົນ 2 ໃນຈຳນວນ 13 ແຫ່ງຍັງບໍ່ທັນໄດ້ຮັບຂໍ້ຕົກລົງກ່ຽວກັບການຄອບຄອງເທື່ອ;
- ມີຄວາມ-ເປັນຫ່ວງວ່າຊາວບ້ານອາດຈະປົກປ້ອງການນຳໃຊ້ທີ່ດິນກະສິກຳທີ່ມີຢູ່ໃນເຂດແດນປ່າໄມ້ຂອງຊຸມຊົນ;
- ຊຸມຊົນຍັງບໍ່ທັນເຂົ້າໃຈແຈ້ງກ່ຽວກັບວ່າໃຜຮັບຜິດຊອບໃນການປົກປັກຮັກສາປ່າໄມ້ໃນແລວຮົ່ວໄຫຼເຂດກັນຊົນບໍລິເວນປ່າໄມ້ຂອງຊຸມຊົນ;
- ບາງຊຸມຊົນໄດ້ຖືກຂົ່ມຂູ່ຈາກຜູ້ຂຸດຄົ້ນໄມ້ທີ່ມີອາວຸດ;
- ຊຸມຊົນໄດ້ຂໍການຊ່ວຍເຫຼືອສຳລັບການປັບປຸງຊີວິດການເປັນຢູ່ລວມມີການສະໜອງການລ້ຽງສັດ, ລົດໄຖນາ ແລະລະບົບສິນເຊື່ອ;
- ມີຜູ້ອົບພະຍົບ-ເຂົ້າມາໃໝ່ໃນພື້ນທີ່ປ່າໄມ້ຊຸມຊົນໜຶ່ງ ແລະ ມີຄວາມຕ້ອງການການຊ່ວຍເຫຼືອ ເພື່ອແກ້ໄຂບັນຫານີ້;
- ຊຸມຊົນໄດ້ຂໍໃຫ້ມີລະບົບການແບ່ງປັນຜົນປະໂຫຍດທີ່ໂປ່ງໃສຕ້ອງການໃຫ້ທຸກຄົນເຂົ້າຮ່ວມກອງປະຊຸມເພື່ອສົນທະນາວ່າລາຍຮັບຈະຖືກນຳໃຊ້ ແລະ ຈະສ້າງຄວາມເອກະພາບໄດ້ແນວໃດ. ການນຳໃຊ້ທຶນ ແລະ ຜົນສຳເລັດຈະຕ້ອງ

ບໍ່ມີບັນຫາໃດທີ່ໄດ້ຮັບການພິຈາລະນາຢ່າງຈິງຈັງຈາກຊາວບ້ານໃນການໃຫ້ຄວາມເຫັນດີເຫັນພ້ອມທັງໝົດຕໍ່ກັບໂຄງການ. ໃນຊ່ວງໄລຍະປີ 2010, ທີມງານໂຄງການໄດ້ເລີ້ມແກ້ໄຂບັນຫາທີ່ກ່າວມາຂ້າງເທິງນີ້ລວມທັງຫຼາຍໆ ບັນຫາອື່ນໆ ອີກທີ່ມີຄວາມສໍາຄັນຕໍ່ກັບຊຸມຊົນຕ່າງໆ ເປັນຕົ້ນແມ່ນການກໍານົດເຂດຄອບຄອງທີ່ດິນກະສິກໍາພາຍໃນປ່າຊຸມຊົນຂອງໂຄງການ ເຣດ+. ການປະຊຸມຂັ້ນແຂວງເປັນບາດກ້າວທີ່ສໍາຄັນອັນໜຶ່ງໃນຂະບວນການດໍາເນີນການປຶກສາຫາລື ແລະ ການຮ່ວມມືລະຫວ່າງຜູ້ມີສ່ວນກ່ຽວຂ້ອງທັງໝົດ, ພ້ອມກັນນັ້ນກໍໄດ້ມີການປະຕິບັດໄປຕາມກໍານົດເວລາສໍາລັບການປະຊຸມປົກກະຕິ. ເຖິງແມ່ນວ່າຜູ້ເຂົ້າຮ່ວມບໍ່ໄດ້ຂໍໃຫ້ເຊັນແບບຟອມຂອງການຕົກລົງເຫັນດີເຫັນພ້ອມທີ່ເປັນທາງການກໍຕາມ, ການປະເມີນການປຶກສາຫາລື ລວມທັງການຕົກລົງເຫັນດີແບບປາກເປົ່າໃນຕອນທ້າຍຂອງກອງປະຊຸມໄດ້ເປັນການຢັ້ງຢືນ ກ່ຽວກັບການຕົກລົງເຫັນດີເຫັນພ້ອມຕໍ່ກັບການສືບຕໍ່ດໍາເນີນໂຄງການຕໍ່ໄປ. ໄດ້ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມແລກປ່ຽນກ່ຽວກັບສິ່ງທີ່ໄດ້ຮຽນຮູ້ ແລະ ສົນທະນາກັບສາມະຊິກຄົນອື່ນໆຂອງຊຸມຊົນຂອງເຂົາເຈົ້າໃນເວລາທີ່ກັບໄປບ້ານຂອງຕົນ ແລະ ລາຍງານໃຫ້ຜູ້ອໍານວຍຄວາມສະດວກຮັບຊາບຕໍ່ກັບທຸກໆບັນຫາອື່ນໆທີ່ກ່ຽວຂ້ອງ. ດີແທ້, ການປະຊຸມປຶກສາຫາລືຄັ້ງສຸດທ້າຍຈະຕ້ອງດໍາເນີນຢູ່ໃນທຸກໆຊຸມຊົນ ແຕ່ເນື່ອງຈາກວ່າມີການຂາດແຄນດ້ານງົບປະມານ, ທີມງານຂອງໂຄງການຈໍາເປັນຕ້ອງໄດ້ອາໃສຜູ້ຕ່າງໜ້າຂອງຊຸມຊົນເພື່ອສໍາເລັດຂະບວນການນີ້.

ການປຶກສາຫາລືຂອງໂຄງການ ເຣດ+ ທີ່ຢູ່ປ່າໄມ້ຊຸມຊົນຂອງແຂວງອອດດາມີນເຈໄດ້ພະຍາຍາມເຊື່ອມໂຍງສິດເຂົ້າໃສ່ໃນການເຫັນດີເຫັນພ້ອມຢ່າງມີອິດສະຫຼະໂດຍໄດ້ຮັບຮູ້ລ່ວງໜ້າຕະຫອດໄລຍະການປຶກສາຫາລືຫຼາຍຄັ້ງໃນຊ່ວງເວລາໜຶ່ງປີເຄິ່ງ. ໃນຂະນະທີ່ມີຂໍ້ຈໍາກັດ, ຈາກປະສົບການໄດ້ສະແດງໃຫ້ເຫັນເຖິງວິທີການທີ່ເປັນປະໂຫຍດໃຫ້ແກ່ການຈັດຕັ້ງຂະບວນການນີ້ພ້ອມທັງຍົກໃຫ້ເຫັນບັນຫາຕ່າງໆທີ່ມີຄວາມສໍາຄັນຕໍ່ບັນດາຊຸມຊົນທ້ອງຖິ່ນໃນການລິເລີ້ມວຽກງານ ເຣດ.

ຂຽນໂດຍ ທ່ານ Amanda Bradley, Pact ປະເທດກໍາປູເຈຍ. ສໍາລັບຂໍ້ມູນເພີ້ມເຕີມ ໃຫ້ເຂົ້າໄປເບິ່ງໃນເວັບໄຊ: www.pactcambodia.org

ເຈົ້າຂອງໂຄງການ ແລະ/ຫຼື ອໍານາດການປົກຄອງຕ່າງໆຈະເປັນການນໍາພາໃນການອອກແບບແຜນການສື່ສານຄວນຈະພິຈາລະນາໃນການນໍາເອົາຊ່ຽວຊານດ້ານການສື່ສານຈາກຂ້າງນອກເຂົ້າມາໃຊ້ແຜນການສື່ສານຈໍາເປັນຕ້ອງລວມມີການວິເຄາະຄວາມຕ້ອງການດ້ານຂໍ້ມູນກ່ຽວກັບຜູ້ມີສ່ວນກ່ຽວຂ້ອງຕ່າງໆ. ກໍານົດວິທີໃນການສື່ສານຂໍ້ມູນທີ່ມີຄວາມກ້າວໜ້າ ແລະ ມີປະສິດທິພາບ ແລະ ຈັດສັນເຄື່ອງມືທີ່ເໝາະສົມເພື່ອປະເມີນປະສິດທິພາບຂອງແຜນການ.ຈໍາເປັນຕ້ອງໄດ້ຊອກຫາຊັບພະຍາກອນໃຫ້ພຽງພໍສໍາລັບການສື່ສານ. ເຈົ້າຂອງໂຄງການ, ອໍານາດການປົກຄອງລັດ ແລະ ຜູ້ມີສິດຈໍາເປັນຕ້ອງສະແດງບົດບາດ ແລະ ຄວາມຮັບຜິດຊອບເພື່ອຮັບປະກັນໃຫ້ສະມາຊິກຂອງຊຸມຊົນທຸກຄົນໄດ້ຮັບການລາຍງານ.

**ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ຕ້ອງການຢາກຮູ້:**

- ຂ່າວສານສໍາຄັນທັງໝົດໃນແຜນການສື່ສານເຊິ່ງຄວນຈະວມເອົາຂໍ້ມູນທີ່ຈໍາເປັນກ່ຽວກັບສິດຂອງເຂົາເຈົ້າທີ່ພົວພັນກັບ ເຣດ+, ເອຟພິກ, ປະເພນີ/ອື່ນໆທີ່ໄດ້ສິ່ງຜົນກະທົບໃສ່ທີ່ດິນ, ການບອນ ແລະ ຊັບພະຍາກອນປ່າໄມ້.

## ແຫຼ່ງຂໍ້ມູນທີ່ແນະນໍາໃຫ້ເຂົ້າໄປເບິ່ງ


Business and Biodiversity Offsets Programme (BBOP). 2009. *Biodiversity Offsets and Stakeholder Participation: A BBOP Resource Paper*. BBOP, Washington, D.C. Available at: www.forest-trends.org

Lehr, A., and G. Smith. 2010. *Implementing a Corporate Free, Prior and Informed Consent Policy.* Foley Hoag LLB, Boston and Washington, DC. Available at: www.foleyhoag.com

# ສ່ວນປະກອບ 7 | ການພັດທະນາຍຸດທະສາດໃນການສ້າງຄວາມອາດສາມາດ

ຊຸມຊົນຈຳເປັນຕ້ອງມີຄວາມຮູ້ຄວາມສາມາດຫຼາຍຢ່າງເພື່ອເຂົ້າຮ່ວມເຄື່ອນໄຫວຢ່າງມີປະສິດທິພາບກັບໂຄງການ ເຣດ+ ແລະ ເພື່ອຕັດສິນໃຈແຈ້ງໃຫ້ຊາບໃນການອະນຸຍາດໃຫ້ໂຄງການດຳເນີນໃນທີ່ດິນຂອງເຂົາເຈົ້າ. ຄວາມຮູ້ເຫຼົ່ານີ້ນັບຕັ້ງແຕ່ການຮູ້ໜັງສື ແລະ ການຄິດໄລ່ຈົນເຖິງຄວາມອາດສາມາດເພື່ອຄຸ້ມຄອງກອງທຶນໃນລັກສະນະທີ່ມີຄວາມໂປ່ງໃສ ແລະ ມີຄວາມຮັບຜິດຊອບ. ຍຸດທະສາດໃນການສ້າງຄວາມອາດສາມາດໃຫ້ແກ່ຊຸມຊົນຄວນຈະມີເປົ້າໝາຍເພື່ອພັດທະນາຄວາມຮູ້ຄວາມສາມາດທີ່ຈຳເປັນໃຫ້ແກ່ສະມາຊິກຂອງຕົນເພື່ອເຂົ້າຮ່ວມໃນແຕ່ລະຂັ້ນຂອງຂະບວນການສ້າງຄວາມເຫັນດີເຫັນພ້ອມທີ່ພວມດຳເນີນຢູ່. ກຸ່ມຕ່າງໆທີ່ຢູ່ພາຍໃນຊຸມຊົນໂດຍສະເພາະແມ່ນກຸ່ມຜູ້ດ້ອຍໂອກາດເຊັ່ນແມ່ຍິງອາດຈະຕ້ອງການຍຸດທະສາດການສ້າງຄວາມອາດສາມາດທີ່ຖືກອອກແບບມາໃຫ້ເໝາະສົມສະເພາະກັບສະຖານະການ ແລະ ຈຸດປະສົງເປົ້າໝາຍ. ການສ້າງຄວາມອາດສາມາຄວນຈະຕ້ອງສືບຕໍ່ໝົດອາຍຸການຂອງໂຄງການພ້ອມກັບສ້າງຄວາມຮູ້ຄວາມສາມາດ ແລະ ມີການຈັດຝຶກອົບຮົມໃຫ້ສະມາຊິກຂອງຊຸມຊົນໃນດ້ານຕ່າງໆເຊິ່ງລວມມີການອອກແບບໂຄງການ, ການຈັດຕັ້ງປະຕິບັດ, ການຕິດຕາມ, ການປະເມີນຜົນ ແລະ ການແກ້ໄຂການຂັດຄ້ານຕ່າງໆ.

ການສຳຫຼວດໃນເບື້ອງຕົ້ນຄວນຈະກຳນົດຄວາມຈຳເປັນດ້ານຄວາມອາດສາມາດຢູ່ພາຍໃນຊຸມຊົນ. ເຊັ່ນວ່າ: ຜູ້ນຳຊຸມຊົນສາມາດອ່ານໜັງສືໄດ້ບໍ? ເຂົາເຈົ້າສາມາດເຂົ້າໃຈເອກະສານໂຄງການບໍ? ສະມາຊິກຂອງຊຸມຊົນຮັບຮອງກ່ຽວກັບສິດຂອງຕົນເອງບໍໃນນາມປະຊາຊົນພື້ນເມືອງ ຫຼື ຊຸມຊົນທ້ອງຖິ່ນພາຍໃຕ້ກົດໝາຍຂອງຊາດ ແລະ ສາກົນ? ຈະເຮັດແນວໃດເພື່ອເຮັດໃຫ້ຄວາມອາດສາມາດຂອງຊຸມຊົນໄດ້ຮັບການປັບປຸງເພື່ອໃຫ້ມີຄວາມເຂົ້າໃຈດີຂຶ້ນຕໍ່ກັບໂອກາດດ້ານທ່າແຮງ ແລະ ຄວາມສ່ຽງຂອງໂຄງການທີ່ສະເໜີມາ?

ການສ້າງຄວາມອາດສາມາດ ແມ່ນເປັນສ່ວນໜຶ່ງທີ່ມີຄວາມສຳຄັນໃນການກຳນົດແຜນທີ່ແບບມີສ່ວນຮ່ວມ. ສະມາຊິກຊຸມຊົນຜູ້ທີ່ສົນໃຈອາດຈະຈຳເປັນຕ້ອງຮຽນຮູ້ວິທີການອ່ານແຜນທີ່, ການນຳໃຊ້ລະບົບບອກຕໍາແໜ່ງຂອງໂລກ (GPS), ລະບົບການວິເຄາະຂໍ້ມູນ (GIS), ແລະ ແຜນທີ່ພູມສັນຖານ, ພ້ອມທັງວິທີການເອົາຂໍ້ມູນກ່ຽວກັບຊຸມຊົນ ເຂົ້າໃສ່ໃນແຜນທີ່ພື້ນຖານ.

ຊຸມຊົນຢູ່ຊົນນະບົດຫຼາຍໆບ່ອນຂາດຄວາມຮູ້ໃນການຄຸ້ມຄອງບໍລິຫານການເງິນ ແລະ ທຶນ. ຖ້າຫາກວ່າໂຄງການລວມມີການແບ່ງປັນຜົນປະໂຫຍດໃນຮູບແບບການຈ່າຍເງິນເປັນສົດ, ຊຸມຊົນອາດຈະມີຄວາມຕ້ອງການການຊ່ວຍເຫຼືອເພື່ອສ້າງຄວາມອາດສາມາດ ແລະ ລະບົບສຳລັບການລົງບັນຊີ ດ້ວຍຄວາມຮັບຜິດຊອບ ແລະ ໂປ່ງໃສ. ນອກຈາກນັ້ນ, ບຸກຄົນອາດມີຄວາມຕ້ອງການການຊ່ວຍເຫຼືອຄືກັນໃນການຊອກຫາວິທີການຕ່າງໆທີ່ມີປະສິດທິພາບເພື່ອນຳໃຊ້ ຫຼື ເກັບເງິນຂອງເຂົາເຈົ້າໃຫ້ໄດ້ດີທີ່ສຸດ.

ຄວາມຈຳເປັນໃນການສ້າງຄວາມອາດສາມາດອື່ນໆທີ່ອາດມີສຳລັບຜູ້ຖືສິດ ລວມມີ: ສິດໃນວຽກງານເຣດ, ຮູບແບບດ້ານວິຊາການທັງໝົດໃນການເຂົ້າຮ່ວມການພັດທະນາ ແລະ ຈັດຕັ້ງປະຕິບັດໂຄງການເຣດ, ການຈັດການກ່ຽວກັບຂໍ້ຂັດແຍ່ງ, ຄວາມສາມາດໃນການເຈລະຈາ,ເຕັກນິກໃນການຊຸກຍູ້, ຄວາມສາມາດໃນການຕິດຕາມ ແລະ ລາຍງານ ລວມທັງຄວາມຕ້ອງການໃນການຄົມມະນາຄົມຂົນສົ່ງ.

ນອກຈາກນັ້ນ,ຍຸດທະສາດໃນການສ້າງຄວາມອາດສາມາດຄວນຈະແກ້ໄຂຄວາມຈຳເປັນຕ່າງໆຢູ່ພາຍໃນອຳນາດການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດທີ່ປະຈຳຢູ່ທ້ອງຖິ່ນ ແລະ ເຈົ້າຂອງໂຄງການຕ່າງໆ. ອາດຈະເປັນການຊ່ວຍຮັບປະກັນວ່າ ເຂົາເຈົ້າ ມີຄວາມສາມາດໃນການເຄື່ອນໄຫວຮ່ວມກັບ ໂຄງການຫຼາຍຂຶ້ນພ້ອມທັງສາມາດເຂົ້າໃຈຄວາມຕັ້ງໃຈຂອງຕົນໃນການເຄົາລົບສິດຂອງຊຸມຊົນທ້ອງຖິ່ນ ແລະ

ປະຊາຊົນພື້ນເມືອງ. ການສ້າງຄວາມອາດສາມາດໃຫ້ແກ່ບັນດາພາກສ່ວນເຫຼົ່ານີ້ອາດຈະຈຳເປັນຕ້ອງໄດ້ແກ້ໄຂບັນຫາດ້ານການລຳອຽງ ຫຼື ການຈຳແນກເຊື້ອຊາດເພາະທັດສະນະດັ່ງກ່າວຈຳກັດການຊ່ວຍເຫຼືອໃຫ້ແກ່ການຈັດຕັ້ງຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ທີ່ມີສ່ວນພົວພັນກັບໂຄງການ ເຣດ+.

ຄວາມຈຳເປັນໃນການສ້າງຄວາມອາດສາມາດອື່ນໆສຳລັບເຈົ້າຂອງໂຄງການຕ່າງໆ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ ແລະ ອຳນາດການປົກຄອງທ້ອງຖິ່ນ ລວມມີ: ການສື່ສານຂອງຄົນທີ່ມາຈາກວັດທະນາທຳທີ່ແຕກຕ່າງກັນ, ລັກສະນະຂອງກຸ່ມວັດທະນາທຳຕ່າງໆທີ່ຢູ່ໃນພື້ນທີ່ຂອງໂຄງການ, ສິດດ້ານ ເຣດ+, ເອຟພິກແມ່ນຫຍັງ ແລະ ໃຫ້ຄວາມສະດວກແນວໃດ, ບັນດາຍຸດທະສາດທາງດ້ານການສື່ສານທີ່ມີປະສິດທິພາບໃນທັດສະນະທາງວັດທະນາທຳສະເພາະ, ການຮັບ ແລະ ການນຳໃຊ້ຄຳຄິດເຫັນສິ່ງຂ່າວຂອງຊຸມຊົນ ແລະອື່ນໆ.

**ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ຈຳເປັນຕ້ອງຮູ້ຄື:**

- ການຊ່ວຍເຫຼືອດັ່ງກ່າວມີໃຫ້ເຂົາເຈົ້າເພື່ອສ້າງຄວາມອາດສາມາດ ແລະ ຄວາມເຂົ້າໃຈກ່ຽວກັບ ເອຟພິກ; ແລະ
- ການປະກອບຄຳເຫັນເຂົ້າໃສ່ຍຸດທະສາດປັນສິ່ງຈຳເປັນເພາະວ່າມັນຈະເປັນແນວ-ທາງໃຫ້ແກ່ຜົນຂອງການສ້າງຄວາມອາດສາມາດ.

**ແຫຼ່ງຂໍ້ມູນທີ່ແນະນຳໃຫ້ເຂົ້າໄປເບິ່ງ**


AIPP, IWGIA, FPP, and Tebtebba Foundation. 2010. *What to do with REDD? A Manual for Indigenous Trainers.* AIPP, IWGIA, FPP, and Tebtebba Foundation. Available at: www.forestpeoples.org

IWGIA, AIPP, FPP, and Tebtebba Foundation. 2010. *What is REDD? A Guide for Indigenous Communities,* IWGIA, AIPP, FPP, and Tebtebba Foundation. Available at: www.forestpeoples.org


## ການຈັດຕັ້ງປະຕິບັດຂະບວນການເຄົາລົບສິດຕໍ່ກັບ ເອຟພິກ (FPIC)

ຊຸມຊົນຕ່າງໆໂຄງການ ເຣດ+ ເຂົ້າຫາໄດ້ຮັບການເອົາໃຈໃສ່, ເຊິ່ງລວມມີການໃຫ້ເຂົາເຈົ້າເຂົ້າມາມີສ່ວນຮ່ວມໃນການອອກແບບໂຄງການ, ແລະ ການຕົກລົງເຫັນດີຂອງເຈົ້າຂອງໂຄງການເພື່ອເຄົາລົບສິດຂອງເຂົາເຈົ້າຕໍ່ກັບ ເອຟພິກ, ໄດ້ມີການເປີດໃຫ້ເຂົ້າມາມີສ່ວນຮ່ວມ.ພາກນີ້ກວມເອົາການເຊື່ອມໂຍງເອົາສິດເຂົ້າກັບເອຟພິກ ໃນການນອອກແບບໂຄງການ ແລະ ບາດກ້າວຕ່າງໆທີ່ຕ້ອງການເພື່ອຮັບປະກັນວ່າຊຸມຊົນຕ່າງໆມີຂໍ້ມູນທີ່ເປັນທາງເລືອກ ແລະ ມີການແນະນຳຢ່າງອິດສະຫຼະ.

ສ່ວນປະກອບ 8

## ສ່ວນປະກອບ 8 | ການເຊື່ອມໂຍງສິດທິດ້ານ ເອຟພິກ (FPIC) ເຂົ້າກັບການອອກແບບໂຄງການເຣດ+(REDD+)

ການໃຫ້ ຫຼື ປະຕິເສດຄວາມເຫັນດີເຫັນພ້ອມຂອງຊຸມຊົນໃດໜຶ່ງ ຕໍ່ກັບການພັດທະນາທີ່ສະເໜີໄປນັ້ນ ບໍ່ແມ່ນຂະບວນການທີ່ປະຕິບັດຄັ້ງດຽວແລ້ວ. ສິດຕໍ່ກັບ ເອຟພິກ ແມ່ນມີຜົນຕະຫຼອດຊົ່ວອາຍຸຂອງໂຄງການ. ຄວາມເຫັນດີເຫັນພ້ອມຈາກຊຸມຊົນຄວນຈະເປັນຄວາມຕ້ອງການຂອງຜູ້ພັດທະນາໂຄງການແຕ່ລະຂັ້ນໃນການພັດທະນາໂຄງການ ແລະ ແຜນການກ່ຽວກັບ ເຣດ+. ຜູ້ພັດທະນາໂຄງການມັກຈະດຳເນີນບາດກ້າວການອອກໃບອະນຸຍາດ ແລະ ການວາງແຜນທີ່ສຳຄັນທີ່ຜິດພາດເລື້ອຍໆກ່ອນທີ່ຈະມີການປຶກສາຫາລືກັບບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ.ນີ້ເປັນການບໍ່ເຄົາລົບສິດຂອງເຂົາເຈົ້າຕໍ່ກັບເອຟພິກ, ແລະ ເພື່ອເປັນການເຮັດໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບບໍ່ພໍໃຈ ຫຼື ບໍ່ມີຄວາມຍິນດີທີ່ຈະເຂົ້າຮ່ວມເມື່ອເວລາມີການ

ເຂົ້າໄປຫາ ແລະ ນຳສະເໜີແຜນການໃຫ້ເຂົາເຈົ້າຮູ້. ກົງກັນຂ້າມ, ບົດສະເໜີທີ່ໂຄງການ ເຣດ+ ໄດ້ສ້າງຂຶ້ນມາໂດຍມີການປຶກສາຫາລືຢ່າງໃກ້ຊິດກັບບັນດາຊຸມຊົນຕ່າງໆແຕ່ຊ່ວງໄລຍະການວາງແຜນທຳອິດຈະໄດ້ຮັບການຍອມຮັບຫຼາຍກວ່າ, ມີຄວາມເຂົ້າໃຈ ແລະ ແກ້ໄຂຄວາມຢາກໄດ້ ແລະ ຄວາມຈຳເປັນຂອງຊຸມຊົນໄດ້ດີກວ່າ ແລະ ດັ່ງນັ້ນຈະຈັດຕັ້ງປະຕິບັດຢ່າງປະສົບຜົນສຳເລັດ.

ໃນການເຜີຍແຜ່ບົດສະເໜີໂຄງການໃຫ້ແກ່ຊຸມຊົນ, ເຈົ້າຂອງໂຄງການຄວນຈະຕ້ອງອະທິບາຍແຕ່ລະຂັ້ນຕອນໃນຂະບວນການທີ່ຄິດວ່າເປັນສິ່ງຈຳເປັນທີ່ຈະຕ້ອງມີການເຫັນດີເຫັນພ້ອມຂອງຊຸມຊົນກ່ອນທີ່ສາມາດດຳເນີນການວາງແຜນ ຫຼື ການຈັດຕັ້ງປະຕິບັດບາດກ້າວຕໍ່ໄປໄດ້. ເຈົ້າຂອງໂຄງການຄວນສະເໜີ ໃຫ້ຊຸມຊົນປະກອບຄຳເຫັນໃສ່ການອອກແບບໂຄງການພ້ອມກັບສ້າງຄວາມກະຈ່າງແຈ້ງວ່າສິດຕໍ່ກັບ ເອຟພິກ ຈະຖືກລວບລວມເຂົ້າໃສ່ໃນທຸກໆຂັ້ນຕອນຂອງການວາງແຜນ ແລະ ການຈັດຕັ້ງປະຕິບັດໂດຍອີງໃສ່ການຕັດສິນໃຈຂອງຊຸມຊົນຕໍ່ກັບບາດກ້າວໃນຂະບວນການທີ່ຕ້ອງການຄວາມເຫັນດີເຫັນພ້ອມຂອງຊຸມຊົນ. ລາຍການຄຳຖາມ/ຂໍ້ທີ່ຈະພິຈາລະນາສາມາດສ້າງຂຶ້ນຮ່ວມກັບຊຸມຊົນ ແລະ ຈະນຳໃຊ້ເປັນລາຍການກວດກາເພື່ອທົບທວນຄືນການອອກແບບໃນແຕ່ລະຂັ້ນຕອນຂອງໂຄງການທີ່ກ່ຽວຂ້ອງກັບ ເອຟພິກ

ຖ້າຈຳເປັນຕ້ອງມີຜູ້ປະຕິບັດຈາກພາຍນອກທີ່ຈະພັດທະນາສ່ວນທີ່ແຕກຕ່າງກັນໃນການອອກແບບ ແລະ ຈັດຕັ້ງປະຕິບັດໂຄງການ, ຈຳເປັນຈະຕ້ອງໄດ້ສອບຖາມຂໍ້ມູນນີ້ກັບຊຸມຊົນ ເພາະວ່າເຂົາເຈົ້າອາດຈະເຫັນດີກັບການເຂົ້າມາຮ່ວມຂອງຜູ້ປະຕິບັດໜຶ່ງແຕ່ອາດຈະປະຕິເສດຜູ້ອື່ນໆ.

ການປ່ຽນແປງທີ່ສະເໜີໃນການນຳໃຊ້ທີ່ດິນເປັນຜົນໃຫ້ໂຄງການຈຳຕ້ອງໄດ້ອະທິບາຍໃຫ້ແກ່ຊຸມຊົນຢ່າງຈະແຈ້ງເຊິ່ງລວມມີຜົນປະໂຫຍດ ແລະ ຄ່າໃຊ້ຈ່າຍທີ່ອາດເກີດຂຶ້ນ–ທັງມູນຄ່າຕົ້ນທຶນໂດຍກົງໃນການຈັດຕັ້ງປະຕິບັດໂຄງການ ແລະ ມູນຄ່າເສຍໂອກາດສຳລັບຜົນປະໂຫຍດທີ່ມີມາກ່ອນແລ້ວ ຫຼື ຜົນປະໂຫຍດທີ່ອາດມີຈາກການຄຸ້ມຄອງ ແລະ ການນຳໃຊ້ທີ່ເປັນທາງເລືອກ. ຕົ້ນທຶນ ແລະ ຜົນປະໂຫຍດອາດຈະມີການຂຶ້ນລົງຕະຫຼອດເວລາ. ຊຸມຊົນຈະຕ້ອງຮັບຮູ້ວ່າກຳລະນີຕ່າງໆຈະສົ່ງຜົນກະທົບແນວໃດຕໍ່ກັບເຂົາເຈົ້າຖ້າຫາກວ່າຕົ້ນທຶນໃຊ້ຈ່າຍມີມູນຄ່າສູງກວ່າ ຫຼື ຜົນປະໂຫຍດທີ່ໄດ້ຮັບຕ່ຳກວ່າທີ່ເຈົ້າຂອງໂຄງການແນະນຳ.

ບັນຫາດ້ານການແບ່ງປັນຜົນປະໂຫຍດຈະຕ້ອງໄດ້ມີການປຶກສາຫາລືລະອຽດຢູ່ພາຍໃນຊຸມຊົນ. ເຈົ້າຂອງໂຄງການຄວນຈະຕ້ອງພິຈາລະນາການໃຫ້ການຊ່ວຍເຫຼືອໃນການອຳນວຍຄວາມສະດວກເພື່ອຮັບປະກັນໃຫ້ມີທຸກພາກສ່ວນຂອງຊຸມຊົນລວມມີແມ່ຍິງ ແລະ ພາກສ່ວນຜູ້ດ້ອຍໂອກາດອື່ນໆ, ສາມາດເຂົ້າຮ່ວມໃນການອອກແບບ ແລະ ຕົກລົງເຫັນດີຕໍ່ການຈັດການດ້ານການແບ່ງປັນຜົນປະໂຫຍດ. ຖືສຳຄັນເອົາໃຈໃສ່ຮັບປະກັນຕໍ່ກັບບັນຫານີ້ເພື່ອໃຫ້ໂຄງການນຳເອົາຜົນປະໂຫຍດມາໃຫ້ທຸກພາກສ່ວນຂອງຊຸມຊົນ, ຈຳກັດຄວາມບໍ່ພໍໃຈ ແລະ ຄວາມອິດສາເຊິ່ງກັນ ແລະ ກັນ ຊຶ່ງຈະເປັນການສ້າງຄວາມເສຍຫາຍ ແກ່ການຈັດຕັ້ງປະຕິບັດໂຄງການໃນຂັ້ນຕໍ່ມາ.ມັນອາດຈະເປັນປະໂຫຍດທີ່ຈະແຈ້ງໃຫ້ຊຸມຊົນຊາບກ່ຽວກັບຕົວຢ່າງການແບ່ງປັນຜົນປະໂຫຍດອື່ນໆ, ແລະ ຖ້າເປັນໄປໄດ້ໃຫ້ມີການຈັດລົງຢ້ຽມຢາມຖອດຖອນບົດຮຽນກັບບັນດາຊຸມຊົນຕ່າງໆທີ່ມີການຈັດການແບ່ງປັນຜົນປະໂຫຍດ ປະສົບຜົນສຳເລັດ.

ລັດຖະບານຄວນຈະໄດ້ຮັບການລາຍງານກ່ຽວກັບໄລຍະການອອກແບບໂຄງການ, ແລະ ວິທີການທີ່ເອົາຊຸມຊົນເຂົ້າມີສ່ວນຮ່ວມໃນການອອກແບບໂຄງການ ດັ່ງນັ້ນສິດຂອງເຂົາເຈົ້າຕໍ່ກັບເອຟພິກຈຶ່ງຖືກລວບລວມເຂົ້າໃນແຕ່ລະຂັ້ນ. ລັດຖະບານອາດຈະມີປະສົບການຕົວຈິງໃນການແບ່ງປັນ ແລະ ແຈກຢາຍຜົນປະໂຫຍດ, ທັງການໃຫ້ບໍລິການ ແລະ ການຈ່າຍຊຶ່ງສາມາດນຳເອົາມາພິຈາລະນາໃນເວລາອອກແບບໂຄງການ.

**ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ຈຳເປັນຕ້ອງຮູ້ຄື:**

- ກ່ຽວກັບສິດຂອງເຂົາເຈົ້າຕໍ່ກັບ ເອຟພິກ, ແລະ ສິດສາມາດສະແດງອອກແນວໃດຜ່ານການຕັດສິນໃຈຂອງຊຸມຊົນໃນແຕ່ລະຂັ້ນຕອນຂອງການອອກແບບ ແລະ ການເຫັນດີຕໍ່ກັບໂຄງການ ເຣດ+;

- ກ່ຽວກັບການປ່ຽນແປງດິນຟ້າອາກາດວ່າ: ມັນແມ່ນຫຍັງ ແລະ ມັນເກີດຂຶ້ນແນວໃດ? ສິ່ງທີ່ສົ່ງຜົນກະທົບຕໍ່ກັບໂລກ ແລະ ຕໍ່ຊຸມຊົນຂອງເຂົາເຈົ້າເອງ ມີຫຍັງແດ່?
- ກ່ຽວກັບ ເຣດ+: ມັນແມ່ນຫຍັງ ແລະ ມັນເປັນແນວໃດ? ມັນມີຄວາມໝາຍແນວໃດ ຕໍ່ກັບປ່າໄມ້ຊຸມຊົນ? ມັນສົ່ງຜົນກະທົບແນວໃດຕໍ່ຊີວິດການເປັນຢູ່ຂອງຊຸມຊົນ? ມັນຈະສ້າງຜົນປະໂຫຍດແນວໃດ?
- ໃນເລື່ອງການຊົດເຊີຍກາກບອນທີ່ສ້າງຂຶ້ນໂດຍຜ່ານໂຄງການ ເຣດ+, ມັນຈຳເປັນຕ້ອງການຂໍ້ມູນຄືກັນ ( ຫຼື ມີການເຂົ້າເຖິງຄຳແນະນຳຈາກຜູ້ຊຳນານອິດສະຫຼະ) ກ່ຽວກັບການຊົດເຊີຍກາກບອນແລະຂໍ້ມູນກ່ຽວກັບຕະຫຼາດກາກບອນແບບສະໝັກໃຈ ແລະ/ຫຼື ຕະຫຼາດກາກບອນແບບບັງຄັບເຊິ່ງລວມມີຂໍ້ມູນຕ່າງໆຄື: ເປັນຫຍັງຈຶ່ງນຳສະເໜີວິທີທາງນີ້? ມັນເຮັດແນວໃດໃນການຈັດການດ້ານການເງິນ ແລະ ພັນທະ? ຕະຫຼາດອາດຈະມີການປ່ຽນແປງ(ຊຶ່ງສົ່ງຜົນກະທົບຕໍ່ ທັງຕົ້ນທຶນ ແລະຜົນປະໂຫຍດ) ສົ່ງຜົນກະທົບແນວໃດຕໍ່ກັບໂຄງການ?

### ແຫຼ່ງຂໍ້ມູນທີ່ແນະນຳໃຫ້ເຂົ້າໄປເບິ່ງ

CIFOR. 2009. *Simply REDD: CIFOR's Guide to Forests, Climate Change and REDD.* CIFOR, Bogor, Indonesia. Available at: www.cifor.cgiar.org

Gibson, G., and C. O'Faircheallaigh. 2010. *Negotiation and Implementation of Impact and Benefit Agreements.* IBA Community Toolkit. The Gordon Foundation, Toronto. Available at: www.ibacommunitytoolkit.ca

Life Mosaic. *Indigenous Peoples and Climate Change: A Video Guide.* Film. Available at: www.lifemosaic.net



## ສ່ວນປະກອບ 9 | ການຮັບປະກັນໃຫ້ມີແຫລ່ງຂໍ້ມູນທາງອື່ນ ແລະ ມີຄຳແນະນຳຢ່າງອິດສະຫຼະ

ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນມີສິດທີ່ຈະໄດ້ຮັບຂໍ້ມູນຢ່າງອິດສະຫຼະ ຕໍ່ກັບບັນຫາ ແລະ ສິ່ງທີ່ກ່ຽວຂ້ອງກັບ ເຣດ+ ທັງໝົດ ແລະ ກ່ຽວກັບລາຍລະອຽດໃນການພັດທະນາທີ່ໄດ້ວາງແຜນໄວ້ຊຶ່ງຈະສົ່ງຜົນກະທົບຕໍ່ເຂົາເຈົ້າ. ຊຸມຊົນທີ່ຢູ່ຊົນນະບົດສ່ວນຫຼາຍທີ່ໄດ້ຮັບຜົນກະທົບຈາກໂຄງການ ເຣດ+ ຈະຕ້ອງໄດ້ຊ່ວຍກຳນົດ ແລະ ຈ່າຍຄ່າໃຫ້ຂໍ້ມູນ ແລະ ຄຳແນະນຳຢ່າງອິດສະຫຼະ. ເຈົ້າຂອງໂຄງການສາມາດໃຫ້ຂໍ້ມູນກ່ຽວກັບຄຳຖາມຕ່າງໆທີ່ມີຄວາມສົງໃສກ່ຽວກັບ ເຣດ+ ຄືກັນ ແລະ ໃຫ້ຄຳຕອບທີ່ມາຈາກທັດສະນະຂອງເຈົ້າຂອງໂຄງການ. ເຖິງແນວໃດກໍຕາມ, ເຂົາເຈົ້າຈະຕ້ອງຈື່ຈຳໄວ້ວ່າ ສິດຂອງຊຸມຊົນໃນການ ເຂົ້າເຖິງຂໍ້ມູນ ແລະ ຄຳແນະນຳຢ່າງອິດສະຫຼະ ເປັນພື້ນຖານອັນສຳຄັນຂອງຂະບວນການເຫັນດີເຫັນພ້ອມທີ່ມີການຮັບຮູ້ກ່ອນລ່ວງໜ້າ.

ເພື່ອຫຼີກລ້ຽງອິດທິພົນຈາກພາຍນອກ ແລະ ຕົວຈິງຕໍ່ກັບຊຸມຊົນຕ່າງໆ, ບັນດາບໍລິສັດຂຸດຄົ້ນບໍ່ແຮ່ຂອງປະເທດຄານາດາ ຈຳນວນໜຶ່ງ ຕ້ອງການຕົກລົງ ໂດຍອີງໃສ່ກອງທຶນເງິນຝາກ ທີ່ສ້າງຂຶ້ນໂດຍ ເອຟພົກສຳລັບຊຸມຊົນຕ່າງໆເພື່ອໃຫ້ສາມາດເຂົ້າເຖິງ ແລະ ຈ່າຍຄ່າບໍລິການໃນການໃຫ້ຄຳແນະນຳຂອງຊ່ຽວຊານອິດສະຫຼະ ຕໍ່ກັບບັນຫາດ້ານກົດໝາຍ, ສັງຄົມ, ເສດຖະກິດ, ແລະ ສະພາບແວດລ້ອມ. ຊຸມຊົນຕ່າງໆບໍ່ຈຳເປັນຕ້ອງສະເໜີຂໍ ແລະ ຮັບເອົາຄຳແນະນຳໂດຍອີງຕາມຂໍ້ຕົກລົງທີ່ບໍລິສັດ[9] ສ້າງຂຶ້ນ. ກົນໄກການສະໜອງທຶນດັ່ງກ່າວຍັງສາມາດນຳໃຊ້ເພື່ອສະໜອງການຈ່າຍໃຫ້ແກ່ການເຂົ້າຮ່ວມຂອງສະມາຊິກຊຸມຊົນໃນການປະເມີນຜົນກະທົບ.

9 Sosa, I., and K. Keenan. 2001. *Impact Benefit Agreements Between Aboriginal Communities and Mining Companies: Their Use in Canada.* Canadian Environmental Law Association, Environmental Mining Council of British Columbia, CooperAcción. Available at: www.cela.ca

ເຈົ້າຂອງໂຄງການ, ລັດຖະບານ ແລະ ນັກລົງທຶນຂອງພາກເອກະຊົນ ມີພັນທະເພື່ອໃຫ້ຊຸມຊົນຕ່າງໆ ສາມາດເຂົ້າເຖິງການໃຫ້ຄຳແນະນຳທີ່ເປັນອິດສະຫຼະ ເມື່ອມີຄວາມຈຳເປັນ ເພື່ອຊ່ວຍຊຸມຊົນຊອກຫາທຶນທາງ ແລະ ວິທີທາງເພື່ອຈ່າຍໃນການໃຫ້ຄຳແນະນຳດັ່ງກ່າວ. ຂະບວນການກວດສອບຄວາມຖືກຕ້ອງຂອງ ເອຟພິກ ຄວນຈະຕ້ອງໄດ້ຕິດຕາມຜູ້ໃຫ້ຄຳແນະນຳທີ່ເປັນເອກະລາດ ແລະ ຮັບປະກັນໃຫ້ຄຳແນະນຳມີຄຸນນະພາບ. ອົງການຈັດຕັ້ງທາງສັງຄົມຂັ້ນທ້ອງຖິ່ນ ແລະ ລະດັບຊາດ ແລະອົງການຈັດຕັ້ງສາກົນຕ່າງໆ ທີ່ບໍ່ສັງກັດລັດ ຈະເປັນແຫຼ່ງຂໍ້ມູນທີ່ເປັນທາງເລືອກຕົ້ນຕໍ, ແລະ ເຈົ້າຂອງໂຄງການຄວນຈະແຈ້ງໃຫ້ຊຸມຊົນທ້ອງຖິ່ນ ແລະ ປະຊາຊົນພື້ນເມືອງທີ່ໄດ້ຮັບຜົນກະທົບຈາກໂຄງການ ຮູ້ຈັກກ່ຽວກັບກຸ່ມເຫຼົ່ານີ້ວ່າເປັນແຫຼ່ງໃຫ້ຄຳແນະນຳທີ່ເປັນອິດສະຫຼະ.

### ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຈຳເປັນຕ້ອງຮູ້:

- ຮູ້ວ່າເຂົາເຈົ້າມີສິດທີ່ຈະຊອກຫາຄຳແນະນຳຈາກຊ່ຽວຊານທີ່ເປັນເອກະລາດກ່ຽວກັບບັນຫາທາງດ້ານກົດໝາຍ, ສັງຄົມ, ເສດຖະກິດ, ແລະ ສິ່ງແວດລ້ອມ; ແລະ
- ຮູ້ວ່າເຈົ້າຂອງໂຄງການ, ລັດຖະບານ, ແລະ ນັກລົງທຶນພາກເອກະຊົນແມ່ນມີພັນທະໃນການສະໜອງທຶນຮອນ ແລະ ຊ່ວຍເຫຼືອໃນການເຂົ້າເຖິງການໃຫ້ຄຳແນະນຳດັ່ງກ່າວ.

### ແຫຼ່ງຂໍ້ມູນທີ່ແນະນຳໃຫ້ເຂົ້າໄປເບິ່ງ

Griffiths, T. 2008. *Seeing 'REDD'? Forests, Climate Change Mitigation and the Rights of Indigenous Peoples and Local Communities.* Forest Peoples Programme. Moreton-in-Marsh, UK. Available at: www.forestpeoples.org

Client Earth: An organization of activist lawyers committed to securing a healthy planet. Website: www.clientearth.org

REDD-net: A website devoted to creating knowledge products and information services demanded by (and tailored for) southern civil society organizations on topics related to REDD+. Website: www.redd-net.org

REDD Monitor: A website with critical analysis of REDD-related problems to help facilitate public discussion. The website documents REDD projects around the world, looking at who is involved as well as how the projects are developed. Website: www.redd-monitor.org

## ການກວດກາຕິດຕາມ ແລະ ການສະເໜີທາງເລືອກໃໝ່: ການຮັກສາຄວາມເຫັນດີເຫັນພ້ອມ

ດັ່ງທີ່ເຫັນໃນການພົວພັນທົ່ວໄປ, ການເຂົ້າໃຈຜິດສາມາດເກີດຂຶ້ນລະຫວ່າງເຈົ້າຂອງໂຄງການ ແລະ ຊຸມຊົນເມື່ອໂຄງການ ເຣດ+ ຖືກຈັດຕັ້ງປະຕິບັດ. ໃນກໍລະນີໃດກໍຕາມ, ຊຸມຊົນ ຫຼື ເຈົ້າຂອງໂຄງການ ອາດມີຄວາມຕ້ອງການຢາກຈະທົບທວນຮູບແບບການຈັດຕັ້ງປະຕິບັດໂຄງການຄືນໃໝ່ ຫຼື ຢາກປ່ຽນເງື່ອນໄຂຂອງຂໍ້ຕົກລົງຂອງເຂົາເຈົ້າ. ສິ່ງສຳຄັນ ແມ່ນເຈົ້າຂອງໂຄງການ ໄດ້ໃຊ້ຮູບແບບການພັດທະນາໂຄງການຮ່ວມກັບຊຸມຊົນ ດ້ວຍຄວາມສະໝັກໃຈ ແລະ ຕັ້ງໃຈ ເພື່ອສ້າງສາຍພົວພັນ ໃນໄລຍະຍາວ ນັບເປັນສິບໆປີ ແລະ ເປີດກວ້າງໃຫ້ມີການທົບທວນ ແລະ ດັດປັບໂຄງການ ແລະ ການຈັດຕັ້ງປະຕິບັດໂຄງການຄືນໃໝ່ເມື່ອເຫັນວ່າມີຂໍ້ມູນ ຫຼື ຜົນປະໂຫຍດໃໝ່ໆເຂົ້າມາ.

ໃນພາກນີ້ແມ່ນກ່ຽວກັບການຕິດຕາມຂໍ້ຕົກລົງ ແລະ ການສ້າງຕັ້ງກົນໄກກ່ຽວກັບຂໍ້ຂ້ອງໃຈ. ການຕິດຕາມການຈັດຕັ້ງປະຕິບັດຂໍ້ຕົກລົງເປັນການໃຫ້ແນວທາງແກ່ຊຸມຊົນ ແລະ ບໍລິສັດ ເພື່ອທີ່ຈະຕິດຕາມຄວາມຖືກຕ້ອງໃນການພັດທະນາພ້ອມທັງຮຽນຮູ້ຈາກບັນຫາທີ່ເກີດຂຶ້ນ ຫຼື ການປ່ຽນແປງສະພາບແວດລ້ອມ. ການສ້າງຕັ້ງ ແລະ ການຕົກລົງກ່ຽວກັບກົນໄກ ແລະ ຂະບວນການຂໍ້ຂ້ອງໃຈ ໝາຍວ່າເກີດບັນຫາຕ່າງໆຂຶ້ນ, ພວກເຂົາເຈົ້າສາມາດແກ້ໄຂໄດ້ຢ່າງໄວວາ ແລະ ເໝາະສົມກ່ອນທີ່ຈະກາຍເປັນຄວາມຂັດແຍ່ງ

# ສ່ວນປະກອບ 10 | ການຕິດຕາມສິ່ງທີ່ຕົກລົງເຫັນດີ ໃນການຈັດຕັ້ງປະຕິບັດ

ຖ້າຫາກວ່າໄລຍະການອອກແບບຂອງໂຄງການນໍາໃຊ້ຂະບວນການແບບມີສ່ວນຮ່ວມເພື່ອສ້າງຖານຂໍ້ມູນທາງດ້ານສະພາບແວດລ້ອມ, ເສດຖະກິດ ແລະ ສັງຄົມ, ຈາກນັ້ນ ຊຸມຊົນຈະຄຸ້ນເຄີຍກັບຂະບວນການທີ່ນໍາໃຊ້ເພື່ອເກັບກໍາ ແລະ ບັນທຶກຂໍ້ມູນ. ດັ່ງນັ້ນ, ເຂົາເຈົ້າຈະສາມາດສະສົມຄວາມຊໍານານເພື່ອຕິດຕາມການອອກແບບໂຄງການ, ຂັ້ນຕອນໃນການເຫັນດີເຫັນພ້ອມ, ແລະ ການຈັດຕັ້ງປະຕິບັດໂດຍອີງໃສ່ການຕົກລົງເຫັນດີກັບເຈົ້າຂອງໂຄງການ. ເມື່ອຊຸມຊົນມີຄວາມຕ້ອງການດໍາເນີນການຕິດຕາມດ້ວຍຕົນເອງຢ່າງອິດສະຫຼະ, ເຈົ້າຂອງໂຄງການຈະຕ້ອງຄົ້ນຄວ້າເພື່ອໃຫ້ຊຸມຊົນມີສ່ວນຮ່ວມໃນການລົງຕິດຕາມການຈັດຕັ້ງປະຕິບັດໂຄງການທີ່ພົວພັນກັບການຕົກລົງເຫັນດີ ແລະ ຄວາມເຫັນດີເຫັນພ້ອມ. ຊຶ່ງເລີ້ມຕົ້ນດ້ວຍການອອກແບບວິທີການຕິດຕາມ, ເຊິ່ງລວມມີ: ກິດຈະກໍາ ຫຼື ບັນຫາໃດ ທີ່ຈະຕິດຕາມ, ຈະນໍາໃຊ້ວິທີການຕິດຕາມອັນໃດ, ໃຜຈະເປັນຜູ້ຕິດຕາມ ແລະ ຈະບັນທຶກຜົນການປະເມີນໄວ້ແນວໃດ. ມັນເປັນການສະເໜີໂອກາດເພື່ອປະເມີນຄືນວ່າຂໍ້ມູນທີ່ໃຫ້ມາກ່ຽວກັບໂຄງການຖືກຕ້ອງ ຫຼື ບໍ ແລະ ຍັງຄົງເປັນຄວາມຈິງ ຫຼື ບໍ (ເຊັ່ນ. ກ່ຽວກັບຕົ້ນທຶນ ແລະ ຜົນປະໂຫຍດ) ແລະ ສິ່ງດັ່ງກ່າວສົມທຽບກັບທາງເລືອກຕໍ່ໂຄງການແນວໃດ. ນອກຈາກນັ້ນຍັງລວມວ່າຈະນໍາສະເໜີຜົນການປະເມີນຕໍ່ຊຸມຊົນ ແລະ ພາກສ່ວນອື່ນໆແນວໃດ ແລະ ຈະໃຊ້ຂັ້ນຕອນໃດຕໍ່ໄປຖ້າຫາກວ່າການຕິດຕາມເຫັນວ່າມີບັນຫາໃນການຈັດຕັ້ງປະຕິບັດ.

ການປະກອບສ່ວນແກ້ໄຂບັນຫາການຕິດຕາມການຈັດຕັ້ງປະຕິບັດໂຄງການແບບມີສ່ວນຮ່ວມແມ່ນເປັນການປ່ຽນແທນຂ່າວລື ແລະ ຂໍ້ມູນທີ່ຜິດພາດດ້ວຍຫຼັກຖານທີ່ມີມູນຄວາມຈິຊຶ່ງຊຸມຊົນໄດ້ເຂົ້າຮ່ວມໃນການຜະລິດຂຶ້ນມາ. ການຕິດຕາມຈໍາເປັນຕ້ອງເຊື່ອມໂຍງກັບອົງປະກອບທາງສັງຄົມໃນລະບົບການວັດແທກ, ການລາຍງານ, ການພິສູດຢັ້ງຢືນ (MRV).

ຊຸມຊົນຈໍາເປັນຕ້ອງໄດ້ຮັບຮູ້ກ່ຽວກັບວິທີການຕ່າງໆສໍາລັບການລົງຕິດຕາມແບບມີສ່ວນຮ່ວມ ແລະ ຄໍາຄິດເຫັນທີ່ສາມາດລວບລວມເພື່ອປະກອບໃຫ້ແກ່ການອອກແບບ ຫຼື ແຜນງານຂອງໂຄງການ. ການເຂົ້າຮ່ວມຂອງສະມາຊິກຊຸມຊົນໃນການລົງຕິດຕາມຈະຕ້ອງວາງແຜນໄວ້ໂດຍການພິຈາລະນາກ່ຽວກັບຊັບພະຍາກອນມະນຸດ ແລະ ການເງິນໃຫ້ມີໄວ້ສໍາລັບວຽກດັ່ງກ່າວ. ສ່ວນທີ່ສໍາຄັນຂອງກົນໄກການຕິດຕາມແມ່ນການຕົກ ລົງກ່ຽວກັບສິ່ງທີ່ຈະປະຕິບັດເມື່ອການຕິດຕາມເຫັນວ່າມີບັນຫາ ຫຼື ບໍ່ເຫັນດີໃນການຈັດຕັ້ງປະຕິບັດໂຄງການ. ຈໍາເປັນທີ່ຈະຕ້ອງໄດ້ເຂົ້າໃຈວ່າເປັນບັນຫາປະເພດໃດ ແລະ ລະດັບໃດທີ່ບໍ່ເຫັນດີສາມາດກໍ່ໃຫ້ເກີດຂະບວນການຮ້ອງທຸກ ແລະ ໃນສະພາບການແບບໃດຈຶ່ງຈະສາມາດລິເລີ້ມຂະບວນການເຫັນດີເຫັນພ້ອມ ແລະ ຕ້ອງການເຈລະຈາຄືນໃໝ່ ກ່ຽວກັບຂໍ້ຕົກລົງ.

**ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ຈໍາເປັນຕ້ອງຮູ້:**

- ວ່າ ເຂົາເຈົ້າສາມາດ ສະແດງບົດບາດເປັນກາງ ໃນການຕິດຕາມການຈັດຕັ້ງປະຕິບັດໂຄງການ; ແລະ
- ການລໍາອຽງໃນການຈັດຕັ້ງປະຕິບັດຂໍ້ຕົກລົງການເຫັນດີເຫັນພ້ອມທີ່ພົບເຫັນໃນເວລາຕິດຕາມສາມາດກໍ່ໃຫ້ເກີດຂະບວນການຮ້ອງທຸກ. ຖ້າຫາກວ່າຝ່າຍໃດຝ່າຍໜຶ່ງບໍ່ພໍໃຈກັບການຈັດຕັ້ງປະຕິບັດໂຄງການ. ຖ້າຫາກວ່າບໍ່ສາມາດແກ້ໄຂບັນຫາ ໂດຍຜ່ານຂະບວນການຮ້ອງທຸກໄດ້, ຝ່າຍໃດຝ່າຍໜຶ່ງສາມາດຮ້ອງຂໍໃຫ້ມີການເລີ້ມຂະບວນການເຫັນດີເຫັນພ້ອມຄືນໃຫມ່ ຫຼື ນໍາໄປສູ່ການຕັດສິນຊີ້ຂາດ.

**ແຫຼ່ງຂໍ້ມູນທີ່ແນະນໍາໃຫ້ເຂົ້າໄປເບິ່ງ**

Tebtebba Foundation. 2006. *Recent experiences and recommendations on the concept and implementation of the principle of Free, Prior and Informed Consent.* Permanent Forum on Indigenous Issues Fifth Session, Presented by Jennifer Corpuz, Tebtebba Foundation.

Available at: www.sarpn.org.za

# ສ່ວນປະກອບ 11 | ການສ້າງຂະບວນການຮ້ອງທຸກ

ມັນເປັນສິ່ງທີ່ຫຼີກລ້ຽງບໍ່ໄດ້ວ່າໃນການຈັດຕັ້ງປະຕິບັດໂຄງການ, ຄວາມແຕກຕ່າງກັນຈະເກີດຂຶ້ນບົນພື້ນຖານທີ່ມີການແປຄວາມໝາຍຂອງຂໍ້ຕົກລົງ ແລະ ແຜນການຈັດຕັ້ງປະຕິບັດທີ່ແຕກຕ່າງກັນ. ການເຂົ້າໃຈຜິດເຫຼົ່ານີ້ອາດຈະເບິ່ງຄືວ່າເປັນເລື່ອງເລັກນ້ອຍຈາກຈຸດມຸມມອງຂອງຝ່າຍໜຶ່ງແຕ່ວ່າອາດຈະສຳຄັນສຳລັບອີກຝ່າຍໜຶ່ງ. ຍົກຕົວຢ່າງ, ຊຸມຊົນໜຶ່ງອາດຈະມີສະມາຊິກຜູ້ທີ່ບໍ່ໄດ້ເຂົ້າຮ່ວມຢ່າງໃກ້ຊິດໃນການເຈລະຈາ, ເຊິ່ງເປັນຜູ້ທີ່ຈູດເດີ່ນໜ້າໃນລະດູແລ້ງ ແລະ ບໍ່ພໍໃຈວ່າກິດຈະກຳດັ່ງກ່າວນີ້ແມ່ນຖືກຈຳກັດໂດຍຂໍ້ຕົກລົງທີ່ຫົວໜ້າຊຸມຊົນໄດ້ເຊັນໄປ. ເຈົ້າຂອງໂຄງການອາດຈະເປັນເລື່ອງທຳມະດາໃນການຈັດຕັ້ງປະຕິບັດຂໍ້ຕົກລົງທີ່ມີຢູ່ແລ້ວ ແລະ ການຢຸດຕິການຈູດຫຍ້າ. ໃນທາງກົງກັນຂ້າມ, ສຳລັບປະຊາຊົນທີ່ເຂົ້າຮ່ວມ, ການຈູດແມ່ນມີຄວາມຈຳເປັນສຳລັບການສ້າງທົ່ງຫຍ້າລ້ຽງສັດ ແລະ ການກະຕຸ້ນໃຫ້ຫຍ້າປົ່ງໃໝ່ ແລະ ເຂົາເຈົ້າອາດຈະຮູ້ສຶກວ່າການທີ່ຈະຢຸດຕິຄວາມເຫັນດີເຫັນພ້ອມສຳລັບກິດຈະກຳນີ້ແມ່ນຈະບໍ່ອະນຸຍາດ. ກົນໄກການຮ້ອງທຸກປ່ອຍໃຫ້ບັນຫາດັ່ງກ່າວເລື່ອນລອຍໄປໃນລັກສະນະທີ່ສາມາດນຳໄປສູ່ການແກ້ໄຂກ່ອນທີ່ຈະມີຄວາມຫຍຸ້ງຍາກໃນການສື່ສານ ຫຼື ຂັ້ນແຕກຫັກ. ທັງສອງຝ່າຍອາດຈະຕົກລົງເຫັນດີ ວ່າການເຫັນດີເຫັນພ້ອມ ໃຫ້ຢຸດຈູດທົ່ງຫຍ້າ ບໍ່ໄດ້ຮັບອະນຸຍາດຈາກສະມາຊິກທັງໝົດຂອງຊຸມຊົນ, ດັ່ງນັ້ນ ພາກນີ້ຂອງຂໍ້ຕົກລົງຈຳເປັນຕ້ອງໄດ້ມີການທົບທວນຄືນໃໝ່. ຊຶ່ງອາດຈະມີຂໍ້ຕົກລົງສະບັບໃໝ່, ບາງທີ ການຈູດໃນຊ່ວງຕົ້ນ ແລະ ທ້າຍລະດູແລ້ງອາດໄດ້ຮັບອະນຸຍາດ ເພາະເປັນຊ່ວງທີ່ໄຟຈະບໍ່ຄ່ອຍ ລາມເຂົ້າຫາປ່າໄມ້. ຂະບວນການຮ້ອງທຸກ ອາດຈະເນັ້ນການແກ້ໄຂບັນຫາແບບອື່ນໆ, ຍົກຕົວຢ່າງ, ຊຸມຊົນ ອາດຈະສົນໃຈໃນການຝຶກອົບຮົມ ແລະ ເຄື່ອງມືສຳລັບການຄຸ້ມຄອງຈັດສັນໄຟປ່າຫຼາຍກວ່າ.

## 5 ຫຼັກການໃນການອອກແບບຂະບວນການຮ້ອງທຸກ

1. ສັດສ່ວນ: ການລົດຄວາມສ່ຽງ ແລະ ຜົນກະທົບທີ່ບໍ່ດີຕໍ່ຊຸມຊົນທີ່ໄດ້ຮັບຜົນກະທົບ;
2. ຄວາມເໝາະສົມທາງດ້ານວັດທະນະທຳ: ການອອກແບບໂດຍຄຳນຶງເຖິງວິທີທາງທີ່ເໝາະສົມທາງດ້ານວັດທະນະທຳໃນການປະຕິບັດທີ່ກ່ຽວຂ້ອງກັບຊຸມຊົນ;
3. ການເຂົ້າເຖິງ: ຊຸມຊົນທຸກກຸ່ມ ທີ່ໄດ້ຮັບຜົນກະທົບສາມາດເຂົ້າເຖິງກົນໄກໃຫ້ຈະແຈ້ງ ແລະ ສາມາດເຂົ້າໃຈໄດ້ໂດຍບໍ່ຕ້ອງເສຍຄ່າໃຊ້ຈ່າຍໃດໆ;
4. ຄວາມໂປ່ງໃສແລະ ຄວາມຮັບຜິດຊອບ ສຳລັບຜູ້ມີສ່ວນກ່ຽວຂ້ອງທັງໝົດ; ແລະ
5. ການປົກປ້ອງທີ່ເໝາະສົມ: ກົນໄກທີ່ປົກປ້ອງຜົນຕອບແທນ ແລະ ບໍ່ຂັດຂວາງການເຂົ້າເຖິງເພື່ອແກ້ໄຂແບບອື່ນໆ.

## 5 ບາດກ້າວດ້ານຂະບວນການຂອງກົນໄກຮ້ອງທຸກ

1. ເຜີຍແຜ່ກົນໄກໃຫ້ສາທາລະນະຊົນຮູ້;
2. ຮັບ ແລະ ບັນທຶກຄຳຮ້ອງທຸກ;
3. ທົບທວນ ແລະ ສືບສວນເຂົາເຈົ້າ;
4. ສ້າງທາງເລືອກໃນການແກ້ໄຂບັນຫາ, ໃຫ້ຄຳຕອບຕໍ່ການຮ້ອງທຸກ, ແລະ ປິດການຮ້ອງທຸກ;
5. ຕິດຕາມ ແລະ ປະເມີນຜົນ.

### ການປັບປຸງແບບຕໍ່ເນື່ອງ

- ສ້າງ/ປັບປຸງຍຸດທະສາດ ເພື່ອແກ້ໄຂເລື່ອງທີ່ຍົກຂຶ້ນມາ ຜ່ານກົນໄກການຮ້ອງທຸກ;
- ທົບທວນລະບົບການຄຸ້ມຄອງທາງດ້ານສັງຄົມ ແລະ ສິ່ງແວດລ້ອມ; ແລະ
- ປັບປຸງແຜນການຄຸ້ມຄອງ ເພື່ອແກ້ໄຂຜົນກະທົບ ແລະ ການຈັດຕັ້ງປະຕິບັດການດຳເນີນການແກ້ໄຂໃຫ້ຖືກຕ້ອງ.

ຈາກ: International Finance Corporation (IFC). 2009. *Addressing Grievances from Project-Affected Communities – Guidance for Projects and Companies on Designing Grievance Mechanisms.* Good Practice Note. Washington, DC. Available at: www.ifc.org

ຈຸດປະສົງລວມຂອງຂະບວນການຮ້ອງທຸກຄວນຈະຕ້ອງໄດ້ຮັກສາຄວາມເຫັນດີເຫັນພ້ອມ. ກົນໄກການຮ້ອງທຸກສະເໜີທາງເລືອກໃໝ່ກ່ຽວກັບຂະບວນການແກ້ໄຂຂໍ້ຂັດແຍ່ງພາຍນອກໃຫ້ແກ່ເຈົ້າຂອງໂຄງການ ເຣດ+ ແລະບັນດາຊຸມຊົນ.ກົນໄກການຮ້ອງທຸກທີ່ສ້າງຂຶ້ນຮ່ວມກັບຊຸມຊົນມີຈຸດດີເພາະເປັນວິທີທີ່ໃຫ້ຜົນປະໂຫຍດແກ່ທ້ອງຖິ່ນ ແລະ ຮ່ວມກັນເພື່ອແກ້ໄຂບັນຫາພາຍໃນກອບວຽກຂອງຂໍ້ຕົກລົງລະຫວ່າງສອງຝ່າຍ. ກົນໄກຄວນຈະລວມເອົາດານຕັດສິນທີ່ເປັນອິດສະຫຼະ, ແລະ ການກຳນົດທາງເລືອກໃໝ່ເພື່ອແກ້ໄຂທາງດ້ານກົດໝາຍ ຫລື ການບໍລິຫານຖ້າຫາກການເຈລະຈາຫາກບໍ່ປະສົບຜົນສຳເລັດ. ສິ່ງສຳຄັນແມ່ນກ່ຽວກັບທາງເລືອກທີ່ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນທີ່ຈະໃຊ້ແມ່ນຈະຕ້ອງໄດ້ຜ່ານການເຫັນດີຂອງທັງສອງຝ່າຍລະຫວ່າງເຈົ້າຂອງໂຄງການ ແລະ ຊຸມຊົນ ແລະ ເຂົາເຈົ້າຈະຕ້ອງເປັນເອກະລາດ ບໍ່ຂຶ້ນກັບເຈົ້າຂອງໂຄງການ ແລະ ລັດຖະບານ.

ຂະບວນການຮ້ອງທຸກທີ່ມີປະສິດທິພາບຈຳຕ້ອງໃຫ້ຊຸມຊົນສາມາດເຂົ້າເຖິງໄດ້, ພ້ອມທັງແຕ່ງຕັ້ງບຸກຄົນຈາກຊຸມຊົນ ແລະ ຈາກເຈົ້າຂອງໂຄງການເພື່ອຮັບເອົາການຮ້ອງທຸກ, ແລະ ມີຂະບວນການທີ່ຜ່ານການເຫັນດີ ແລະ ຄະນະກຳມະການເພື່ອຮັບຟັງການຮ້ອງທຸກ. ຂະບວນການຄວນຈະລວມມີລະບົບການຕິດຕາມ ແລະ ການຕອບການຮ້ອງທຸກ, ການລາຍງານກ່ຽວກັບຄວາມຄືບໜ້າຂອງໂຄງການໃນກອງປະຊຸມກ່ຽວກັບການລົງຕິດຕາມເພື່ອສົນທະນາກ່ຽວກັບຄວາມພໍໃຈ ແລະ ຮັບຟັງການຮ້ອງທຸກ. ໃນການອອກແບບກົນໄກການຮ້ອງທຸກ, ຊຸມຊົນຄວນຈະຕ້ອງໄດ້ຮັບຊາບກ່ຽວກັບຊ່ອງທາງ ແລະ ຂະບວນການໃນການຕັດສິນຂອງລັດຖະບານ, ລວມທັງການເຂົ້າເຖິງຄວາມຍຸດຕິທຳ (ຂໍ້ກຳນົດໃນການໃຫ້ການຊ່ວຍເຫລືອທາງດ້ານກົດໝາຍ). ຊຶ່ງເປັນສິ່ງຈຳເປັນຖ້າຫາກວ່າການຮ້ອງທຸກບໍ່ໄດ້ຮັບການແກ້ໄຂຈາກທັງສອງຝ່າຍໂດຍທີ່ບໍ່ມີການຊ່ວຍເຫລືອຈາກຂ້າງນອກ.

ຂະບວນການຮ້ອງທຸກຄວນຈະຕ້ອງລວມມີຂໍ້ກຳນົດ ແລະ ບັນທຶກຂໍ້ຕົກລົງສຳລັບການຖອນຄວາມເຫັນດີເຫັນພ້ອມຖ້າວ່າການດຳເນີນການແກ້ໄຂທີ່ເໝາະສົມບໍ່ເກີດຂຶ້ນໄດ້ໃນໄວໆ ແລະ ຊຸມຊົນເປັນເອກະພາບເພື່ອຖອນຄວາມເຫັນດີເຫັນພ້ອມທີ່ຈະຈັດຕັ້ງປະຕິບັດຕໍ່ໄປ. ຂະບວນການຮ້ອງທຸກຄວນຈະອອກແບບເພື່ອໃຫ້ສາມາດຮັບຟັງ ແລະ ແກ້ໄຂເລື່ອງທີ່ກ່ຽວຂ້ອງກັບສະມາຊິກໃນຊຸມຊົນກ່ຽວກັບການແບ່ງແຍກບໍ່ໃຫ້ເຂົາເຈົ້າເຂົ້າຮ່ວມໃນຂະບວນການຂະບວນການຕັດສິນໃຈນຳຊຸມຊົນທີ່ພົວພັນກັບການຕົກລົງເຫັນດີກັບເຈົ້າຂອງໂຄງການ.

### ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ຈຳເປັນຕ້ອງຮູ້:

- ກົນໄກການຮ້ອງທຸກ ບໍ່ໄດ້ໃຊ້ແທນສິດຂອງເຂົາເຈົ້າໃນການດຳເນີນການທາງກົດໝາຍ;
- ເຂົາເຈົ້າມີສິດໃນການແກ້ໄຂຢ່າງເປັນເອກະລາດ ໂດຍຜ່ານຜູ້ໄກ່ເກ່ຍ, ຜູ້ຕັດສິນ, ຜູ້ກວດກາຂອງລັດ, ຫຼື ສານ;
- ເມື່ອໃຫ້ຄວາມເຫັນດີເຫັນພ້ອມສາມາດຖອນໄດ້ ພາຍໃຕ້ສະພາບແວດລ້ອມທີ່ສົມເຫດສົມຜົນ; ແລະ
- ກ່ຽວກັບຂະບວນການຮ້ອງທຸກ ແລະ ສະຖານທີ, ເວລາ ທີ່ໄດ້ຕົກລົງໄວ້ ແລະ ວິທີທີ່ຈະເຂົ້າເຖິງ.

### ແຫຼ່ງຂໍ້ມູນທີ່ແນະນຳໃຫ້ເຂົ້າໄປເບິ່ງ

Energy Sector Management Assistance Program (ESMAP), the World Bank, and the International Council on Mining and Metals (ICCM. 2005. *The Community Development Toolkit*. Washington, DC, and London. Available at: www.icmm.com

International Finance Corporation (IFC). 2009. *Addressing Grievances from Project-Affected Communities – Guidance for Projects and Companies on Designing Grievance Mechanisms.*

Good Practice Note. Washington, DC. Available at: www.ifc.org

## ກົນໄກການຮ້ອງທຸກ ໃນ ສປປ. ລາວ ແລະ ການພົວພັນ ຂອງເຂົາເຈົ້າ ຕໍ່ກັບ ເຣດ+

ຄວາມສະມາຄີທາງສັງຄົມພາຍໃນ ແລະ ລະຫວ່າງຊຸມຊົນຕ່າງໆໃນປະເທດລາວແມ່ນມີຄວາມສຳຄັນຫລາຍ. ຊຶ່ງສາມາດຮັກສາໄດ້ໂດຍຜ່ານບັນທັດຖານ ແລະ ສັນຍາທາງສັງຄົມຕ່າງໆ, ການຫຼີກລ້ຽງຄວາມຂັດແຍ່ງ, ແລະ ເມື່ອມີ ຄວາມຈຳເປັນ, ແມ່ນນຳໃຊ້ການແກ້ໄຂຂໍ້ຂັດແຍ່ງ ແລະ ກົນໄກການຮ້ອງທຸກ. ເຖິງແມ່ນວ່າບໍ່ທັນໄດ້ທົດລອງໂດຍ ໂຄງການ ເຣດ+ ໃນພາກສະໜາມກໍຕາມ, ກົນໄກການແກ້ການຮ້ອງທຸກຕາມປະເພນີແມ່ນມີຢູ່ແລ້ວ. ຜູ້ພັດທະນາໂຄງການ ເຣດ+ ແລະຊຸມຊົນທີ່ເຂົ້າຮ່ວມຈະຕ້ອງພິຈາລະນາວ່າລະບົບການຮ້ອງທຸກຕາມປະເພນີມີຄວາມເຂັ້ມແຂງ ແລະ ສາມາດເຄື່ອນໄຫວໄດ້ດີເພື່ອທີ່ຈະແກ້ໄຂສະຖານະການທີ່ມີຂໍ້ຂັດແຍ່ງທີ່ອາດຈະເກີດຂຶ້ນໃນ ການຈັດຕັ້ງວຽກງານ ເຣດ+.

ປະຊາຊົນໃນປະເທດລາວຕ້ອງການໃຊ້ກົນໄກການຮ້ອງທຸກຂອງທ້ອງຖິ່ນຫຼາຍກວ່າກົນໄກຂອ¤ລັດຖະບານຍ້ອນຄວາມສະດວກສະບາຍ ແລະ ຄວາມລຶ້ງເຄີຍ, ເຫັນວ່າມີຄວາມຍຸດຕິທຳ, ຄວາມໄວ, ຄ່າໃຊ້ຈ່າຍບໍ່ສູງ, ແລະ ຂາດຄວາມເຂົ້າໃຈກ່ຽວກັບລະບົບກົດໝາຍຂອງລັດຖະບານ. ຍິ່ງໄປກວ່ານັ້ນ, ການນຳຂໍ້ຂັດແຍ່ງໄປຂຶ້ນສານອາດສາມາດສິ່ງຜົນເຮັດໃຫ້ບັນດາຝ່າຍທີ່ມີສ່ວນກ່ຽວຂ້ອງກາຍເປັນສັດຕູແບບທາງການ, ຊຶ່ງເປັນການສ້າງຄວາມວຸ້ນວາຍຕໍ່ຄວາມສາມະຄີກົມກຽວຂອງສັງຄົມ. ທາງເລືອກຂອງກົນໄກການຮ້ອງທຸກແມ່ນພົວພັນກັບລັກສະນະຂອງຄວາມຂັດແຍ່ງ ຫຼື ຄວາມຜິດທີ່ໄດ້ກະທຳລົງໄປ. ການແກ້ໄຂການຮ້ອງທຸກກ່ຽວກັບຄວາມຜິດເລັກໆນ້ອຍໆໃນເຂດຫ່າງໄກສອກຫຼີກຂອງປະເທດລາວເຊັ່ນຂີ້ລັກງົດແງະສາມາດແກ້ໄຂໄດ້ລະຫວ່າງບຸກຄົນ ຫຼື ຄອບຄົວໂດຍບໍ່ມີສ່ວນຮ່ວມຂອງພາຍນອກ. ສ່ວນຄວາມຂັດແຍ່ງຂະໜາດໃຫຍ່ເຊັ່ນກ່ຽວກັບທີ່ດິນ ແລະ ຄວາມຜິດທີ່ຮ້າຍແຮງຈຳເປັນຕ້ອງມີສ່ວນຮ່ວມຂອງອຳນາດການປົກຄອງບ້ານເຊັ່ນ: ນາຍບ້ານ, ເຖົ້າແກ່ແນວໂຮມ, ຫົວໜ້າເຜົ່າ ຫຼື ໜ່ວຍງານໄກ່ເກ່ຍຂອງບ້ານ. ບາງຄະດີ, ຄູ່ກໍລະນີອາດຈະອາໄສອຳນາດການປົກຄອງພາຍນອກ. ສ່ວນກຸ່ມຂອງຊົນເຜົ່າຈະມີຄວາມແຕກຕ່າງໃນ ດ້ານກົນໄກການຮ້ອງທຸກຂອງເຂົາເຈົ້າ (ເຊັ່ນ. ເຖົ້າແກ່ແນວໂຮມກັບຫົວໜ້າເຜົ່າ).ປົກກະຕິແລ້ວສາຍພົວພັນລະຫວ່າງກົດໝາຍຕາມປະເພນີ ແລະ ກົດໝາຍທີ່ເປັນທາງການຢູ່ໃນປະເທດລາວແມ່ນມີການແຜ່ຂະຫຍາຍ. ສະມາຊິກ ເຖົ້າແກ່ແນວໂຮມອາດຈະ ຫຼື ອາດຈະບໍ່ຢູ່ໃນຕຳແໜ່ງຂອງການເມືອງທີ່ເປັນທາງການ (ເຊັ່ນ ນາຍບ້ານ ຫຼື ຮອງນາຍບ້ານ, ສະຫະພັນແມ່ຍິງລາວ) ຫຼື ຢູ່ໃນໜ່ວຍງານໄກ່ເກ່ຍຂອງບ້ານ. ກໍລະນີທີ່ແກ້ໄຂໂດຍເຖົ້າແກ່ແນວໂຮມ ອາດຈະປົ່ນກັນກັບໜ່ວຍງານໄກ່ເກ່ຍຂອງບ້ານ, ເຊິ່ງຂຶ້ນຢູ່ກັບປະຫວັດຄວາມເປັນມາຂອງບ້ານ (ບ້ານຕັ້ງໃໝ່, ມີຫຼາຍຊົນເຜົ່າ ຫຼື ມີປະຫວັດໃນການເຮັດການປະຕິວັດ). ສະຖາບັນໃດເຫັນວ່າມີຄວາມເໝາະສົມ ທີ່ຈະແກ້ໄຂຄວາມຂັດແຍ່ງ ແລະ ການຮ້ອງທຸກທີ່ກ່ຽວພັນກັນກັບວຽກງານ ເຣດ+ ຈະຂຶ້ນກັບປະເພດຂອງຄວາມຂັດແຍ່ງທີ່ເກີດຂຶ້ນ ແລະ ຂຶ້ນກັບວ່າຈະນຳໃຊ້ສະຖາບັນກົດໝາຍຕາມປະເພນີ ຫຼື ສະຖາບັນກົດໝາຍທາງການໃນການແກ້ໄຂບັນຫາ.

ຄວາມເປັນໄປໄດ້ອື່ນໆ ສຳລັບກົນໄກການຮ້ອງທຸກທີ່ກ່ຽວຂ້ອງກັບວຽກງານ ເຣດ+ ລວມມີ: ການໄກ່ເກ່ຍແບບທັນສະໄໝໃນກໍລະນີຂອງຂໍ້ຂັດແຍ່ງທາງດ້ານການຄ້າ; ການແກ້ໄຂຂໍ້ຂັດແຍ່ງທາງດ້ານການບໍລິຫານເຊິ່ງລວມມີ ສຳນັກງານນາຍົກ ຫຼື ອຳນາດການປົກຄອງທ້ອງຖິ່ນຢູ່ຂັ້ນແຂວງ ແລະ ຂັ້ນເມືອງ. ການແກ້ໄຂຂໍ້ຂັດແຍ່ງດ້ານການບໍລິຫານໃນກໍລະນີທີ່ກ່ຽວຂ້ອງກັບກະຊວງ ຫຼື ອຳນາດການປົກຄອງຂອງລັດ ແລະ ບັນຫາທາງດ້ານການຄ້າທີ່ກ່ຽວຂ້ອງກັບວິສະຫາ ກິດຂອງລັດ; ການສິ້ນສຸດຂອງຊ່ຽວຊານ; ການໄກ່ເກ່ຍຂໍ້ຂັດແຍ່ງດ້ານການຄ້າ; ແລະ ຕໍ່ສູ້ຄະດີສຳລັບຂໍ້ຂັດແຍ່ງ, ການຜິດຖຽງກັນ ແລະ ຄວາມຜິດທຸກປະເພດ. ເຈົ້າໜ້າທີ່ບັງຄັບໃຊ້ຄຳຕັດສິນຈາກກະຊວງຍຸດຕິທຳ ແລະ ລວມເຖິງຜູ້ທີ່ມີສ່ວນຮ່ວມຢູ່ໃນການຕັດສິນ ແລະ ການຊົດເຊີຍທັງໝົດທາງແພ່ງ ທີ່ກ່ຽວຂ້ອງກັບຄະດີຕ່າງໆທາງອາຍາ, ຫຼື ຜູ້ທີ່ເຂົ້າ ຮ່ວມໃນຄະນະພັກການເມືອງ ແລະ ຜູ້ນຳລັດກໍ່ນຳໃຊ້ ເພື່ອແກ້ໄຂການຜິດຖຽງກັນຄືກັນ.

ຈຳເປັນຕ້ອງໄດ້ພິຈາລະນາກົນໄກການຮ້ອງທຸກອັນດຽວ ຫຼື ລວມກັນຢູ່ໃນວຽກງານ ເຣດ+ ໄປຄຽງຄູ່ກັບການເຂົ້າມາມີສ່ວນຮ່ວມຂອງຂັ້ນບ້ານ. ການກະກຽມຮັບມືກັບຂໍ້ຂັດແຍ່ງທີ່ກ່ຽວພັນກັບ ເຣດ+ ທີ່ອາດເກີດຂຶ້ນໂດຍການພິຈາລະນາກົນໄກ ແລະ ວິທີການຮ້ອງທຸກທີ່ສາມາດນຳໃຊ້ ເພື່ອແກ້ໄຂຂໍ້ຂັດແຍ່ງດັ່ງກ່າວຈະຊ່ວຍສ້າງສະພາບທີ່ມີຄວາມເທົ່າທຽມກັນໃນການເຂົ້າຮ່ວມຂະບວນການແກ້ໄຂຂໍ້ຂັດແຍ່ງຂອງຜູ້ມີສ່ວນກ່ຽວຂ້ອງ ແລະ ຮັບປະກັນໃຫ້ມີການຍອມຮັບຂອງຊຸມຊົນກ່ຽວກັບໂຄງການ ເຣດ+ ຫລາຍຂຶ້ນ.

ໃນເຫດການທີ່ມີຄວາມຂັດແຍ່ງກ່ຽວກັບ ເຣດ+ ແລະ ການຮ້ອງທຸກຈະຂຶ້ນຢູ່ກັບປະເພດຂອງຄວາມຂັດແຍ່ງທີ່ເກີດຂຶ້ນ ແລະ ຂຶ້ນກັບວ່າຈະນຳໃຊ້ສະຖາບັນກົດໝາຍຕາມປະເພນີ ຫຼື ກົດໝາຍທາງການເພື່ອແກ້ໄຂບັນຫາດັ່ງກ່າວ.

ຂຽນໂດຍ ທ່ານ Richard Hackman ຈາກສະມາຄົມຊີວະນາໆພັນລາວ

# ສ່ວນປະກອບ 12 | ການກວດສອບຢັ້ງຢືນຄວາມເຫັນດີເຫັນພ້ອມ

ເປັນເງື່ອນໄຂຂອງ ເອຟພິກ ທີ່ໃຫ້ຝ່າຍບໍ່ຂຶ້ນກັບໃຜເປັນຜູ້ກວດສອບຢັ້ງຢືນວ່າການເຫັນດີເຫັນພ້ອມຂອງຊຸມຊົນແມ່ນເປັນອິດສະຫຼະ, ແລະ ໄດ້ຮັບຮູ້ລ່ວງໜ້າ. ຖ້າຫາກວ່າຂະບວນການກວດສອບຢັ້ງຢືນເປັນທີ່ຮັບຮູ້ລ່ວງໜ້າຈາກເຈົ້າຂອງໂຄງການ, ແລະ ຊຸມຊົນ ເຫັນດີຕໍ່ກັບຂະບວນການນີ້, ທັງສອງຝ່າຍຈະສາມາດຮັບປະກັນໃຫ້ເກີດມີຂະບວນການທີ່ພໍໃຈໄດ້ດີຂຶ້ນເພື່ອເຄົາລົບສິດຂອງຊຸມຊົນຕໍ່ກັບເອຟພິກ.

ຜູ້ຖືສິດ, ເຈົ້າຂອງໂຄງການ, ແລະ ພາກສ່ວນລັດຖະບານທີ່ເໝາະສົມທັງໝົດຄວນຈະຕ້ອງສ້າງຄວາມຄຸ້ນເຄີຍກັບມາດຕະຖານທີ່ກ່ຽວຂ້ອງທີ່ຕ້ອງການສຳລັບການກວດສອບຢັ້ງຢືນການເຫັນດີເຫັນພ້ອມ. ຊຸມຊົນ ແລະ ເຈົ້າຂອງໂຄງການຄວນຈະຕົກລົງເຫັນດີວ່າຈະນຳໃຊ້ມາດຕະຖານການກວດສອບຢັ້ງຢືນອັນໃດ. ມາດຕະຖານທາງດ້ານສັງຄົມ ແລະ ສະພາບແວດລ້ອມກ່ຽວກັບ ເຣດ+ ທີ່ໄດ້ອ້າງອີງຢູ່ໃນພາກສະເໜີລວມມີສ່ວນປະກອບໃນການກວດສອບຢັ້ງຢືນ ແລະ ແຜນງານເຣດຂອງອົງການສະຫະປະຊາຊາດໃນທົ່ວໂລກ (UN-REDD global program) ໃນການທົດລອງຂະບວນການກວດສອບ ແລະ ປະເມີນຜົນຢ່າງເປັນເອກະລາດ ເຊິ່ງເປັນສ່ວນໜຶ່ງຂອງທາງຂອງສະຫະປະຊາຊາດຕໍ່ກັບ ເອຟພິກ. ໂດຍເຂົ້າຮ່ວມກັບສູນຝຶກອົບຮົມປ່າໄມ້ຊຸມຊົນປະຈຳພາກພື້ນອາຊີ-ປາຊີຟິກ (RECOFTC), ຄວາມພະຍາຍາມຕໍ່ມາມີຈຸດປະສົງເພື່ອສ້າງເຄື່ອງມືໃຫ້ແກ່ຜູ້ປະເມີນຂະບວນການດ້ານ ເອຟພິກ ໃນໂຄງການ ເຣດ+.

ນອກຈາກນັ້ນ,ຜູ້ມີສ່ວນກ່ຽວຂ້ອງຄວນຈະຕ້ອງຕົກລົງເຫັນດີວ່າການກວດສອບຢັ້ງຢືນຈະດຳເນີນໄປເລື້ອຍໆສໍ່າໃດ ແລະ ພາກສ່ວນໃດຈະເປັນຜູ້ດຳເນີນການກວດສອບຢັ້ງຢືນການເຫັນດີເຫັນພ້ອມ. ຖ້າຫາກການກວດສອບຢັ້ງຢືນຫາກພົບເຫັນຄວາມຂາດຕົກບົກຜ່ອງຂອງການເຫັນດີເຫັນພ້ອມ, ຊຸມຊົນມີສິດຮຽກຮ້ອງໃຫ້ແກ້ໄຂສິ່ງທີ່ຂາດຕົກບົກຜ່ອງນັ້ນ, ເຊັ່ນ ຕົວຢ່າງການຂາດຂໍ້ມູນທີ່ໄດ້ສະໜອງໃຫ້ ຫຼື ມີການປຶກສາຫາລືຢູ່ໃນວົງກວ້າງກວ່າ. ນອກນັ້ນ, ຊຸມຊົນຍັງມີສິດທີ່ຈະຮຽກຮ້ອງໃນການເຫັນດີເຫັນພ້ອມຕໍ່ກັບໂຄງການຈະຕ້ອງໄດ້ໃນການເຈລະຈາຄືນໃໝ່ຈາກໄລຍະທີ່ພົບວ່າຍັງບໍ່ເໝາະສົມ.

### ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ຈຳເປັນຕ້ອງຮູ້:

- ສິດຂອງເຂົາເຈົ້າຕໍ່ກັບການກວດສອບຢັ້ງຢືນກ່ຽວກັບຂະບວນການເຫັນດີເຫັນພ້ອມທີ່ບໍ່ໄດ້ຮັບອິດທິພົນໃດໆ, ຕາມເວລາ, ແລະ ເຂົາເຈົ້າໄດ້ເຂົ້າໃຈເນື້ອໃນ ແລະ ຄວາມໝາຍຂອງຂໍ້ຕົກລົງເຫັນດີກ່ຽວກັບຄວາມເຫັນດີເຫັນພ້ອມ.

### ແຫຼ່ງຂໍ້ມູນທີ່ແນະນຳໃຫ້ເຂົ້າໄປເບິ່ງ


Colchester, M., and M.F. Ferrari. 2007. *Making FPIC – Free, Prior and Informed Consent – Work: Challenges and Prospects for Indigenous Peoples*. Forest Peoples Programme, Moreton-in-Marsh, UK. Available at: www.forestpeoples.org

Gibson, G., and C. O'Faircheallaigh. 2010. *Negotiation and Implementation of Impact and Benefit Agreements*. IBA Community Toolkit. The Gordon Foundation, Toronto. Available at: www.ibacommunitytoolkit.ca



# ເອກະສານອ້າງອີງ

AIPP, IWGIA, FPP, a nd Tebtebba Foundation. 2010. *What to do with REDD? A Manual for Indigenous Trainers*. AIPP, IWGIA, FPP, and Tebtebba Foundation. Available at: www.forestpeoples.org

Amerindian Peoples Association. 2010. *Indigenous Peoples Demand Action on Land Rights, Consent Issues*. Press Statement by participants at a workshop on Indigenous Peoples Rights, Extractive Industries and National Development Policies in Georgetown, Guyana, on March 8, 2010. Available at: www.minesandcommunities.org

Andersson, K. 2006. Understanding Decentralized Forest Governance: An Application of the Institutional Analysis and Development Framework. *Sustainability: Science, Practice, & Policy* 2 (1): 25–35. Available at: sspp.proquest.com

Angelsen, A. *et al*, eds. 2009. *Realising REDD+: National strategy and policy options*. CIFOR, Bogor, Indonesia. Available at: www.cgiar.cifor.org

Angelsen, A. *et al*. 2009. *Reducing Emissions from Deforestation and Forest Degradation (REDD): An Options Assessment Report*. Meridian Institute, Washington, DC. Report prepared for the Government of Norway. Available at: www.redd-oar.org

ASEAN Secretariat. 2009. *ASEAN Socio-Cultural Community Blueprint*. Jakarta. Available at: www.asean.org

Baker and McKenzie; Covington and Burling LLP, 2009. *Background Analysis of REDD Regulatory Frameworks*. Report prepared for the Terrestrial Carbon Group and UN-REDD. Available at: www.terrestrialcarbon.org

Bleaney, A., B. Vickers, and L. Peskett. 2009. *REDD in Nepal: Putting community forestry centre stage?* REDD-net. Available at: www.redd-net.org

Brandon, K., and M. Wells. 2009. Lessons for REDD+ from protected areas and integrated conservation and development projects. Chapter 19 in *Realising REDD+: National strategy and policy options*. Edited by A. Angelsen. CIFOR, Bogor, Indonesia. Available at: www.cgiar.cifor.org

Business and Biodiversity Offsets Programme (BBOP). 2009. *Biodiversity Offsets and Stakeholder Participation: A BBOP Resource Paper.* BBOP, Washington, D.C. Available at: www.forest-trends.org

Business for Social Responsibility; First Peoples Worldwide. 2004. Resource/Extractive Companies and Indigenous Peoples Engagement (RECIPE) for Dialogue Project: Guidebook. Available at: www.bsr.org.

Climate, Community & Biodiversity Alliance (CCBA). 2008. Climate Community and Biodiversity Project Design Standards: Second Edition. Arlington, VA, USA. Available at: www.climate-standards.org

CCBA. 2010. *REDD+ Social and Environmental Standards*. Arlington, VA, USA. Available at: www.climate-standards.org

Chapin, M. and B. Threlkeld. 2008. *Mapping Indigenous Lands: A Practical Guidebook*. Centre for Support of Native Lands, Environmental Law Institute, Washington, DC. Available at: www.elistore.org

CIFOR. 2009. *Simply REDD: CIFOR's Guide to Forests, Climate Change and REDD*. CIFOR, Bogor, Indonesia. Available at: www.cifor.cgiar.org

Clarke, R. 2010. Moving the REDD Debate from Theory to Practice: Lessons Learned from the Ulu Masen Project. 6/1 *Law, Environment and Development Journal* 6/1: 36–60. Available at: www.lead-journal.org

Client Earth. Website: www.clientearth.org

Colchester, M. 2010. *Free, Prior and Informed Consent: Making FPIC work for forests and peoples*. The Forests Dialogue, New Haven, CT, USA. Available at: environment.yale.edu/tfd

Colchester, M., and M.F. Ferrari. 2007. *Making FPIC – Free, Prior and Informed Consent – Work: Challenges and Prospects for Indigenous Peoples*. Forest Peoples Programme, Moreton-in –Marsh, UK. Available at: www.forestpeoples.org

Costenbader, J., ed. 2009. *Legal Frameworks for REDD – Design and Implementation at the National Level*. IUCN Environmental Policy and Law Paper No 77. IUCN, Gland, Switzerland. Available at: www.iucn.org

Corbett, J. *et al*. 2009. *Good Practices in Participatory Mapping*. International Fund for Agricultural Development (IFAD), Rome. Available at: www.ifad.org

Cotula, L., and J. Mayers. 2009. *Tenure in REDD – Start-point or Afterthought*? Natural Resource Issues No. 15. IIED, London. Available at: www.iied.org

Dooley, K. 2010. Forest Watch Special Report – UNFCCC Climate Talks, 7–18 December 2009. *EU Forest Watch* January 2010. Available at: www.fern.org

Durbin, J. and Franks, P. 2010. *Standards Committee Responses to comments on the draft REDD+ Social and Environmental Standards, Version 2 October 2009, received during the first 60-day public comment period: 2 October to 30 November 2009*. CCBA, Arlington, VA, USA. Available at: www.climate-standards.org

Energy Sector Management Assistance Program (ESMAP), the World Bank, and the International Council on Mining and Metals (ICCM. 2005. *The Community Development Toolkit*. Washington, DC, and London. Available at: www.icmm.com

Evans, K. *et al*, CIFOR, 2006. *Guide to Participatory Tools for Forest Communities*. CIFOR, Bogor, Indonesia. Available at: www.cifor.cgiar.org

Forest Carbon Partnership Facility (FCPF). 2009. *FCPF Readiness Mechanism: National Consultation and Participation for REDD*. Available at: www.forestcarbonpartnership.org/fcp

Forest Peoples Programme. 2008. *Free, Prior and Informed Consent and the Roundtable on Sustainable Palm Oil – A Guide for Companies*. Moreton-in-Marsh, UK. Available at: www.forestpeoples.org

Forest Peoples Programme. 2008. *Key Elements to the Initiation, Performance and Maintenance of Good Faith Consultations and Negotiations with Indigenous and Tribal Peoples and Communities*. Moreton-in-Marsh, UK. Available at: www.forestpeoples.org

Forestry Administration of the Royal Government of Cambodia; PACT Cambodia; *et al*. 2009. Reduced Emissions from Deforestation and Forest Degradation in Oddar Meanchey Province, Cambodia: A Community Forestry Initiative for Carbon and Biodiversity Conservation and Poverty Reduction for the CCB Standard, Project Design Document. Available at: www.climate-standards.org

Galudra, G. *et al*. 2009. *RaTA: A Rapid Land Tenure Assessment Manual for Identifying the Nature of Land Tenure Conflicts*, World Agroforestry Centre (ICRAF), Bogor, Indonesia. Available at: www.worldagroforestrycentre.org

Gibson, G., and C. O'Faircheallaigh. 2010. *Negotiation and Implementation of Impact and Benefit Agreements*. IBA Community Toolkit. The Gordon Foundation, Toronto. Available at: www.ibacommunitytoolkit.ca

Global Witness. 2009. *Honest Engagement, Transparency and Civil Society Participation in REDD*. London. Available at: www.globalwitness.org

Granda, P., 2005. *Carbon Sink Plantations in the Ecuadorian Andes: Impacts of the Dutch FACE-PROFAFOR monoculture tree plantations' project on indigenous and peasant communities*. WRM Series on Tree Plantations No. 1. WRM, Montevideo. Available at: www.wrm.org.uy

Griffiths, T. 2008. *Seeing 'REDD'? Forests, Climate Change Mitigation and the Rights of Indigenous Peoples and Local Communities*, Forest Peoples Programme. Moreton-in-Marsh, UK. Available at: www.forestpeoples.org

Griffiths, T. 2009. *Seeing 'REDD'? Forests, Climate Change Mitigation and the Rights of Indigenous Peoples and Local Communities (Updated version)*. Forest Peoples Programme. Moreton-in-Marsh, UK. Available at: www.forestpeoples.org

Herbertson, K. *et al*. 2009. *Breaking Ground: Engaging Communities in Extractive and Infrastructure Projects*. WRI, Washington, DC. Available at: www.wri.org

Herz, S, J. Sohn, and A. La Vina. 2007. *Development Without Conflict: The Business Case for Community Consent*. WRI, Washington, DC. Available at: www.wri.org

Indonesian Network for Participatory Mapping. Website: www.jkpp.org

International Finance Corporation (IFC). 2009. *Addressing Grievances from Project-Affected Communities – Guidance for Projects and Companies on Designing Grievance Mechanisms*. Good Practice Note. Washington, DC. Available at: www.ifc.org

International Rivers Network. 2006. *Dams, Rivers and Rights: An Action Guide for Communities Affected by Dams*. Berkeley, CA, USA. Available at: www.internationalrivers.org

IWGIA, AIPP, FPP, and Tebtebba Foundation. 2010. *What is REDD? A Guide for Indigenous Communities*, IWGIA, AIPP, FPP, and Tebtebba Foundation. Available at: www.forestpeoples.org

Johns, T. *et al*, eds. 2009. *An Overview of Readiness for REDD (Version 2)*. The Woods Hole Research Centre, Falmouth, MA, USA. Available at: www.whrc.org

Lawlor, K., and D. Huberman. 2009. Reduced Emissions from deforestation and forest degradation (REDD) and human rights. Chapter 12 in *Rights-based approaches: Exploring issues and opportunities for conservation*. Edited by J. Campese *et al*. IUCN and CIFOR, Bogor, Indonesia. Available at: www.cgiar.cifor.org

Lehr, A., and G. Smith. 2010. *Implementing a Corporate Free, Prior and Informed Consent Policy*. Foley Hoag LLB, Boston and Washington, DC. Available at: www.foleyhoag.com

Life Mosaic. *Indigenous Peoples and Climate Change: A Video Guide*. Film. Available at: www.lifemosaic.net

MacKay, F. and M. Colchester. 2004. *Indigenous Peoples' Right to Free, Prior and Informed Consent and the World Bank's Extractive Industries Review*. Forest Peoples Program, Moreton-in-Marsh, UK. Available at: www.forestpeoples.org

Mather, R. *et al*. 1998. *Aerial Photographs and 'Photo-maps' for Community Forestry*. Rural Development Forestry Network (RDFN) paper 23e. ODI, London. Available at: www.odi.org.uk

Mehta. L and M. Stankovitch. 2001. Operationalisation of Free Prior Informed Consent. Prepared for M. Colchester, ed, *Thematic Review 1.2: Dams, IPs and Vulnerable Ethnic Minorities* as an input to the World Commission on Dams, Cape Town. Available at: www.dams.org

O'Hara, P. 2009. *Enhancing Stakeholder Participation in National Forestry Programs – Tools for Practitioners*. FAO – National Forest Program Facility, Rome. Available at: www.nfp-facility.org

Oxfam Australia. 2007. *Free Prior and Informed Consent: The Role of Mining Companies*. Carlton, Victoria, Australia. Available at: www.oxfam.org.au

Oxfam Australia. 2010. *Guide to Free, Prior, and Informed Consent*. Carlton, Victoria, Australia. Available at: www.oxfam.org.au

Oxfam Australia; Diplomacy Training Program. 2009. *FREE and EQUAL towards respect for the Human Rights of Indigenous Peoples of Australia: A guide for community advocates*. Melbourne, Australia. Available at: www.oxfam.org.au

PACT Cambodia. 2010. Community Consultation on Oddar Meanchey CF REDD Project, at the Provincial Hall, Samraong, Oddar Meanchey, Cambodia on 25 November, 2009. Comments received by CCBA during validation audit, dated 27 November 2010. Available at: www.climate-standards.org

Parker, C. *et al*, 2009. *The Little REDD+ Book: An updated guide to governmental and non-governmental proposals for reducing emissions from deforestation and degradation*. Global Canopy Programme, Oxford, UK. Available at: www.globalcanopy.org

Provincial Government of Aceh; Flora and Fauna International; Carbon Conservation Pty Ltd. Reducing Carbon Emissions from Deforestation in the Ulu Masen Ecosystem, Aceh, Indonesia, Design Note, 29 December 2007.

REDD-net. Website: www.redd-net.org

REDD Monitor. Website: www.redd-monitor.org

Salim, E. 2003. *Striking a Better Balance: The Final Report of the Extractive Industries Review*. Extractive Industries Review, Jakarta and Washington, DC. Available at: www.worldbank.org

Sosa, I., and K. Keenan. 2001. *Impact Benefit Agreements Between Aboriginal Communities and Mining Companies: Their Use in Canada*. Canadian Environmental Law Association, Environmental Mining Council of British Columbia, CooperAcción. Available at: www.cela.ca

Sprechmann, S., and E. Pelton. 2001. *Advocacy Tools and Guidelines: Promoting Policy Change*, CARE, Atlanta. Available at: www.care.org.

Stephen, P., ed. 2009. *Introductory Course on Reducing Emissions from Deforestation and Forest Degradation (REDD): A Training Manual*. The Nature Conservancy, CCBA, Conservation International, Rainforest Alliance, WWF, GTZ. Available at: www.nature.org

Suzuki, R. 2010. The role of trust in REDD+. *REDD-net Asia–Pacific Bulletin* 2 (October 2010). ODI & RECOFTC. Available at: www.redd-net.org

Takacs, D. 2009. *Forest Carbon – Law and Property Rights*. Conservation International, Arlington, VA, USA. Available at: www.conservation.org

Tebtebba Foundation. 2006. *Recent experiences and recommendations on the concept and implementation of the principle of Free, Prior and Informed Consent.* Permanent Forum on Indigenous Issues Fifth Session, Presented by Jennifer Corpuz, Tebtebba Foundation. Available at: www.sarpn.org.za

Tebtebba Foundation. 2008. *Guide on Climate Change & Indigenous Peoples*. Baguio City, Philippines. Available at: www.tebtebba.org

The REDD Desk. Website: www.theredddesk.org

UNFCCC, Ad Hoc Working Group on Long-term Cooperative Action, Negotiating Text – Note by the Secretariat. Twelfth Session, Tianjin, China, 9 October 2010. Available at: www.unfccc.int

UN General Assembly. 2007. United Nations Declaration on the Rights of Indigenous Peoples. Resolution 61/295 *(UNDRIP)*. Available at: www.un.org

UN-REDD. 2009. *UN-REDD Programme Operational Guidance: Engagement of Indigenous Peoples and Other Forest Dependent Communities*. Working Document. Available at: www.un-redd.org

UN Permanent Forum on Indigenous Issues (UNPFII). 2005. *Report of the International Workshop on Methodologies Regarding Free Prior and Informed Consent and Indigenous Peoples*. Document E/C.19/2005/3, submitted to the Fourth Session of UNPFII, 16–17 May. Available at: www.un.org

Weitzner, V. 2009. Bucking the Wild West - Making Free, Prior and Informed Consent Work. Speaking Notes for Free, Prior and Informed Consent Panel, Prospector and Developer's Association of Canada annual convention, p3. Available at: www.nsi-ins.ca

World Bank. 2009. Design Document for the Forest Investment Program, a targeted program under the SCF Trust Fund. Available at: www.climateinvestmentfunds.org

World Growth. 2008. *Winners All: How Forestry Can Reduce Both Climate Change Emissions and Poverty – A Pro-Development Program*. Arlington, VA, USA. Available at: www.worldgrowth.org

# ອະທິບາຍຄຳສັບ
# ແລະ ອັກສອນຫຍໍ້



# ອະທິບາຍຄຳສັບ

**Adaptation** (ການປັບໂຕ): ກິດຈະກຳຕ່າງໆເພື່ອແກ້ໄຂຜົນກະທົບທີ່ວ່າການປ່ຽນແປງດິນຟ້າອາກາດໄດ້ເກີດຂຶ້ນຮຽບຮ້ອຍແລ້ວບົນພື້ນທີ່ດິນ, ລະບົບນິເວດ ແລະ ການທຳມາຫາກິນ.

**Additionality** (ສິ່ງທີ່ໄດ້ເພີ້ມເຕີມ): ໃນວຽກງານໂຄງການຊົດເຊີຍກາກບອນ (carbon offset project), ຄຳວ່າ additionality ແມ່ນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວທີ່ເພີ້ມມາຈາກສິ່ງທີ່ອາດຈະສິ່ງຜົນເຮັດໃຫ້ບໍ່ມີໂຄງການ.

**Afforestation** (ການສ້າງປ່າ): ການພັດທະນາປ່າໄມ້ໃນພື້ນທີ່ດິນທີ່ບໍ່ຖືກສ້າງເປັນປ່າໃນເວລາຫວ່າງບໍ່ດົນມານີ້.

**Baseline** (ເສັ້ນທຽບຖານ): ໃນການຄົ້ນຫາເພື່ອວັດແທກວ່າການປ່ອຍອາຍພິດເຮືອນແກ້ວໄດ້ຫຼຸດລົງ ຫຼື ເພີ້ມຂຶ້ນ, ມັນຈຳເປັນທີ່ຈະຕ້ອງຮູ້ຈຳນວນທີ່ປ່ອຍອາຍພິດໃນໄລຍະຜ່ານມາ (ປົກກະຕິແລ້ວແມ່ນກ່ຽວພັນກັບວັນ ຫຼື ປີຂອງ-ເສັ້ນທຽບຖານ, ທຽບໃສ່ວ່າອັນໃດທີ່ສາມາດສ້າງຂຶ້ນຕະຫຼອດເວລາ. ນີ້ ແມ່ນຮຽກວ່າເສັ້ນທຽບຖານ.

**Carbon market** (ຕະຫຼາດກາກບອນ): ການເຄື່ອນໄຫວສຳລັບການຂາຍໃບອະນຸຍາດກ່ຽວກັບການປ່ອຍອາຍພິດ, ການຫຼຸດຜ່ອນ, ຫຼື ການຊົດເຊີຍແມ່ນປະກອບມີ 'ຕະຫຼາດກາກບອນ'. ແຕ່ວ່າ, ອາຍກາກໂບນິກແມ່ນໜຶ່ງໃນຈຳນວນອາຍພິດເຮືອນແກ້ວຫຼາຍໆຢ່າງທີ່ສາມາດ 'ຊື້ຂາຍ'. ຍິ່ງໄປກວ່ານັ້ນ, ບໍ່ທັນມີຕະຫຼາດສາກົນທີ່ເປັນຕະຫຼາດດ່ຽວ ຫຼື ຕະຫຼາດແບບລວມສຳລັບການຊື້ການຫຼຸດຜ່ອນການປ່ອຍອາຍພິດ. ແທນທີ່ຈະເປັນເຊັ່ນນັ້ນ, ມີຕະຫຼາດຫຼາຍແບບທີ່ມີການຊື້ຂາຍຢູ່ທົ່ວໂລກ ເຊິ່ງສາມາດຖືກແບ່ງອອກເປັນຕະຫຼາດ 'ແບບບັງຄັບ' ຫຼື 'ແບບສະໝັກໃຈ'.

**Climate, Community and Biodiversity Alliance (CCBA)** (ຄູ່ພັນທະມິດກ່ຽວກັບສະພາບດິນຟ້າອາກາດ, ຊຸມຊົນ ແລະ ຊີວະນາໆພັນ): ສະມາຄົມຂອງອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດກ່ຽວກັບສະພາບແວດລ້ອມເປັນຫຼັກເຊິ່ງລວມມີອົງການສາກົນເພື່ອການອະນຸລັກ, ອົງການແຄ (CARE), ອົງການອະນຸລັກທຳມະຊາດ, ອົງການຄູ່ພັນທະມິດປ່າໄມ້ເຂດຮ້ອນຊຸ່ມ, ແລະ ສະມາຄົມການອະນຸລັກສັດປ່າ. ມັນສິ່ງເສີມການພັດທະນາກິດຈະກຳການອະນຸລັກ ແລະ ມາດຖານທີ່ສ້າງຜົນປະໂຫຍດແກ່ສະພາບດິນຟ້າອາກາດ, ຊຸມຊົນທ້ອງຖິ່ນ ແລະ ຊີວະນາໆພັນ.

**Climate, Community and Biodiversity Standards (CCBS)** (ມາດຕະຖານກ່ຽວກັບສະພາບດິນຟ້າອາກາດ, ຊຸມຊົນ ແລະ ຊີວະນາໆພັນ): ສະໜອງກົດລະບຽບ ແລະ ທິດທາງສຳລັບການອອກແບບໂຄງການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດບົນພື້ນດິນ. ມາດຕະຖານນີ້ຕ້ອງການໃຫ້ໂຄງການເຄົາລົບສິດຂອງຊຸມຊົນທ້ອງຖິ່ນ, ເຊິ່ງລວມມີສິດຂອງເຂົາເຈົ້າ ຕໍ່ກັບເອຟພິກ. ນອກຈາກນັ້ນ, ໂຄງການຈຳຕ້ອງມີແຜນການທີ່ໜ້າເຊື່ອຖື ເພື່ອສ້າງຜົນປະໂຫຍດ ຈາກຊີວະນາໆພັນ ແລະ ນຳສິ່ງການຫຼຸດຜ່ອນການປ່ອຍອາຍພິດກາກບອນ.

**Convention on Biological Diversity (CBD)** (ສົນທິສັນຍາ ກ່ຽວກັບຄວາມຫຼາກຫຼາຍຂອງຊີວະນາໆພັນ): ສົນທິສັນຍາຜູກມັດທາງດ້ານກົດໝາຍຂອງສາກົນທີ່ມີເປົ້າໝາຍໃນການອະນຸລັກຄວາມຫຼາກຫຼາຍຂອງຊີວະນາໆພັນ, ການນໍາໃຊ້ອົງປະກອບຂອງຕົນຢ່າງຍືນຍົງ, ການແບ່ງປັນຜົນປະໂຫຍດຢ່າງເປັນທໍາ ແລະ ເທົ່າທຽມກັນທີ່ເກີດມາຈາກຊັບພະຍາກອນທີ່ເປັນແນວພັນ.

**Deforestation** (ການທໍາລາຍປ່າໄມ້): ການຖາງປ່າ ຫຼື ຕົ້ນໄມ້ຢືນຕົ້ນຢູ່ບ່ອນທີ່ທີ່ດິນຈະຖືກປ່ຽນໄປເປັນການຊົມໃຊ້ທີ່ບໍ່ແມ່ນປ່າ. ຍົກຕົວຢ່າງຂອງການທໍາລາຍປ່າໄມ້ລວມມີການຫັນປ່ຽນທີ່ດິນປ່າໄມ້ໄປສູ່ການນໍາໃຊ້ທາງກະສິກໍາ ຫຼື ໃນເຫດສະບານເມືອງ.

**Emissions trading (or 'carbon trading')** (ການຊື້ຂາຍກ່ຽວກັບການປ່ອຍອາຍພິດ ຫຼື 'ການຊື້ຂາຍກາກບອນ'): ລວມມີການຂາຍ ແລະ ຊື້: 'ອະນຸຍາດ' ຫຼື 'ປ່ອຍໃຫ້' ປ່ອຍອາຍພິດເຮືອນແກ້ວ; 'ໃບຢັ້ງຢືນ' ທີ່ຮັບຮອງການຫຼຸດການປ່ອຍອາຍພິດໃນລະດັບທີ່ແນ່ນອນຈາກກິດຈະກໍາອັນສະເພາະທີ່ຢູ່ ເໜືອສິ່ງທີ່ ຫຼື ບໍ່ດັ່ງນັ້ນອາດຈະເປັນກໍລະນີ (ເຊັ່ນ ການປ່ອຍອາຍພິດໃນ 'ທາງທຸລະກິດ ຕາມປົກກະຕິ'); ຫຼື 'ໃບຢັ້ງຢືນ' ທີ່ສະແດງໃຫ້ເຫັນຈໍານວນການປ່ອຍອາຍພິດຕົວຈິງທີ່ແນ່ນອນໄດ້ຖືກຊົດ 'ເຊີຍ' ຢູ່ບາງບ່ອນ ຕື່ມອີກໂດຍຜ່ານເປັນຕົ້ນແມ່ນການດູດຊັບຂອງກາກບອນ.

**Forest degradation** (ການເສື່ອມໂຊມຂອງປ່າໄມ້): ເກີດຂື້ນເມື່ອໂຄງສ້າງ ຫຼື ໜ້າທີ່ຂອງປ່າໄມ້ໄດ້ຮັບຜົນກະທົບທາງລົບເຊິ່ງເຮັດໃຫ້ຫຼຸດຄວາມສາມາດຂອງປ່າໄມ້ໃນການໃຫ້ການບໍລິການ ຫຼື ສະໜອງ ຜະລິດຕະພົນ.

**International Labour Organization (ILO)** (ອົງການແຮງງານສາກົນ): ອົງການຕົວແທນຂອງສະຫະປະຊາຊາດສໍາລັບສ້າງ ແລະ ຄວບຄຸມມາດຕະຖານແຮງງານສາກົນ.ເປົ້າໝາຍຂອງອົງ ການແຮງງານສາກົນແມ່ນການຈ້າງງານທີ່ມີປະໂຫຍດ ແລະ ມີປະສິດທິຜົນໃຫ້ແກ່ທຸກໆຝ່າຍໂດຍອີງໃສ່ບັນດາຫຼັກການແຫ່ງຄວາມຍຸດຕິທໍາ ແລະ ເທົ່າທຽມກັນ. ສົນທິສັນຍາຂອງອົງການແຮງງານສາກົນ 169 ແມ່ນເປັນຫ່ວງກ່ຽວກັບຄົນພື້ນເມືອງ ແລະ ຄົນຊົນເຜົ່າ ໃນບັນດາປະເທດທີ່ມີເອກະລາດ. ມັນໄດ້ຖືກຮັບຮອງ ໃນປີ 1989 ໂດຍກອງປະຊຸມໃຫຍ່ຂອງອົງການແຮງງານສາກົນ ແລະ ມີຜົນບັງຄັບໃຊ້ ໃນປີ 1991.

**Land Use, Land-Use Change and Forestry (LULUCF)** (ການນໍາໃຊ້ທີ່ດິນ, ການປ່ຽນແປງການນໍາໃຊ້ທີ່ດິນ ແລະ ປ່າໄມ້): ຂະແໜງຂໍ້ມູນກ່ຽວກັບອາຍພິດເຮືອນແກ້ວ ທີ່ກວມເອົາການປ່ອຍອາຍພິດ ແລະການລົບລ້າງອາຍພິດເຮືອນແກ້ວ ທີ່ມີຜົນມາຈາກການນໍາໃຊ້ທີ່ຊັກນໍາ ໂດຍກົງຈາກມະນຸດ, ການປ່ຽນແປງການນໍາໃຊ້ທີ່ດິນ ແລະ ບັນດາກິດຈະກໍາປ່າໄມ້.

**Mitigation** (ການຫຼຸດຜ່ອນ): ການຄົ້ນຫາວິທີການຫຼຸດຜ່ອນຈໍານວນອາຍພິດເຮືອນແກ້ວທີ່ປ່ອຍຂື້ນຊັ້ນບັນຍາກາດໂດຍກິດຈະກໍາຂອງມະນຸດ. ການກະທໍາດັ່ງກ່າວອາດຈະລວມເຖິງການຫຼຸດຜ່ອນການນໍາໃຊ້ເຊື້ອເພີງທີ່ມາຈາກຊາກສັດ ແລະ ການປ່ຽນແປງກິດຈະກໍາການນໍາໃຊ້ທີ່ດິນ - ເຊັ່ນ: ໂດຍການຫຼຸດຜ່ອນອັດຕາການບຸກເບີກທີ່ດິນ ແລະ ການທໍາລາຍປ່າໄມ້ ພ້ອມກັບການເພີ້ມອັດຕາຂອງການສ້າງປ່າໄມ້ຄືນ.

**Reducing Emissions from Deforestation and Forest Degradation (REDD)** (ການຫຼຸດຜ່ອນການປ່ອຍອາຍພິດ ຈາກການທໍາລາຍປ່າໄມ້ ແລະ ການເຊື່ອມໂຊມ ຂອງປ່າໄມ້): ການລິເລີ້ມຕັດການປ່ອຍອາຍພິດເຮືອນແກ້ວເນື່ອງມາຈາກການສູນເສຍ ຫຼື ຄວາມເສຍຫາຍປ່າໄມ້ໂດຍການ ລວມເອົາມາດຕະການການຫຼຸດຜ່ອນທີ່ກ່ຽວຂ້ອງກັບປ່າໄມ້ໃນກົນໄກຂອງຕະຫຼາດກາກບອນ.

**REDD+** (ເຣດ+): ເປັນໂຕຫຍໍ້ສໍາລັບປະໂຫຍກທີ່ອະທິບາຍລາຍລະອຽດກ່ຽວກັບຊຸດມາດຕະການຫຼຸດຜ່ອນທີ່ກ່ຽວຂ້ອງກັບປ່າໄມ້ທີ່ຢູ່ໃນການປຶກສາຫາລືພາຍໃຕ້ກຸ່ມຄົ້ນຄວ້າວິຊາການສະເພາະກິດກ່ຽວກັບການເຄື່ອນໄຫວຮ່ວມມືກັນໃນໄລຍະຍາວ (AWG-LCA) ຂອງກອບອະນຸສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC). ນອກຈາກເຣດ (REDD) ແລ້ວ (ໃຫ້ເບິ່ງຂ້າງເທິງ), ເຣດ+ (REDD+) ຍັງລວມມີ "ບົດບາດໃນການອະນຸລັກ, ການຄຸ້ມຄອງຈັດສັນປ່າໄມ້ແບບຍືນນານ ແລະ ການເພີ້ມພູນ

ມວນທາດກາກບອນປ່າໄມ້"[10]

**Reforestation** (ການປູກປ່າຄືນໃໝ່): ການຈັດຕັ້ງຄືນທີ່ຊັກນຳໂດຍມະນຸດ ຕໍ່ກັບປ່າທີ່ຖືກຖາງກາງຖາງຜ່ານມາ. ອີງຕາມທິດທາງຂອງກອບອະນຸສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC), ການປູກປ່າ ຄືນ ສາມາດປະຕິບັດໄດ້ ໃນພື້ນທີ່ເຊິ່ງ ຖືກຖາງກາງຖາງ ຢ່າງຊ້າບໍ່ໃຫ້ກາຍ ວັນທີ 31 ເດືອນທັນວາ ປີ 1989.

**Reforestation** (ການປູກປ່າຄືນໃໝ່): ການຈັດຕັ້ງຄືນໃໝ່ ຫຼື ການພື້ນຟູປ່າໄມ້.

**Rehabilitation** (ການຟື້ນຟູ): ແມ່ນການຮັບເອົາໝາກຜົນ ຫຼື ໂຄງສ້າງປ່າໄມ້ຄືນ ແຕ່ບໍ່ມີເປົ້າໝາຍໃຫ້ໄດ້ ຊີວະນາໆພັນມາຄືນ ເໝືອນກັບ ເຄີຍເປັນດັ້ງເດີມ.

**Removals** (ການຖອດຖອນ): ສິ່ງກົງກັນຂ້າມກັບການປ່ອຍອາຍພິດເຮືອນແກ້ວ ແລະ ເກີດຂື້ນເມື່ອອາຍພິດ ເຮືອນແກ້ວຖືກຖອດຖອນອອກຈາກຊັ້ນບັນຍາກາດເຊັ່ນວ່າ ດ້ວຍຕົ້ນໄມ້ໃນຊ່ວງໄລຍະຂະບວນການ ສັງເຄາະແສງ.

**Restoration** (ການບູລະນະ): ການບູລະນະປ່າໄມ້ທຳມະຊາດເພື່ອສ້າງໂຄງຮ່າງ ແລະ ໜ້າທີ່ ພ້ອມທັງ ປົກປັກຮັກສາ ແລະ ບູລະນະທີ່ຢູ່ອາໄສ, ພືີນທີ່ສຳລັບຢູ່ອາໄສ, ອາງໂຕ່ງນໍ້າ, ແລະ ລັກສະນະອື່ນໆ.

**Sinks** (ອ່າງກັກເກັບ): ອ່າງກັກເກັບ ຫຼື ສະຖານທີ່ທີ່ເກັບ ຫຼື ດູດຊັບອາຍກາກໂບນິກເປັນຈຳນວນຫລວງ ຫຼາຍກວ່າປ່ອຍ. ອ່າງເກັບກາກບອນໃຫຍ່ໆ ແມ່ນປ່າໄມ້ ແລະ ມະຫາສະໝຸດ.

**Sustainable Forest Management (SFM)** (ການຄຸ້ມຄອງປ່າໄມ້ແບບຍືນນານ): ການນຳໃຊ້ພະນັກງານ ແລະ ການຊົມໃຊ້ປ່າໄມ້ທີ່ຮັກສາຄວາມຫຼາກຫຼາຍທາງຊີວະນາໆພັນ, ໝາກຜົນ, ຄວາມອາດສາມາດ ໃນການຟື້ນຟູ ແລະ ໜ້າທີ່ທາງດ້ານເສດຖະກິດ ແລະ ສັງຄົມ.

**The United Nations Collaborative Programme on REDD+ (UN-REDD)** (ແຜນງານການຮ່ວມມືຂອງ ສະຫະປະຊາຊາດຕໍ່ກັບວຽກງານເຣດ+): ແຜນງານ ຢູເອັນ-ເຣດ (UN-REDD) ໄດ້ເລີ້ມ ດຳເນີນງານ ໃນເດືອນກັນຍາ ປີ 2008 ເພື່ອຊ່ວຍປະເທດກຳລັງພັດທະນາໃນການກະກຽມ ແລະ ຈັດຕັ້ງປະຕິບັດບັນດາ ຍຸດທະສາດ ເຣດ+ (REDD+) ແຫ່ງຊາດ. ມັນສ້າງຄວາມເຂັ້ມແຂງ ແລະ ຄວາມຮູ້ ວິທີການກ່ຽວກັບ ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ (FAO), ແຜນງານເພື່ອການພັດທະນາຂອງ ສະຫະປະຊາຊາດ (UNDP) ແລະ ແຜນງານກ່ຽວກັບສິ່ງແວດລ້ອມຂອງສະຫະປະຊາຊາດ (UNEP).

**United Nations Declaration on the Rights of Indigenous Peoples** (ຖະແຫຼງການຂອງສະຫະປະຊາຊາດ ກ່ຽວກັບສິດຂອງຄົນພື້ນເມືອງ): ກຳນົດສິດສ່ວນບຸກຄົນ ແລະ ສິດລວມໝູ່ ຂອງຄົນພື້ນເມືອງ, ເຊິ່ງລວມມີສິດທິ ຂອງເຂົາເຈົ້າຕໍ່ກັບວັດທະນະທຳ, ເອກະລັກ, ພາສາ, ການຈ້າງງານ, ສຸຂະພາບ ແລະ ການສຶກສາ. ມັນເນັ້ນໃສ່ສິດທິ ຂອງເຂົາເຈົ້າໃນການຮັກສາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ, ວັດທະນະທຳ ແລະ ປະເພນີຂອງ ເຂົາເຈົ້າເອງ, ແລະ ເພື່ອປະຕິບັດການພັດທະນາໃນການສືບຕໍ່ເປົ້າໝາຍ ແລະ ຄວາມຕ້ອງການຂອງເຂົາເຈົ້າ. ຫ້າມບໍ່ໃຫ້ມີການໃຈແຍກຄົນພື້ນເມືອງ, ແລະ ສົ່ງເສີມ ໃຫ້ມີການເຂົ້າຮ່ວມຢ່າງເຕັມທີ່ ແລະ ຢ່າງມີປະສິດທິພາບ ໃນທຸກບັນຫາທີ່ເຮັດໃຫ້ເຂົາເຈົ້າກັງວົນ ເຊິ່ງລວມມີສິດທິໃນການໃຫ້ ຫຼື ປະຕິເສດຄວາມເຫັນດີເຫັນພ້ອມ ຢ່າງອິດສະລະໂດຍໄດ້ຮັບຮູ້ລ່ວງໜ້າຕໍ່ກັບ ການພັດທະນາທີ່ວາງແຜນໄວ້ ທີ່ອາດຈະສົ່ງຜົນກະທົບຕໍ່ເຂົ້າເຈົ້າ.

**United Nations Framework Convention on Climate Change (UNFCCC)** (ສົນທິສັນຍາກອບຂອງ ສະຫະປະຊາຊາດກ່ຽວກັບການປ່ຽນແປງດິນຟ້າອາກາດ): ສົນທິສັນຍາສາກົນກ່ຽວກັບສິ່ງແວດລ້ອມ ລວມທັງ ຈຸດປະສົງເພື່ອສ້າງສະຖຽລະພາບກ່ຽວກັບການສຸມຄວາມຕັ້ງໃຈໃສ່ອາຍພິດເຮືອນແກ້ວໃນຊັ້ນບັນຍາກາດ ໃນລະດັບທີ່ວ່າອາດຈະປ້ອງກັນການປ່ຽນແປງດິນຟ້າອາກາດທີ່ອັນຕະລາຍຊຶ່ງກໍ່ໃຫ້ເກີໂດຍມະນຸດ.

---

10 UNFCCC Ad Hoc Working Group on Long-term Cooperative Action under the Climate Change Convention. Find out more at: www.unfccc.int

**Voluntary Emissions Reductions (VERs)** (ການຫຼຸດຜ່ອນການປ່ອຍອາຍພິດແບບສະໝັກໃຈ): ການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວໂດຍຜ່ານບັນດາໂຄງການທີ່ຖືກປະເມີນ ແລະ ກວດສອບຢັ້ງຢືນໂດຍກົນໄກຈຸດປະສົງຂອງຝ່າຍທີສາມ, ສໍາລັບການຊື້ຂາຍຕໍ່ມາໃນຕະຫຼາດກາກບອນແບບສະໝັກໃຈ.

**Voluntary Carbon Standard (VCS)** (ມາດຕະຖານກາກບອນແບບສະໝັກໃຈ): ແມ່ນມາດຕະຖານສໍາລັບອຸດສະຫາກໍາການຊົດເຊີຍກາກບອນແບບສະໝັກໃຈ. ມັນປະຕິບັດຕາມມາດຕະຖານທີ່ສ້າງຂຶ້ນສໍາລັບກົນໄກພັດທະນາແບບສະອາດຂອງຂໍ້ຕົກລົງກຽວໂຕ (CDM) ຢ່າງເຄັ່ງຄັດ ພ້ອມທັງສ້າງເງື່ອນໄຂມາດຖານສໍາລັບການປະຕິບັດໃຫ້ຖືກຕ້ອງ, ການວັດແທກ, ແລະ ການຕິດຕາມໂຄງການຊົດເຊີຍກາກບອນ.

# ອັກສອນຫຍໍ້

| | |
|---|---|
| BTC | Baku-Tbilisi-Ceyhan pipeline: ທໍ່ສົ່ງນ້ຳມັນດິບຜ່ານບາກູ-ບີລີຊີເຊຮານ |
| CAT | Committee Against Torture: ຄະນະກຳມະການຕ້ານການໃຊ້ຄວາມຮຸນແຮງ |
| CCBS | Climate, Community, and Biodiversity Standards: ມາດຕະຖານທາງດ້ານສະພາບດິນຟ້າອາກາດ, ຊຸມຊົນ ແລະ ຊີວະນາໆພັນ |
| CCPR | Human Rights Committee: ຄະນະກຳມະການສິດທິຂອງມະນຸດ |
| CEDAW | Committee on the Elimination of Discrimination Against Women: ຄະນະກຳມະການກ່ຽວກັບການລົບລ້າງການຈຳແນກຕໍ່ກັບແມ່ຍິງ |
| CESCR | Committee on Economic, Social and Cultural Rights: ຄະນະກຳມະການກ່ຽວກັບສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນາທຳ |
| CERD | Committee on the Elimination of Racial Discrimination: ຄະນະກຳມະການກ່ຽວກັບການລົບລ້າງການຈຳແນກເຊື້ອຊາດເຜົ່າພັນ |
| CMW | Committee on Migrant Workers: ຄະນະກຳມະການກ່ຽວກັບກຳມະກອນຊາວອົບພະຍົບ |
| CRC | Committee on the Rights of the Child: ຄະນະກຳມະການກ່ຽວກັບສິດທິຂອງເດັກນ້ອຍ |
| CRPD | Committee on the Rights of Persons with Disabilities: ຄະນະກຳມະການກ່ຽວກັບສິດທິຂອງຄົນເສຍອົງຄະ |
| FPIC | Free, Prior, and Informed Consent: ຄວາມເຫັນດີເຫັນພ້ອມຢ່າງມີອິດສະຫຼະທີ່ມີການຮັບຮູ້ລ່ວງໜ້າ |
| FPICon | Free, Prior, and Informed Consultation: ການປຶກສາຫາລືຢ່າງມີອິດສະຫຼະທີ່ມີການຮັບຮູ້ລ່ວງໜ້າ |
| GIS | Geospatial Information Systems: ລະບົບການວິເຄາະຂໍ້ມູນ |
| GPS | Global Positioning Systems: ລະບົບການຈັບຕຳແໜ່ງໂລກ |
| GIZ | Deutsche Gesellschaft for Internationale Zusammenarbeit: ອົງການຮ່ວມມືສາກົນຂອງປະເທດເຢຍລະມັນ |
| ILO | International Labour Organization: ອົງການແຮງງານສາກົນ |
| FCPF | Forest Carbon Partnership Facility of the World Bank: ແຜນງານອຳນວຍຄວາມສະດວກການມີສ່ວນຮ່ວມດ້ານກາກບອນປ່າໄມ້ຂອງທະນາຄານໂລກ |
| FIP | Forest Investment Program of the World Bank: ແຜນງານການລົງທຶນປ່າໄມ້ຂອງທະນາຄານໂລກ |
| MoU | Memorandum of Understanding: ບົດບັນທຶກຄວາມເຂົ້າໃຈ |
| MRV | Measuring, Reporting, Verification: ການວັດແທກ, ການລາຍງານ, ກ່ານກວດສອບຢັ້ງຢືນ |
| NGO | Non-government organization: ອົງການຈັດຕັ້ງທີ່ບໍ່ສັງກັດລັດ |
| OPCAT | Optional Protocol to the Convention against Torture: ຂໍ້ຕົກລົງທີ່ເປັນທາງເລືອກຕໍ່ກັບສົນທິສັນຍາຕ້ານການໃຊ້ຄວາມຮຸນແຮງ |
| PES | Payments for Ecosystem Services: ການຈ່າຍຄ່າບໍລິການດ້ານລະບົບນິເວດ |

| | |
|---|---|
| RECOFTC | The Center for People and Forests: ສູນຝຶກອົບຮົມປ່າໄມ້ຊຸມຊົນຂອງພາກພື້ນອາຊີ-ປາຊີຟິກ |
| REDD+ | Reducing Emissions from Deforestation and Forest Degradation: ການຫຼຸດຜ່ອນການປ່ອຍອາຍພິດຈາກການທຳລາຍປ່າໄມ້ແລະການເຮັດໃຫ້ປ່າໄມ້ເສື່ອມໂຊມ |
| SPT | Subcommittee on Prevention of Torture: ອະນຸກຳມະການກ່ຽວກັບການປ້ອງກັນການໃຊ້ຄວາມຮຸນແຮງ |
| UNDRIP | United Nations Declaration on the Rights of Indigenous Peoples: ຖະແຫຼງການຂອງສະຫະປະຊາຊາດກ່ຽວກັບສິດທິຂອງຄົນພື້ນເມືອງ |
| UNFCCC | United Nations Framework Convention on Climate Change: ກອບອະນຸສັນຍາຂອງສະຫະປະຊາຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ |
| UNPFII | United Nations Permanent Forum on Indigenous Issues: ກອງປະຊຸມປະຈຳຂອງສະຫະປະຊາຊາດກ່ຽວກັບບັນຫາຂອງຄົນພື້ນເມືອງ |
| VCS | Voluntary Carbon Standard: ມາດຕະຖານກາກບອນແບບສະໝັກໃຈ |

# ເອກະສານແນບທ້າຍ



# ເອກະສານແນບທ້າຍ 1: ກອບກົດໝາຍ ສຳລັບ ເອຟພິກ (FPIC)

### ສິດທິຕໍ່ກັບຊັບພະຍາກອນ ແລະ ສິດທິຕໍ່ກັບກາກບອນ

ເອຟພິກ (FPIC) ແມ່ນສິດທີ່ຄ້ຳປະກັນວ່າ ຊັບສິນບັດ ຂອງປະຊາຊົນພື້ນເມືອງຈະບໍ່ໄດ້ຮັບຜົນກະທົບ ຫຼື ສູນເສຍໄປໂດຍບໍ່ໄດ້ຮັບຄວາມເຫັນດີເຫັນພ້ອມຈາກເຂົາເຈົ້າ. ແຜນງານ ແລະ ໂຄງການ ເຣດ+ (REDD+) ກ່ຽວຂ້ອງກັບຊັບສິນບັດ, ເຊິ່ງລວມມີຄຳຖາມກ່ຽວກັບສິດຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ ຕໍ່ກັບກາກບອນ. ທ່ານ ແທັກກັກ (Takacs - ປີ 2009) ໄດ້ສະເໜີວ່າ ກົດໝາຍ ແລະ ສັນຍາກ່ຽວກັບກາກບອນປ່າໄມ້ ຄວນຈະຈຳແນກລະຫວ່າງກາກບອນທີ່ຖືກດູດຊັບ, ການກັກເກັບກາກບອນ, ຄວາມສາມາດໃນການດູດຊັບກາກບອນ, ສິນເຊື່ອກາກບອນ, ແລະ ສິດໃນການຮັບຜົນປະໂຫຍດ. ໃນຄວາມໝາຍໜຶ່ງ, ກາກບອນພາຍໃນປ່າໄມ້ ສາມາດຮັບຮູ້ວ່າເປັນຊັບສິນບັດຂອງເຈົ້າຂອງປ່າໄມ້, ພ້ອມດ້ວຍສິດໃນການຊົມໃຊ້, ຮັບຜົນປະໂຫຍດ, ແລະ ໂອນຊັບສິນບັດ. ໃນຄວາມໝາຍອື່ນ, ສິນເຊື່ອກາກບອນແມ່ນເປັນການສ້າງເສດຖະກິດ ແລະ ການເມືອງໂດຍອີງໃສ່ຄວາມແຕກຕ່າງກັນລະຫວ່າງການປ່ອຍກາກບອນຕາມຕົວຈິງໃນປັດຈຸບັນ ແລະ ການປ່ອຍກາກບອນທີ່ຄາດຄະເນໄວ້ໃນອະນາຄົດ. ຄວາມແຕກຕ່າງດັ່ງກ່າວນີ້ໄດ້ນຳໄປສູ່ສອງວິທີທາງກ່ຽວກັບການຈັດສັນຊື່ງຕ່າງໆໃຫ້ແກ່ກາກບອນ. ອັນທີ່ໜຶ່ງ ແມ່ນສິດຕໍ່ກັບກາກບອນ ແມ່ນເປັນຂອງອຳ ນາດການປົກຄອງຕ່າງໆທີ່ກຳນົດລະດັບທຽບຖານໃນລະດັບຊາດ ແລະ ຂັ້ນຮອງລົງມາ. ຢູ່ໃນຕົວແບບນີ້, ການຕັ້ງ ຊື່ກາກບອນແມ່ນໄດ້ກຳນົດ ໂດຍແຜນງານ ເຣດ+ ລະດັບຊາດ ທີ່ກຳນົດລະດັບທຽບຖານລະດັບຊາດ ແລະ ລະດັບຂົງເຂດ ກ່ຽວກັບວ່າລັດຖະບານສາມາດ ອີງໃສ່ການຈັດສັນສິດທິດ້ານກາກບອນ ໃນຮູບແບບຂອງໃບອະນຸຍາດ. ອັນທີ່ສອງ, ສິດທິດ້ານກາກບອນເປັນຂອງຫົວໜ່ວຍທຸລະກິດທີ່ມີສິດຕໍ່ປ່າໄມ້, ດັ່ງນັ້ນ ສິດດ້ານກາກບອນ ແມ່ນເປັນສິ່ງທີ່ ແຍກ ອອກຈາກສິດທາງດ້ານກຳມະສິດປ່າໄມ້ບໍ່ໄດ້. ແຕ່ວ່າກອບກົດໝາຍລະດັບຊາດ ແລະ ລະດັບສາກົນຍັງບໍ່ທັນໃຫ້ຄຳນິຍາມກ່ຽວກັບສິດດ້ານກາກບອນຢ່າງຈະແຈ້ງ.

ຈາກ: Takacs, D 2009, Forest Carbon – *Law and Property Rights, Conservation International,* 2011 Crystal Drive, Arlington, VA 22202, USA.

ເອຟພິກ ເປັນສິ່ງທີ່ຂ້ອນຂ້າງໃໝ່ ກ່ຽວກັບກົດໝາຍ ແລະ ນະໂຍບາຍສາກົນ ແລະ ຢູ່ໃນລະບົບກົດໝາຍແຫ່ງຊາດສ່ວນຫຼາຍ, ຊຶ່ງຍັງບໍ່ທັນຈັດຕັ້ງໄດ້ດີຄືກັບຫຼັກການ ແລະ ຂັ້ນຕອນດ້ານກົດໝາຍອື່ນໆເທື່ອ, ເປັນຕົ້ນແມ່ນພັນທະຂອງລັດໃນການເຄົາລົບສິດໃນດ້ານປັນເຈົ້າຂອງກຳມະສິດ, ການເຂົ້າເຖິງຂໍ້ມູນ, ຫຼື ຂັ້ນຕອນການອອກໃບອະນຸຍາດທີ່ໂປ່ງໃສ.

ກົດໝາຍ ແລະ ເຄື່ອງມືສາກົນກ່າວເຖິງ ເອຟພິກ, ວ່າເປັນທັງສອງດ້ານຄືດ້ານສິດ ແລະ ດ້ານຫຼັກການ. ການເຄົາລົບສິດຂອງປະຊາຊົນພື້ນເມືອງຕໍ່ກັບເອຟພິກກາຍເປັນຄວາມຕ້ອງການເມື່ອເວລາປະເທດໜຶ່ງໄດ້ຕົກລົງ (ໂດຍຜ່ານການຮັບຮອງ ຫຼື ການລົງລາຍເຊັນ) ຮັບເອົາເຄື່ອງມືສາກົນທກ່ຽວຂ້ອງ. ເຄື່ອງມືສາກົນສ່ວນໃຫຍ່ສາມຢ່າງແກ້ໄຂສິດຕໍ່ກັບຄວາມເຫັນດີເຫັນພ້ອມຢ່າງມີອິດສະໄະທີ່ມີການຮັບຮູ້ ລ່ວງໜ້າ: ສົນທິສັນຍາຂອງອົງການແຮງງານສາກົນ (ILO) 169; ສົນທິສັນຍາກ່ຽວກັບຄວາມຫຼາກຫຼາຍດ້ານຊີວະນາໆພັນ(CBD); ແລະ ຖະແຫຼງການຂອງອົງການສະຫະປະຊາຊາດກ່ຽວກັບສິດຂອງປະຊາຊົນພື້ນເມືອງ. ຢູ່ໃນບັນດາເຄື່ອງມືທັງໝົດເຫຼົ່ານີ້, ສະໜອງພື້ນຖານອັນແຂງແກ່ນໃຫ້ແກ່ປະຊາຊົນພື້ນເມືອງເພື່ອສະແດງສິດວ່າອານາເຂດຂອງເຂົາເຈົ້າຄວນຈະຖືກຮັບຮູ້ໃນທາງກົດໝາຍຈາກລັດຖະບານ

ແລະ ຄວາມເຫັນດີເຫັນພ້ອມຢ່າງມີອິດສະຫຼະ ທີ່ມີການຮັບຮູ້ລ່ວງໜ້າ (FPIC) ແມ່ນເປັນສິ່ງຈຳເປັນກ່ອນທີ່ຈະສາມາດດຳເນີນກິດຈະກຳການພັດທະນາໃນອານາເຂດຂອງເຂົາເຈົ້າໄດ້.

## ເອຟພິກ (FPIC) ໃນສົນທິສັນຍາ 196 ຂອງອົງການແຮງງານສາກົນ

ສົນທິສັນຍາ196 ຂອງອົງການແຮງງານສາກົນ(ILO) ກ່ຽວກັບປະຊາຊົນພື້ນເມືອງ ແລະ ປະຊາຊົນທ້ອງຖິ່ນແມ່ນເປັນການສຳຫຼວດເບື້ອງຕົ້ນກ່ຽວກັບສິດຂອງປະຊາຊົນພື້ນເມືອງຕໍ່ກັບ ເອຟພິກ. ກົດໝາຍ ແລະ ນິຕິກຳສະບັບຕໍ່ມາໄດ້ສ້າງມາດຖານທີ່ເຂັ້ມງວດກວ່າເກົ່າ ໃຫ້ແກ່ລັດເພື່ອເຄົາລົບສິດ ຂອງປະຊາຊົນພື້ນເມືອງຕໍ່ກັບເອຟພິກ. ສົນທິສັນຍາ 169 ຂອງອົງການແຮງງານສາກົນຕ້ອງການໃຫ້ທີ່ດິນລວມທັງແນວຄວາມຄິດກ່ຽວກັບອານາເຂດທີ່ປະຊາຊົນພື້ນເມືອງເປັນເຈົ້າຂອງ ຫຼື ຖືກຄອບຄອງຈະຕ້ອງຍົກຍ້າຍອອກໄປໂດຍບໍ່ມີເຫດຜົນ.

**ມາດຕາ 14.1 ທີ່ເນັ້ນເຖິງສິດຕໍ່ກັບທີ່ດິນ ທີ່ກ່າວໄວ້ວ່າ:**

ສິດໃນການເປັນເຈົ້າຂອງ ແລະ ການຄອບຄອງຂອງປະຊາຊົນຕໍ່ກັບທີ່ດິນທີ່ເຂົາເຈົ້າຄອບຄອງຕາມປະເພນີຈະຕ້ອງຖືກຍອມຮັບ. ນອກຈາກນີ້, ຈະຕ້ອງນຳໃຊ້ມາດຕະການຕ່າງໆຕາມຄວາມເໝາະສົມເພື່ອປົກປ້ອງສິດຂອງປະຊາຊົນຕໍ່ກັບການນຳໃຊ້ທີ່ດິນທີ່ເຂົາເຈົ້າບໍ່ໄດ້ຄອບຄອງທັງໝົດ, ແຕ່ເຂົາເຈົ້າເຂົ້າໄປໃນທີ່ດິນດັ່ງກ່າວຕາມປະເພນີເພື່ອກິດຈະກຳທາງດ້ານປະເພນີ ແລະ ເພື່ອຄວາມຢູ່ລອດຂອງເຂົາເຈົ້າ. ຈະຕ້ອງເອົາໃຈໃສ່ໂດຍສະເພາະປະຊາຊົນຜູ້ທີ່ເຄື່ອນຍ້າຍບໍ່ມີທີ່ຢູ່ຖາວອນ ແລະຜູ້ທີ່ເຮັດໄຮ່ເລື່ອນລອຍທີ່ພົວພັນກັບບັນຫາທີ່ກ່າວມານີ້.

**ມາດຕາ 15.1 ທີ່ກ່າວໄວ້ວ່າ:**

ສິດຂອງປະຊາຊົນ ຕໍ່ກັບຊັບພະຍາກອນທຳມະຊາດ ທີ່ພົວພັນກັບທີ່ດິນຂອງເຂົາເຈົ້າຈະຕ້ອງໄດ້ຮັບການປົກປ້ອງເປັນພິເສດ. ສິດເຫຼົ່ານີ້ ລວມມີສິດຂອງປະຊາຊົນເພື່ອເຂົ້າຮ່ວມໃນການນຳໃຊ້, ການຄຸ້ມຄອງ ແລະ ອະນຸລັກຊັບພະຍາກອນເຫຼົ່ານີ້.

**ມາດຕາ 16 ໝວດທີ 2 ທີ່ກ່າວໄວ້ວ່າ:**

ຖ້າຫາກມີການຍົກຍ້າຍປະຊາຊົນເຫຼົ່ານີ້ ຈຳເປັນຕ້ອງໄດ້ມີການພິຈາລະນາເປັນມາດຕະການພິເສດ, ການຍົກຍ້າຍດັ່ງກ່າວ ຈະຕ້ອງໄດ້ຮັບຄວາມເຫັນດີເຫັນພ້ອມຢ່າງອິດສະຫຼະ ໂດຍໃຫ້ເຂົາເຈົ້າໄດ້ຮັບຮູ້ລ່ວງໜ້າເທົ່ານັ້ນ. ຖ້າບໍ່ສາມາດໄດ້ຮັບຄວາມເຫັນດີເຫັນພ້ອມຈາກເຂົາເຈົ້າ, ການຍ້າຍດັ່ງກ່າວຈະເກີດຂຶ້ນໄດ້ ສະເພາະແຕ່ເມື່ອປະຕິບັດຕາມຂັ້ນຕອນອັນເໝາະສົມ ທີ່ສ້າງຂຶ້ນຈາກລະບຽບກົດໝາຍແຫ່ງຊາດເທົ່ານັ້ນ ເຊິ່ງລວມມີການກວດສອບຂອງສາທາລະນະຊົນ ເມື່ອເຫັນສົມຄວນ, ເພື່ອໃຫ້ໂອກາດແກ່ປະຊາຊົນທີ່ກ່ຽວຂ້ອງ ໄດ້ສະແດງການເປັນຕົວແທນຢ່າງແທ້ຈິງ.

ຈາກ: http://www.ilo.org

## ເອຟພິກ (FPIC) ໃນສົນທິສັນຍາ ກ່ຽວກັບຄວາມຫຼາກຫຼາຍດ້ານຊີວະນາໆພັນ

ມາດຕາ 8 (j) ກ່ຽວກັບສົນທິສັນຍາທີ່ຮຽກຮ້ອງໃຫ້ຄວາມຮູ້ດ້ານປະເພນີຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນສາມາດນຳໃຊ້ໄດ້ສະເພາະແຕ່ໄດ້ຮັບການອະນຸຍາດຈາກເຂົາເຈົ້າເທົ່ານັ້ນ; ໝາຍຄວາມວ່າ ໄດ້ມີຄວາມເຫັນດີເຫັນພ້ອມໂດຍມີການຮັບຮູ້ລ່ວງໜ້າ[11] ເພື່ອໃຫ້ແຕ່ລະຝ່າຍທີ່ເຮັດສັນຍາຕ້ອງ:

11 MacKay, F. and Colchester, M., 2004, Indigenous Peoples' Rights to Free Prior Informed Consent and the World Bank's Extractives Industries Review, Forest Peoples Program, UK.

ອີງຕາມນິຕິກຳແຫ່ງຊາດ, ການເຄົາລົບ, ການສະຫງວນ ແລະ ຮັກສາຄວາມຮູ້, ຫົວຄິດປະດິດສ້າງ, ແລະ ຫຼັກການປະຕິບັດຂອງຊຸມຊົນພື້ນເມືອງ ແລະ ທ້ອງຖິ່ນທີ່ສະແດງໃຫ້ເຫັນວິຖີຊີວິດທີ່ພົວພັນກັບການອະນຸລັກ ແລະ ການນຳໃຊ້ຄວາມຫຼາກຫຼາຍດ້ານຊີວະນາໆພັນພ້ອມກັບສິ່ງເສີມໃຫ້ນຳໃຊ້ສິ່ງເຫຼົ່ານີ້ໃຫ້ກວ້າງຂວາງກວ່າເກົ່າໂດຍການອະນຸຍາດ ແລະ ມີສ່ວນຮ່ວມຂອງເຈົ້າຂອງຕໍ່ກັບຄວາມຮູ້, ຫົວຄິດປະດິດສ້າງ ແລະ ຫຼັກການປະຕິບັດດັ່ງກ່າວ ແລະ ຊຸກຍູ້ໃຫ້ມີການແບ່ງປັນຜົນປະໂຫຍດທີ່ເກີດຈາກການນຳໃຊ້ຄວາມຮູ້, ຫົວຄິດປະດິດສ້າງ ແລະ ຫຼັກການປະຕິບັດດັ່ງກ່າວ ໃຫ້ເທົ່າທຽມກັນ.

## ເອຟພິກ (FPIC) ຢູ່ໃນຖະແຫຼງການຂອງສະຫະປະຊາຊາດຕໍ່ກັບສິດຂອງປະຊາຊົນພື້ນເມືອງ.

ຖະແຫຼງການຂອງສະຫະປະຊາຊາດຕໍ່ກັບສິດຂອງປະຊາຊົນພື້ນເມືອງ(UNDRIP) ມີນິຍາມ ເອຟພິກ ທີ່ສົມບູນທີ່ສຸດ. ຖະແຫຼງການປະກອບດ້ວຍຄຳໝັ້ນສັນຍາທີ່ເປັນທາງການທີ່ໜັກແໜ້ນກ່ຽວກັບສິດຂອງປະຊາຊົນພື້ນເມືອງເຊິ່ງລວມມີມາດຕາ 26 ໝວດ 1 ແລະ 2 ທີ່ກ່າວໄວ້ວ່າ:

1. ປະຊາຊົນພື້ນເມືອງມີສິດຕໍ່ກັບທີ່ດິນ, ອະນາເຂດ ແລະ ຊັບພະຍາກອນທີ່ເຂົາເຈົ້າເປັນເຈົ້າຂອງ, ຄອບຄອງ, ຫຼື ນຳໃຊ້ ຫຼື ໄດ້ມາອື່ນໆຕາມປະເພນີ.

2. ປະຊາຊົນພື້ນເມືອງມີສິດເປັນເຈົ້າຂອງ, ນຳໃຊ້, ພັດທະນາ ແລະ ຄວບຄຸມທີ່ດິນ, ອະນາເຂດ ແລະ ຊັບພະຍາກອນທີ່ເຂົາເຈົ້າຄອບຄອງດ້ວຍເຫດຜົນຂອງການເປັນເຈົ້າຂອງຕາມປະເພນີ ຫຼື ການຄອບຄອງ ຫຼື ການນຳໃຊ້ກໍ່ຄືການໄດ້ມາຕາມປະເພນີ ອື່ນໆ.

ດັ່ງນັ້ນ, ຖະແຫຼງການຢູເອັນດີອາໄອພີ (UNDRIP) ຈຶ່ງຕ້ອງການໃຫ້ມີການຈັດຕັ້ງປະຕິບັດເອຟພິກສຳລັບທຸກໆກິດຈະກຳທີ່ອາດຈະສົ່ງຜົນກະທົບ ຕໍ່ປະຊາຊົນພື້ນເມືອງ. ຍົກຕົວຢ່າງ, ມາດຕາ 10 ກ່າວໄວ້ວ່າ:

> ປະຊາຊົນພື້ນເມືອງຈະຕ້ອງບໍ່ຖືກບັງຄັບໃຫ້ຍົກຍ້າຍອອກຈາກທີ່ດິນ ຫຼື ອະນາເຂດຂອງເຂົາເຈົ້າ. ຈະບໍ່ມີການຍົກຍ້າຍໃດໆເກີດຂຶ້ນໄດ້ໂດຍປາສະຈາກຄວາມເຫັນດີເຫັນພ້ອມຢ່າງມີອິດສະຫຼະ ໂດຍມີການຮັບຮູ້ລ່ວງໜ້າຂອງປະຊາຊົນພື້ນເມືອງທີ່ກ່ຽວຂ້ອງ ຫຼື ຫຼັງຈາກມີການຕົກລົງຕໍ່ກັບການຊົດເຊີຍທີ່ໄດ້ຜ່ານຂະບວນການຍຸດຕິທຳ ແລະ ເປັນທຳເທົ່ານັ້ນ ແລະ ຖ້າເປັນໄປໄດ້ໃຫ້ມີທາງເລືອກກ່ຽວກັບຜົນຕອບແທນ.

ມາດຕາ 32 ໝວດ 2 ເນັ້ນໜັກວ່າມັນເປັນຄວາມຮັບຜິດຊອບຂອງລັດທີ່ຈະເຄົາລົບເອຟພິກເພື່ອທີ່ຈະປົກປ້ອງໂຄງການພັດທະນາຈາກການບັງຄັບປະຊາຊົນພື້ນເມືອງ:

> ລັດຈະຕ້ອງປຶກສາ ແລະ ຮ່ວມມື ໂດຍມີຄວາມໄວ້ວາງໃຈໃຫ້ປະຊາຊົນພື້ນເມືອງທີ່ກ່ຽວຂ້ອງ ຜ່ານສະຖາບັນຕົວແທນຂອງເຂົາເຈົ້າເພື່ອໃຫ້ໄດ້ຮັບຄວາມເຫັນດີເຫັນພ້ອມຢ່າງອິດສະຫຼະ ໂດຍມີການຮັບຮູ້ລ່ວງໜ້າກ່ອນທີ່ຈະອະນຸຍາດໂຄງການ ສົ່ງຜົນກະທົບ ຕໍ່ກັບທີ່ດິນ ຫຼື ອະນາເຂດ ແລະ ຊັບພະຍາອນອື່ນໆຂອງເຂົາເຈົ້າ, ໂດຍສະເພາະ ທີ່ພົວພັນກັບການພັດທະນາ, ການນຳໃຊ້ ຫຼື ການນຳໃຊ້ຜົນປະໂຫຍດຈາກບໍ່ແຮ່, ນ້ຳ ແລະ ຊັບພະຍາກອນອື່ນໆ.

ຖະແຫຼງການຢູເອັນດີອາໄອພີ (UNDRIP) ວາງຂໍ້ຜູກມັດເພື່ອຮັບປະກັນໃຫ້ມີຄວາມເຫັນດີເຫັນພ້ອມຢ່າງມີອິດສະຫຼະທີ່ມີການຮັບຮູ້ລ່ວງໜ້າຕໍ່ກັບລັດ, ເຊິ່ງຮຽກຮ້ອງໃຫ້ລັດໄດ້ປຶກສາ ແລະ ຮ່ວມມືໂດຍມີຄວາມ ໄວ້ເນື້ອເຊື່ອໃຈກັບປະຊາຊົນພື້ນເມືອງຜູ້ທີ່ມີສ່ວນກ່ຽວຂ້ອງຜ່ານສະຖາບັນຕົວແທນຂອງເຂົາເຈົ້າເອງ. ຖະແຫຼງການຢູເອັນດີອາໄອພີ ຍັງຮຽກຮ້ອງໃຫ້: ກ່ອນມີການຮັບຮອງ ແລະ ຈັດຕັ້ງປະຕິບັດມາດຕະການ ດ້ານນິຕິກຳ ຫຼື ດ້ານການບໍລິຫານທີ່ອາດຈະສົ່ງຜົນກະທົບຕໍ່ປະຊາຊົນພື້ນເມືອງ, ລັດຈຳຕ້ອງໄດ້ປຶກສາ ແລະ ຮ່ວມມືໂດຍມີຄວາມໄວ້ເນື້ອເຊື່ອໃຈກັບປະຊາຊົນພື້ນເມືອງຜ່ານສະຖາບັນຕົວແທນຂອງເຂົາເຈົ້າເພື່ອທີ່ຈະໄດ້ຄວາມເຫັນດີ

ເຫັນພ້ອມຢ່າງມີອິດສະຫຼະທີ່ມີການຮັບຮູ້ລ່ວງໜ້າ (ມາດຕາ19). ດັ່ງທີ່ໄດ້ກ່າວໄວ້ວ່າ, ເຈົ້າຂອງໂຄງການໃດກໍຕາມທີ່ອາດຈະສົ່ງຜົນກະທົບຕໍ່ກັບປະຊາຊົນພື້ນເມືອງແມ່ນຈຳເປັນຕ້ອງຮັບປະກັນວ່າໄດ້ປະຕິບັດຕາມອົງປະກອບທັງໝົດຂອງ ເອຟພິກ.

ແຜນງານການຈັດຕັ້ງປະຊາຄົມສັງຄົມ ແລະ ວັດທະນາທຳອາຊຽນ ລວມມີການໂຕ້ຕອບຕໍ່ການປ່ຽນແປງດິນຟ້າອາກາດ ແລະ ການແກ້ໄຂຜົນກະທົບຈາກການປ່ຽນແປງດັ່ງກ່າວໂດຍການສະເໜີໃຫ້ລັດຖະບານທີ່ເປັນສະມາຊິກ[12] ມີການເຄື່ອນໄຫວ. ເຖິງແມ່ນວ່າບໍ່ມີການອ້າງເຖິງເອຟພິກກໍຕາມ, ແຜນງານນີ້ເນັ້ນເຖິງຄວາມເປັນຫ່ວງກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນ ແລະ ສະໜັບສະໜູນໃຫ້ຊຸມຊົນມີສ່ວນຮ່ວມ ໃນການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ. ເວົ້າລວມແລ້ວ, ມັນເປັນການຊຸກຍູ້ໃຫ້ມີການເຂົ້າຮ່ວມຂອງລັດຖະບານ, ພາກເອກະຊົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ, ແລະ ຊຸມຊົນຕ່າງໆເພື່ອແກ້ໄຂຜົນກະທົບໃນການປ່ຽນແປງດິນຟ້າອາກາດ. ຍຸດທະສາດຂອງແຜນງານການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ລວມມີການສົ່ງເສີມການຄຸ້ມຄອງປ່າໄມ້ທີ່ໃຫ້ຊຸມຊົນທີ່ອາໄສຢູ່ໃນ ແລະ ຢູ່ໃກ້ກັບປ່າໄມ້ ມີສ່ວນຮ່ວມເຮັດໃຫ້ປ່າໄມ້ມີຄວາມຍືນຍົງ ແລະ ເພື່ອຄວາມຜາສຸກຂອງປະຊາຊົນ.

## ເອຟພິກ (FPIC) ໃນກອບອານຸສັນຍາຂອງສະຫະປະຊາຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC)

ເອກະສານແນບທ້າຍ 1 ຂອງຂໍ້ຕົກລົງກ່ຽວກັບກຸ່ມຄົ້ນຄ້ວາວິຊາການສະເພາະກິດ -/CP16 ຮຽກຮ້ອງໃຫ້ມີ 'ການສົ່ງເສີມ' ແລະ 'ການສະໜັບສະໜູນ' ການປົກປ້ອງສິດຂອງປະຊາຊົນພື້ນເມືອງ ແລະ ຂອງຊຸມຊົນທ້ອງຖິ່ນດັ່ງທີ່ຢູເອັນດີອາໄອພີ (UNDRIP) ຂອງສະພາໃຫຍ່ອົງການສະຫະປະຊາຊາດໄດ້ຮັບຮອງໄວ້. ຂໍ້ຄວາມນີ້ເປັນພຽງພັນທະສ່ວນໜຶ່ງຕໍ່ກັບ ເອຟພິກ ເທົ່ານັ້ນ, ເພາະວ່າ ມັນຈະຖືກຕີຄວາມໝາຍຢູ່ໃນກອບຂອງກົດໝາຍແຫ່ງຊາດ ແລະ ສະພາບເງື່ອນໄຂໃນແຕ່ລະປະເທດ.

ເຖິງແມ່ນວ່າການສະໜອງເງິນໃຫ້ແກ່ວຽກງານເຣດໃນລະດັບສາກົນ ແມ່ນກາຍເປັນສິ່ງທີ່ຂຶ້ນຢູ່ກັບການທົດລອງໃນຂະບວນການສ້າງຄວາມເຫັນດີເຫັນພ້ອມທີ່ຖືກກວດສອບຢັ້ງຢືນ, ຄຳຖາມວ່າໃຜມີສິດໃຫ້ ຫຼື ປະຕິເສດການເຫັນດີເຫັນພ້ອມຈະຖືກກຳນົດພາຍໃຕ້ກົດໝາຍແຫ່ງຊາດ.

## ເອຟພິກ (FPIC) ຢູ່ໃນແຜນງານການຮ່ວມມືຂອງສະຫະປະຊາຊາດຕໍ່ກັບວຽກງານເຣດ (UN-REDD)

ຢູເອັນ-ເຣດ(UN-REDD)ໄດ້ຮັບຮອງເອົາແນວທາງການດຳເນີນງານກ່ຽວກັບການເອົາປະຊາຊົນພື້ນເມືອງເຂົ້າມາມີສ່ວນຮ່ວມໃນວຽກງານ ເຣດ+ ທີ່ອີງໃສ່ຖະແຫຼງການ ຢູເອັນດີອາໄອພີ (UNDRIP) ແລະ ພັນທະໃນການສ້າງຄວາມເຫັນດີເຫັນພ້ອມຢ່າງອິດສະຫຼະ ໂດຍມີການຮັບຮູ້ລ່ວງໜ້າ ໃນກິດຈະກຳ ເຣດ+[13]. ຍ້ອນແນວນັ້ນ, ແຜນງານຢູເອັນ-ເຣດ ຈຶ່ງໄດ້ຈັດກອງປະຊຸມວິຊາການໃນລະດັບພາກພື້ນໃນປັດຈຸບັນເພື່ອຊອກຫາວິທີທາງທີ່ຮັບປະກັນການຈັດຕັ້ງປະຕິບັດ ເອຟພິກ ຢ່າງຖືກຕ້ອງ.

---

12 ແຜນງານການຈັດຕັ້ງປະຊາຄົມສັງຄົມ ແລະ ວັດທະນາທຳອາຊຽນ (ASEAN): ນະຄອນຈາກາຕາ, ກອງເລຂາອາຊຽນ (ASEAN) ເດືອນມິຖຸນາ 2009. ແຜນງານ ແມ່ນເກີດມາຈາກກົດບັນຍັດຂອງອາຊຽນ (ASEAN), ເຊິ່ງມີອົງປະກອບທີ່ກ່ຽວຂ້ອງກັບບັນຫາທາງດ້ານ ເສດຖະກິດ, ການເມືອງ, ສັງຄົມ ແລະ ວັດທະນາທຳ

.

13 UN-REDD Programme, Working Document, 2009. *UN-REDD Programme Operational Guidance: Engagement of Indigenous Peoples and Other Forest Dependent Communities,* page 8: "2. Free, Prior, and Informed Consent must be adhered to, and is essential to ensuring the full and effective participation of Indigenous Peoples and other forest dependent communities in policymaking and decision-making processes within UNREDD Programme activities." www.un-redd.org

# ເອຟພິກ (FPIC) ຢູ່ໃນແຜນງານອຳນວຍຄວາມສະດວກໃນການຮ່ວມງານດ້ານກາກບອນປ່າໄມ້ (FCPF) ແລະ ແຜນງານການລົງທຶນດ້ານປ່າໄມ້ (FIP)

ແຜນງານອຳນວຍຄວາມສະດວກໃນການຮ່ວມງານດ້ານກາກບອນປ່າໄມ້ທີ່ນຳໂດຍທະນາຄານໂລກ (FCPF) ແລະ ແຜນງານການລົງທຶນດ້ານປ່າໄມ້ (FIP) ແມ່ນປະຕິບັດຕາມເງື່ອນໄຂທີ່ຂາດການເຊື່ອມໂຍງຂະບວນການເອຟພິກ. ແທນທີ່ຈະຕ້ອງປຶກສາຫາລືແບບອິດສະຫຼະທີ່ມີການຮັບຮູ້ລ່ວງໜ້າ (FPICon) ແນໃສ່ເພື່ອໃຫ້ໄດ້ຮັບການສະໜັບສະໜູນຈາກຊຸມຊົນຢ່າງກວ້າງຂວາງ[14] [15]. ນີ້ເປັນເງື່ອນໄຂທີ່ມີຂໍ້ຈຳກັດ ແລະ ຕັດສິນປ່ອຍໃຫ້ພະນັກງານຂອງທະນາຄານໂລກໄດ້ຕັດສິນວ່າການປຶກສາຫາລືໄດ້ຮັບ ການສະໜັບສະໜູນຈາກຊຸມຊົນຢ່າງກວ້າງຂວາງ ຫຼື ບໍ່.

ມີຄວາມເປັນໄປໄດ້ວ່າການເຄື່ອນໄຫວ ຂອງແຜນງານ ຢູເອັນ - ເຣດ (UN-REDD) ແລະ ທະນາຄານໂລກ (FCPF ແລະ FIP)ຈະມີຄວາມກົມກຽວກັນ. ຖ້າສິ່ງດັ່ງກ່າວເກີດຂຶ້ນແທ້, ຄວາມທ້າທາຍຫຼັກໆສຳລັບປະຊາຊົນພື້ນເມືອງ ແລະ ກຸ່ມສະໜັບສະໜູນຈະຕ້ອງຮັບປະກັນວ່າມາດຕະຖານຂອງແຜນງານ ຢູເອັນເຣດ, ລວມມີ ເອຟພິກ, ຊຶ່ງນຳໃຊ້ໄດ້ໃນປະເທດເຫຼົ່ານັ້ນບ່ອນທີ່ມີສອງອົງກອນດຳເນີນງານຮ່ວມກັນ, ດີກວ່າຈະເລືອກເອົາມາດຕະຖານເອຟພິກຂອງທະນາຄານໂລກທີ່ມີຈຸດອ່ອນຫລາຍກວ່າ.

# ເອຟພິກ (FPIC) ຢູ່ໃນມາດຕະຖານຂອງຕະຫຼາດເຣດ+ (REDD+) ແບບສະໝັກໃຈ

ເຈົ້າຂອງໂຄງການທີ່ເຮັດທົດລອງດ້ານເຣດ+ (REDD+) ສ່ວນໃຫຍ່ຕ້ອງການນຳໃຊ້ທັງສອງມາດ ຕະຖານແບບສະໝັກໃຈເປັນຕົ້ນຕໍຄື: ມາດຕະຖານກາກບອນແບບສະໝັກໃຈ (VCS) ແລະ ມາດຕະຖານໂຄງການກ່ຽວກັບດິນຟ້າອາກາດ, ຊຸມຊົນ ແລະ ຊີວະນາໆພັນ (CCCBS). ມາດຕະຖານກາກບອນແບບສະໝັກໃຈເປັນມາດຕະຖານທີ່ຕ້ອງການວິທີການທີ່ລະອຽດເພື່ອປະເມີນກາກບອນ ແລະ ການປ່ຽນແປງ/ການປ່ອຍອາຍພິດກາກບອນໃນລະບົບນິເວດ. ດັ່ງນັ້ນ,ຈຶ່ງເປັນການຊ່ວຍຜູ້ທີ່ຕ້ອງການ ເພື່ອດຶງດູດການລົງທຶນສຳລັບເຮັດການທົດລອງ ເຣດ+ ແລະ ຂາຍການຫຼຸດຜ່ອນການປ່ອຍອາຍພິດທີ່ໄດ້ຜ່ານການກວດສອບຢັ້ງຢືນ. ສ່ວນມາດຕະຖານດ້ານດິນຟ້າອາກາດ, ຊຸມຊົນ ແລະ ຊີວະນາໆພັນ (CCB) ໄດ້ຖືກສ້າງຂຶ້ນເພື່ອຊ່ວຍຜູ້ພັດທະນາໂຄງການ ແລະ ຜູ້ມີສ່ວນກ່ຽວຂ້ອງອື່ນໆ (ຊຸມຊົນ, ອົງການຈັດ ຕັ້ງທີ່ບໍ່ສັງກັດລັດ, ນັກລົງທຶນໂຄງການ, ຜູ້ຊື້, ແລະ ລັດຖະບານ) ເພື່ອອອກແບບໂຄງການໃຫ້ສາມາດ ຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວໄດ້ຢ່າງເຕັມຄວາມສາມາດ ແລະ ມີຄວາມເຊື່ອໝັ້ນ, ເພື່ອຮັບປະ ກັນໃຫ້ມີຜົນປະໂຫຍດແກ່ຊຸມຊົນ ແລະ ຊີວະນາໆພັນ. ມາດຕະຖານດ້ານດິນຟ້າອາກາດ, ຊຸມຊົນ ແລະ ຊີວະນາໆພັນຕ້ອງການການປະເມີນໜຶ່ງຄັ້ງເພື່ອການກວດສອບໄລຍະນຳໃຊ້ ແລະ ຫຼັງຈາກນັ້ນເປັນການກວດສອບຢັ້ງຢືນຢ່າງໜ້ອຍທຸກ 5 ປີ ຫຼັງຈາກການຈັດຕັ້ງປະຕິບັດໂຄງການ. ມາດຕະຖານກາກບອນແບບສະໝັກໃຈຕ້ອງການໃຫ້ມີການຕິດຕາມທຸກໆປີ ເພື່ອກຳນົດການຫຼຸດຜ່ອນການປ່ອຍອາຍພິດ. ມາດຕະຖານກາກບອນແບບສະໝັກໃຈ ແມ່ນອີງໃສ່ການປຶກສາຫາລືກັບຊຸມຊົນແຕ່ບໍ່ຈະແຈ້ງກ່ຽວກັບຄວາມຈຳເປັນສຳລັບ ເອຟພິກ.

---

14 While FCPF does not officially support FPIC, its guidance on participation and consultation states that: *"Countries that have signed on to the UN Declaration on the Rights of Indigenous Peoples will be expected to adhere to the principles of free, prior and informed consent (FPIC)"*. Page 3, Note FMT 2009-2, Forest Carbon Partnership Facility (FCPF) Readiness Mechanism National Consultation and Participation for REDD May 6, 2009.

15 *Design Document for the Forest Investment Program, A Targeted Program Under the SCF Trust Fund, 2009.* Annex III - Guidelines for Consultations to be carried out in accordance with subparagraph 16(d) of the Design Document for the Forest Investment Program, page 20, Available at: www.climateinvestmentfunds.org

ມາດຕະຖານດ້ານດິນຟ້າອາກາດ, ຊຸມຊົນ ແລະ ຊີວະນາໆພັນທີ່ມີໃນປັດຈຸບັນ ລະບຸຢູ່ພາຍໃຕ້ໝວດກ່ຽວກັບ 'ສະຖານະທາງດ້ານກົດໝາຍ ແລະ ກຳມະສິດ' ທີ່ເຈົ້າຂອງໂຄງການຈຳເປັນຕ້ອງ "ສະແດງ ໂດຍການປຶກສາຫາລືທີ່ມີການບັນທຶກໄວ້ເປັນລາຍລັກອັກສອນ…ໄດ້ຮັບຄວາມເຫັນດີເຫັນພ້ອມຢ່າງອິດສະຫຼະໂດຍມີການຮັບຮູ້ລ່ວງໜ້າກັບຜູ້ທີ່ສິດຂອງເຂົາເຈົ້າຈະໄດ້ຮັບຜົນກະທົບຈາກໂຄງການ" ເຊິ່ງຈະຕ້ອງໃຫ້ສອດຄ່ອງກັບຖະແຫຼງການຢູເອັນດີອາໄອພີ (UNDRIP). ທຸກການຍົກຍ້າຍຖິ່ນຖານ ຫຼື ກິດຈະກຳຂອງຊຸມຊົນຈຳເປັນຕ້ອງມີເອຟພິກ ແລະ ຕ້ອງມີການຊົດເຊີຍທີ່ສົມເຫດສົມຜົນ ແລະ ມີຄວາມເປັນທຳ[16].

ໃນເດືອນມິຖຸນາ, ປີ 2010, ຝ່າຍພັນທະມິດມາດຕະຖານດ້ານດິນຟ້າອາກາດ, ຊຸມຊົນ ແລະຊີວະນາໆພັນ ແລະ ອົງການແຄ (CARE) ສາກົນ ໄດ້ສ້າງມາດຕະຖານສະບັບສຸດທ້າຍສຳລັບແຜນງານ ເຣດ+, ເພື່ອນຳໃຊ້ໃນແຜນງານ ເຣດ+ ຂອງລັດຖະບານ[17]. ມາດຕະຖານດ້ານສັງຄົມ ແລະ ສະພາບ ແວດລ້ອມຂອງ ເຣດ+ ໄດ້ຖືກສ້າງຂຶ້ນເພື່ອນຳໃຊ້ໃນກິດຈະກຳການທົດລອງ ພາຍໃຕ້ສັນຍາໃນອະນາຄົດ ຫຼື ກົນໄກແບບສະໝັກໃຈ, ແລະຄາດວ່າຈະເປັນເຄື່ອງມືໃຫ້ແກ່ລັດຖະບານ ເພື່ອຕິດຕາມໂຄງການ ເຣດ+ ພາຍໃນຂອບເຂດການປົກຄອງຂອງເຂົາເຈົ້າ.

## ມາດຕະຖານດ້ານສັງຄົມ ແລະ ສະພາບແວດລ້ອມຂອງ ເຣດ+ (REDD+)

ຫຼັກການ 1: ຮັບຮູ້ ແລະ ເຄົາລົບສິດຕໍ່ກັບທີ່ດິນ, ອະນາເຂດ, ແລະ ຊັບພະຍາກອນໂດຍແຜນງານ ເຣດ+

ແຜນງານ ເຣດ+ ຕ້ອງການໃຫ້ມີຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະໂດຍການຮັບຮູ້ລ່ວງໜ້າຂອງປະຊາຊົນພື້ນເມືອງ ແລະ ບັນດາຊຸມຊົນທ້ອງຖິ່ນ ສຳລັບກິດຈະກຳໃດກໍ່ຕາມທີ່ສົ່ງຜົນກະທົບຕໍ່ສິດ, ທີ່ດິນ, ອະນາເຂດ ແລະ ຊັບພະຍາກອນຕ່າງໆຂອງເຂົາເຈົ້າ.

- ນະໂຍບາຍກ່ຽວກັບແຜນງານ ເຣດ+ ສະໜັບສະໜູນຫຼັກການໃນການເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍການຮັບຮູ້ລ່ວງໜ້າຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນສຳລັບກິດຈະກຳໃດກໍ່ຕາມທີ່ສົ່ງຜົນກະທົບຕໍ່ສິດ, ທີ່ດິນ, ອະນາເຂດ ແລະ ຊັບພະຍາກອນຕ່າງໆຂອງເຂົາເຈົ້າ.
- ແຜນງານ ເຣດ+ ມີການເຜີຍແຜ່ຂໍ້ມູນຢ່າງມີປະສິດທິພາບກ່ຽວກັບຄວາມຕ້ອງການໃນການເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍການຮັບຮູ້ລ່ວງໜ້າຂອງປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນສຳລັບກິດຈະກຳໃດກໍ່ຕາມທີ່ສົ່ງຜົນກະທົບຕໍ່ສິດ, ທີ່ດິນ, ອະນາເຂດ ແລະ ຊັບພະຍາກອນຕ່າງໆຂອງເຂົາເຈົ້າ.
- ຜູ້ຖືສິດລວມໝູ່ກຳນົດຂະບວນການທີ່ສາມາດກວດສອບຢັ້ງຢືນໄດ້ໃນການໄດ້ຮັບເອົາຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍການຮັບຮູ້ລ່ວງໜ້າ ເຊິ່ງລວມມີການກຳນົດຜູ້ຕາງໜ້າ ແລະ ສະຖາບັນຕາມປະເພນີທີ່ມີສິດໃຫ້ຄວາມເຫັນດີເຫັນພ້ອມທີ່ເປັນຕົວແທນຂອງເຂົາເຈົ້າ.
- ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍການຮັບຮູ້ລ່ວງໜ້າແມ່ນໄດ້ມາຈາກປະຊາຊົນພື້ນເມືອງທີ່ສອດຄ່ອງກັບຕາມປະເພນີ, ຫຼັກການປະຕິບັດ ແລະ ປະເພນີສຳລັບກິດຈະກຳທີ່ອາດຈະສົ່ງຜົນກະທົບຕໍ່ສິດຂອງເຂົາເຈົ້າໂດຍສະເພາະສິດໃນການເປັນເຈົ້າຂອງ ແລະ ຄຸ້ມຄອງທີ່ດິນ, ອະນາເຂດ ແລະ ຊັບພະຍາກອນຕ່າງໆ.
- ຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍການຮັບຮູ້ລ່ວງໜ້າແມ່ນໄດ້ມາຈາກສະມາຊິກຂອງຊຸມຊົນທ້ອງຖິ່ນສຳລັບທຸກໆກິດຈະກຳທີ່ສົ່ງຜົນກະທົບຕໍ່ສິດຕາມປະເພນີ ຫຼື ສິດອື່ນໆຂອງເຂົາເຈົ້າຕໍ່ກັບທີ່ດິນ, ອະນາເຂດ ແລະຊັບພະຍາກອນຕ່າງໆຕາມຂັ້ນຕອນທີ່ຍອມຮັບຂອງທັງສອງຝ່າຍ.
- ບ່ອນທີ່ມີການຍົກຍ້າຍ ຫຼື ຍ້າຍອອກ ບໍ່ວ່າຈະມີວັດຖຸ ຫຼື ເສດຖະກິດ, ເກີດຂຶ້ນຈະຕ້ອງສອດຄ່ອງຕາມຄວາມເຫັນດີເຫັນພ້ອມຢ່າງເປັນອິດສະຫຼະ ໂດຍການຮັບຮູ້ລ່ວງໜ້າ, ແມ່ນຈະຕ້ອງມີຂໍ້ຕົກລົງລ່ວງໜ້າກ່ຽວກັບການສະໜອງທີ່ດິນ ແລະ/ຫຼື ການຊົດເຊີຍທີ່ມີຄວາມຍຸດຕິທຳ ແລະ ສິດທີ່ຈະກັບມາຄືນເມື່ອເຫດຜົນຂອງການຍ້າຍອອກໄດ້ຖືກຍົກເລີກ.

ຈາກ: www.climate-standards.org

16 Climate, Community & Biodiversity Project Design Standards, 2008. Second Edition, CCBA, Arlington, VA, USA.

17 CCBA REDD+ Social and Environmental Standards, 2010. CCBA, Arlington, VA, USA.

ມາດຕະຖານທາງດ້ານສັງຄົມ ແລະ ສະພາບແວດລ້ອມຂອງ ເຣດ+ ໝາຍເຖິງຄວາມຈຳເປັນໃນການເຄົາລົບສິດຂອງຜູ້ມີບົດບາດທີ່ໄດ້ຮັບຜົນກະທົບຕາມລຳດັບເຊັ່ນ: ຜູ້ຖືສິດ - ຜູ້ທີ່ອາດຈະໄດ້ຮັບຜົນກະທົບ; ແລະ ຜູ້ມີສ່ວນກ່ຽວຂ້ອງ - ຜູ້ທີ່ຜົນປະໂຫຍດ ອາດຈະໄດ້ຮັບຜົນກະທົບ. ມາດຕະຖານລະບຸໄວ້ວ່າ ໂຄງການ ເຣດ+ ຄວນຈະຕ້ອງຍອມຮັບ ແລະ ເຄົາລົບສິດທັງສອງຢ່າງຄື: ສິດຕາມກົດໝາຍ ແລະ ສິດຕາມປະເພນີຕໍ່ກັບທີ່ດິນຕາມຄວາມຕ້ອງການສຳລັບ ເອຟພິກ. 8 ຫຼັກການ ແລະ ເງື່ອນໄຂມາດຖານທີ່ກ່ຽວຂ້ອງ ແມ່ນພົວພັນກັບທຸກໆປະເທດ. ເຖິງແນວໃດກໍຕາມ, ຈະຕ້ອງກວດສອບຢັ້ງຢືນໄດ້ໃນລະດັບຕົວຊີ້ບອກ, ທີ່ກຳນົດໄວ້ໃນກອບຂອງມາດຕະຖານ ແລະ ຂຶ້ນຢູ່ກັບການຕີຄວາມໝາຍຂອງແຕ່ລະປະເທດ.

## ກົດໝາຍສາກົນອື່ນໆ ກ່ຽວກັບສິດທິມະນຸດ

ເມື່ອບໍ່ໄດ້ກ່າວເຖິງ ເອຟພິກ ໂດຍສະເພາະ, ມີອົງການຈັດຕັ້ງກ່ຽວກັບກົດໝາຍ ແລະ ເຄື່ອງມືສາກົນທີ່ປົກປ້ອງສິດທິມະນຸດ ເຊິ່ງໃນນັ້ນ ມີຫຼາຍຫຼັກການຄືກັນກັບທີ່ຢູ່ໃນ ເອຟພິກ. ຂະບວນການເຂັ້ມແຂງທີ່ເຄົາລົບສິດຕໍ່ກັບ ເອຟພິກ ຈະປົກປ້ອງການກ່າວຫາກ່ຽວກັບການຝ່າຝືນຕໍ່ສົນທິສັນຍາກ່ຽວກັບສະພາບແວດລ້ອມ ຫຼື ສິດທິມະນຸດ.

ມີ 8 ອົງການຈັດຕັ້ງກ່ຽວກັບສົນທິສັນຍາດ້ານສິດທິມະນຸດທີ່ຕິດຕາມການຈັດຕັ້ງປະຕິບັດບັນດາສົນທິສັນຍາສາກົນອັນສຳຄັນກ່ຽວກັບສິດທິມະນຸດ:

- ຄະນະກຳມະການສິດທິມະນຸດ (CCPR)
- ຄະນະກຳມະການກ່ຽວກັບສິດທິທາງດ້ານສັງຄົມ, ເສດຖະກິດ ແລະ ວັດທະນາທຳ (CESCR)
- ຄະນະກຳມະການກ່ຽວກັບການລົບລ້າງການຈຳແນກເຊື້ອຊາດເຜົ່າພັນ (CERD)
- ຄະນະກຳມະການກ່ຽວກັບການລົບລ້າງການຈຳແນກຕໍ່ແມ່ຍິງ (CEDAW)
- ຄະນະກຳມະການຕ້ານການໃຊ້ຄວາມຮຸນແຮງ (CAT) ແລະ ຫຼັກການປະຕິບັດທີ່ເປັນທາງເລືອກໃນສົນທິສັນຍາກ່ຽວກັບຕ້ານການໃຊ້ຄວາມຮຸນແຮງ (OPCAT) - ອະນຸກຳມະທິການກ່ຽວກັບການປ້ອງກັນການໃຊ້ຄວາມຮຸນແຮງ (SPT)
- ຄະນະກຳມະການກ່ຽວກັບສິດທິຂອງເດັກນ້ອຍ (CRC)
- ຄະນະກຳມະການກ່ຽວກັບກຳມະກອນຊາວອົບພະຍົບ (CMW)
- ຄະນະຄະກຳມະການກ່ຽວກັບສິດທິຂອງຄົນເສຍອົງຄະ (CRPD)

## ກອບກົດໝາຍ ແລະ ການບໍລິຫານ ລະດັບຊາດ

ພື້ນຖານດ້ານກົດໝາຍສຳລັບ ເອຟພິກ ໃນແຕ່ລະປະເທດຈະໄດ້ຮັບອິດທິພົນຈາກກົດໝາຍ ແລະ ຫລັກການທີ່ນຳໃຊ້ໃນລະດັບຊາດ ແລະ ທ້ອງຖິ່ນ. ຊຶ່ງອາດຈະລວມມີກົດໝາຍທີ່ສ້າງຂຶ້ນ ຊຶ່ງເປັນຜົນມາຈາກການຢັ້ງຢືນຂອງຖະແຫຼງການ ແລະ ສົນທິສັນຍາຂອງສາກົນ, ແຕ່ວ່າ ຍັງອາດຈະລວມມີກົດໝາຍກ່ຽວກັບສິດທິມະນຸດ, ການເຂົ້າເຖິງຂໍ້ມູນ, ການວາງແຜນໃນແຕ່ລະໄລຍະ, ປ່າໄມ້, ການພັດທະນາ, ແລະ ອື່ນໆ. ມັນມີຄວາມສຳຄັນທີ່ຈະຮັບຮູ້ວ່າຫລັກການກ່ຽວກັບການອອກໃບອະນຸຍາດໃຫ້ແກ່ໂຄງການ ແລະ ຂະບວນການເພື່ອເຄົາລົບສິດຕໍ່ກັບ ເອຟພິກ. ອາດຈະມີການຫລັກການ (ເຊັ່ນວ່າ: ຂໍ້ຈຳກັດທາງດ້ານເວລາພາຍໃນຂະບວນການອອກໃບອະນຸຍາດ) ທີ່ຈຳກັດເວລາທີ່ມີ ເພື່ອໃຫ້ໄດ້ຮັບເອົາຄວາມເຫັນດີເຫັນພ້ອມຈາກຊຸມຊົນ. ເປັນໄປບໍ່ໄດ້ທີ່ຈະໃຫ້ບັນຊີລາຍການກວດສອບທີ່ຈະນຳໃຊ້ໃນແຕ່ລະປະເທດ. ເຈົ້າຂອງໂຄງການແຕ່ລະຄົນຈຳເປັນຕ້ອງຜ່ານຂະບວນການຕາມຂັ້ນຕອນທີ່ກົດໝາຍໄດ້ກຳນົດໄວ້ ເພື່ອຊອກຮູ້ຂໍ້ຜູກມັດດ້ານກົດໝາຍ ແລະ ຄວາມສ່ຽງ ແລະ ຄວາມຕ້ອງການດ້ານລະບຽບການໃນປະເທດທີ່ໂຄງການຕັ້ງຢູ່.

ອຳນາດການປົກຄອງທ້ອງຖິ່ນເປັນອີກພາກສ່ວນໜຶ່ງທີ່ມີບົດບາດສຳຄັນສຳລັບ ເຣດ+, ໂດຍສະເພາະໃນການຮັບປະກັນວ່າບັນຫາທາງດ້ານສັງຄົມຈະໄດ້ຮັບການພິຈາລະນາຢ່າງຖືກຕ້ອງ ໃນຂະບວນການ ເຣດ+. ການກະຈາຍອຳນາດລົງສູ່ຮາກຖານ ໃນປັດຈຸບັນຢູ່ບາງປະເທດອາຊີຕາເວັນອອກສ່ຽງໃຕ້ ແມ່ນຄ່ອຍໆໃຫ້ຊຸມຊົນທ້ອງຖິ່ນສາມາດເຂົ້າເຖິງ ແລະ ຄວບຄຸມຊັບພະຍາກອນປ່າໄມ້ ໄດ້ຫລາຍຂຶ້ນ, ມີທັງຜົນປະໂຫຍດທີ່ເປັນຮູບປະທຳ ແລະ ນາມມະທຳ.

# ເອກະສານແນບທ້າຍ 2: ສັງລວມສິ່ງທີ່ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຈຳເປັນຕ້ອງຮູ້

ການສັງລວມຂໍ້ມູນທີ່ປະຊາຊົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນຈຳເປັນຕ້ອງຮູ້, ແລະ ອາດຈະນຳໃຊ້ເປັນລາຍການກວດສອບພື້ນຖານໃຫ້ແກ່ເຈົ້າຂອງໂຄງການມີດັ່ງຕໍ່ໄປນີ້:

## ການກະກຽມເພື່ອປະສານງານກັບຜູ້ຖືສິດ

**ສ່ວນປະກອບ 1: ການກຳນົດແຜນທີ່ ກ່ຽວກັບສິດ, ຜູ້ຖືສິດ ແລະ ການນຳໃຊ້ທີ່ດິນ**

- ເຂົາເຈົ້າມີສິດກຳນົດແຜນທີ່ເຂດແດນ ແລະ ເຈລະຈາໃຫ້ເກີດມີຄວາມພໍໃຈຂອງທັງສອງຝ່າຍ;
- ເຂົາເຈົ້າມີສິດທີ່ຈະຮັກສາຄວບຄຸມແຜນທີ່ ແລະ ກຳນົດຂໍ້ມູນທີ່ຈະຕ້ອງລວບລວມໄວ້ ແລະ ໃຜທີ່ ສາມາດເຂົ້າເຖິງຂໍ້ມູນ;
- ເຂົາເຈົ້າມີສິດປະຕິເສດການເຂົ້າຮ່ວມໃນການຖ່າຍທອດຄວາມຮູ້ຂອງເຂົາເຈົ້າເຂົ້າໃສ່ແບບຟອມເປັນລາຍລັກອັກສອນ ຫື ບັນທຶກ;
- ເຂົາເຈົ້າມີສິດສົ່ງເສີມການຍອມຮັບທາງດ້ານກົດໝາຍຕໍ່ກັບເຂດແດນ ແລະ ສິດຂອງເຂົາເຈົ້າຕໍ່ກັບ ທີ່ດິນ ຫລື ອານາເຂດ; ແລະ
- ປະຊາຊົນ ທີ່ບໍ່ໄດ້ເຂົ້າຮ່ວມໂດຍກົງໃນການສ້າງແຜນທີ່ການເຄື່ອນໄຫວ ຈຳເປັນຕ້ອງໄດ້ຮັບຮູ້ກ່ຽວກັບ ແລະ ເຫັນດີເຫັນພ້ອມຕໍ່ກັບເຂດແດນ ແລະ ຜູ້ຖືສິດທີ່ໄດ້ກຳນົດໄວ້, ໂດຍສະເພາະບັນດາຊຸມຊົນໃກ້ຄຽງ.

**ສ່ວນປະກອບ 2: ກຳນົດສະຖາບັນທີ່ເໝາະສົມໃນການຕັດສິນໃຈ**

- ສິດທີ່ຈະຕັດສິນໃຈຂອງຄະນະຜູ້ຕ່າງໜ້າຂອງເຂົາເຈົ້າເອງ;
- ຂໍ້ຜູກມັດຂອງຜູ້ມີສ່ວນກ່ຽວຂ້ອງໃນໂຄງການ ແລະ ແຜນງານ ເຣດ+ (ເຊິ່ງລວມມີເຂົາເຈົ້າເອງ) ເພື່ອສົ່ງເສີມການປະຕິບັດທີ່ບໍ່ມີການຈຳແນກຕາມມາດຕະຖານທີ່ຮັບຮອງຈາກສາກົນ (ເຊັ່ນ: ມາດຕະຖານທາງດ້ານສັງຄົມ ແລະ ສິ່ງແວດລ້ອມຂອງ ເຣດ+);
- ສິດທີ່ຈະຊ່ວຍອຳນວຍຄວາມສະດວກຢ່າງເອກະລາດ ຖ້າຕ້ອງການພັດທະນາຄະນະຜູ້ຕາງໜ້າທີ່ເຂົາເຈົ້າຄິດວ່າຈະຊ່ວຍໃນການປະຕິບັດທາງດ້ານວັດທະນາທຳຂອງເຂົາເຈົ້າ ແລະ ຄວາມຕ້ອງການໃນການຕັດສິນໃຈ;
- ສິດໃນການຕັດສິນໃຈຕາມຫຼັກການຂອງ ເອຟພິກ; ແລະ
- ເຂົາເຈົ້າສາມາດຍຶດໝັ້ນ ຕໍ່ການກວດກາ ແລະ ຕໍ່ຄວາມສະເໝີພາບ ພາຍໃນຊຸມຊົນຂອງເຂົາເຈົ້າເອງເມື່ອມີການກີດກັ້ນໃນການຕັດສິນໃຈ ຫຼື ມີການໃຊ້ອຳນາດໃນທາງທີ່ຜິດ.

### ສ່ວນປະກອບ 3: ກຳນົດໂຄງປະກອບການຊ່ວຍເຫຼືອ ສຳລັບສິ່ງເສີມສິດ ຂັ້ນສູນກາງ

- ຜົນຂອງການເຂົ້າຮ່ວມໃນຂະບວນການເພື່ອເຄົາລົບສິດຕໍ່ກັບ ເອຟພິກ ບ່ອນທີ່ສິດຂອງເຂົາເຈົ້າ ຕໍ່ກັບທີ່ດິນ ຫຼື ຊັບພະຍາກອນ ບໍ່ໄດ້ຖືກຮັບຮູ້ທາງກົດໝາຍໃນລະດັບຊາດ, ເຊັ່ນ: ການຕັດສິນໃຈ ອາດບໍ່ຖືກສົ່ງເສີມ ຫຼື ຂຶ້ນກັບສິ່ງຕ້ອງໃຊ້;
- ການເຈລະຈາໂດຍມີຄວາມໄວ້ເນື້ອເຊື່ອໃຈກັນ ຈຳເປັນຕ້ອງໃຫ້ຈະແຈ້ງກ່ຽວກັບສິດທີ່ເຈົ້າຂອງໂຄງການສາມາດ ແລະ ຈະສົ່ງເສີມ;
- ຄວາມສຳຄັນໃນການສືບຕໍ່ສະໜັບສະໜູນສຳລັບສິດຕໍ່ທີ່ດິນ/ຊັບພະຍາກອນ;
- ຊຸມຊົນສາມາດກຳນົດກ່ຽວກັບໂຄງປະກອບການຊ່ວຍເຫຼືອໃນລະດັບຊາດ ໃນປະເທດຂອງເຂົາເຈົ້າໄດ້ແນວໃດ (ການຊ່ວຍເຫຼືອ ທາງດ້ານກົດໝາຍ, ການຊ່ວຍເຫຼືອສັງຄົມ); ແລະ
- ຊຸມຊົນມີສິດປຶກສາຫາລືກັບຝ່າຍທີ່ສາມ ທີ່ບໍ່ມີສ່ວນຮ່ວມໂດຍກົງກັບໂຄງການ.

### ສ່ວນປະກອບ 4: ການສ້າງຂະບວນການ ສຳລັບຊອກຫາ ແລະ ໄດ້ຮັບຄວາມເຫັນດີເຫັນພ້ອມ

- ສິດຕໍ່ກັບຂະບວນການຕົກລົງມີຄວາມເຫັນດີເຫັນພ້ອມຂອງສອງຝ່າຍ, ພັນທະເພື່ອຜູກມັດ, ແລະ ສິດໃນສິ່ງທີ່ໃຊ້ ຖ້າຫາກວ່າມັນບໍ່ລວມໂດຍເຈົ້າຂອງໂຄງການ; ແລະ
- ສິດຕໍ່ກັບການໄດ້ຮັບຄຳແນະນຳດ້ານກົດໝາຍຢ່າງອິດສະຫຼະໃນທຸກໆລະດັບຂອງຂະບວນການສ້າງຄວາມເຫັນດີເຫັນພ້ອມ.

### ສ່ວນປະກອບ 5: ການສ້າງເນື້ອໃນ ສຳລັບຂໍ້ຕົກລົງກ່ຽວກັບຄວາມເຫັນດີເຫັນພ້ອມ

- ທຸກໆປະເພດຂອງຂໍ້ຕົກລົງທີ່ມີຄວາມເຫັນດີເຫັນພ້ອມ (ຈະຕ້ອງໃຫ້ສາທາລະນະຊົນສາມາດເຂົ້າເຖິງໄດ້).

### ສ່ວນປະກອບ 6: ການຕົກລົງກ່ຽວກັບແຜນການສື່ສານ

- ຂ່າວສານທີ່ສຳຄັນທັງໝົດໃນແຜນການສື່ສານ ຄວນຈະກວມເອົາຂໍ້ມູນທີ່ຈຳເປັນກ່ຽວກັບສິດທີ່ພົວພັນເຖິງ ເຣດ+, ເອຟພິກ, ທີ່ດິນຕາມປະເພນີ/ທີ່ໄດ້ຮັບຜົນກະທົບອື່ນໆ, ກາກບອນ ແລະ ຊັບພະຍາກອນປ່າໄມ້.

### ສ່ວນປະກອບ 7: ການສ້າງຍຸດທະສາດໃນການສ້າງຄວາມອາດສາມາດ

- ມີການສະໜັບສະໜູນໃຫ້ເຂົາເຈົ້າ ເພື່ອສ້າງຄວາມອາດສາມາດ ແລະ ມີຄວາມເຂົ້າໃຈກ່ຽວກັບ ເອຟພິກ; ແລະ
- ການປະກອບສ່ວນຂອງເຂົາເຈົ້າ ເຂົ້າໃສ່ໃນຍຸດທະສາດ ແມ່ນເປັນສິ່ງຈຳເປັນ ເພາະວ່າມັນຈະເປັນທິດທາງທີ່ສ້າງຂຶ້ນໃນການສ້າງຄວາມອາດສາມາດ.

## ການຈັດຕັ້ງປະຕິບັດຂະບວນການ ເພື່ອເຄົາລົບສິດຕໍ່ ເອຟພິກ (FPIC)

### ສ່ວນປະກອບ 8: ການເຊື່ອມໂຍງສິດຕໍ່ກັບ ເອຟພິກ ເຂົ້າກັບການອອກແບບໂຄງການ ເຣດ+ (REDD+)

- ກ່ຽວກັບສິດຕໍ່ກັບ ເອຟພິກ, ແລະ ສາມາດສະແດງສິດອອກແບວໃດ ໂດຍຜ່ານການຕັດສິນໃຈຂອງຊຸມຊົນໃນແຕ່ລະຂັ້ນຕອນຂອງການອອກແບບ ແລະ ການຕົກລົງເຫັນດີຕໍ່ກັບໂຄງການ ເຣດ+.
- ກ່ຽວກັບການປ່ຽນແປງດິນຟ້າອາກາດ: ແມ່ນຫຍັງ ແລະ ມັນເກີດຂຶ້ນໄດ້ແນວໃດ?ຜົນກະທົບທີ່ອາດເກີດຂຶ້ນຕໍ່ໂລກ ແລະ ຊຸມຊົນຂອງເຂົາເຈົ້າເອງມີຫຍັງແດ່?
- ກ່ຽວກັບ ເຣດ+: ແມ່ນຫຍັງ ແລະ ມັນເປັນແນວໃດ? ມັນມີຄວາມໝາຍແນວໃດຕໍ່ກັບປ່າໄມ້ຊຸມຊົນ? ມັນຈະສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງຊຸມຊົນແນວໃດ? ມັນຈະສ້າງຜົນປະໂຫຍດແນວໃດ?
- ໃນແງ່ຂອງການຊົດເຊີຍກາກບອນທີ່ເກີດຂຶ້ນໂດຍຜ່ານໂຄງການ ເຣດ+ ແບບສະໝັກໃຈ, ເຂົາເຈົ້າຍັງຕ້ອງການຂໍ້ມູນ (ຫຼື ເຂົ້າເຖິງຊ່ຽວຊານອິດສະຫຼະ) ກ່ຽວກັບການຊົດເຊີນກາກບອນ ແລະ ຕະຫຼາດກາກບອນແບບສະໝັກໃຈ ເຊິ່ງລວມມີ: ເປັນຫຍັງຈຶ່ງສະເໜີວິທີທາງນີ້? ມັນເປັນແນວໃດ ກ່ຽວກັບພັນທະ ແລະ ການຈັດການດ້ານການເງິນ? ຕະຫຼາດຈະມີການປ່ຽນແປງແນວໃດ (ເຊິ່ງສົ່ງຜົນກະທົບຕໍ່ກັບຕົ້ນທຶນ ແລະ ຜົນປະໂຫຍດ) ທີ່ສົ່ງຜົນກະທົບຕໍ່ໂຄງການ?

### ສ່ວນປະກອບ 9: ການຮັບປະກັນໃຫ້ມີຂໍ້ມູນຕົວເລືອກ ແລະ ມີຄໍາແນະນໍາທີ່ເປັນອິດສະຫຼະ

- ໃຫ້ເຂົາເຈົ້າມີສິດໃນການຂໍຄໍາແນະນໍາຈາກຊ່ຽວຊານອິດສະຫຼະ ກ່ຽວກັບບັນຫາທາງດ້ານກົດໝາຍ, ສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ; ແລະ
- ເຈົ້າຂອງໂຄງການ, ລັດຖະບານ ແລະ ນັກລົງທຶນເອກະຊົນ ຈໍາເປັນຕ້ອງໄດ້ສະໜອງທຶນ ແລະ ເຂົ້າເຖິງການຄໍາແນະນໍານີ້.

## ການຕິດຕາມ ແລະ ການວາງທິດທາງຄືນໃໝ່: ການຮັກສາຄວາມເຫັນດີເຫັນພ້ອມ

### ສ່ວນປະກອບ 10: ການຕິດຕາມ ສິ່ງທີ່ຕົກລົງໃນການຈັດຕັ້ງປະຕິບັດ

- ເຂົາເຈົ້າສາມາດສະແດງບົດບາດເປັນໃຈກາງ ໃນການຕິດຕາມການຈັດຕັ້ງປະຕິບັດໂຄງການ; ແລະການລໍາອຽງໃນການຈັດຕັ້ງປະຕິບັດຂໍ້ຕົກລົງກ່ຽວກັບຄວາມເຫັນດີເຫັນພ້ອມທີ່ພົບເຫັນໃນເວລາຕິດຕາມສາມາດກໍ່ໃຫ້ເກີດມີຂະບວນການຮ້ອງທຸກຖ້າຫາກວ່າຝ່າຍໃດຝ່າຍໜຶ່ງບໍ່ພໍໃຈກັບການຈັດຕັ້ງປະຕິບັດໂຄງການ. ຖ້າຫາກບັນຫາບໍ່ສາມາດແກ້ໄຂໄດ້ຜ່ານຂະບວນການຮ້ອງທຸກ, ຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຂໍໃຫ້ມີການເລີ້ມຕົ້ນຂະບວນການເຫັນດີເຫັນພ້ອມຄືນໃໝ່ ຫຼື ນໍາບັນຫາໄປໄກ່ເກ່ຍ.

### ສ່ວນປະກອບ 11: ການສ້າງຂະບວນການຮ້ອງທຸກ

- ກົນໄກການຮ້ອງທຸກບໍ່ໄດ້ປ່ຽນແທນສິດຂອງເຂົາເຈົ້າໃນການດໍາເນີນຄະດີທາງກົດໝາຍ;
- ເຂົາເຈົ້າຍັງມີສິດໃນການຊົດໄຊ້ຢ່າງເປັນອິດສະຫຼະ ໂດຍຜ່ານຜູ້ໄກ່ເກ່ຍ, ຜູ້ຕັດສິນ, ຜູ້ກວດສອບຂອງປະເທດ ຫຼື ສານ;
- ເມື່ອໃຫ້ຄວາມເຫັນດີເຫັນພ້ອມໄປແລ້ວ ກໍ່ສາມາດຖອນໄດ້ພາຍໃຕ້ສະພາບທີ່ມີເຫດຜົນ; ແລະ
- ກ່ຽວກັບຂະບວນການຮ້ອງທຸກ ແລະ ຈະເຂົ້າເຖິງຢູ່ໃສ, ເວລາໃດ, ແລະ ແນວໃດ.

## ສ່ວນປະກອບ 12: ການກວດສອບຢັ້ງຢືນການເຫັນດີເຫັນພ້ອມ

ສິດໃນການກວດສອບຢັ້ງຢືນ ຕໍ່ກັບຂະບວນການສ້າງຄວາມເຫັນດີເຫັນພ້ອມ ຢ່າງເປັນອິດສະຫຼະ – ຈະຕ້ອງປາສະຈາກອິດທິພົນ, ມີເວລາຫລາຍ ແລະ ມີຄວາມເຂົ້າໃຈເນື້ອໃນ ແລະ ຜົນຂອງຂໍ້ຕົກລົງກ່ຽວກັບຄວາມເຫັນດີເຫັນພ້ອມ.

ພາລະກິດຂອງອົງການ RECOFTC ແມ່ນເພື່ອເຫັນຊຸມຊົນຄຸ້ມຄອງປ່າໄມ້ຢ່າງຫ້າວຫັນຫຼາຍຂຶ້ນຢູ່ໃນພາກພື້ນອາຊີ-ປາຊີຟິກ. ໃນໄລຍະ 2 ທົດສະວັດທີ່ຜ່ານມາ, ອົງການ RECOFTC ໄດ້ຝຶກອົບຮົມຫຼາຍກວ່າ 4.000 ຄົນຈາກຫຼາຍກວ່າ 20 ປະເທດ ໃນດ້ານການຄຸ້ມຄອງປ່າໄມ້: ນັບຕັ້ງແຕ່ບັນດາຜູ້ວາງນະໂຍບາຍລະດັບຊາດ, ນັກຄົ້ນຄວ້າ, ຜູ້ປະຕິບັດຕົວຈິງ ຈົນຮອດບັນດາຜູ້ນໍາໃຊ້ປ່າໄມ້ລະດັບທ້ອງຖິ່ນ. ການບໍລິການດ້ານການຝຶກອົບຮົມ ແລະກິດຈະກໍາການຮຽນຮູ້ຕ່າງໆ ໄດ້ເຮັດໃຫ້ມີຄວາມສົມບູນຂຶ້ນດ້ວຍການປະຕິບັດໂຄງການຕ່າງໆ, ການວິເຄາະບັນຫາທີ່ສໍາຄັນ ແລະ ການສື່ສານທີ່ມີຍຸດທະວິທີ.

ສະມາຄົມເຍຍລະມັນສໍາລັບການຮ່ວມມືສາກົນໄດ້ສ້າງຕັ້ງຂຶ້ນໃນວັນທີ 1 ເດືອນມັງກອນ ປີ 2011. ມັນໄດ້ລວບລວມເອົາຄວາມຊ່ຽວຊານທີ່ສະສົມມາຍາວນານຂອງການບໍລິການດ້ານການພັດທະນາຂອງເຍຍລະມັນ,ສະມາຄົມເຍຍລະມັນສໍາລັບການຮ່ວມມືດ້ານວິຊາການ ແລະ ການສ້າງຄວາມອາດສາມາດສາກົນຂອງເຍຍລະມັນ.

RECOFTC – The Center for People and Forests
P.O. Box 1111, Kasetsart Post Office
Bangkok 10903, Thailand
Tel: +66 2 940 5700
Fax: +66 2 561 4880
Email: info@recoftc.org
Website: www.recoftc.org

Deutsche Gesellschaft für Internationale Zusammenarbeit (GIZ) GmbH
Sector Network Natural Resources and Rural Development – Asia
Postfach 5180
65726 Eschborn
Germany
Tel: +49 6196 79 0
Fax: +49 6196 79 11 15
Email: info@giz.de
Website: www.giz.de